U.S. DEPARTMENT OF HEALTH, EDUCATION & WELFARE
OFFICE OF EDUCATION

THIS DOCUMENT HAS BEEN REPRODUCED EXACTLY AS RECEIVED FROM THE PERSON OR ORGANIZATION ORIGINATING IT. POINTS OF VIEW OR OPINIONS STATED DO NOT NECESSARILY REPRESENT OFFICIAL OFFICE OF EDUCATION POSITION OR POLICY.

ED054668

FL002508

LAO

BASIC COURSE
Volume 2

This work was compiled and published with the support of the Office of Education, Department of Health, Education and Welfare, United States of America.

Warren G. Yates, Souksomboun Sayasithsena, and Malichanh Svengsouk

FOREIGN SERVICE INSTITUTE
WASHINGTON, D.C.
1971

DEPARTMENT OF STATE

FOREIGN SERVICE INSTITUTE

BASIC COURSE SERIES

Edited by

AUGUSTUS A. KOSKI

For sale by the Superintendent of Documents, U.S. Government Printing Office
Washington, D.C. 20402 - Price $2.75
Stock Number 4400-1369

P R E F A C E

FSI LAO BASIC COURSE, *Volume 2, is a continuation of the introductory material presented in Volume 1. It provides an organized set of materials designed to produce greater proficiency in the use of the Lao language and at the same time to provide a general introduction to Lao culture. As in Volume 1, the usage represented here is the Vientiane dialect. Dr. Warren G. Yates, Chairman of the FSI Department of East Asian Languages, planned and directed the production of the volume and the related tape recordings and wrote the English language portions.*

The Lao passages were written mainly by Mr. Souksomboun Sayasithsena and Mrs. Malichanh Svengsouk, although a few were written by Mrs. Douangkeo Sayasithsena and Mr. Oudarone Sombat. Each passage bears the name of the respective author.

The glossary is a joint effort of the Lao instruction staff and Lois Mahler. The Royal Lao Embassy in Washington, D.C. made a vital contribution in lending the typewriter on which the Lao material was typed. Camera copy for the Lao language portions was typed by Mrs. Saengchan Suwannaphan. Curt Wilbur did the camera copy for the English language portions. The FSI Audio-Visual staff, under the direction of Thomas Bower, prepared most of the charts, maps and pictures, most of which were taken from publications by the U.S. Information Agency and the Agency for International Development.

The set of related tapes, which may be procured through the National Audio-Visual Center in Washington, provides a selection of speeches, religious and secular music, and an assortment of other audio materials related to life in Laos. They are not essential for the use of the textbook but can add a dimension of understanding of Lao culture which is not possible through visual material alone.

FSI gratefully acknowledges the financial assistance of the U.S. Office of Education in the development and publication of this volume.

James R. Frith, Dean
School of Language Studies
Foreign Service Institute

VOLUME II

TABLE OF CONTENTS

PREFACE iii

INTRODUCTORY SECTION vi

0.0 Introduction vii
0.1 Organization of the Text viii
0.2 Suggestions for Use of the Text ....ix & x
0.3 Instructions to the Teacher (in Lao) ...xi - xiii

MODULE 1: PHYSICAL ENVIRONMENT OF LAOS

1.0 Introduction 1
1.1 Topography 3
1.2 Climate 5
1.3 Natural Resources 7
1.4 Transportation and Communications 13

MODULE 2: SOCIAL SETTING

2.0 Introduction 25
2.1 History 28
2.2 The People 39
2.3 The Family 41
2.4 Education 53
2.5 Health and Sanitation 59
2.6 Religion and Ethics 63

MODULE 3: ARTISTIC EXPRESSION

3.0 Introduction 79
3.1 Lao Literature 82
3.2 Lao Music 98
3.3 Folk Art and Handicrafts 100
3.4 Recreation and Amusement 120

MODULE 4: THE ECONOMY

4.0 Introduction 134
4.1 Agriculture 136
4.2 Industry and Trade 140
4.3 The Financial System 144

MODULE 5: POLITICAL SETTING

5.0 Introduction 146
5.1 General 150
5.2 The King 151
5.3 The Constitution 155
5.4 The Government 159
5.5 The Administration 164

MODULE 6: NATIONAL SECURITY

6.0 Introduction 173
6.1 The General Situation 176
6.2 The National Police 177
6.3 The Armed Forces 182

SELECTED LAO NEWSPAPER ARTICLES 192

BIBLIOGRAPHY 218

MODULE 7: GLOSSARY 223

INTRODUCTORY SECTIONS

0.0 Introduction

The purpose of this textbook is to help you get better control of the Lao language and to guide you to a better understanding of Lao culture. These two objectives are in no sense contradictory; in fact, they are complementary. If culture is defined as that complex whole which includes knowledge, belief, art, morals, law, customs, and other capabilities and habits acquired by man as a member of society, then clearly language is one aspect of culture since it involves acquired habits and capabilities. Although language is a feature of culture, it stands in a special relationship to all other aspects of culture, since it also serves as a means of communicating about much of culture. The vocabulary of a language holds a mirror to the rest of culture, in which most of culture is reflected with a high degree of accuracy, and it also serves as a determinant of cultural patterns since human beings do not live in a purely objective world but are at the mercy of the particular language which serves as a medium of expression of their society.

The culture of a people is manifested in many ways: in their behavior, in their social and political organizations, in their economic, educational, and religious systems, etc. In order to understand any culture we must study all of these manifestations, but a true understanding of the culture of a people comes not from having knowledge about the features of their culture but from an understanding of the model a people has for perceiving, relating, and interpreting these features; thus your task is to learn not only the facts but also the conceptual model of Lao culture as well. In this text you will be presented with information about these cultural artifacts in various forms (written selections, pictures, charts, etc.) in the expectation that you will arrive at the underlying concepts by induction.

As a member of a different cultural group, you may find some aspects of Lao culture different, strange, or even funny.

This is particularly true if you make no attempt to understand the concepts underlying them. If you make your feelings known either verbally or through your actions, Laotians may accept your behavior as that of just another 'foreigner', or they may be hurt or angry. If, on the other hand, you accept Lao culture for what it is, namely, a different but not inferior culture and strive to understand it, you will receive ready help from Laotians who are eager to help others understand their way of life. Furthermore, you will learn a great deal and have much better personal relations with all Laotians.

0.1 Organization of the Text

As a structured and integrated whole, culture doesn't submit easily to being cut into discrete parts; however, it appears impossible to deal with it extensively on any other basis; consequently the text presents culture in individual parts. You as a user of this material are urged to keep the basically coherent nature of culture in your mind at all times.

The six modules in this text are called (in order of presentation): Physical Environment,[1] Social Setting, Artistic Expression, The Economy, Political Setting, and National Security. At the end of the text there is a glossary. It includes all vocabulary items found in volumes I and II of the Lao Basic Course.

Each module is a self-contained unit. It contains (1) an introduction in English, which provides a general orientation to the material in the module; (2) a series of selections in Lao relating to that module; for example, in the Social Setting module there are selections on history, education, and religion; and (3) relevant charts, pictures, and diagrams.

It is clear that no treatment of a subject as extensive as Lao culture could be exhaustive, so the attempt has been made

1. Although physical features are not cultural, they are included because of their effect on the culture.

to be eclectic instead, so selections in the most significant areas of the culture have been included. It is hoped that enough material has been included to arouse your interest so that you will seek more information in and out of class.

0.2 Suggestions for Use of the Text

1. Read the Introduction to the Text carefully. You will find information about the make-up of the text as well as guidance for its use.

2. Before reading any of the selections in a module read the Introduction to that module. It will provide you with an orientation to the module (in English).

3. Read each selection carefully at home. Study any associated charts, diagrams, or pictures. In class ask for explanation of any parts of the selection that you don't understand.

4. In the course of your reading of during the discussion in class questions will arise. Utilize the class hour for getting the answers to these questions. Whereas, the instructor is not an authority on every aspect of Lao culture, he or she knows a great deal about it and knows how to get more information. Also keep in mind that the instructor's attitudes, opinions, and beliefs are facts about culture.

5. There are many techniques for eliciting cultural information. One technique might be called the cross-cultural approach. It involves a comparison between the Lao and American (if you happen to be American) way of doing things, organizing things, behaving, etc. Another technique is the historical approach. Various cultural features are compared in terms of differences at different periods in history. You will no doubt discover some techniques of your own. Feel free to use any that get results.

6. Always keep in mind that you are looking for more than facts about culture (although they are necessary), so so not hesitate to ask questions seeking the reasons for such and such acts,

etc. You are ultimately looking for basic cultural concepts. These will not usually be immediately obvious. There is no reason why you can not seek information about cultural concepts directly if you know how to ask the questions: for example, "Why are Laotians opposed to killing things?", "Do all Laotians expect to be reincarnated?", etc.

0.3 ບົດແນະນຳໃນການສອນ.

ເນື່ອງຈາກວ່າປຶ້ມທີ່ທ່ານຖືຢູ່ນີ້ມີຄຳແນະນຳວິທີແລະຫລັກການສອນຢູ່ພຽງແຕ່ເລັກນ້ອຍ ຈົນເກືອບຈະເວົ້າໄດ້ວ່າບໍ່ມີເລີຍນີ້ເອງ, ພາຣະອັນໜັກໜ່ວງຈຶ່ງໄດ້ຕົກຢູ່ກັບຜູ້ສອນ. ທັງນີ້ເນື່ອງຈາກວ່າທ່ານຈະຕ້ອງເປັນຜູ້ປະດິດຄິດຫາວິທີສອນຂຶ້ນເອງ. ຍິ່ງໄປກວ່ານັ້ນອີກ, ໜັງສືເຫລັ້ມນີ້ຍັງໄດ້ພຍາຍາມທີ່ຈະເວົ້າຢ່າງງ່າຍໆ ຈົນເກືອບຈະເອີ້ນໄດ້ວ່າເປັນແຕ່ການສຣຸບຂອງເຣື້ອງທີ່ຍືດຍາວແລະສັບສົນຫລາຍໆເຣື່ອງ. ດັ່ງນັ້ນມັນຈຶ່ງຈຳເປັນທີ່ທ່ານຈະຕ້ອງໄດ້ໃຫ້ຄຳອະທິບາຍເພີ່ມເຕີມອີກຢ່າງມາກມາຍ. ແລະເພື່ອຈະເຮັດເພື່ອນດັ່ງທີ່ກ່າວມານີ້ໄດ້ ທ່ານກໍຈະຕ້ອງໄດ້ກຽມແລະວາງແຜນການສອນຢ່າງລະອຽດລ່ວງໜ້າເສັຽກ່ອນ; ເປັນຕົ້ນວ່າທົບທວນຄວາມຊົງຈຳໃນສິ່ງທີ່ທ່ານເຄີຍໄດ້ຮູ້ຫລືວ່າໄດ້ຮຽນຫລືໄດ້ຍິນມາ; ຫລືບໍ່ດັ່ງນັ້ນທ່ານກໍອາດຈະທຳການຄົ້ນຄ້ວາໂດຍການຫາອ່ານຕຳຫລັບຕຳຣາຕ່າງໆທີ່ທ່ານສາມາດຈະຫາໄດ້ ຊຶ່ງທຸກສິ່ງທຸກຢ່າງມັນກໍຍ່ອມຂຶ້ນຢູ່ກັບຄວາມສລຽວສລາດແລະຄວາມຊ່າງພິນິດພິຈາຣະນາຂອງທ່ານເອງ. ຈົ່ງຖືເອົາວ່າມັນເປັນໂອກາດດີສຳລັບທ່ານທີ່ຈະໄດ້ແຜ່ຜາຍວັທນະທັມຂອງລາວເຮົາແກ່ບຸກຄົນ ຊຶ່ງຈຳນວນຫລາຍຈະໄດ້ມີໂອກາດໄປອາສັຍຫລືເຮັດວຽກການຢູ່ໃນປະເທດລາວ.

ທ່ານອາດຈະບໍ່ເຫັນດີຢ່າງເຕັມສ່ວນກັບບາງເຣື່ອງທີ່ຂຽນຢູ່ໃນປຶ້ມຫົວນີ້. ໃນເມື່ອເປັນດັ່ງນັ້ນ ກໍຂໍໃຫ້ທ່ານຈົ່ງສະແດງຄວາມຄິດເຫັນອັນແຕກຕ່າງຂອງທ່ານອອກຢ່າງເສຣີ. ຫລືຖ້າຫາກທ່ານປະສົງ ທ່ານຈະຕື່ມເຕີມຂໍ້ຄວາມຊຶ່ງຈະແນ່ນໂດຍທາງວາຈາຫລືໂດຍທາງຂີດຂຽນກໍໄດ້. ເຮົາຂໍເລັ່ງລັດໃຫ້ທ່ານຈົ່ງສະແດງອອກຊຶ່ງຄວາມຄິດຄວາມເຫັນ, ຄວາມຮູ້ສຶກຕລອດທັງປະຕິກິຣິຍາຂອງທ່ານ ໃນທຸກໆໂອກາດໂດຍບໍ່ຕ້ອງອິດອ່ຳ.

ບາງກໍຣະນີ ທ່ານອາດຈະບໍ່ຮູ້ລາຍລະອຽດທີ່ຈຳເປັນສຳລັບຕອບຄຳຖາມຂໍ້ໃດຂໍ້ນຶ່ງຂອງນັກຮຽນຂອງທ່ານ. ເມື່ອເປັນດັ່ງນີ້ ກໍຂໍໃຫ້ທ່ານຮັບສາຣະພາບຢ່າງເປີດເຜີຍໂລດ. ມັນຍ່ອມເປັນເຣື່ອງທັມມະດາທີ່ຄົນຜູ້ນຶ່ງອາດຈະບໍ່ຮູ້ຈັກທຸກສິ່ງທຸກຢ່າງກ່ຽວກັບປະເທດຂອງຕົນ. ຖ້າຫາກພໍເປັນໄປໄດ້ ກໍໃຫ້ທ່ານຈົ່ງແນະນຳນັກຮຽນຂອງທ່ານກ່ຽວກັບສະຖານທີ່ຫລືຊ່ອງທາງທີ່ລາວອາດຈະຫາຮູ້ໄດ້. ຫລືບໍ່ດັ່ງນັ້ນ, ເພື່ອນຮ່ວມງານ

ບົດແນະນຳໃນການສອນ.(ຕໍ່)

ຂອງທ່ານບາງຄົນອາດຈະຮູ້ຄຳຕອບກໍເປັນໄດ້, ຈຶ່ງລອງໄປປຶກສານຳຂະເຈົ້າເບິ່ງ. ແຕ່ຖ້າໝົດຊ່ອງທາງທີ່ຈະແກ້ໄຂໄດ້ ກໍໃຫ້ປະເຣື່ອງນັ້ນແລ້ວເລີ່ມເຣື່ອງໃໝ່ຕໍ່ໄປ.

ເຖິງແມ່ນວ່າທ່ານຈະຖືກຂໍໃຫ້ປະດິດຄິດຫາວິທີສອນຂອງທ່ານຂຶ້ນເອງກໍຕາມ, ເຮົາກໍຢາກຈະຂໍຮ້ອງນຳທ່ານອີກຢ່າງນຶ່ງຄື ຢ່າຖືວ່າປຶ້ມຫົວນີ້ເປັນປຶ້ມອ່ານກ່ຽວກັບວັທນະທັມທຸກຢ່າງຂອງລາວ (ເຖິງແມ່ນວ່າທັສນະຕ່າງໆຂອງປຶ້ມນີ້ຈະເຂົ້າໃນທຳນອງນັ້ນກໍຕາມ). ການອ່ານທຸກໆເຣື່ອງຄວນໃຫ້ນັກຮຽນອ່ານຢູ່ບ້ານເສັຽກ່ອນ. ຈຶ່ງສງວນເວລາຢູ່ໃນຫ້ອງຮຽນໄວ້ສຳລັບການຊີ້ແຈງບາງຈຸດທີ່ອາດມີການເຂົ້າໃຈຜິດ, ແລະຢ່າໃຊ້ເວລາດັ່ງກ່າວສຳລັບການແປເຣື່ອງທີ່ກຳລັງອ່ານຢູ່ນັ້ນ. ຈົ່ງໃຫ້ນັກຮຽນເຮັດວຽກບ້ານຂອງຂະເຈົ້າເອງ.

ສຸດທ້າຍ, ເຮົາຢາກຂໍໃຫ້ທ່ານສະແດງຄວາມຄິດເຫັນຂອງທ່ານເພີ່ມເຕີມສຳລັບແຕ່ລະເຣື່ອງຢູ່ໃນປຶ້ມຫົວນີ້ ໂດຍການອ່ານເບິ່ງໃຫ້ຮູ້ເຣື່ອງກ່ອນເວລາເຂົ້າສອນ ແລ້ວຈຶ່ງວາງໂຄງການໄວ້ວ່າທ່ານຈະໃຊ້ວິທີໃດດີເພື່ອຈະໃຫ້ມັນເຂົ້າກັບເຣື່ອງທີ່ທ່ານກຳລັງຈະສອນ.

ຂໍ້ແນະນຳດັ່ງຕໍ່ໄປນີ້ບໍ່ແມ່ນເພື່ອໃຫ້ທ່ານຖືເອົາເປັນຫລັກເກນໂດຍສະເພາະສຳລັບການສອນ ແຕ່ແມ່ນເພື່ອເປັນແນວທາງອັນນຶ່ງຊຶ່ງອາດຈະຊ່ວຍໃນການວາງແຜນຫລັກສູດການສອນຂອງທ່ານໃຫ້ງ່າຍຂຶ້ນຄື:

ທ່ານອາດຈະຂໍໃຫ້ນັກຮຽນລາຍງານດ້ວຍປາກເປົ່າກ່ຽວກັບເຣື່ອງໃດເຣື່ອງນຶ່ງ. ຫລືທ່ານອາດຈະໃຫ້ຂະເຈົ້າຂຽນສຣຸບເຣື່ອງເປັນພາສາລາວກໍໄດ້. ທ່ານອາດຈະມອບໃຫ້ນັກຮຽນອ່ານເຣື່ອງໃດເຣື່ອງນຶ່ງທີ່ຂຽນເປັນພາສາອັງກິດ ແລ້ວໃຫ້ນັກຮຽນມາເລົ່າສູ່ທ່ານຟັງເປັນພາສາລາວ. ຫລືໃຫ້ນັກຮຽນຕິດຕາມຂ່າວໃດຂ່າວນຶ່ງຢູ່ໃນໜັງສືພິມທີ່ລົງພິມກ່ຽວກັບປະເທດລາວ.

ບົດແນະນຳໃນການສອນ.(ຕໍ່)

ໃນເມື່ອທ່ານສອນເຣື່ອງໃດທີ່ກ່ຽວກັບສັງຄົມແລະວັທນະທັມຂອງລາວແລະທີ່ແຕກຕ່າງຈາກສັງຄົມອະເມຣິກັນ ກໍໃຫ້ທ່ານຈົ່ງຢ່າປົກປິດຫລືລຳອຽງຍ້ອນຄວາມຄິດຢ້ານວ່າຂະເຈົ້າຈະດູຖູກຫລືຫົວຂວັນ. ສັງຄົມແລະວັທນະທັມຂອງມະນຸດຢູ່ໃນໂລກນີ້ຍ່ອມມີຫລາຍສິ່ງຫລາຍຢ່າງທີ່ບໍ່ຄ້າຍຄືກັນ. ຈົ່ງບອກໃຫ້ຂະເຈົ້າຮູ້ເຖິງຂນົບທຳນຽມອັນຖືກຕ້ອງຂອງລາວເຮົາເພື່ອວ່າຂະເຈົ້າຈະບໍ່ເຮັດສິ່ງໃດທີ່ອາດຈະເຮັດໃຫ້ຄົນລາວບໍ່ພໍໃຈ. ສຣຸບແລ້ວກໍໝາຍຄວາມວ່າໃຫ້ຂະເຈົ້າຮູ້ຈັກກາລະເທສະແບບລາວ.

MODULE 1: PHYSICAL ENVIRONMENT

1.0 Introduction

Almost all of man's activities are affected in some way by the physical environment he lives in. In less highly industrialized nations like Laos the effects of natural forces are even greater than in countries like America where environmental control is practiced to some extent, but in every country the climate, the topography, and natural resources affect the kind of life man has. Following are some examples of how physical features and some other aspects of life are interrelated:

(1) The nature of the terrain (whether mountainous or flat, etc.), the type of soil, and the amount and periods of rainfall affect the type and location of roads and highways.

(2) The location and size of rivers and streams determine the water routes and the amount of traffic they can carry.

(3) The heat, humidity, and amount of rainfall affect the number and types of insects and germs, their lifespan, and rate of multiplication. This has a direct effect on the kinds of diseases, means of controlling disease, and the virulence of diseases, which in turn relates to the general health of the population.

(4) The plant and animal life largely determine the diet of the people. In semi-tropical areas like Laos fruits and vegetables grow in profusion. Although fowls and animals are more susceptible to various kinds of diseases, they grow fast. Fish are generally abundant. (They may even be caught in rice fields.) 'Wet' rice grows well in the lowlands, where water is ample; 'dry' rice, in the hills and plateaus. Rice is the staple item of Lao diet.

(5) The type of houses built is usually relevant to climatic conditions. In Laos protection from the rain and insulation against the heat are the most important things in house building. Most houses are made of wood with either tile or leaf roofs. They are built several feet off the ground so that air can circulate under them and so that they are protected from flooding. Window openings are covered by wooden shutters which can be opened to

allow free passage of air.

(6) Plant life provides material for the construction of all kinds of large and small objects. In Laos bamboo, rattan, and wood (teak, etc.) are generally available and are used in the production of many objects of art, household and farm utensils, as well as houses and larger buildings.

The above examples are only some of the ways the climate, topography, and natural resources affect the life of a people. In the selections that follow you will be given more detailed information about these environmental features in Laos. Later when you are learning about various aspects of Lao culture, you should observe to what extent cultural features are influenced by the physical environment.

1.1 ພູມຖານຂອງປະເທດລາວ.

ພຣະຣາຊອານາຈັກລາວເປັນປະເທດທີ່ບໍ່ມີທາງອອກສູ່ທະເລ ແລະມະຫາສມຸດໃດໆເລີຍ. ເຂດແດນທາງເໜືອຕິດກັບປະເທດຈີນ. ທາງດ້ານຕາວັນອອກຕິດກັບປະເທດວຽດນາມເໜືອແລະວຽດນາມໃຕ້. ທາງດ້ານໃຕ້ຕິດກັບປະເທດຂະເມນ(ກັມພູຊາ) ແລະທາງດ້ານຕະເວັນຕົກຕິດກັບປະເທດໄທແລະປະເທດພະມ້າ. ປະເທດລາວມີໜ້າກວ້າງປະມານ ໒໓໖ ພັນກິໂລແມັດມົນທົນ ຊຶ່ງມີຂນາດນ້ອຍກວ່າຣັດອໍຣີກອນຫລືປະເທດອັງກິດນ້ອຍນຶ່ງ ແລະມີພົລເມືອງປະມານ ໓ ລ້ານຄົນ.

ແມ່ນ້ຳຂອງແລະສາຂາຂອງມັນໄຫລຜ່ານປະເທດລາວແຕ່ເໜືອຕລອດໃຕ້. ແມ່ນ້ຳຂອງມີອອກບໍ່ຢູ່ປະເທດຈີນແລ້ວໄຫລຜ່ານປະເທດລາວເລີຍລົງໃສ່ທະເລຈີນ. ແມ່ນ້ຳຂອງສ່ວນທີ່ໃນປະເທດລາວຍາວປະມານ ໑໕໐໐ ກິໂລແມັດ ຊຶ່ງບາງສ່ວນຂັ້ນກັ້ນເຂດແດນລະຫວ່າງປະເທດລາວກັບປະເທດພະມ້າແລະປະເທດລາວກັບປະເທດໄທ. ຢູ່ເລາະຕາມຝັ່ງແມ່ນ້ຳຂອງມີທົ່ງກວ້າງດິນງາມຈາກຝຸ່ນທີ່ນ້ຳພັດມາແລະເໝາະສົມກັບການປູກເຂົ້າ. ຕັ້ງຕົ້ນແຕ່ແຂວງວຽງຈັນເປັນທົ່ງແຄບຕໍ່ລົງໄປທາງພາກໃຕ້ຈະຄ່ອຍກວ້າງອອກ. ທົ່ງເຫລົ່ານີ້ເອີ້ນວ່າທົ່ງລ້ອງແມ່ນ້ຳຂອງ.

ສາຂາຂອງແມ່ນ້ຳຂອງໃນປະເທດລາວແຕ່ເໜືອຕລອດໃຕ້ມີ: ນ້ຳທາ ນ້ຳອູ ນ້ຳເຊືອງ ນ້ຳຄານ ນ້ຳງື່ມ ນ້ຳງຽບ ນ້ຳຊັນ ນ້ຳກະດິງ ເຊບັ້ງໄຟ ເຊບັ້ງຫຽງ ເຊໂດນ ແລະເຊກອງ.

ພື້ນທີ່ຂອງປະເທດລາວສ່ວນໃຫຍ່ເປັນດິນພູສູງ ໂດຍສະເພາະຢູ່ທາງພາກເໜືອແລະທາງພາກຕາເວັນອອກຂອງປະເທດ. ພູທີ່ສູງກວ່າໝູ່ໃນປະເທດລາວກໍມີ: ພູເບັ້ຽ ພູເລີຍ ພູຄູນ ພູນ້ຳບັກແລະມີສາຍພູແດນແກວ(ຢູ່ດ້ານຕາເວັນອອກ) ຂັ້ນກັ້ນເຂດແດນລະຫວ່າງປະເທດລາວແລະປະເທດວຽດນາມເໜືອ. ນອກຈາກພູເຫລົ່ານີ້ ຍັງມີພູພຽງຫລາຍໜ່ວຍຢູ່ທົ່ວທຸກພາກຂອງປະເທດລາວຄື ຢູ່ທາງພາກເໜືອມີພູຊຽງຂວາງແລະຫົວພັນ, ທາງພາກກາງມີພູພຽງຄຳມ່ວນ ແລະທາງພາກໃຕ້ກໍມີພູພຽງບໍຣະເວນ.

ມ.ສ. ສແວງສຸກ


ປະເທດຈີນ
ປະເທດພະມ່າ
ປະເທດວຽດນາມເໜືອ
ພູພຽງເມືອງສິງ
ພູເລີຍ
ພູພຽງທີວພັນ
ພູພຽງຊຽງຂວາງ
ພູເບັ້ງ
ທົ່ງວຽງຈັນ
ພູພຽງຄຳມ່ວນ
ປະເທດໄທ
ປະເທດວຽດນາມໃຕ້
ທົ່ງສວັນນະເຂດ
ພູພຽງບໍລະເວນ
ທົ່ງຈຳປາສັກ
ປະເທດຂະເມນ
ພູ
ພູພຽງ
ທົ່ງ

1.2 ອາກາດໃນເມືອງລາວ.

ສາຍພູແດນແກວເປັນເຂດແດນທາງດ້ານຕາເວັນອອກ ແລະມີຄວາມສໍາຄັນຕໍ່ການປ່ຽນແປງດິນຟ້າອາກາດຂອງປະເທດລາວ. ອາກາດໂດຍທົ່ວໄປໃນປະເທດລາວເປັນອາກາດຮ້ອນ ແລະປີນຶ່ງແບ່ງອອກເປັນສາມຣະດູ ຄື: ຣະດູຮ້ອນເລີ້ມຕົ້ນແຕ່ເດືອນມີນາຫາເດືອນມິຖຸນາ, ຣະດູຝົນເລີ້ມຕົ້ນແຕ່ເດືອນກໍຣະກະດາເຖິງເດືອນຕຸລາແລະຣະດູໜາວເລີ້ມຕົ້ນແຕ່ເດືອນພຶສຈິກາເຖິງເດືອນກຸມພາ.

ໃນຣະດູຮ້ອນອາກາດອຸ່ນແລະຮ້ອນອົບເອົ້າຫລາຍທີ່ສຸດ ຊຶ່ງບາງຄັ້ງຮ້ອນໝົດເວັນໝົດຄືນຈົນເຮັດໃຫ້ຜູ້ຄົນທັງຫລາຍອຶດເມື່ອຍອ່ອນເພັຽ ທັງໝຽວຕົນໂຕແລະກິນບໍ່ແຊບນອນບໍ່ຫລັບ. ໂດຍສະເພາະແມ່ນອາກາດໃນທ້າຍເດືອນເມສາກ່ອນໜ້າຝົນ ຊຶ່ງຝົນບໍ່ຈະຕົກແລ້ວອາກາດຈະຮ້ອນອູດເອົ້າສູງສຸດ. ແຕ່ວ່າຄວາມຮ້ອນນີ້ກໍແຕກຕ່າງກັນໄປຕາມຖິ່ນຖານຕໍ່າຫລືສູງຕ່າງໆຂອງພູມີປະເທດ. ຕົວຢ່າງຖິ່ນຮາບວຽງຈັນຈະຮ້ອນຫລາຍກວ່າຖິ່ນພູພຽງຊຽງຂວາງ. ໃນຣະດູນີ້ທ້ອງຟ້າແຈ່ມໃສດີແລະມີແດດຮ້ອນແດດກ້າທີ່ສຸດ.

ຕໍ່ຈາກຣະດູຮ້ອນກໍແມ່ນຣະດູຝົນ. ຄວາມຈິງແລ້ວ ຝົນຈະເລີ້ມຕົກແລ້ວແຕ່ທ້າຍເດືອນເມສາໃນຣະດູຮ້ອນ ແຕ່ບໍ່ຕົກຫລາຍແລະກໍບໍ່ຕົກເລື້ອຍ. ຝົນຈະຕົກແບບນີ້ອີກໃນຕົ້ນຣະດູໜາວເໝືອນກັນ. ຖ້າຈະນັບນໍ້າຝົນຕົກໂຮມເຂົ້າກັນທັງສາມຣະດູແລ້ວ ໃນປີນຶ່ງຈະມີປະມານ ໑໐໐ ຫາ ໑໕໐ ມື້ ຊຶ່ງສອງສ່ວນສາມຂອງຈໍານວນມື້ ຝົນຕົກຢູ່ໃນຣະດູຝົນ. ເຖິງແມ່ນຣະດູຮ້ອນຈະຜ່ານພົ້ນໄປແລ້ວກໍຕາມ ແຕ່ອາກາດກໍຍັງຮ້ອນອູດເອົ້າຢູ່ຕາມເຄີຍ ນອກຈາກດິນຟ້າອາກາດຈະອຸ່ນແລະເຢັນລົງແດ່ໜ້ອຍນຶ່ງ. ໃນຣະດູຝົນ ລົມສ່ວນມາກພັດມາຈາກພາກຕາເວັນຕົກສຽງໃຕ້. ສ່ວນຣະດູແລ້ງນັ້ນລົມພັດມາຈາກທິດຕາເວັນອອກສຽງເໜືອຂອງປະເທດ. ຕາມພາກພື້ນຕ່າງໆທາງພາກເໜືອຂອງປະເທດລາວ ຕາມສະຖິຕິມີຝົນຕົກໜ້ອຍກວ່າພາກອື່ນ ຕົວຢ່າງຢູ່ແຂວງຫລວງພຣະບາງມີນໍ້າຝົນປະມານ ໔໐ ຫາ ໑໐ ນີ້ວຕໍ່ປີ. ແຕ່ທາງພາກໃຕ້ມີຝົນຕົກຫລາຍເຊັ່ນຕາມພູພຽງບໍລະເວນ ມີນໍ້າຝົນຫລາຍກວ່າ ໑໓໐ ນີ້ວຕໍ່ປີ.

ແຕ່ບູຮານນະການມາຈົນເຖິງປັດຈຸບັນ ການປູກຝັງເຮັດໄຮ່ໃສ່ນາຂອງຊາວລາວ ຍັງອາສັຍກາງ

ອາກາດໃນເມືອງລາວ. (ຕໍ່)

ຕໍ່ກັບດິນຟ້າອາກາດແລະນ້ຳຝົນຢູ່. ຖ້າປີໃດແລ້ງຊາວກະສິກອນທັງຫລາຍກໍ່ລຳບາກຍ້ອນຂາດນ້ຳແລະພືດຜົນກໍ່ບໍ່ໄດ້ຮັບຜົນເຕັມເມັດເຕັມໜ່ວຍ. ລາງປີ ຖ້າຝົນຕົກຫລາຍເກີນໄປ ແມ່ນ້ຳຂອງຈະນາກຂຶ້ນຖ້ວມແລະທຳລາຍເຄື່ອງປູກຂອງຝັງຕ່າງໆຕາມຖິ່ນຮາບຂອງທົ່ງລ້ອງແມ່ນ້ຳຂອງ. ອີກປະການນຶ່ງ ການຕິດຕໍ່ໄປມາທາງບົກກໍ່ບໍ່ສະດວກ ແລະບາງແຫ່ງພວກຜູ້ຄົນໄປມາຫາສູ່ກັນກໍ່ບໍ່ໄດ້ເລີຍ. ແຕ່ວ່າການເດີນທາງນ້ຳໃນຣະດູນີ້ດີຂຶ້ນແດ່ໜ້ອຍນຶ່ງ.

ສ່ວນອາກາດໃນຣະດູໜາວ ເວລາຕອນເຊົ້າເມື່ອເຮົາລຸກອອກຈາກບ່ອນນອນຂຶ້ນມາຈະເຫັນໝອກຕົກກຸ້ມມືດມົວຢູ່ທົ່ວທຸກແຫ່ງແລະຕາມໜ້ານ້ຳກໍ່ຈະມີອາຍນ້ຳຄຸມຢູ່. ຕັ້ງຕົ້ນແຕ່ເດືອນພຶສຈິກາເຖິງເດືອນມີນາຕາມທົ່ງຕາມນາແລະຕາມຫວ່າງພູຕ່າງໆ ຈະມີໝອກຕົກໜັກແຕ່ເວລາເຊົ້າຈົນຕາເວັນຂຶ້ນສູງລັບປາຍໄມ້ຈຶ່ງຄ່ອຍເຫືອດຫາຍໄປ. ໃນຣະດູນີ້ ອາກາດຕາມທັມມະດາແຫ້ງແລ້ງແລະເປັນສະບາຍທີ່ສຸດ. ໂດຍສະເພາະແມ່ນເດືອນມະກະຣາກັບເດືອນກຸມພາ. ໃນຣະຍະສອງເດືອນນີ້ ຢູ່ທາງພາກເໜືອແລະຕາມຖິ່ນສູງຂອງປະເທດມີອາກາດໜາວຫລາຍກວ່າຖິ່ນອື່ນໆ. ດັ່ງນັ້ນພວກປະຊາຊົນທີ່ຂາດເຂີນເຄື່ອງນຸ່ງຫົ່ມຈຳເປັນຕ້ອງໄດ້ດັງໄຟຜີງທຸກເຊົ້າແລະແລງ. ຄັນປີໃດໜາວເກີນຂອບເຂດທີ່ປະຊາຊົນຄາດໄວ້ຫລືບໍ່ເຄີຍປະສົບ ກໍ່ທຳໃຫ້ຂະເຈົ້າເຈັບໄຂ້ໄດ້ປ່ວຍເປັນຈຳນວນມາກເຊັ່ນເປັນຫວັດເປັນໄອ ແລະພວກເດັກນ້ອຍທີ່ນຸ່ງຫົ່ມບໍ່ພໍ ພາໃຫ້ຈັບໜາວແລະພາໃຫ້ເປັນປອດບວມກໍ່ມີ.

ມ.ສ. ສແວງສຸກ

1.3 ຊັພຍາກອນທັມມະຊາດ.

ຊັບໃນດິນສິນໃນນ້ຳ.

ປະເທດລາວມີຊັບໃນດິນສິນໃນນ້ຳອັນມີຄ່າຢ່າງຫລວງຫລາຍ ຊຶ່ງສຳຣວດຄົ້ນພົບຢູ່ທົ່ວທຸກພາກພື້ນຂອງປະເທດມີຄື: ຄຳ ເງິນ ເຫລັກ ກົ່ວ ຊືນ ທອງແດງ ສັງກະສີ ນ້ຳມັນ ນາດ ຫິນປູນ ເກືອ ນິນ ແລະແກ້ວປະເສີດອັນມີຄ່າຕ່າງໆ. ຊັບໃນດິນເຫລົ່ານີ້ຍັງບໍ່ໄດ້ຂຸດຄົ້ນອອກມາໃຊ້ຫລາຍເທື່ອ. ດ້ວຍເຫດບໍ່ມີຖນົນຫົນທາງໄປເຖິງ ແລະເຄື່ອງມືອັນທັນສມັຍເພື່ອຈະໃຊ້ໃນການຂຸດຄົ້ນແລະຜູ່ຊ່ຽວຊານລາວໃນດ້ານນີ້ກໍຍັງບໍ່ມີເທື່ອຈຶ່ງໄດ້ປະບໍ່ທີ່ມີຄ່າເຫລົ່ານີ້ໂດຍບໍ່ໄດ້ແຕະຕ້ອງ. ແລະອີກປະການນຶ່ງກໍຄືບໍ່ມີເງິນທຶນຈະມາອຸດໜູນໃນການຂຸດຄົ້ນ. ນອກຈາກບໍ່ເກືອຢູ່ໂພ້ງສາລີ ຫ້ວຍຊາຍ ວຽງຈັນ ແລະສວັນນະເຂດ ທີ່ໄດ້ຂຸດອອກມາໃຊ້ແລະຈຳໜ່າຍຂາຍພາຍໃນປະເທດແຕ່ດົນນານມາແລ້ວ. ເກືອທີ່ຜລິດໄດ້ບໍ່ແມ່ນເກືອກ້ອນແຕ່ເປັນເກືອທີ່ຕົ້ມຈາກນ້ຳເຄັມໄດ້ມາຈາກບໍ່ເກືອ. ແລະບໍ່ຊືນໂພນຕິ້ວຢູ່ເໜືອເມືອງທ່າແຂກໄປໜ້ອຍນຶ່ງບ່ອນດຽວເທົ່ານັ້ນທີ່ໄດ້ຂຸດອອກມາໃຊ້ . ຊືນທີ່ຂຸດອອກມາໄດ້ທັງໝົດກໍເປັນສິນຄ້າອັນສຳຄັນຂອງປະເທດສຳລັບສົ່ງອອກໄປຂາຍຕ່າງປະເທດ ຊຶ່ງສ່ວນມາກສົ່ງອອກໄປຂາຍປະເທດມາເລເຊັຽ. ຢູ່ໃຕ້ລົງໄປອີກນອກຈາກບໍ່ຊືນແລ້ວຍັງມີບໍ່ນ້ຳມັນກາດຢູ່ບໍຣິເວນທົ່ງສວັນນະເຂດ ແລະແຮ່ກົ່ວຢູ່ແຖບເມືອງເຊໂປນ.

ສ່ວນຢູ່ທາງພາກເໜືອຂອງປະເທດນັ້ນ ມີຊັບໃນດິນສິນໃນນ້ຳຢ່າງມາກມາຍ ຫລາຍກວ່າຢູ່ທາງໃຕ້ທັງມີຄຸນນະພາບດີອີກ ແລະກໍມີຢູ່ທົ່ວທຸກແຂວງ ເຊັ່ນໃນບໍຣິເວນແຂວງຫລວງພຣະບາງ, ຊຽງຂວາງ ຊຳເໜືອ ແລະໂພ້ງສາລີ ເພິ່ນໄດ້ຄົ້ນພົບແຮ່ ທີ່ມີຄຸນນະພາບດີຫລາຍຊນິດຄື: ແຮ່ທອງ ແຮ່ກົ່ວ ແຮ່ເຫລັກແລະຍັງມີແຮ່ສັງກະສີ ເງິນ ມາດ ແລະຄຳອີກ. ນອກຈາກນີ້ຢູ່ທາງພາກເໜືອຍັງມີນ້ຳມັນຢ່າງຫລວງຫລາຍແລະມີຖ່ານຫີນຊນິດດີທີ່ສຸດຢູ່ໃກ້ຫລວງພຣະບາງ ໂພ້ງສາລີ ແລະເລາະລຽບທົ່ງນ້ຳງຽບ ທາງຕາເວັນອອກຂອງວຽງຈັນ. ແລະໄດ້ຄົ້ນພົບຖ່ານຫີນອີກຊນິດນຶ່ງຢູ່ແຂວງຫົວຂອງ ແລະໄຊຍະບຸຣີ.

ຊັພຍາກອນທັມມະຊາດ.(ຕໍ່)

ຕາມລຳນ້ຳຢູ່ບາງແຂວງພວກຊາວບ້ານໄດ້ພາກັນໄປປັ່ນເອົາຄຳ ນິນແລະແກ້ວອັນມີຄ່າຕ່າງໆ. ໂດຍສະເພາະຢູ່ບ້ານຫ້ວຍຊາຍແຂວງຫົວຂອງ ໃນຣະດູແລ້ງນ້ຳແຫ້ງລົງພວກຊາວບ້ານກໍໄປປັ່ນເອົາແກ້ວດີໆຫລາຍຊນິດ ຊຶ່ງເປັນສິນຄ້າອັນສຳຄັນ ແລະມີຊື່ສຽງຂອງພາກພື້ນນັ້ນ.

ມ.ສ. ສແວງສຸກ

ຊັພຍາກອນທັມມະຊາດ.(ຕອນສອງ)

ຜົນປໂຍດຂອງປ່າ.

ປະເທດລາວມີປ່າດົງຢ່າງດົກໜາຊຶ່ງຫຸ້ມຫໍ່ພື້ນທີ່ຂອງປະເທດໄປແລ້ວປະມານສອງສ່ວນສາມ ແລະປະມານເຄິ່ງນຶ່ງຂອງປ່າເຫລົ່ານີ້ມີຜົນປໂຍດອັນສຳຄັນຕໍ່ເສຖກິດຂອງປະເທດ. ໃນປ່າດົງເຫລົ່ານີ້ມີໄມ້ຊນິດຕີໆຢ່າງຫລວງຫລາຍ ເພື່ອໃຊ້ໃນການສ້າງສາ ແລະເຮັດເຄື່ອງເຮືອນ ມີຄືໄມ້ດູ່ ໄມ້ແຄນ ໄມ້ແດງ ໄມ້ຍາງ ໄມ້ກະຍຸງ ໄມ້ກຳພີ້ ໄມ້ສັກ ໄມ້ເຮັ້ງ ໄມ້ໄຜ່ແລະອື່ນໆອີກ. ສ່ວນໄມ້ນ້ອຍນັ້ນ ໃຊ້ສຳລັບໄວ້ເຮັດຟືນແລະເຮັດຖ່ານດັງໄຟ.

ຢູ່ພາກເໜືອຂອງປະເທດ ມີປ່າໄມ້ສັກຢ່າງຫລວງຫລາຍ ສ່ວນມາກຢູ່ແຂວງໄຊຍະບຸຣີ, ຫົວຂອງ ແລະຫລວງພຣະບາງ. ຢູ່ບໍຣິເວນປາກລາຍປ່າໄມ້ສັກເປັນສົມບັດຂອງພຣະເຈົ້າມະຫາຊີວິດຊຶ່ງເພິ່ນປູກແລະຜລິດຜົນໃຊ້ແຕ່ດົນນານແລ້ວ. ປ່າໄມ້ສັກ ສ່ວນໃຫຍ່ແມ່ນຂອງຣັຖບານ ແຕ່ແມ່ນພວກບໍຣິສັດເປັນຜູ້ຮັບເໝົາຕັດໄມ້ ໂດຍໄດ້ຮັບອະນຸຍາດແລະໄດ້ຮັບໃບສັນຍາຈາກຣັຖບານ. ເນື່ອງຈາກການຂົນທ່ອນໄມ້ອອກຈາກປ່າບໍ່ສະດວກທັງແພງເກີນໄປ ການຕັດໄມ້ຈຶ່ງບໍ່ໄດ້ຕັດເຕັມເມັດເຕັມໜ່ວຍ. ທ່ອນໄມ້ສັກທີ່ຕັດນັ້ນໃຊ້ຊ້າງຫລືຣົດລາກເອົາຕາມທາງນ້ອຍລົງໄປຫາທ່ານ້ຳ ເພື່ອລ່ອງລົງທາງໃຕ້ຕາມລຳນ້ຳຂອງ. ແຕ່ກ່ອນທ່ອນໄມ້ທີ່ຕັດແລ້ວສົ່ງໄປຂາຍພນົມເປັນແລະໄຊງ່ອນ. ແຕ່ມາເຖິງປັດຈຸບັນນີ້ ໄມ້ສ່ວນມາກສົ່ງອອກໄປຂາຍໃຫ້ປະເທດໄທ.

ຜົນຂອງປ່າໄມ້ໃນປະເທດລາວ ນອກຈາກໄມ້ຕ່າງໆແລ້ວຍັງມີສິ່ງອື່ນອີກຄື: ຫວາຍ ຄັ່ງ ຍານ ຢາງຢືດ ນ້ຳມັນຍາງ. ເຄື່ອງເຫລົ່ານີ້ກໍ່ສົ່ງອອກໄປຂາຍຕ່າງປະເທດເໝືອນກັນ. ຕົວຢ່າງ: ຄັ່ງໃຊ້ເຮັດນ້ຳມັນທາໄມ້ຕ່າງໆແລະມີຕລາດຕ່າງປະເທດຕ້ອງການຫລາຍຂຶ້ນ ຄືໃນລາວສິບປີກ່ອນໄດ້ສົ່ງຄັ່ງດິບອອກໄປຂາຍຕ່າງປະເທດຫລາຍກວ່າຮ້ອຍຕອນຕໍ່ປີ.

ຊັພຍາກອນທັມມະຊາດ.(ຕອນສອງຕໍ່)

ຜົນຂອງປ່າຢ່າງນຶ່ງທີ່ສົ່ງອອກໄປຂາຍນອກປະເທດຢ່າງຫລວງຫລາຍ ໂດຍສະເພາະແມ່ນສົ່ງອອກໄປຂາຍປະເທດຝຣັ່ງກໍແມ່ນຍານ ຊຶ່ງໃຊ້ສຳລັບເຮັດນ້ຳຫອມໆຕາຍຕົວແລະໄດ້ມາຈາກຕົ້ນໄມ້ແມວນຶ່ງທີ່ເກີດຕາມທັມມະຊາດ ແລະບາງບ່ອນຄົນກໍປູກຖິ້ມໄວ້ຕາມໄຮ່ເກົ່າໂດຍບໍ່ໄດ້ຮັກສາແຕ່ຢ່າງໃດ, ນອກຈາກແຕ່ໄປຕັດກຽມເພື່ອເອົາຍາງມັນເທົ່ານັ້ນ. ຊຶ່ງແຕ່ກ່ອນໄດ້ສົ່ງອອກໄປຂາຍປີນຶ່ງປະມານ ໕໐ ຕອນ.

ຕົ້ນໄມ້ຊນິດນີ້ມີຢູ່ແຕ່ທາງພາກເໜືອຂອງປະເທດທີ່ຜລິດຍານທັງໝົດເພື່ອໃຊ້ເກືອບທົ່ວໂລກ. ຕໍ່ມາດຽວນີ້ຍານເຫລົ່ານີ້ຖືກສົ່ງອອກໄປຂາຍທີ່ບາງກອກເມືອງໄທ. ແລະອີກຕໍ່ນຶ່ງ ປະເທດໄທກໍສົ່ງອອກໄປຂາຍໃຫ້ປະເທດອື່ນໃນຢູໂຣບໂດຍໃສ່ຊື່ວ່າ, "ຍານຂອງໄທ". ແລະເຊັ່ນດຽວກັນກັບໄມ້ສັກທີ່ປະເທດລາວສົ່ງຂາຍໃຫ້ໄທ. ເມື່ອໄທເລື່ອຍຕັດແລະອົບແຫ້ງດີແລ້ວກໍສົ່ງອອກໄປຂາຍຕ່າງປະເທດໂດຍໃສ່ຊື່ວ່າໄມ້ສັກໄທ.

ດັ່ງທີ່ໄດ້ກ່າວມາ ປ່າໄມ້ໃນເມືອງລາວເປັນປ່າທີ່ເຕັມໄປດ້ວຍຊັພຍາກອນທັມມະຊາດອັນສົມບູນແລະງົດງາມ. ນອກຈາກໄມ້ອັນມີຄ່າຢ່າງຫລວງຫລາຍແລ້ວຍັງມີສັດປ່າອີກ. ຄັນຫາກສົງຄາມສງົບເສັດສິ້ນລົງພວກນັກລ່າສັດຄົງຈະຕື່ນເຕັ້ນແລະພໍອົກພໍໃຈນຳສັດປ່າເມືອງລາວຊຶ່ງມີຄືຊ້າງ ເສືອ ເສືອດາວ ໝີ ໝູ ໄກ້ ກວາງ ຟານ ເປັນຕົ້ນ. ແລະປ່າເຫລົ່ານີ້ຍັງຈະຊ່ວຍປັບປຸງໃນທາງເສຖກິດມາສູ່ປະເທດຊາດຢ່າງດີອີກ.

ມ.ສ. ສແວງສຸກ

1.31 ເຂື່ອນກັ້ນນ້ຳ.

ແຕ່ກ່ອນ ປະຊາຊົນລາວຢູ່ກິນແບບງ່າຍໆຕາມທັມມະຊາດ ແຕ່ດຽວນີ້ມີຜູ້ຄົນເປັນຈຳນວນມາກຫລາຍທີ່ໄດ້ໄປຮັບການສຶກສາຂັ້ນສູງຈາກຕ່າງປະເທດ ໄດ້ເປີດຫູເປີດຕາເຫັນຄວາມຈະເຣີນສີວິໄລຂອງໂລກພາຍນອກ ກໍແຫ່ງມີຄວາມຫວັງ ຄວາມຢາກໄດ້ຢາກດີຫລາຍຂຶ້ນ ແລະມີຄວາມຕ້ອງການຢາກມີຄວາມສຸກສະບາຍມີນ້ຳໃຊ້ໄຟສ່ວາງໃຫ້ພຽງພໍ ແລະກໍຢາກໃຫ້ບ້ານເມືອງຈະເຣີນທັນສມັຍເທົ່າທຽມກັບປະເທດອື່ນເຂົາ. ບັດນີ້ປະກົດວ່າຄວາມຄິດຄວາມຫວັງບາງຢ່າງທີ່ປາຖນາໄວ້ແຕ່ດົນນານໄດ້ກາຍເປັນຄວາມຈິງມາແດ່ແລ້ວ ຄືທາງຣັຖບານໄດ້ຈັດຫາສ້າງເຂື່ອນນ້ຳຂຶ້ນຫລາຍແຫ່ງ ເພື່ອພັທນາປະເທດຊາດແລະສນອງຄວາມຕ້ອງການຂອງປະຊາຣາສດອນ. ເຖິງແມ່ນວ່າປະເທດເຮົາຈະເປັນປະເທດນ້ອຍ ຍັງຂາດເຂີນຫລາຍສິ່ງຫລາຍຢ່າງ ທັງການເງິນ ອຸປກອນສິ່ງຂອງ ແລະຜູ້ຊ່ຽວຊານທາງດ້ານວິຊາການຕ່າງໆໃນການສ້າງສາກໍດີ ແຕ່ກໍມີປະເທດເພື່ອນມິດຫລາຍປະເທດຍິນດີໃຫ້ຄວາມຮ່ວມມືແລະຊ່ວຍເຫລືອເຮົາ. ແລະອີກປະການນຶ່ງປະເທດເຮົາກໍໄດ້ເປັນສມາຊິກຂອງຄນະກັມມະການພັທນາລຸ່ມແມ່ນ້ຳຂອງ ຊຶ່ງປະກອບດ້ວຍປະເທດທີ່ຢູ່ສອງຝັ່ງຕອນລຸ່ມຂອງແມ່ນ້ຳຂອງ ຄືລາວ ໄທ ຂເມນ ແລະວຽດນາມ. ຈຸດປະສົງອັນສຳຄັນຂອງຄນະກັມມະການ ກໍຄືພຍາຍາມຊ່ວຍກັນສ້າງສາປັບປຸງພ້າທີ່ດິນແລະການຊົລປະທານເກັບນ້ຳ ເພື່ອໃຫ້ຊີວິດການຄອງຊີບຂອງຄົນໃນພາກພື້ນນີ້ໄດ້ດີຂຶ້ນ..

ເຂື່ອນກັ້ນນ້ຳໃຫຍ່ແຫ່ງທຳອິດທີ່ໄດ້ສ້າງຂຶ້ນ ຢູ່ທາງພາກໃຕ້ຂອງເມືອງລາວແມ່ນເຂື່ອນເຊລະບຳທີ່ຕັ້ງຢູ່ນອກເມືອງປາກເຊອອກໄປ. ເຂື່ອນແຫ່ງນີ້ໄດ້ສ້າງສຳເຣັດແລະໄດ້ທຳພິທີຮັບມອບໃນວັນທີ ໑໐ ມີນາ ໑໙໗໐ ໂດຍອົງມົງກຸດຣາຊກຸມມານ ເຈົ້າຟ້າຊາຍວົງສວ່າງ ພ້ອມທັງທ່ານຜູ້ມີກຽດຂອງລາວແລະຝຣັ່ງໄດ້ໄປຮ່ວມດ້ວຍ. ທາງຣັຖບານຝຣັ່ງໄດ້ສ້າງເຂື່ອນນີ້ຂຶ້ນໃຫ້ຣັຖບານລາວ ດ້ວຍທຶນກູ້ຢືມແລະຊ່ວຍເຫລືອຂອງຝຣັ່ງເອງ ແລະເຂື່ອນແຫ່ງນີ້ສາມາດບຳຣຸງກະແສໄຟຟ້າໃຫ້ໂຣງງານອຸດສາຫະກັມໃຫຍ່ ແລະໃຫ້ປະຊາຊົນ

ເຂື່ອນກັ້ນນ້ຳ.(ຕໍ່)

ໃຊ້ໄດ້ທົ່ວເຖິງກັນຢ່າງພຽງພໍອີກຫລາຍແຫ່ງ.

ຢູ່ທາງພາກເໜືອ ຝຣັ່ງໄດ້ຊ່ວຍສ້າງເຂື່ອນນ້ຳດົງຊຶ່ງຈະສົ່ງກະແສໄຟຟ້າໄປໃຫ້ຫລວງພຣະບາງ. ແລະທາງອົງການຊ່ວຍເຫລືອຂອງສຫະຣັດໄດ້ຊ່ວຍຣັຖບານລາວສ້າງເຂື່ອນນ້ຳຕານຢູ່ແຂວງໄຊຍະບຸຣີຂື້ນ ຊຶ່ງໄດ້ເລີ່ມຕົ້ນສ້າງແຕ່ປີ ໑໙໖໗ ແລະກະວ່າຈະແລ້ວໃນກາງປີ ໑໙໗໑ ນີ້.

ສ່ວນເຂື່ອນທີ່ໃຫຍ່ແລະໃຊ້ເງິນທຶນກໍ່ສ້າງຫລາຍທີ່ສຸດຂອງປະເທດນັ້ນ ແມ່ນເຂື່ອນນ້ຳງື່ມຢູ່ແຂວງວຽງຈັນ ຊຶ່ງໄດ້ເລີ່ມຕົ້ນສ້າງໃນປີ ໑໙໖໗ ປັດຈຸບັນນີ້ພວມສ້າງຢູ່ ແລະຄາດວ່າຈະສ້າງແລ້ວໃນທ້າຍປີ ໑໙໗໑ ນີ້. ເຂື່ອນແຫ່ງນີ້ ທາງອົງການສຫະປະຊາຊາດແລະບັນດາປະເທດເພື່ອນມິດໄດ້ໃຫ້ຄວາມຊ່ວຍເຫລືອຢ່າງເຕັມທີ່ທັງໃນດ້ານການເງິນ ອຸປກອນເຄື່ອງຂອງ ແລະຜູ້ຊ່ຽວຊານທາງວິຊາການຕ່າງໆ ຊຶ່ງມີຫລາຍປະເທດໃຫ້ເປັນເງິນສົດແລະເຄື່ອງຂອງລ້າໆ ແລະບາງປະເທດກໍໃຫ້ຢືມ. ຖ້າເຂື່ອນນ້ຳງື່ມສ້າງເສັດແລ້ວ ຂັ້ນທຳອິດຈະຜລິດກະແສໄຟຟ້າໄດ້ປະມານ ໓໐ ພັນກິໂລວັດ ຂັ້ນຕໍ່ໄປເມື່ອຕິດຕັ້ງເຄື່ອງຈັກໄຟຟ້າໃສ່ເຕັມສ່ວນຕາມໂຄງການແລ້ວຈະສາມາດຜລິດກະແສໄຟຟ້າໄດ້ເຖິງ ໑໔໐ ພັນກິໂລວັດ ຊຶ່ງຈະເກີນຄວາມຕ້ອງການຂອງບໍຣິເວນຂົງເຂດວຽງຈັນ ກໍຈະສົ່ງແທນຄືນໃຫ້ປະເທດໄທ ທີ່ໄດ້ຢືມໄຟຟ້າມາສ້າງເຂື່ອນນ້ຳງື່ມຈາກເຂື່ອນອຸບົນລັດ. ຫລັງຈາກໃຊ້ຄືນໃຫ້ໄທໝົດແລ້ວ ກະແສໄຟຟ້ານີ້ກໍຈະເປັນສິນຄ້າອັນສຳຄັນອັນນຶ່ງຂອງປະເທດທີ່ລາວຈະສົ່ງຂາຍໃຫ້ໄທຕໍ່ໄປ.

ມ.ສ. ສແວງສຸກ

1.4 ການເດີນທາງບົກ.

ຖນົນໃຫຍ່ສາຍສຳຄັນໃນການເດີນທາງບົກພາຍໃນປະເທດມີຖນົນ ໑໓ ຕິດຕໍ່ຫລວງພຣະບາງໃສ່ວຽງຈັນ ແລະແຕ່ພາກກາງລົງໄປໃຕ້ ຖນົນສາຍນີ້ຍັງຕັດເລາະແຄມແມ່ນ້ຳຂອງຈາກວຽງຈັນເຖິງແຂວງສີທັນດອນ ເລີຍຕໍ່ໃສ່ປະເທດຂະເໝນ ທັງມີຖນົນຍ່ອຍຕັດຜ່ານຂ້າມປະເທດຫລາຍບ່ອນຄື: ຖນົນ ໑໘ ຕັດຈາກທ່າແຂກຜ່ານປະເທດໄປເຖິງວຽດນາມພາກກາງ ຖນົນ ໙ ຕັດຈາກສວັນນະເຂດຜ່ານເຊໂນ ແລະເຊໂປນເຖິງວຽດນາມພາກກາງ ແລະຖນົນ ໑໐ ຕັດໄປທາງຕາເວັນອອກຈາກປາກເຊໃສ່ອຸບົນ ປະເທດໄທ

ນອກຈາກນີ້ ທາງຕອນເໜືອສຸດຂອງຖນົນ ໑໓ ຍັງມີຖນົນຍ່ອຍທີ ໑ ຕິດຕໍ່ຫລວງພຣະບາງໃສ່ໄຊຍະບູຣີ; ຖນົນຍ່ອຍທີ ໔ ຕັດຂຶ້ນໄປທາງເໜືອ ແລະຖນົນຍ່ອຍທີ ໗ ຕັດຈາກພູຄູນເຖິງຊຽງຂວາງຕໍ່ກັບຖນົນຍ່ອຍທີ ໖ ໄປຊຳເໜືອ ແລະຕິດຕໍ່ໃສ່ຮາໂນຍ ວຽດນາມເໜືອ. ຖນົນເຫລົ່ານີ້ໄດ້ສ້າງຂຶ້ນໃນສໄມຝຣັ່ງຍັງປົກຄອງຢູ່ ຄືກ່ອນສົງຄາມໂລກຄັ້ງທີສອງ ແລະເວລານັ້ນເປັນຖນົນສາຍສຳຄັນສຳລັບຕິດຕໍ່ກັບວຽດນາມເໜືອໃສ່ທາງອອກທາງທະເລ. ແຕ່ຖນົນຍ່ອຍສອງສາຍທີ່ເວົ້າສຸດທ້າຍນີ້ ໄດ້ຢຸດທຽວກັນຫລັງຈາກວຽດນາມເໜືອຕົກຢູ່ໃນຄວາມຄວບຄຸມຂອງຄອມມຸຍນິດ ແລະປາກົດວ່າພວກຄນະປະເທດລາວໄດ້ເປີດທຽວໃໝ່ ເປັນທາງລຳລຽງໃນປີ ໑໙໖໑ ເປັນຕົ້ນມາ ຮວມທັງຖນົນຍ່ອຍບາງສາຍຢູ່ທາງພາກໃຕ້ອີກ.

ເນື່ອງຈາກວ່າ ປະເທດລາວຍັງຂາດເຂີນຖນົນຫົນທາງດີ ແລະພື້ນທີ່ທັມມະຊາດຂອງປະເທດສ່ວນໃຫຍ່ກໍມີແຕ່ພູຜາປ່າດົງ ການທ່ອງທຽວໄປມາແລະສົ່ງຄົນສິນຄ້າທາງບົກຈຶ່ງບໍ່ສະດວກປານໃດໂດຍສະເພາະແລ້ວ ແມ່ນການຕິດຕໍ່ໄປມາໃນລະຍະໄກຣະຫວ່າງແຂວງແລະເມືອງຕ່າງໆ. ປະເທດລາວຍັງບໍ່ທັນມີຣົດໄຟເທື່ອ ນອກຈາກຣົດຍົນ ຣົດໂດຍສານ ຣົດຂົນສົ່ງເທົ່ານັ້ນ ແລະທຽວທາງສະດວກແຕ່ໃນຣະດູແລ້ງ. ດ້ວຍເຫດວ່າ ໃນຣະດູຝົນໆຕົກຫລາຍເກີນໄປທຳໃຫ້ນ້ຳຖ້ວມຕັດທາງ ເຊາະຖນົນເພພັງ ແລະບາງບ່ອນນ້ຳກໍພັດຂົວໄມ້ໜີໄປ ຈຶ່ງທຳໃຫ້ພາຫະນະເຫລົ່ານີ້ທຽວບໍ່ໄດ້. ອີກປະການນຶ່ງເຖິງແມ່ນທຽວໄດ້ແຕ່ໃນຣະດູແລ້ງ ຖນົນແຫ້ງດີແຕ່ກໍເປັນຫລຸບເປັນໂນນມີຂຸມຫລາຍ ເມື່ອຣົດແລ່ນໄປຂີ້ຝຸ່ນຈະແດງກຸ້ມທີ່ໝົດ ຊຶ່ງພາໃຫ້ຣົດແລ່ນ,

ການເດີນທາງບົກ.(ຕໍ່)

ໄວບໍ່ໄດ້ ແລະລາງເທື່ອກໍ່ມີພວກໂຈນຮ້າຍພວກກໍ່ການຮ້າຍມາລັດທາງຂົ່ມຂູ່ເອົາສິ່ງຂອງ.

ພວກຜູ້ຄົນຮູ້ກັນດີຢູ່ວ່າ ການເດີນທາງໄກນີ້ກັນດານພໍປານໃດ ແຕ່ດົນໆເທື່ອນຶ່ງກໍມີຄົນສ່ຽງຊີວິດຂັບຣົດສ່ວນຕົວໄປຫລິ້ນໄປທ່ຽວແຂວງອື່ນ ຊຶ່ງຂະເຈົ້າພາກັນໄປເປັນຫມູ່ລະຫລາຍໆຄົນ. ນອກຈາກນີ້ ກໍມີຣົດບັນທຸກທີ່ເຜົາໄມ້ ຟືນ ຖ່ານດັງໄຟ ແລະເຄື່ອງປູກຂອງຝັງຕ່າງໆເຂົ້າສູ່ຕລາດ ແລະຣົດໂດຍສານບັນທຸກທັງຄົນໂດຍສານແລະເຄື່ອງຊື້ຂອງຂາຍທີ່ຕິດໂຕມານໍາຂະເຈົ້າເຂົ້າສູ່ຕລາດ. ພວກຜູ້ຄົນທີ່ໂດຍສານມານໍາຣົດນີ້ສ່ວນມາກແມ່ນພວກພໍ່ຄ້າແມ່ຄ້າ ພວກໄປຕິດຕໍ່ວຽກການຫລືຢາມພີ່ຢາມນ້ອງ ແລະພວກນັກຮຽນທີ່ທ່ຽວໄປຮຽນໜັງສືຢູ່ໃນເມືອງຫລືກັບມາຢາມພໍ່ແມ່. ຣົດໂດຍສານແນວສຸດທ້າຍນີ້ ມີຖ້ຽວອອກເດີນທາງເປັນປະຈໍາຈາກບ້ານນຶ່ງໄປຫາອີກບ້ານນຶ່ງ ແຕ່ລາງເທື່ອກໍຕ້ອງຈັກຊ້າໄດ້ເລື່ອນມື້ໄປ ຖ້າບໍ່ມີຄົນພໍ. ທຸກໆບ້ານທີ່ຣົດໂດຍສານຜ່ານກໍແວະຈອດເອົາຄົນຂຶ້ນຄົນລົງ ຊຶ່ງແອັດຣົດຜູ້ນຶ່ງຫລືສອງຄົນເປັນຜູ້ຊ່ວຍຍົກຂຶ້ນຂອງລົງຫລືຮັບເອົາຂອງຂຶ້ນໃສ່ຫລັງຄາຣົດ. ຢູ່ເທິງຫລັງຄາຣົດມີເຄື່ອງຂອງເຕັມມັດດ້ວຍເຊືອກລຽງລັງມີ ຄື: ທໍ່ພາກເຜັດແຫ້ງ ທໍ່ເກືອ ຢາງ ເປັດໄກ່ ສັດປ່າ ກະຕ່າຜັກ ກະບຸງໝາກໄມ້ ກະປິບປາແລະອື່ນໆ ແລະຢູ່ໃນຣົດມີຄົນເພັ້ນກັບເຄື່ອງຂອງ ຊຶ່ງລາງເທື່ອເພັ້ນຫລາຍເກີນໄປຈົນໄດ້ແຂວນຢູ່ນອກຣົດກໍມີ. ເວລາຄໍ່າມືດຢູ່ບ້ານໃດຂະເຈົ້າກໍຈອດຣົດຢຸດພັກເຊົາຢູ່ບ່ອນຫັ້ນ ລາງຄົນກໍມີພີ່ນ້ອງຫລືພໍ່ສ່ຽວແມ່ສ່ຽວຢູ່ຫັ້ນກໍໄປພັກເຊົານໍາ ຫລືຂະເຈົ້າກໍໄປພັກເຊົາຢູ່ວັດໃກ້ທາງກໍມີ ແລ້ວຕື່ນແຕ່ເດິກອອກເດີນທາງຕໍ່ໄປ. ເມື່ອມາຮອດຕລາດ ຣົດກໍຈອດໄວ້ແຄມຕລາດໃຫ້ຄົນລົງແລະຍົກເຄື່ອງຂອງອອກຂາຍ. ຢູ່ບ່ອນດຽວກັນນັ້ນກໍເປັນບ່ອນທີ່ຄົນມາຕິດຕໍ່ວ່າຖ້ຽວໜ້າຣົດຈະອອກມື້ໃດ. ການໂດຍສານນໍາຣົດນີ້ບໍ່ຕ້ອງຊື້ປີ້ໄວ້ກ່ອນ ຫລັງຈາກຂຶ້ນຣົດໄປແລ້ວ ແອັດຣົດຈຶ່ງມາເກັບເງິນຕາມທີຫລັງ.



1.41 ການເດີນທາງຕາມຖິ່ນພູ ແລະຖິ່ນຮາບຢູ່ຕາມບ້ານນອກ.

ການໄປມາຫາສູ່ແລະສົ່ງຄ່ຽນຢູ່ຕາມຖິ່ນພູນັ້ນ ພວກລາວເທີງລາວສູງທັງຫລາຍພາກັນຍ່າງຫລືຂີ່ມ້າ ຫລືລໍໄປຕາມທາງນ້ອຍຕາມຣະຫວ່າງພູ ຖ້າຂະເຈົ້າມີສິ່ງຂອງໜັກຕິດໂຕໄປນຳຫລາຍຂະເຈົ້າກໍເປ້ ເອົາຕັ້ງໃສ່ຫົວ ຫລືຕ່າງໃສ່ຫລັງມ້າຫລືລໍກໍມີ. ໃນຣະດູແລ້ງເມື່ອຜູ້ຍິງ ເກັບທ້ອນເອົາເຄື່ອງປູກຂອງຝັງໄດ້ຫລາຍສົມຄວນແລ້ວ ພວກຜູ້ຊາຍໃນບ້ານດຽວກັນເປັນພູ່ ໓-໔ ຄົນກໍເອົາສິນຄ້າໃສ່ຫລັງມ້າລົງໄປຂາຍຕລາດໃຫຍ່ ເມື່ອໄດ້ເງິນແລ້ວຂະເຈົ້າກໍເອົາຊື້ແພ່ນແພ ແລະອາຫານການກິນທີ່ຂະເຈົ້າຂາດເຂີນຢູ່ທາງບ້ານມາຕ້ອນລູກເມັຽ ແຕ່ລາງເທື່ອຂະເຈົ້າກໍເອົາເຄື່ອງປູກນັ້ນໄປແລກເອົາຂອງຢູ່ບ້ານອື່ນທີ່ຂະເຈົ້າຕ້ອງການຢາກໄດ້ກໍມີ. ຄົງຈະເປັນຍ້ອນຖນົນຫົນທາງບໍ່ດີຫລືວ່າຂະເຈົ້າບໍ່ມີເຄື່ອງປູກຂອງຝັງຫລາຍເຫລືອກິນພໍໄດ້ເອົາໄປຂາຍ ຫລືວ່າຂາດເຂີນພາຫະນະສຳລັບຂົນສົ່ງ ສິນຄ້າກໍອາດຈະເປັນໄດ້ ຈຶ່ງເປັນເຫດໃຫ້ພວກທີ່ຢູ່ຖິ່ນພູນີ້ນຳເຄື່ອງຂອງຂະເຈົ້າລົງໄປຂາຍແຕ່ປີລະ ໒-໓ ເທື່ອທໍ່ນັ້ນ.

ສ່ວນພວກທີ່ຢູ່ຖິ່ນຮາບ ຕາມບ້ານນອກທາງໄກຖນົນຫົນທາງດີ ລາງຄົນກໍໃຊ້ຊ້າງຕ່າງຫລືຂົນເຄື່ອງໜັກຕ່າງໆເພິ່ນເອົາຍ່ວງສານດ້ວຍຫວາຍພາດໃສ່ເທິງຫລັງຊ້າງເພື່ອບັນທຸກຜູ້ຄົນໄປມາໄດ້ທຸກຣະດູ ໃນຣະດູແລ້ງບາງບ່ອນຣົດບັນທຸກພໍແລ່ນໄດ້ ລາງຄົນກໍໃຊ້ແກ່ເສົາເຮືອນ ຫລັກຮົ້ວ ໄມ້ເຮັ້ຽ ແລະເຄື່ອງປຸກເຮືອນອື່ນໆອີກມາຈາກປ່າ ຫລືຈາກບໍຣິສັດການຄ້າ. ຊາວບ້ານສ່ວນມາກບໍ່ສາມາດມີເງິນຊື້ຣົດໄດ້ແລະຂະເຈົ້າກໍຮູ້ດີວ່າບໍ່ມີທາງດີພໍແລ່ນຣົດໄດ້ຕລອດປີຄືກວຽນ ທັງຣາຄາກໍແພງກໍແພງກວ່າຕັ້ງຫລາຍເທົ້າ ແຕ່ຖ້າຈະໃຫ້ກວຽນແລ່ນໄວທັນໃຈແລະແລ່ນວຽກໄດ້ຜົນຫລາຍຄືຣົດກໍບໍ່ໄດ້ແລ້ວ ເພາະບໍ່ມີເຄື່ອງຈັກ ມີແຕ່ເອົາງົວຄູ່ດຽວເທົ່ານັ້ນເປັນແຮງດຶງ ແລະຈະເອົາເຄື່ອງຂອງໃສ່ໜັກຫລາຍກໍບໍ່ໄດ້. ແຕ່ກວຽນມີປໂຍດແລະເໝາະສົມດີສຳຫລັບຫຽວທາງຮ່ອນບ້ານແລະທາງຂີ້ຕົມຊຶ່ງຊາວບ້ານສ່ວນມາກມີແລະໃຊ້ກັນຫລາຍໃນການສົ່ງຄ່ຽນເຄື່ອງປູກຂອງຝັງໄປຂາຍຣະຫວ່າງບ້ານໃກ້ຄຽງລາງຄົນເມື່ອເກັບເຄື່ອງປູກໄດ້ຫລາຍແລ້ວເຊັ່ນ: ອ້ອຍ ກ້ວຍ ເຂົ້າສາລີ ໝາກເຂືອ ໝາກແຕງ ຜັກກາດແລະອື່ນໆເປັນຕົ້ນ ຂະເຈົ້າເອົາໃສ່ກະບຸງ ຖົງ ໄຖ່ ຂົ້ນໃສ່

ການເດີນທາງຕາມຖິ່ນພູ ແລະຖິ່ນຮາບຕາມບ້ານນອກ.(ຕໍ່)

ກວຽນໄປຂາຍຕາມໝູ່ບ້ານອື່ນ ແລະລາງຄົນກໍແພງໄວ້ໄປຂາຍໃນເມືອງໂລດບາດດຽວໂດຍຕ້ອງນອນຄ້າງ ຄືນສອງສາມຄືນກໍມີ.

ຄັນເຖິງຣະດູເຣັດນາມາ ພວກທີ່ມີນາໄກບ້ານກໍຂົນຄົວເຮືອນຂອງຂະເຈົ້າໃສ່ກວຽນອອກໄປຢູ່ນາ ແລະຫລັງຈາກຟາດເຂົ້າແລ້ວກໍເອົາໃສ່ກວຽນເທົ່າມາໄວ້ເລົ້າໃນບ້ານ. ລາງຄົນກໍເອົາຣົດຫລືຈ້າງຣົດເທົ່າມາ ໃຫ້ຖ້ຽວດຽວໂລດກໍແພງແລ້ວໄວ ພວກທີ່ໃຊ້ກວຽນຂົນຖ້ຽວດຽວບໍ່ແລ້ວຕ້ອງໄດ້ແກ່ຫລາຍຖ້ຽວ ຫລືບໍ່ດັ່ງນັ້ນ ຂະເຈົ້າຕ້ອງວານພີ່ນ້ອງຫລືຈ້າງຄົນອື່ນທີ່ມີກວຽນມາຊ່ວຍຂົນໃຫ້ແລ້ວຖ້ຽວດຽວໂລດກໍໄດ້. ຄັນຫາກເຂົ້າຍັງ ເຫລືອບໍ່ຫລາຍ ພວກຜູ້ຍິງກໍຫາບໃສ່ກະບຸງເອົາແລະຍ່າງຕາມກວຽນທີ່ຜູ້ຊາຍນັ່ງຂັບໄປ. ສຳລັບຜູ້ທີ່ມີນາຢູ່ ໃກ້ບ້ານຂະເຈົ້າກໍຫາບເອົາເຂົ້າຟາດແລ້ວໄປໄວ້ເລົ້າເທື່ອລະໜ້ອຍ.

ມ.ສ. ສແວງສຸກ

1.42 ການສັນຈອນໄປມາຢູ່ຕາມເມືອງໃຫຍ່.

ຖນົນຫົນທາງຢູ່ຕາມບໍລິເວນເມືອງໃຫຍ່ ສ່ວນມາກກວ້າງສົມຄວນແລະປູ້ດ້ວຍຢາງ ຊຶ່ງທຳໃຫ້ພາຫະນະທຸກຊນິດທຽວໄດ້ຕລອດປີ. ແຄມຖນົນໃຫຍ່ມີທາງຍ່າງປູ້ດ້ວຍຊີມັງທັງສອງຟາກຂ້າງໄວ້ໃຫ້ຄົນຍ່າງຫລິ້ນເບິ່ງຮ້ານຄ້າຫລືຍ່າງເລາະຊື້ຂອງ. ແຕ່ຍັງມີຖນົນບາງສາຍຍັງບໍ່ທັນໄດ້ປູຢາງເທື່ອ ພຽງແຕ່ປູຫີນແຮ່ແລ້ວເອົາຣົດທັບທາງທັບໄວ້ຊື່ໆ. ຖນົນເນວສຸດທ້າຍນີ້, ໃນຣະດູແລ້ງຖ້າລົດແລ່ນໄວແດ່ ຂີ້ຝຸ່ນຈະປິວໄງ່ກຸ້ມຂຶ້ນ ໄປຈັບເຄື່ອງນຸ່ງຂອງຄື ຕົ້ນໄມ້ເຮືອນຊານເປັນຕົ້ນ. ໂດຍສະເພາະໃນຣະດູຮ້ອນ ເວລາເທື່ອອອກຫລາຍຂີ້ຝຸ່ນຈະທຳໃຫ້ເຮົາຮູ້ສຶກບໍ່ສະອາດ ໜຽວຕົນໂຕແລະຢູ່ຍາກ.

ການໄປມາຫາສູ່ແລະຕິດຕໍ່ວຽກການກໍ່ບໍ່ດີປານໃດ ແຕ່ກໍ່ຍັງສະດວກກວ່າບ່ອນອື່ນແດ່. ທຸກເຊົ້າຂອງວັນເຮັດການ ຂ້າຣາຊການພໍ່ຄ້າຊາວຂາຍກໍ່ຂັບຣົດໄປການແລະຕິດຕໍ່ວຽກການຕ່າງໆ. ລາງຄົນກໍ່ເອົາເດັກນ້ອຍໄປສົ່ງໂຮງຮຽນນຳ. ພວກທີ່ຢູ່ໃກ້ໂຮງການແລະໂຮງຮຽນກໍ່ຍ່າງໄປ. ກິຈການປະຈຳວັນຂອງຣົດໂດຍສານທັງສາຍໃກ້ແລະໄກ ກໍ່ຮັບເອົາພວກແມ່ຄ້າແລະເຄື່ອງກິນຂອງຂາຍຂະເຈົ້າມາຂາຍຕລາດໃນເມືອງ ແລະຣົດຂົນສົ່ງກໍ່ຂົນເອົາສິ່ງຂອງໄປສົ່ງຕາມຮ້ານຄ້າຕ່າງໆ. ພວກຜູ້ຄົນກໍ່ພາກັນລົງຕລາດຊື້ເຄື່ອງກິນມາເຮັດກິນທ່ຽງແລະແລງ. ເວລາກັບບ້ານ ບາງຄົນກໍ່ຂຶ້ນຣົດເມປະຈຳທາງ ຣົດສາມລໍ້ ຣົດຖີບ ຣົດຈັກ ຫລືຍ່າງໄປ ແລ້ວແຕ່ຄວາມສະດວກຂອງແຕ່ລະບຸກຄົນ. ບາງຄົນຢູ່ໃກ້ຕລາດ ຖ້າຊື້ຂອງຫລາຍຫິ້ວບໍ່ໄຫວ ກໍ່ຈ້າງສາມລໍ້ຫລືຈ້າງຄົນຫາບ ຫລືແບກໄປສົ່ງ.

ການສັນຈອນໄປມາຕາມເມືອງໃຫຍ່ມີຢູ່ບໍ່ຂາດ ບໍ່ວ່າກາງເວັນຫລືກາງຄືນ. ແຕ່ຣົດມັກຈະຕິດກັນຫລາຍໃນເວລາຕອນເຊົ້າກວ່າເວລາອື່ນ ຊຶ່ງເປັນເວລາຄົນອອກຈາກບ້ານໄປທຸຣະຕ່າງໆ ຈຶ່ງທຳໃຫ້ການສັນຈອນສັບສົນກັນຫລາຍ ຕົວຢ່າງຢູ່ໃນເມືອງວຽງຈັນ ຄືຕລາດເຊົ້າ, ວິທຍາລັຍວຽງຈັນແລະຕຶກໂຮງການຕ່າງໆ ຕັ້ງຢູ່ບໍລິເວນດຽວກັນ ຈຶ່ງທຳໃຫ້ການສັນຈອນ

ການສັນຈອນໄປມາຢູ່ຕາມເມືອງໃຫຍ່.(ຕໍ່)

ໄປມາຢ່າງເພັ່ນພ່າແລະມີຣົດແລ່ນເຂົ້າແລ່ນອອກຢູ່ບໍ່ຂາດ. ດ້ວຍເຫດນີ້ ຈຶ່ງທຳໃຫ້ການເຄື່ອນໄຫວໄປມາບໍ່ສະດວກແລະແລ່ນຣົດໄວກໍ່ບໍ່ໄດ້. ຢູ່ແຄມຕລາດພວກຣົດຕັກຊີ, ສາມລໍ້ກໍ່ຈອດເປັນແຖວຕາມບ່ອນທີ່ທາງການອະນຸຍາດໃຫ້ຈອດ ເພື່ອເອົາຄົນໂດຍສານຂຶ້ນລົງ. ຢູ່ຕລາດອີກແຈນຶ່ງສຽງຄົນຂັບຕັກຊີກໍ່ເອີ້ນເອົາຄົນຕາມສາຍທາງທີ່ຂະເຈົ້າແລ່ນດັ່ງມາຄື:"ບ້ານສີໄຄອອກດຽວນີ້ ບ້ານສີໄຄໆ" ຄົນອື່ນອີກກໍ່ເອີ້ນໄປວ່າ"ຈີ່ນາຍໂມ້ ສວນມອນ,ຈີ່ນາຍໂມ້ ສວນມອນ" ດັ່ງນີ້ເປັນຕົ້ນ. ສຳລັບພວກຖີບສາມລໍ້ຂະເຈົ້າຖີບໄປແຕ່ຣະຍະໃກ້ອ້ອມແອ້ມຕົວເມືອງ,ຕາມທັມມະດາຜູ່ໂດຍສານຈະມາຖາມເຊັ່ນ"ສາມລໍ້ໄປສີເມືອງບໍ່" ຄັນວ່າໄປ ຕົກລົງຣາຄາກັນຕາມສົມຄວນ. ຢູ່ຂ້າງບ່ອນຈອດຣົດຕັກຊີ ສາມລໍ້ກໍ່ມີບ່ອນຝາກຣົດຖີບ, ຣົດຈັກ ຢ່າງກວ້າງຂວາງຊຶ່ງເຈົ້າຂອງຣົດໄປຝາກແລ້ວເອົາປີ້ໄວ້ເພື່ອກັບຄືນໄປເອົາຣົດ.

ຄັນກາງຄືນມາບໍ່ມີຄົນຫຼວງຫລາຍ ນອກຈາກຜູ່ຄົນທີ່ອອກໄປຫາຄວາມສຳຣານນອກບ້ານຄື: ອອກໄປກິນເຂົ້ານອກ, ໄປເບິ່ງຊີເນ ເບິ່ງລະຄອນ ໄປກິນລ້ຽງ ຫລືໄປຊ່ອຍບຸນຊ່ອຍທານພີ່ນ້ອງ. ແລະດົນໆກໍໄດ້ຍິນສຽງຣົດຜູ່ບ່າວໄປທ່ຽວຫລິ້ນສາວບ້ານໃຕ້ບ້ານເໜືອ ຜ່ານມາເທື່ອນຶ່ງ.

ມ.ສ. ສແວງສຸກ

1.43 ການຄະມະນາຄົມທາງນ້ຳ.

ແມ່ນ້ຳຂອງເປັນແມ່ນ້ຳທີ່ສຳຄັນຂອງການເດີນທາງນ້ຳໃນປະເທດ. ພວກປະຊາຊົນລາວທີ່ຕັ້ງບ້ານເຮືອນຢູ່ຕາມຝັ່ງແມ່ນ້ຳຂອງແລະສາຂາຂອງມັນ ສ່ວນມາກພາກັນທ່ຽວທາງນ້ຳດ້ວຍເຮືອຖໍ່ແລະເຮືອພາຍ. ຂະເຈົ້າໃຊ້ເຮືອເຫລົ່ານີ້ສຳລັບໄວ້ຂົນສິນຄ້າແລະເຄື່ອງປູກຂອງຝັ່ງຕ່າງໆ, ສຳລັບໄວ້ໄປຫາປ່າແລະໄວ້ທ່ຽວໄປມາຫາສູ່ກັນ. ບາງຄົນມີເຮືອຢູ່ແລ້ວກໍ່ຊື້ເອົາເຄື່ອງຈັກມາຕິດທ້າຍເພື່ອໃຊ້ແລ່ນໃຫ້ສະດວກແລະໄວທັນໃຈກໍ່ມີບາງເລັກໜ້ອຍ.

ການເດີນທາງນ້ຳທີ່ສະດວກທີ່ສຸດແມ່ນຣະດູຝົນ. ຕາມລຳແມ່ນ້ຳຂອງເຮືອຖໍ່, ເຮືອພາຍແລະເຮືອຈັກທ່ຽວໄດ້ຕລອດປີແຕ່ເໜືອຕລອດໃຕ້ ຄືແຕ່ຫ້ວຍຊາຍເຖິງຫລວງພຣະບາງເຖິງວຽງຈັນຕລອດຮອດເມືອງໂຂງ. ແມ່ນ້ຳຂອງຕອນເໜືອຂອງປະເທດຄືແຕ່ຊຽງແສນເຖິງວຽງຈັນມີແກ້ງຫລາຍຊຶ່ງກຳປັ່ນທ່ຽວບໍ່ໄດ້ເລີຍ. ແຕ່ກຳປັ່ນໃຫຍ່ຊຶ່ງບັນຈຸສິ່ງຂອງໄດ້ເທື່ອລະຫລາຍໆເຖິງ ໔໐໐ ຕອນນັ້ນທ່ຽວໄດ້ຕລອດປີແຕ່ວຽງຈັນເຖິງສວັນນະເຂດ. ເປັນທີ່ສັງເກດໄດ້ວ່າ ຄືໃນລາວ ໑໙໕໔ ເປັນຕົ້ນມາໄດ້ມີການຂຍາຍສາຍການບິນຫລາຍຂຶ້ນ ຈຶ່ງທຳໃຫ້ການເດີນທາງນ້ຳທົ່ວທຸກແຫ່ງພາຍໃນປະເທດໃນປັດຈຸບັນໄດ້ລົດໜ້ອຍລົງ. ນອກຈາກຢູ່ເມືອງທ່າເດື່ອໃຕ້ວຽງຈັນໄປປະມານ ໔໐ ກິໂລແມັດບ່ອນດຽວເທົ່ານັ້ນທີ່ຍັງຂຍາຍການໃຊ້ເຮືອບັກແລະເຮືອຈັກຂ້າມນ້ຳຂອງໄປຫາເມືອງໜອງຄາຍປະເທດໄທຫລາຍຂຶ້ນ. ທ່າເຮືອແຫ່ງນີ້ໄດ້ເລີ່ມໃຊ້ຫລາຍຂຶ້ນນັບຕັ້ງແຕ່ຕົ້ນປີ ໑໙໕໗ ເປັນຕົ້ນມາ. ເພາະຍ້ອນເຫດຜົນຫລາຍປະການ ເຊັ່ນເສິກສົງຄາມເປັນຕົ້ນ, ປະເທດລາວຊຶ່ງແຕ່ກ່ອນເຄີຍໃຊ້ທ່າເຮືອໃຫຍ່ໄຊງ່ອນ ປະເທດວຽດນາມໃຕ້ເປັນທາງອອກສູ່ທະເລ, ບັດນີ້ໄດ້ຫັນມາໃຊ້ທ່າເຮືອບາງກອກຫລາຍຂຶ້ນ.

ສ່ວນສາຂາຕ່າງໆຂອງແມ່ນ້ຳຂອງນັ້ນມີໜ້ອຍທີ່ສຸດ. ໃນຣະດູຝົນເມື່ອນ້ຳຂຶ້ນຖ້ວມແກ້ງຕາມແມ່ນ້ຳຕ່າງໆ ພວກພໍ່ໄຮ່ພໍ່ນາພາກັນທ້ອນໂຮມເອົາເຄື່ອງປູກຂອງຂະເຈົ້າໃສ່ແພໄມ້ເຮັ້ຽໄມ້ພາງລ່ອງລົງມາຂາຍທາງເມືອງວຽງຈັນ ແລ້ວຈຶ່ງກັບຄືນບ້ານດ້ວຍເຮືອຈັກແລະເຮືອບິນ.

ການຄະມະນາຄົມທາງນ້ຳ.(ຕໍ່)

ເຖິງແມ່ນວ່າການເດີນທາງນ້ຳໄດ້ລົດໜ້ອຍລົງກໍຕາມ ແຕ່ທາງຣາຊການກໍຍັງຖືວ່າເປັນສິ່ງສຳຄັນທີ່ສຸດໃນການຕິດຕໍ່ກັບພວກໝູ່ບ້ານຕ່າງໆຢູ່ຕາມຝັ່ງແມ່ນ້ຳ ຍັງບໍ່ມີຖົນົນຫົນທາງຫລືເຮືອບິນໄປຮອດໄປເຖິງ. ແລະກໍມີຜູ້ຄົນທຽວຫລາຍຂື້ນໃນຣະດູຝົນເມື່ອເວລາທຽວທາງບົກແລະທາງອາກາດບໍ່ໄດ້.

ມ.ສ. ສແວງສຸກ


ນ້ຳທາ
ນ້ຳອູ
ນ້ຳຂອງ
ນ້ຳຄານ
ນ້ຳງຽບ
ນ້ຳກະດິງ
ນ້ຳຂອງ
ເຊບັ້ງໄຟ
ເຊບັ້ງຫຽງ
ເຊໂດນ
ເຊກອງ
ນ້ຳຂອງ

1.44 ການເດີນທາງອາກາດ.

ການເດີນທາງອາກາດໃນປະເທດລາວ ທັງພາຍໃນແລະພາຍນອກປະເທດນັບວ່າໄດ້ໃຊ້ຫລາຍຂຶ້ນຕັ້ງແຕ່ປີ ໑໙໕໔ ເປັນຕົ້ນມາ ແລະກໍໄດ້ຂຍາຍການໃຊ້ອອກເລື້ອຍໆ ຊຶ່ງມີສູນກາງສາຍການບິນໃຫຍ່ທີ່ສຸດຕັ້ງຢູ່ທີ່ເມືອງຫລວງວຽງຈັນ ທັງມີເດີ່ນເຮືອບິນໃຫຍ່ທັນສມັຍຂອງປະເທດສຳລັບໃຫ້ເຮືອບິນອາຍພົ່ນຂຶ້ນລົງໄດ້ຢ່າງສະດວກ.

ການເດີນທາງອາກາດພາຍໃນປະເທດ ມີບໍຣິສັດການບິນລາວ ຄືລາວເດີນອາກາດ ແລະເອທາອາກາດ ທຳການບິນຕິດຕໍ່ນະຄອນວຽງຈັນໃສ່ແຂວງຕ່າງໆ. ແຕ່ເອທາອາກາດນັ້ນທຳການບິນຕິດຕໍ່ວຽງຈັນໃສ່ກັບເມືອງຕ່າງສະເພາະພາກເຫນືອຂອງປະເທດເທົ່ານັ້ນ ທັງບໍ່ທຳການບິນເປັນປະຈຳຄືລາວເດີນອາກາດ. ເດີ່ນເຮືອບິນທັງຫມົດໃນປະເທດມີປະມານ ໔໐ ແຫ່ງຊຶ່ງເດີ່ນເຮືອບິນວັດໄຕ(ວຽງຈັນ) ເຊໂນ ແລະປາກເຊ ນອກຈາກມີສາຍການບິນຕິດຕໍ່ກັບແຂວງຕ່າງໆໃນປະເທດແລ້ວ ຍັງທຳການບິນຕິດຕໍ່ກັບຕ່າງປະເທດໃນພາກພື້ນອາຊີຕາເວັນອອກສຽງໃຕ້ອີກ. ຕົວຢ່າງບໍຣິສັດລາວເດີນອາກາດທຳການບິນກັບຕ່າງປະເທດມີຄື: ວຽງຈັນ-ບາງກອກ-ມະເລເຊັຽ, ວຽງຈັນ-ພົນມເປັນ, ວຽງຈັນ-ໄຊງ່ອນ, ວຽງຈັນ-ຮົງກົງ, ເຊໂນ-ໄຊງ່ອນ, ປາກເຊ-ພົນມເປັນ ເປັນຕົ້ນ. ເດີ່ນເຮືອບິນສາມແຫ່ງນີ້ ເຮືອບິນສີ່ຫມາກປີ້ນຂຶ້ນລົງໄດ້ຢ່າງສະດວກ. ນອກຈາກນີ້ຍັງມີເດີ່ນເຮືອບິນອີກບາງບ່ອນທີ່ເຮືອບິນສີ່ຫມາກປີ້ນສາມາດລົງໄດ້ ແຕ່ນອກນັ້ນກໍມີແຕ່ເຮືອບິນນ້ອຍລົງໄດ້ເທົ່ານັ້ນ.

ສ່ວນບໍຣິສັດການບິນຕ່າງປະເທດມີສາຍການບິນຕິດຕໍ່ກັບປະເທດລາວກໍມີອາກາດວຽດນາມ, ອາກາດຂເມນ, ອາກາດໄທ, ກະເຕປາຊີຟິກ, ແລະແພນອະເມຣິກັນເປັນຕົ້ນ.

ເຖິງແມ່ນການເດີນທາງອາກາດຈະສະດວກຂຶ້ນ ຊຶ່ງຕາມເມືອງໃຫຍ່ຕ່າງໆມີບ້ານພັກຫລືໂຮງແຮມໃຫ້ຜູ້ຄົນໄດ້ພັກເຊົາ ແລະມີສາຍການບິນຕິດຕໍ່ກັບທຸກໆແຂວງເປັນປະຈຳ ແຕ່ກໍມີບາງບ່ອນທີ່ທຳການບິນແຕ່ເວລາມີເຄື່ອງຂອງແລະຜູ້ຄົນໂດຍສານພຽງພໍເທົ່ານັ້ນ. ແລະລາງເທື່ອຕາມເມືອງນ້ອຍຜູ້ຄົນໂດຍສານ

ການເດີນທາງອາກາດ.(ຕໍ່)

ຕ້ອງໄດ້ຄ້າຕັ້ງຫລາຍມື້ກ່ອນເຮືອບິນຈະລົງມາເຖິງ. ສ່ວນບ່ອນພັກເຊົາຂອງພວກຜູ້ຄົນໂດຍສານທີ່ໄປບ້ານນ້ອຍເມືອງນ້ອຍ ເຊັ່ນພໍ່ຄ້າແລະຂ້າຣາຊການນັ້ນສ່ວນມາກຈະເຈົ້າພັກເຊົາຢູ່ນຳພີ່ນ້ອງ, ພໍ່ສ່ຽວແມ່ສ່ຽວ ຫລືເຮືອນເຈົ້າແຂວງເຈົ້າເມືອງເປັນຕົ້ນ ຈຶ່ງໄດ້ຮັບຄວາມອົບອຸ່ນແລະສະດວກສະບາຍດີ.

ນອກຈາກໃຊ້ເຄື່ອງບິນສຳລັບໂດຍສານຜູ້ຄົນແລ້ວ ເພິ່ນຍັງໃຊ້ສຳລັບຂົນສົ່ງເຄື່ອງປູກຂອງຝັງແລະເຄື່ອງອຸປະໂພກບໍຣິໂພກຣະຫວ່າງແຂວງຕ່າງໆ ເຊັ່ນຂົນສົ່ງຜັກຜາກໄມ້ຕ່າງໆຈາກປາກຊ່ອງ ປາກເຊຫາວຽງຈັນ ແລະຂົນເຂົ້າ, ເກືອ ແລະນ້ຳມັນເຊື້ອເພີງຈາກວຽງຈັນໄປເມືອງຕ່າງໆທາງພາກເໜືອ.

ມ.ສ. ສແວງສຸກ

ສາຍການບິນລາວ

LAO AIR LINE

ບ້ານເລກທີ່ 9 A 11 A ຖນົນຫລວງພຣະບາງ
ນະຄອນວຽງຈັນ *ສາຍພາຍໃນປະເທສ* ວຽງຈັນ
ສວັນນະເຂດ ປາກເຊ ມີທຸກໆວັນ ບໍຣິການທ່ານດ້ວຍ
ເຄື່ອງແບບໃໝ່ທັນສມັຍເຖິງທີ່ໝາຍຕົງຕໍ່ເວລາປອດໄພ
ສາຍການບິນຕ່າງປະເທສ ໄປສິງຄະໂປມີ
ທຸກໆວັນຈັນແລະກັບວັນອັງຄານ

ສາຍການບິນລາວ

LAO AIR LINE

ບ້ານເລກທີ 11 ຖນົນຫລວງພຣະບາງ

ເຣີ່ມເປີດບໍຣິການບິນປະຈຳ
ວຽງຈັນ ຮ່ອງກົງ
ເຣີ່ມ 8 ພຶສພານີ້ເປັນຕົ້ນໄປ

MODULE 2: SOCIAL SETTING

2.0 Introduction

Laos is a large and thinly populated country. There are many ethnic groups within its boundaries. The dominant group is the Lao-Thai. This group lives mainly in the lowlands, particularly along the rivers. They speak one of the three dialects of the Lao language (Luang Prabang, Vientiane, or Southern dialects). They constitute approximately one half of the estimated three million population.

There are a large number of other ethnic groups in Laos. They speak many different dialects, but the languages they speak may be classified into one of the following families: Mon-Khmer, Thai, Tibeto-Burman, and Meo-Yao. These families are represented in greater numbers in neighboring states as follows: Mon-Khmer in Cambodia, Thai in Thailand, Tibeto-Burman and Meo-Yao in Southern China. The Mon-Khmer group lives mainly in the mountains, raises dry rice, and still practices slash-and-burn farming to some extent. The tribal Thai usually live in the valleys and grow rice. The other groups live in the north near the Chinese border. Each of these groups tends to be autonomous with its own language and culture, and assimilation into Lao society is slow, although some recognition is given to cultural diversity by the central government. Laotian is the official language in Laos. It is the language used in all official decrees, in newspapers, books and in all schools.

About 80 percent of the population of Laos live in farm villages. There are only a few cities of more than 5,000 population. Village life is at the center of Lao society. Each village represents an almost autonomous social unit. It is conservative and traditional in outlook. Interpersonal relations are usually of the face-to-face type and are limited to a few people. In this setting the nuclear family is the fundamental unit.

The Lao family is generally nuclear, but two or more families may occupy one dwelling in certain situations. The father or

some older male is the head of the household and generally makes most of the major decisions. Although somewhat authoritarian in appearance, family life offers ample freedom for personal development. Every member contributes whatever he can to the cooperative enterprise. Work roles are generally set up in terms of age and sex.

In contradistinction to the conservative, traditional Lao villager is the modern, educated Lao urban dweller. He is literate (frequently foreign educated) and more progressive in outlook. He may speak and read English and French. He probably can read and understand Thai. The odds are good that he is a functionary in one of the ministries.

Buddhism[1] is the most important social and moral force in Laos. Being a Buddhist is more than subscribing to a set of dogma; it is a way of life. Every event in a Laotian's life is related in some way to Buddhism. Buddhist ethics are inculcated in the home, in schools, and in the temples, and are reinforced in countless ways (by public officials, etc.). No Laotian considers any important action without considering what effect it might have on the kind of life he will enjoy in his next reincarnation. Buddhist priests are involved in some way in every public and most private ceremonies. In all villages the temple is the center of all religious and most secular activities.

Life in Laos is tied to a series of social and religious events, in which all Laotians participate. Some of these are public affairs and are the reason for national holidays; others are private affairs that involve only one family. Most of them are Buddhist or involve some Buddhist elements. They form an integral and vital part of the life cycle of all Laotians and deserve careful study and consideration.

Although the government assumed responsibility for public health and medical care and set up Ministries of Health and Social

1. Buddhism will be discussed in more detail in a later section.

Assistance in 1948, progress has been slow in these areas due to a series of factors: lack of money, the basic difficulty of providing these services to a widely dispersed population joined by inadequate roads, general conservatism of the people towards modern methods, disruption by armed conflict, etc.

Hostilities have spread until almost half of Laos is presently insecure. This has caused wholesale migration from war zones towards the cities along the Thai border. The exact number of refugees is unknown, but it may number more than half a million. Although camps have been set up and food has been dropped to them by parachute, life has been extremely hard, and some have died from exhaustion, deprivation, and disease. Since many of these people are members of various hill tribes, uprooting has had a catastrophic effect on their social and cultural life, What the long range effect of the intermixing will be on the ethnic Laos can only be surmised.

2.1 ປວັດອັນໜ້າສລົດໃຈຂອງລາວ.

ເນື່ອງຈາກປວັດສາດຕອນອາພັບອັບວາສນາຂອງຊົນຊາດລາວໄດ້ຊ້ຳຮອຍມາຫລາຍເທື່ອຕໍ່ຫລາຍທີ ແລະເນື່ອງຈາກບໍ່ມີການບັນທຶກໂດຍຄົນລາວເຮົາເອງມັນຈຶ່ງເປັນການຍາກແສນຍາກທີ່ຈະສືບສາວຫາວຫາຄວາມເປັນມາຂອງລາວເຮົາໄດ້ຢ່າງຖືກຕ້ອງແລະຈິງຕາມເຫດການທີ່ເປັນມາ.

ນັກຄົ້ນຄ້ວາຂອງລາວໃນສມັຍປັດຈຸບັນລາວທ່ານໄດ້ພຍາຍາມສຶກສາຫາຕົ້ນຫາປາຍຂອງເຣື້ອງຫລັງຂອງຊາດລາວ ແລ້ວພຍາຍາມເອົາຕິດຕໍ່ກັນເຂົ້າເພື່ອໃຫ້ເປັນຮູບຂອງປວັດສາດຂອງຊາດຕົວເອງ ຊຶ່ງກໍນັບວ່າທ່ານເຫລົ່ານັ້ນສາມາດບັນລຸເຖິງຜົນສຳເຣັດໄດ້ຢ່າງໜ້າສັລເສີນ. ເຣື້ອງທີ່ໜ້າເສົ້າໃຈກໍຄືໜັງສືແລະບັນທຶກສ່ວນມາກທີ່ໃຊ້ໃນການຄົ້ນຄ້ວານີ້ ເພິ່ນຕ້ອງອາສັຍເອົາຂອງຕ່າງປະເທດເປັນຫລັກເປັນແອ່ນແຍງ ແລ້ວຈຶ່ງປຽບທຽບຫລືເອົາເປັນຫລັກຖານກ່ຽວກັບເຫດການທີ່ເກີດຂຶ້ນ(ຫລືອາດຈະເກີດຂຶ້ນ)ຢູ່ໃນອານາຈັກລ້ານຊ້າງໃນເວລານັ້ນ. ເຖິງແມ່ນວ່າເຮົາຈະມີບັນທຶກຫລືພື້ນທີ່ຂຽນໂດຍຄົນລາວຢູ່ກໍຕາມ ແຕ່ກໍສັງເກດເຫັນວ່າເປັນພຽງແຕ່ບາງສມັຍທີ່ຈະນຳມາໃຊ້ເປັນປວັດຢ່າງລະອຽດໄດ້.

ມັນຍ່ອມເປັນທັມມະດາ ເມື່ອເວລານັກປວັດສາດຂອງປະເທດນຶ່ງຂຽນປວັດຂອງຊາດຕົວເອງ ເພິ່ນກໍຍ່ອມຈະໃຫ້ຄວາມສຳຄັນແກ່ປະເທດຕົວເອງຫລາຍກວ່າປະເທດອື່ນໃດ ທັງນີ້ກໍເພື່ອໃຫ້ປະຊາຊົນຮຸ່ນຫລັງຜູ້ທີ່ຮຽນປວັດສາດຂອງຊາດຕົນ ເກີດມີນ້ຳໃຈຮັກຊາດຈົນກ້າຍອມເສັຽສລະກະທັ້ງຊີວິດຂອງຕົວເອງ ການທີ່ເຮົາຜູ້ທີ່ບໍ່ແມ່ນຄົນຂອງຊາດນັ້ນ, ແຕ່ຮູ້ວ່າປະເທດຊາດຂອງເຮົາມີສ່ວນພົວພັນຢູ່ໃນປວັດສາດຂອງເຂົາ, ຈະໄປແງະໄປຈົ້ມເອົາອັນທີ່ພໍຈະເຊື່ອໄດ້ວ່າເປັນປວັດສາດຂອງຊາດເຮົານັ້ນກໍຍ່ອມເປັນໄດ້. ແຕ່ນອກຈາກເຮົາຈະຕ້ອງຝືນໃຈອ່ານແລະອົດທົນຕໍ່ຄຳດູຖູກຫລືເວົ້າສຽດສີຂອງເຂົາແລ້ວ ປວັດທີ່ເຮົາໄດ້ມານັ້ນກໍຍັງຂາດລົດຊາດແລະຍັງຈະພິມອອກເປັນໜັງສືປວັດສາດໂລດບໍ່ໄດ້. ແຕ່ກໍຍັງດີກວ່າເມື່ອສມັຍຂ້າພະເຈົ້າຍັງເປັນນັກຮຽນຢູ່ຊັ້ນປະຖົມສຶກສາ ເວລານັ້ນຂ້າພະເຈົ້າຈື່ໄດ້ວ່າ ຂ້າພະເຈົ້າໄດ້ທ່ອງຂຶ້ນໃຈປວັດສາດຂອງລາວເປັນພາສາຝຣັ່ງເສດ ແລະຂ້າພະເຈົ້າຍັງຈຳໄດ້ອີກວ່າ ຖ້າບໍ່ມີຊື່ຂອງກະສັດລາວຢູ່ໃນເຣື່ອງທີ່ເລົ່າຢູ່ນັ້ນ

ປະວັດອັນໜ້າສລົດໃຈຂອງລາວ.(ຕໍ່)

ແລ້ວກໍຄົງຈະບໍ່ຮູ້ວ່າຕົນເລົ່າປະວັດສາດຂອງຊາດຂອງຊາດຕົນເອງ.

ຂ້າພະເຈົ້າຂໍເລົ່າປະວັດລາວໂດຍຈະຄັດເອົາແຕ່ເຫດການທີ່ເຫັນວ່າສຳຄັນຕລອດທັງຊື່ຂອງກະສັດລາວທັງຫລາຍທີ່ມີສ່ວນກ່ຽວພັນກັບເຫດການເຫລົ່ານັ້ນມາກ່າວ. ແລະຈະເລີ່ມໄປຕັ້ງແຕ່ຂຸນບູຣົມຣາຊາທິຣາດ.

ຫລັງຈາກການລົງມາຈາກພູເຂົາໄຕ ຊົນຊາດລາວກໍບໍ່ສາມາດຈະຕັ້ງຖິ່ນຖານຂອງຕົນພໍເປັນຫລັກແຫລ່ງຢ່າງດົນນານໄດ້. ທຸກເທື່ອທີ່ຊາດລາວຕັ້ງຖິ່ນຖານຂຶ້ນກໍຖືກພວກຈີນເຂົ້າໄປຣາວີ ຊົນຊາດລາວຈຶ່ງໄດ້ພາກັນຖອຍລົງມາທາງໃຕ້ເລື້ອຍໆມາແລ້ວກໍໄດ້ແຕກແຍກຍ້າຍກັນໄປ. ຊົນຊາດລາວທີ່ເປັນປະຊາຊົນຂອງປະເທດລາວຢູ່ໃນປັດຈຸບັນນີ້ແມ່ນພວກທີ່ຖອຍລົງມາຕາມສາຍແມ່ນ້ຳຂອງ.

ຂຸນບູຣົມໄດ້ຂຶ້ນສເວີຍຣາດໃນນະຄອນໜອງແສຢູ່ໃນເຂດຢູນານເມື່ອປີ ພ.ສ. ໑໔໗໔ ຫລັງຈາກນັ້ນບໍ່ນານ ດ້ວຍມີສິ່ງທີ່ສະແດງໃຫ້ພຣະອົງເຫັນວ່າພວກຈີນຈະນຳມາສ້າງຄວາມອາລະວາດອີກ, ໃນປີ ພ.ສ. ໑໔໘໗ ພຣະອົງຈຶ່ງໄດ້ຍົກໄພ່ພົນລົງມາສ້າງເມືອງໃໝ່ທີ່ທົ່ງນານ້ອຍອ້ອຍໜູ. ເມື່ອພຣະອົງກັບຄືນໄປສເວີຍຣາດຢູ່ນະຄອນໜອງແສ ພຣະອົງໄດ້ມອບໃຫ້ຂຸນລໍ, ຣາຊໂອຣົດຂອງພຣະອົງ, ຄອບຄອງເມືອງນີ້ແທນ.

ຫລັງຈາກການສິ້ນພຣະຊົນຂອງຂຸນບູຣົມຣາຊາທິຣາດບໍ່ຫລາຍປີ ຂຸນລໍກໍໄດ້ສູ້ຮົບກັບກອງທັບຈີນດ້ວຍຄວາມສລຽວສລາດຈົນກອງທັບຈີນຕ້ອງພ່າຍແພ້ໄປ ແລ້ວພຣະອົງຈຶ່ງໄດ້ມອບຣາຊສົມບັດໃຫ້ຫລາຍຊາຍຂອງພຣະອົງຄອບຄອງ. ຕັ້ງແຕ່ນັ້ນມາອານາຈັກໜອງແສກໍໄດ້ຈະເຣີນຮຸ່ງເຮືອງຂຶ້ນ ຈົນເຖິງ ພ.ສ. ໑໔໕໔ ຈຶ່ງໄດ້ຕົກເປັນຫົວເມືອງຂຶ້ນຂອງຈີນຍ້ອນການແຜ່ຂຍາຍອຳນາດຂອງພວກມົງໂກລ.

ໃນສມັຍຂອງພຣະອົງ ຂຸນລໍໄດ້ຍົກກອງທະຫານລົງມາຜາບຂອມແລະທຳການຂັບໄລ່ພວກຂອມລົງມາຈົນເຖິງເມືອຊວາ ຊຶ່ງໃນປັດຈຸບັນນີ້ແມ່ນນະຄອນຫລວງພຣະບາງ. ພຣະອົງໄດ້ຈັດຕັ້ງເມືອງຊວາຂຶ້ນເປັນ

ປວັດອັນໜ້າສລົດໃຈຂອງລາວ.(ຕໍ່)

ຣາຊທານີແຫ່ງປະເທດລ້ານຊ້າງເປັນຄັ້ງທຳອິດໃນຣະຫວ່າງປີ ພ.ສ. ໑໙໐໐ ແລ້ວຕໍ່ມາຈຶ່ງປ່ຽນຊື່ໃຫມ່ເປັນເມືອງຊຽງທອງ. ຕັ້ງແຕ່ນັ້ນມາປະຊາຊົນລາວເຮົາກໍໄດ້ຫລັ່ງໄຫລລົງມາຕັ້ງບ້ານເຮືອນຢູ່ໃນດິນແດນລ້ານຊ້າງແລ້ວແຜ່ອຳນາດອອກໄປຢ່າງກວ້າງຂວາງຈົນໄດ້ແຫຍ້ພວກຂອມໃຫ້ຖອຍໄປທາງເມືອງນ່ານແລະອີກພວກນຶ່ງຖອຍລົງມາທາງວຽງຈັນ. ພວກຂອມທີ່ເປັນຊາວບ້ານປ່າຂາດອນ ອົພຍົບຫນີບໍ່ພົ້ນຈຶ່ງເຫລືອຄ້າງຢູ່ເປັນຊາວພູຊາວດອຍ ເຊິ່ງໄດ້ກາຍເປັນພວກລາວເທິງຂອງເຮົາຢູ່ໃນປັດຈຸບັນ.

ແຕ່ນັ້ນມານະຄອນຊຽງທອງກໍໄດ້ມີພຣະມະຫາກະສັດຂຶ້ນສເວີຍຣາດສືບຕໍ່ກັນມາເຖິງ ໒໒ ພຣະອົງພາຍໃນເວລາ ໕໐໐ ປີ ຈຶ່ງມາເຖິງສມັຍພຣະເຈົ້າຟ້າງູ່ມ. ພຣະເຈົ້າຟ້າງູ່ມໄດ້ເລີ້ມສ້າງອິດທິພົນຂອງພຣະອົງ ຕັ້ງແຕ່ ພ.ສ. ໑໘໙໒ ເມື່ອຄາວພຣະອົງອອກຈາກປະເທດຂເມນ ເພື່ອເຂົ້າຊິງເອົາຣາຊບັນລັງຂອງຊຽງທອງ ພາຍຫລັງການສິ້ນພຣະຊົນຂອງພຣະຣາຊບິດາຂອງພຣະອົງ. ໃນຂນະທີ່ພຣະອົງມຸ້ງໜ້າມາຈາກຂເມນນັ້ນ ພຣະອົງກໍໄດ້ຕີເອົາເມືອງເລັກເມືອງນ້ອຍຈົນຫລາຍປະເທດຂໍ້ອ່ອນຍອມ.

ພາຍຫລັງການຂຶ້ນສເວີຍຣາດແລ້ວ ພຣະອົງກໍຍັງຄົງຂຍາຍອິດທິພົນໂດຍການອອກໄປຕີເອົາຫົວເມືເມືອງຕ່າງໆອີກ ແລ້ວພຣະອົງກໍໄດ້ອອກກົດຣະບຽບບ້ານເມືອງຢ່າງເຄັ່ງຄັດ ແລະຫລັງຈາກນັ້ນບ້ານເມືອງກໍມີຄວາມສງົບ.

<u>ຣັຊການພຣະເຈົ້າວິຊຸລຣາດ</u>: ໃນຣະຫວ່າງຣາຊການຂອງພຣະອົງພຣະພຸທສາສນາໃນປະເທດລາວ (ພ.ສ. ໒໐໔໓) ມີຄວາມຈະເຣີນຂຶ້ນເປັນອັນມາກ ຕລອດທັງໃນດ້ານວັນນະຄະດີ ຈົນໄດ້ມີການແປພຣະໄຕປີດົກແລະແຕ່ງຫນັງສືຂຶ້ນຫລາຍເຣື້ອງ, ເປັນຕົ້ນຫນັງສືຂຸນບໍຣົມ.

<u>ຣັຊການໂພທິສາຣະຣາດເຈົ້າ (ພ.ສ. ໒໐໖໓)</u>. ພຣະອົງໄດ້ຂໍພຣະໄຕປີດົກແລະພຣະສັງຄະເຈົ້າຈາກນະຄອນຊຽງໃຫມ່. ເມື່ອ ພ.ສ. ໒໐໗໒ ໄດ້ອອກສະເດັດອອກອຸປສົມບົດເປັນພິຊຸ ແລະເມື່ອ ພ.ສ. ໒໐໗໐ ໄດ້ມີພຣະຣາຊອາຍາປະກາດໃຫ້ບ່າວໄພ່ເລີກນັບຖືຜີຟ້າຜີແຖນອັນທີ່ເຄີຍຖືກັນມາແຕ່ບູຮານ ແລະໄດ້

ປະວັດອັນໜ້າສົນໃຈຂອງລາວ.(ຕໍ່)

ຮື້ຖອນຂັນດາຫໍໂຮງກວ້ານສານທັງໝົດ ແລ້ວສ້າງວັດວາອາຣາມຂຶ້ນແທນ.

<u>ຣັຊການພຣະໄຊຍະເສດຖາທິຣາດເຈົ້າ</u>. ເມື່ອພຣະອົງມີພຣະຊົນໄດ້ ໑໔ ປີ ພຣະຣາຊບິດາຄືພຣະເຈົ້າໂພທິສາຣະຣາດ ໄດ້ໃຫ້ໄປເປັນເຈົ້າແຜ່ນດິນນະຄອນຊຽງໃໝ່ຕາມຄຳຂໍຮ້ອງຂອງເສນາມົນຕີແຫ່ງເມືອງຊຽງໃໝ່ (ຄ.ສ. ໑໕໔໗). ພຣະອົງໄດ້ກັບຄືນມາຄອງນະຄອນຊຽງທອງພາຍຫລັງການສິ້ນພຣະຊົນຂອງພຣະຣາຊບິດາ.

ໃນ ຄ.ສ. ໑໕໖໑ ພຣະອົງໄດ້ສະເດັດລົງມາຕັ້ງນະຄອນວຽງຈັນ ພ້ອມທັງໄດ້ເຊີນເອົາພຣະແກ້ວມໍຣະກົດແລະພຣະແຊກຄຳ ແລ້ວສ້າງຫໍພຣະແກ້ວແລະຫໍພຣະແຊກຄຳຂຶ້ນ. ພຣະອົງໄດ້ສະເດັດໄປສ້າງພຣະທາດເຈດີຢູ່ໃນຫລາຍແຫ່ງ ຕລອດທັງທຳການຫລໍ່ຫລອມພຣະພຸທຮູບອົງສຳຄັນຂຶ້ນຢ່າງມາກມາຍ ເປັນຕົ້ນພຣະອົງຕື້ (ປັດຈຸບັນຢູ່ວຽງຈັນ), ພຣະສຸກ (ຈົມນ້ຳຢູ່ທ່ານ້ຳເວີນສຸກໃນເວລາໄທຈະເອົາລົງໄປກຸງເທບ), ພຣະເສີມ (ປັດຈຸບັນຢູ່ວັດປະທຸມວະນາຣາມໃນກຸງເທບ),ພຣະໃສ (ຢູ່ວັດໂພໄຊເມືອງໜອງຄາຍ) ແລະອື່ນໆອີກ. ຫລັງຈາກພຣະໄຊຍະເສດຖາທິຣາດສິ້ນພຣະຊົນແລ້ວກໍໄດ້ມີການຍາດແຍ່ງພຣະຣາຊບັນລັງ ເ ເປັນເຫດໃຫ້ພະມ້າສວຍໂອກາດເຂົ້າຕີເອົາໄດ້. ຫລັງຈາກນັ້ນມາປະເທດລາວຈຶ່ງຕົກຢູ່ໃຕ້ຄວາມປົກຄອງພະມ້າຢູ່ເຖິງ ໒໔ ປີ. ໃນລາວປີ ຄ.ສ. ໑໖໐໓ ພຣະເຈົ້າວໍຣະວົງສາໄດ້ຂຶ້ນສເວີຍຣາຊສົມບັດ ແລ້ວປະກາດຕົນເປັນອິສຣະບໍ່ຍອມເປັນເມືອງຂຶ້ນຂອງພະມ້າຕໍ່ໄປ. ປະເທດບ້ານເມືອງຈຶ່ງມີຄວາມສງົບມາເປັນເວລາຫລາຍປີ. ຕໍ່ມາກໍມີຄົນສັບສໍ້ໃຫ້ພຣະຣາຊໂອຣົດກັບພຣະຣາຊບິດາເຂົ້າໃຈກັນຜິດຈົນເກີດລົບເລວກັນ. ຜົນສຸດທ້າຍພຣະເຈົ້າວໍຣະວົງສາພ້ອມດ້ວຍມະເຫສີກໍຖືກນາຍທະຫານຂອງພຣະຣາຊໂອຣົດຂອງພຣະອົງປະຫານຊີວິດ.

ແຕ່ນັ້ນມາຄວາມບໍ່ສງົບກໍກັບຄືນສູ່ປະເທດລາວອີກຍ້ອນການຍາດຊີງພຣະຣາຊສົມບັດກັນ.

ຈົນເຖິງປີ ຄ.ສ. ໑໖໓໗ ສົມເດັດພຣະເຈົ້າສຸຣິຍະວົງສາທັມມິກະຣາດ ໄດ້ຂຶ້ນສເວີຍຣາດຄວາມ

ປະວັດອັນໜ້າສລົດໃຈຂອງລາວ.(ຕໍ່)

ສງົບວຸ່ນເຢັນຈຶ່ງໄດ້ກັບຄືນມາສູ່ປະເທດຊາດອີກ. ພຣະອົງໄດ້ສົ່ງເສີມການສຶກສາພຣະປະຣິຍະຕິທັມໃຫ້ຈະເຣີນກວ້າງຂວາງທີ່ສຸດ ຈົນມີນັກປາດສາມາດແຕ່ງຄຳພີດີກາແລະວັນນະຄະດີລາວຂຶ້ນໃນສມັຍນີ້ເປັນອັນມາກ ເປັນຕົ້ນວ່າ ໜັງສືສິນໄຊ, ປູ່ສອນຫລານ, ຫລານສອນປູ່. ໃນປີ ຄ.ສ. ໑໖໔໑ ພຣະອົງໄດ້ທຳການຕ້ອນຮັບພວກຣາຊທູດແລະສາສນາທູດຊາວໂຮລັງຢູ່ເດີ່ນທາດຫລວງ. ໃນປີ ຄ.ສ. ໑໖໗໐ ພຣະອົງໄດ້ສົ່ງທູດໄປຈະເຣີນພຣະຣາຊໄມຕີກັບພຣະເຈົ້າກຸງສີອະຍຸທຍາ ແລະໄດ້ສ້າງພຣະເຈດີສອງຮັກຂຶ້ນໄວ້ທີ່ເມືອງດ່ານຊ້າຍ ເພື່ອເປັນຫລັກໝາຍເຂດແດນຣະຫວ່າງປະເທດລາວກັບປະເທດໄທ. ພຣະເຈົ້າສຸຣິຍະວົງສາທັມມິກະຣາດສະເດັດສູ່ສຸຣະຄົດໃນປີ ຄ.ສ. ໑໖໙໐ ໂດຍບໍ່ມີຣາຊໂອຣົດສືບຣາຊສົມບັດແທນ.

ຫລັງຈາກນັ້ນປະເທດລາວເກີດປັ່ນປ່ວນຂນາດໜັກຢ່າງສັບສົນອົລວົນ ໂດຍລາວໄດ້ຂ້າລາວ ຫລືບໍ່ກໍໄປນຳເອົາຊາວຕ່າງປະເທດເຂົ້າມາຊ່ວຍຂ້າຟັນກັນ ຈົນເຖິງ ຄ.ສ. ໑໗໐໗ ປະເທດລາວກໍເລີຍຖືກແບ່ງແຍກອອກເປັນ ໓ ອານາຈັກ ແລະໄດ້ພ້ອມກັນເສັຽເອກກະຣາດໃຫ້ແກ່ໄທໃນ ຄ.ສ. ໑໗໗໙.

ຄັນມາເຖິງປີ ຄ.ສ. ໑໘໒໖ ພຣະເຈົ້າອະນຸກໍໄດ້ວາງແຜນການກູ້ອິສຣະພາບເພື່ອໃຫ້ພົ້ນຈາກການເປັນຫົວເມືອງຂຶ້ນຂອງໄທ. ແຕ່ສາສນາຂອງລາວຍັງຕ່ຳຕ້ອຍ ຄວາມພຍາຍາມຂອງພຣະເຈົ້າອະນຸກໍຕ້ອງມາຫລົ້ມແຫລວລົງເມື່ອເວລາພຣະອົງຍົກທັບໄປເພື່ອຈະຕີກຸງເທບແລະກວາດຕ້ອນເອົາຄອບຄົວລາວຢູ່ຕາມໂຂງເຂດນັ້ນທີ່ຖືກໄທກວາດຕ້ອນໄປເມື່ອຄາວເຂົ້າຂຍາຍອຳນາດ. ແມ່ທັບລາວຄົນນຶ່ງຊື່ວ່າເຈົ້າອຸປຣາດຕິດສະຊຶ່ງເປັນເຊື້ອດຽວກັນກັບເຈົ້າອະນຸເອງໄດ້ຂະບົດແລ້ວເປີດເຜີຍຄວາມລັບໃຫ້ຝ່າຍໄທຮູ້ເຖິງແຜນການດັ່ງນັ້ນໄທຈຶ່ງກຽມການຕໍ່ສູ້ໄວ້ທັນ ພ້ອມຍັງໄດ້ສົ່ງທະຫານອອກສະກັດລັດທາງອີກດ້ວຍ. ນອກຈາກນັ້ນອີກເມື່ອເວລາຈະຍົກພົນອອກໄປພຣະອົງຍັງໄດ້ສົ່ງພຣະຣາຊສານແລະເຄື່ອງມຸງຄຸນບັນນາທິການໄປຖວາຍພຣະເຈົ້າມັນທາຕຸຣາດເຈົ້ານະຄອນຫລວງພຣະບາງ ແລະຂໍໃຫ້ລືມຄວາມເກົ່າຄວາມຫລັງນັ້ນ ພຣະເຈົ້າມັນທາຕຸຣາດກໍສະແດງອາການຈະຮ່ວມມື ແຕ່ແລ້ວກັບທຳການຫັກຫລັງພຣະເຈົ້າອະນຸ ໂດຍໄດ້ສົ່ງໃຫ້ພຣະ

ປະວັດອັນໜ້າສລົດໃຈຂອງລາວ.(ຕໍ່)

ຣາຊໂອຣົດຜູ້ກົກລົງໄປກຸງເທບ ທູນເຫດການທຸກຢ່າງໃຫ້ພຣະເຈົ້າແຜ່ນດິນໄທຊາບ. ຮ້າບໍ່ໜໍາຍັງໄດ້ຈັດແຈງກອງທັບໄວ້ຈໍານວນ ໕໐໐໐ ຄົນເພື່ອຄອຍຖ້າຊ່ອຍເຫລືອກອງທັບໄທ. ຄາວນັ້ນໂດຍບໍ່ໄດ້ຄະນຶງໃຈວ່າຈະມີຂະບົດເກີດຂຶ້ນພາຍໃນກອງທັບຂອງພຣະອົງເອງ ເຈົ້າອະນຸໄດ້ນໍາກອງທັບລາວໄປຈົນເຖິງນະຄອນຣາຊສີມາ ແລະໄດ້ພຍາຍາມກວາດຕ້ອນເອົາຄຣອບຄົວລາວກັບຄືນໄປນະຄອນວຽງຈັນ. ຝ່າຍໄທທີ່ຢູ່ບາງກອກ ເມື່ອຮູ້ຕົວກ່ອນຈຶ່ງໄດ້ເກນພົນອອກມາຂັດຂວາງ. ຍ້ອນມີການຂະບົດກອງທັບຂອງເຈົ້າອະນຸຈຶ່ງໄດ້ຖືກຫລອກລວງໃຫ້ເສັຽປຽບຢູ່ທຸກເວລາ. ດັ່ງນັ້ນເຫັນທ່າຈະສູ້ບໍ່ໄຫວເຈົ້າອະນຸຈຶ່ງຖອຍທັບກັບຄືນສູ່ນະຄອນວຽງຈັນ ແລະຊາບວ່າພວກໄທຍັງບຸກຣຸກຕິດຕາມມາອີກພຣະອົງຈຶ່ງໄດ້ພາຄອບຄົວໜີໄປ ພ້ອມທັງຄອບຄົວຂອງເຈົ້າອຸປຣາດ ໄທຈຶ່ງເຂົ້າຍຶດເອົານະຄອນວຽງຈັນໄດ້ໂດຍງ່າຍແລ້ວກໍເກັບກວາດເອົາຊັບສິ່ງຂອງໃນພຣະຣາຊວັງແລະຕາມບ້ານເມືອງຈົນກ້ຽງ ພ້ອມທັງໃຫ້ທະຫານຕັດຕົ້ນໄມ້ທີ່ມີໝາກຄົ້ນໝົດຊໍ້າຍັງເອົາໄຟເຜົາເມືອງ ພ້ອມທັງເກນໃຫ້ພົລເມືອງຂອງລາວມ້າງເພກໍາແພງເມືອງລົງຈົນໝົດສ້ຽງ. ພ້ອມກັນນັ້ນກໍໄດ້ຂົນເອົາພຣະພຸທຮູບທັງຫລາຍຂອງລາວຂ້າມຂອງໄປ ແລ້ວໄດ້ສ້າງເຈດີພາບວຽງຂຶ້ນຢູ່ທີ່ເມືອງພົນພ້າວ ໂດຍຫວັງຈະເອົາເປັນສັນຍາລັກປະນາມການກະທໍາຂອງເຈົ້າອະນຸ.

ເມື່ອແມ່ທັບໄທກັບໄປຈາກວຽງຈັນແລ້ວ ເຈົ້າອະນຸກໍກັບຄືນເຂົ້າມາວຽງຈັນອີກໂດຍບໍ່ການສູ້ຣົບໃນຂັ້ນຕົ້ນ ຍ້ອນມີທະຫານວຽດນາມຕິດຕາມມາພ້ອມກັບທະຫານຂອງພຣະອົງເພື່ອທໍາການໄກ່ເກັ່ຽ. ແຕ່ພໍເຈົ້າອະນຸໄດ້ຊາບເຖິງເຈດີທີ່ໄທສ້າງຂຶ້ນນັ້ນ ພຣະອົງກໍເກີດຄວາມຄຽດແຄ້ນຈຶ່ງສັ່ງໃຫ້ທະຫານຂ້າມໄປມ້າງເພເຈດີພາບວຽງ ພ້ອມທັງໄດ້ນໍາພຣະເສີມກັບຄືນສູ່ວຽງຈັນ.

ເມື່ອແມ່ທັບໄທໄດ້ຊາບຂ່າວຈຶ່ງໄດ້ນໍາກອງທະຫານກັບຄືນມາ ແຕ່ເຈົ້າອະນຸໄດ້ໜີກ່ອນ ທະຫານໄທຈຶ່ງເຂົ້າມ້າງທໍາລາຍແລະຈູດເຜົານະຄອນວຽງຈັນອີກ. ການຫລົບໜີຂອງເຈົ້າອະນຸຄັ້ງນີ້ບໍ່ສໍາເຣັດຜົນ ເນື່ອງຈາກເຈົ້ານ້ອຍເມືອງພວນໄດ້ອອກທໍາການລັດຈັບເຈົ້າອະນຸສົ່ງໃຫ້ໄທ, ຍ້ອນຢ້ານກົວວ່າໄທຈະຍົກທັບຂຶ້ນໄປຕີ.

47

ປວັດອັນໜ້າສລົດໃຈຂອງລາວ.(ຕໍ່)

ເມື່ອໄທໄດ້ຕົວເຈົ້າອະນຸພ້ອມທັງຄອບຄົວຂອງພຣະອົງແລ້ວ ພວກທະຫານກໍໄດ້ເຮັດຄອກໃສ່ແລະເມື່ອໄປເຖິງກຸງເທບ ກໍໄດ້ນຳອອກສະແດງຕໍ່ປະຊາຊົນ ເພື່ອເປັນການປະຈານເຈົ້າອະນຸແລະຄອບຄົວຕາມແບບລັກສນະທີ່ຮ້າຍຍິ່ງກວ່າສັດເດັຽຣະສານ. ຫລັງຈາກນັ້ນມາໄດ້ແປດມື້ເຈົ້າອະນຸກໍເລີຍສິ້ນພຣະຊົນດ້ວຍອາການລົງແດງໃນ ຄ.ສ. ໑໘໒໙.

ແຕ່ນັ້ນມາອານາຈັກລາວທັງສາມກໍ່ຕົກເປັນເມືອງຂຶ້ນຂອງໄທຕລອດມາ ຈົນເຖິງປີ ຄ.ສ. ໑໘໙໓ ຝຣັ່ງເສດຈຶ່ງໄດ້ຍົກກຳລັງເຂົ້າຍຶດຝັ່ງຊ້າຍແມ່ນ້ຳຂອງ, ຊຶ່ງໃນເວລານັ້ນແມ່ນສມັຍຂອງພຣະເຈົ້າສັກກະຣິນກະສັດຫລວງພຣະບາງ, ສ່ວນນະຄອນວຽງຈັນພາຍຫລັງການສິ້ນພຣະຊົນຂອງເຈົ້າອະນຸແຕ່ ຄ.ສ. ໑໘໒໙ ແລ້ວບໍ່ມີກະສັດສືບຕໍ່ມາ.

ໃນປີ ຄ.ສ. ໑໘໙໓ ເປັນໄລຍະທີ່ປະເທດຝຣັ່ງເສດແລະປະເທດອັງກິດແຜ່ອຳນາດເຂົ້າມາໃນເອເຊັຽ; ຄືຝຣັ່ງເສດໄດ້ເຂົ້າມາທາງເທວໃຕ້ແລະກຳລັງຂຶ້ນມາຈົດແມ່ນ້ຳຂອງໃນເຂດປະເທດລາວ, ແລະປະເທດອັງກິດກໍກຳລັງຂຶ້ນມາເຖິງປະເທດອິນເດັຽແລະພະມ້າ. ຄົງຍັງເຫລືອແຕ່ປະເທດໄທທີ່ຢູ່ລະຫວ່າງກາງຂອງສອງມະຫາອຳນາດ ແລະຮູ້ສຶກວ່າທັງສອງກໍບໍ່ປະສົງຈະຫາເຣື່ອງປະທະກັນດ້ວຍກຳລັງ. ດັ່ງນັ້ນຈຶ່ງໄດ້ມີການໄກ່ເກັ່ຽກັນທາງການທູດຢູ່ເປັນເວລາຫລາຍເດືອນ. ໃນຂນະນັ້ນໄທບໍ່ຢາກອ່ອນຄໍຕໍ່ຝຣັ່ງເສດຈຶ່ງໄດ້ມີການປະທະກັນຊົ່ວໄລຍະນຶ່ງລະຫວ່າງທະຫານທັງສອງຝ່າຍ ຢູ່ທາງລຸ່ມແມ່ນ້ຳຂອງໃນພາກໃຕ້ຂອງປະເທດລາວ. ປະເທດອັງກິດປະສົງທີ່ຈະມີເຂດເປັນກາງ, ດັ່ງນັ້ນເມື່ອໄທສົ່ງທູດໄປຂໍຄວາມຊ່ວຍເຫລືອທາງດ້ານທະຫານກໍເລີຍຖືກປະເທດອັງກິດປະຕິເສດ ແລະຊ້ຳບໍ່ໜຳຍັງໄດ້ແນະນຳໃຫ້ໄທຍອມປະຕິບັດຕາມຄຳສເນີຂອງຝຣັ່ງ ເພາະອັງກິດຮູ້ວ່າຖ້າຫາກໄທເຮັດເສິກກັບຝຣັ່ງໄທກໍຈະຕ້ອງໄດ້ຮັບຄວາມພ່າຍແພ້ເພາະໃນເວລານັ້ນເຮືອຮົບຝຣັ່ງສອງລຳໄດ້ເຂົ້າເຖິງກຸງເທບແລ້ວ ແລະນັ້ນກໍຈະໝາຍເຖິງຄວາມເປັນທົວເມືອງຂຶ້ນຂອງໄທຕໍ່ປະເທດຝຣັ່ງເສດ. ດັ່ງນັ້ນໄທຈຶ່ງໄດ້ເຊັນສັນຍາ ຝຣັ່ງ-ໄທ ສບັບນຶ່ງ ເມື່ອວັນທີ ໓ ຕຸລາ

ປະວັດອັນໜ້າສລົດໃຈຂອງລາວ.(ຕໍ່)

ຄ.ສ. ໑໘໙໓ ຊຶ່ງມີຂໍ້ໃຫຍ່ໃຈຄວາມວ່າ (໑) ປະເທດໄທໄດ້ຍົກເລີກແລະຖົກຖອນກັມມະສິດທຸກຢ່າງໃນ
ການເປັນເຈົ້າຂອງເຂດແດນທາງຝັ່ງຊ້າຍຂອງແມ່ນ້ຳຂອງຕລອດທັງໝູ່ເກາະທີ່ຢູ່ໃນແມ່ນ້ຳນັ້ນ. (໔)
ປະເທດໄທຕົກລົງວ່າຈະບໍ່ສ້າງຕຶກໝັ້ນທາງທະຫານຂຶ້ນພາຍໃນໄລຍະຊາວກິໂລແມັດຈາກຝັ່ງຂວາຂອງແມ່
ນ້ຳຂອງ.

ຕໍ່ມາເມື່ອວັນທີ ໒໓ ມີນາ ຄ.ສ. ໑໙໐໗ ສັນຍາຝຣັ່ງ-ໄທສະບັບນຶ່ງຖືກເຊັນກັນຂຶ້ນອີກຊຶ່ງຄາວນີ້
ໄດ້ມີການຂີດເສັ້ນພົມແດນກັນໃໝ່ອີກໂດຍທີ່ໄທໄດ້ຍົກແຂວງຈຳປາສັກແລະໄຊຍະບຸຣີໃຫ້ຝຣັ່ງ ພ້ອມດ້ວຍ
ເງື່ອນໄຂວ່າບໍ່ໃຫ້ລາວອ້າງກັມມະສິດໃນດິນແດນທາງຝັ່ງຂວາຂອງແມ່ນ້ຳຂອງ ນອກຈາກສອງແຂວງດັ່ງ
ກ່າວ. ໃນເວລານັ້ນ ປະຊາຊົນລາວຢູ່ທາງຝັ່ງຂວາທີ່ມີຈຳນວນຫລາຍກວ່າຝັ່ງຊ້າຍ ຕລອດພຣະທາດສີສອງ
ຮັກຊຶ່ງກະສັດລາວແລະກະສັດໄທໄດ້ພ້ອມກັນສ້າງຂຶ້ນເພື່ອເປັນຫລັກໝາຍເຂດແດນນັ້ນ ບໍ່ປາກົດເຫັນວ່າ
ໄດ້ຖືກນຳເຂົ້າພິຈາຣະນາກ່ອນມີການເຊັນສັນຍາດັ່ງກ່າວ.

ຕັ້ງແຕ່ນັ້ນມາປະຊາຊົນລາວທີ່ຢູ່ທາງຝັ່ງຂວາກໍເລີຍຖືກຈັດເຂົ້າເປັນພົລເມືອງໄທ ຊຶ່ງໝາຍເຖິງການ
ກືນຊາດ ແທນທີ່ຈະເປັນພຽງແຕ່ຫົວເມືອງຂຶ້ນ. ປັດຈຸບັນປະຊາຊົນເຫລົ່ານີ້ສ່ວນມາກຕ່າງກໍຍັງຄົງດຳເນີນ
ຊີວິດແບບລາວຢູ່ ສິ່ງທີ່ເຫັນໄດ້ຊັດກໍຄື ພາສາລາວທີ່ຂະເຈົ້າເວົ້າກັນຢູ່ຕາມບ້ານແລະພາຍໃນຄອບຄົວ,
ວັທນະທັມບາງຢ່າງເປັນຕົ້ນວ່າ ການລຳຕ່າງໆແລະພາສາທີ່ໃຊ້ຢູ່ໃນກອນລຳ ການເປົ່າແຄນ ຕລອດການ
ເຮັດບຸນສິນກິນທານຕາມປະເພນີຕ່າງໆ, ອາຫານການກິນຕ່າງໆ ເປັນຕົ້ນ ປາແດກໃສ່ຮ້າ, ເຂົ້າໜຽວ,
ປົ່ນ, ລາບ; ນອກຈາກນີ້ຍັງມີການນຸ່ງສິ້ນໝີ່ຂອງຜູ້ຍິງ, ການມັດໝີ່ແລະອື່ນໆອີກ.

ສ່ວນລາວຝັ່ງຊ້າຍກໍຄົງຢູ່ພາຍໃຕ້ການເປັນນາຍຂອງຝຣັ່ງຈົນເຖິງວັນທີ ໒໙ ກຸມພາ ໑໙໑໕ ຈຶ່ງໄ
ໄດ້ມີສັນຍາລາວ-ຝຣັ່ງຂຶ້ນ ວ່າດ້ວຍລະບຽບຝ່າຍສານຢູ່ໃນອານາຈັກຫລວງພຣະບາງ. ຕໍ່ມາເມື່ອວັນທີ ໙
ມີນາ ໑໙໔໕, ໃນລະຫວ່າງສົງຄາມໂລກຄັ້ງທີ່ສອງ, ຍີ່ປຸ່ນໄດ້ເຂົ້າມາຍຶດອຳນາດຈາກຝຣັ່ງແລ້ວໄດ້ປະ

ປວັດອັນໜ້າສລົດໃຈຂອງລາວ.(ຕໍ່)

ກາດໃຫ້ລາວເປັນອິສຣະ. ວັນທີ ໒ ກັນຍາ ໑໙໔໕ ຈຶ່ງໄດ້ມີການຈັດຕັ້ງຂະບວນການເອກກະຣາດແຫ່ງຊາດຂຶ້ນຢູ່ທີ່ນະຄອນວຽງຈັນ ພ້ອມທັງໄດ້ມີການຈັດຕັ້ງຣັຖບານຊົ່ວຄາວຂຶ້ນພາຍໃຕ້ພຣະບໍຣົມໂພທິສົມພານຂອງພຣະເຈົ້າມະຫາຊີວິດສີສວ່າງວົງ. ແຕ່ທະຫານຝຣັ່ງທີ່ຫລົບໜີໄປຢູ່ທາງພາກໃຕ້ຂອງລາວໄດ້ນຳທະຫານຂຶ້ນມາຍຶດເອົາວຽງຈັນ ເມື່ອວັນທີ ໒໕ ເມສາ ໑໙໔໖ ຄນະຣັຖບານຊົ່ວຄາວຈຶ່ງໄດ້ພາກັນແຕກໜີໄປຢູ່ປະເທດໄທ ແລະໄດ້ຕັ້ງຂະບວນການຕໍ່ຕ້ານອັນມີຊື່ວ່າ "ຂະບວນການລາວອິສຣະ"ຂຶ້ນ. ເມື່ອວັນທີ ໒໗ ສິງຫາ ໑໙໔໖ ໄດ້ມີການເຊັນສັນຍາຝຣັ່ງ-ລາວອີກ ວ່າດ້ວຍຄວາມເປັນອັນນຶ່ງອັນດຽວຂອງປະເທດລາວ ພາຍໃຕ້ພຣະບໍຣົມໂພທິສົມພານຂອງພຣະບາດສົມເດັດພຣະເຈົ້າມະຫາຊີວິດສີສວ່າງວົງ ໂດຍສະເດັດເຈົ້າບຸນອຸ້ມນະຈຳປາສັກ ໄດ້ສລະຣາຊສິດຢູ່ໃນອານາຈັກຈຳປາສັກ. ສະເດັດໄດ້ຖືກແຕ່ງຕັ້ງໃຫ້ເປັນຜູ້ກວດກາຕ່າງພຣະເນດພຣະກັນ.

ໃນ ຄ.ສ. ໑໙໔໗ ກໍໄດ້ມີຮ່າງແລະປະກາດຣັຖທັມມະນູນອອກໃຊ້. ສອງປີຕໍ່ມາ ຄືໃນວັນທີ ໑໙ ກໍຣະກະດາ ຄ.ສ. ໑໙໔໙ ໄດ້ມີການສັນຍາຝຣັ່ງ-ລາວ ວ່າດ້ວຍເອກກະຣາດຂອງພຣະຣາຊອານາຈັກລາວ ຢູ່ໃນເຄືອສະຫະພັນຝຣັ່ງເສດ. ໃນປີດຽວກັນນີ້ ສະມາຊິກຂອງຄນະລາວອິສຣະຫລາຍທ່ານໄດ້ເຂົ້າມາຮ່ວມໃນວົງການຣັຖບານ. ສ່ວນສະເດັດເຈົ້າເພັຊຣາດໄດ້ຕັດສິນໃຈຢູ່ໃນປະເທດໄທ ແລະສະເດັດເຈົ້າສຸພານຸວົງບໍ່ຍອມເຂົ້າຮ່ວມຣັຖບານໃນຄາວນັ້ນ ຈຶ່ງໄດ້ໄປຕັ້ງຄນະປະເທດລາວຂຶ້ນຢູ່ແຂວງໂຜ້ງສາລີແລະຫົວພັນ.

ພຣະຣາຊອານາຈັກລາວໄດ້ຮັບເອກກະຣາດຢ່າງສົມບຸນເມື່ອປີ ຄ.ສ. ໑໙໕໔.

ສ. ໄຊຍະສິທເສນາ

2.2 ພົລເມືອງລາວ.

ພົລເມືອງລາວມີປະມານ ໓ ລ້ານຄົນຊຶ່ງສ່ວນມາກປະກອບດ້ວຍລາວລຸ່ມແລະຊາວເຜົ່າລາວເທິງ. ຄຳວ່າລາວເທິງຢູ່ໃນທີ່ນີ້ບໍ່ໄດ້ໝາຍຄວາມເອົາສະເພາະແຕ່ພວກລາວເທິງຫລືຜູ້ເທິງທີ່ເປັນເຜົ່ານຶ່ງເທົ່ານັ້ນ ແຕ່ໄດ້ໝາຍເອົາຊາວເຜົ່າທັງຫລາຍຢູ່ໃນປະເທດລາວ. ຂ້າພະເຈົ້າບໍ່ຢາກໃຊ້ຄຳວ່າ<u>ຊາວເຜົ່າ</u> ພວກນັ້ນພວກນີ້ເລີຍ ເພາະພວກເຮົາຕ່າງກໍ່ເປັນລາວນຳກັນທັງນັ້ນ- ແຕ່ກໍ່ບໍ່ມີທາງເລືອກໄດ້ເນື່ອງຈາກວ່າຂ້າພະເຈົ້າຈະເວົ້າເຖິງຄວາມເປັນຢູ່ຢ່າງແທ້ຈິງຂອງພວກເຮົາ. ສະນັ້ນຄຳຊາວເຜົ່າ ລາວເທິງຈຶ່ງໝາຍຄວາມວ່າພວກລາວທີ່ອາສັຍຢູ່ຕາມດິນສູງ, ຕາມເທິງພູແລະຕາມເຈີ້ຍພູ, ເປັນຕົ້ນວ່າ ຊາວຂ້າ, ແມ້ວ, ຢ້າວ, ຜູ້ໄທແລະອື່ນໆອີກ. ຊາວຂ້າກໍ່ມີຫລາຍຈຸຫລາຍເຜົ່າດ້ວຍກັນແລະຄຳວ່າຢູ່ທີ່ນີ້ບໍ່ໄດ້ໝາຍຄວາມຫລືວ່າມາຈາກຄຳວ່າ "ຂ້ອຍຂ້າ" ເໝືອນດັ່ງຄົນທີ່ຮູ້ເທົ່າບໍ່ເຖິງການຫລາຍຄົນທີ່ໄດ້ກ່າວເຖິງຊາວຂ້າເໝືອນວ່າຂະເຈົ້າເຄີຍເປັນຂ້ອຍຂ້າຜູ້ໃດມາ. ຖ້າຄົນເຫລົ່ານັ້ນພາກັນຄິດແລະພາກັນສຶກສາເບິ່ງພາສາລາວແລ້ວກໍ່ຈະເຫັນວ່າຄຳວ່າຂ້າມີຄວາມໝາຍຫລາຍກວ່າທີ່ຂະເຈົ້າຄິດຄື ໑. (ກິຣິຍາ)ໝາຍຄວາມວ່າ "ເຮັດໃຫ້ຕາຍ" ຕົວຢ່າງ: ຄົນຂ້າໄກ່.

໒. (ນາມ)ໝາຍຄວາມວ່າ "ລາວເທິງຈຳພວກນຶ່ງ" ເຊັ່ນ: ຂ້າຂະມຸ ຂ້າຣະແດ ຂ້າຣະແນດ.

໓. (ນາມ) ດັ່ງ ຂ້ອຍຂ້າ, ຂ້າທາດ ໝາຍຄວາມວ່າຄົນໃຊ້ຫລືຄົນທີ່ຖືກບັງຄັບໃຫ້ເຮັດວຽກໃຫ້ຄົນອື່ນ.

໔. (ສັພນາມ) ດັ່ງ ຂ້າ ແລະຂ້າພະເຈົ້າ ໝາຍຄວາມວ່າຂ້ອຍ.

ບັດນີ້ທ່ານຄົງຮູ້ແລ້ວວ່າຢູ່ທີ່ນີ້ຂ້າພະເຈົ້າເວົ້າເຖິງຄວາມໝາຍທີ່ ໒. ພວກຂ້າສ່ວນມາກອາສັຍຢູ່ບ່ອນດິນສູງຢູ່ທົ່ວໄປໃນປະເທດລາວ. ນອກຈາກທີ່ກ່າວມານັ້ນແລ້ວກໍ່ຍັງມີ ຂ້າຈະຣາຍ, ຂ້າພາງດຳ ແລະ ຂ້າຕອງເຫລືອງ, ຂ້າກໍ່... ຊາວແມ້ວກໍ່ມີຫລາຍເຜົ່າດ້ວຍກັນຄື ແມ້ວຂາວ, ແມ້ວລາຍ... ນອກຈາກນີ້ກໍ່ມີໄທດຳ, ໄທແດງ, ຜູ້ໄທ, ນ່ານ, ລື້, ແລະອື່ນໆອີກ. ລາວເທິງແຕ່ລະເຜົ່າຕ່າງກໍ່ມີພາສາຂອງຂະເຈົ້າເອງ

ພົລເມືອງລາວ.(ຕໍ່)

ຊຶ່ງບາງເຜົ່າກໍມີຄວາມຄ້າຍຄຽງກັນ. ພວກທີ່ມີການຕິດຕໍ່ກັບລາວລຸ່ມກໍປາກພາສາລາວໄດ້. ແລະຢູ່ຕາມຫລາຍບ່ອນໃນປັດຈຸບັນກໍມີໂຮງຮຽນທີ່ມີນາຍຄຣູລາວສອນ. ພວກຊາວເຜົ່າລາວເທິງສ່ວນມາກມີການທຳມາຫາກິນດ້ວຍການເຮັດໄຮ່ເຂົ່າ, ໄຮ່ສາລີ ລ້ຽງສັດແລະລ່າສັດ. ບາງຈຳພວກກໍປູກຢາຝິ່ນເປັນສິນຄ້າ. ສ່ວນພວກລາວລຸ່ມ ໄດ້ແກ່ຊາວລາວທີ່ອາສັຍຢູ່ຕາມທົ່ງໃນຮ່ອມແມ່ນ້ຳຂອງຊຶ່ງເຫລືອຈາກພວກລາວທີ່ຖືກກືນເຂົ້າໄປເປັນພົລເມືອງ ຢູ່ທາງພາກຕະເວັນອອກຂອງປະເທດໄທ. ລາວລຸ່ມເປັນພວກທີ່ມີຈຳນວນຫລາຍກວ່າຫມູ່ໃນຈຳນວນພົລເມືອງທັງຫມົດຂອງປະເທດ, ມີປະເພນີຄ້າຍຄືກັນແຕ່ເຫນືອຕລອດໃຕ້, ມີການທຳມາຫາກິນດ້ວຍການເຮັດນາດຳ, ເຮັດສວນ, ເຮັດໄຮ່, ລ້ຽງສັດແລະຫາປາຕາມແມ່ນ້ຳ. ນອກຈາກນີ້ກໍເຮັດຣາຊການ ແລະເຮັດການຢູ່ຕາມບໍຣິສັດຮ້ານຄ້າຕ່າງໆ ແລະບາງຄົນກໍທຳການຄ້າຂາຍ.

ປະຊາຊົນສ່ວນມາກນັບຖືພຣະພຸທສາສນາແລະບາງຄົນກໍນັບຖືຜີຟ້າຜີແຖນໄປພ້ອມໆກັນຕລອດທັງຜີພໍ່ຜີແມ່ອີກດ້ວຍ. ນອກຈາກນີ້ກໍມີການນັບຖືສາສນາພາມຜະສົມກັນໄປອີກ.

ຊາວຕ່າງປະເທດທີ່ມາອາສັຍທຳມາຫາກິນຢູ່ໃນປະເທດລາວຫລາຍກວ່າຫມູ່ແມ່ນຊາວຈີນຊຶ່ງສ່ວນມາກປະກອບການຄ້າຂາຍທັງໃຫຍ່ແລະນ້ອຍ. ລອງລົງມາກໍແມ່ນຊາວວຽດນາມທີ່ປະກອບອາຊີບໃນທຸກໆດ້ານ. ຊາວອິນເດັຽທຳການຄ້າຂາຍເປັນສ່ວນໃຫຍ່ ສ່ວນໄທແລະຊາວຂເມນຕ່າງກໍພາກັນໄປໆມາໆ ໂດຍສະເພາະແມ່ນພວກທີ່ອາສັຍຢູ່ເລາະຊາຍແດນ. ຊາວຟີລິປິນສ່ວນມາກເຮັດການນຳໂຄງການຊ່ອຍເຫລືອສະຫະຣັດ. ນອກຈາກນີ້ກໍມີຊາວຍີ່ປຸ່ນແລະເກົາຫລີແດ່ເລັກນ້ອຍທີ່ເຂົ້າມາຫາກິນຫລືຕິດຕໍ່ວຽກການຢູ່ໃນປະເທດລາວ. ສ່ວນຊາວຕະເວັນຕົກນີ້ບໍ່ຫລາຍ ສ່ວນມາກແມ່ນມາໃນນາມຣັຖບານຂອງຂະເຈົ້າ. ແຕ່ບາງຄົນກໍໄດ້ມາຕັ້ງຖິ່ນຖານຢູ່ໃນປະເທດລາວເປັນເວລາດົນນານ.

ສ. ໄຊຍະສິທເສນາ

2.30 ຊີວິດໃນໝູ່ບ້ານ.

ຖ້າຈະເວົ້າເຣື່ອງໜ້າທີ່ແລະວຽກການຂອງຍິງຊາຍລາວຢ່າງຫຍໍ້ໆໃຫ້ທົ່ວເຖິງພົດທຸກຈໍາພວກ ທຸກຊຸ້ມວັນນະແລະເຜົ່າພັນນັ້ນ ກໍອາດຈະເວົ້າບໍ່ໄດ້ລະອຽດແລະທົ່ວເຖິງກັນດີ. ສະນັ້ນຈະຂໍເວົ້າເຖິງແຕ່ສະເພາະບ້ານດຽວຄືໃນຄຸ້ມບ້ານສວນມອນ ໃຕ້ຈາກວຽງຈັນໄປປະມານ ໕ ຫລັກກິໂລແມັດ ຊຶ່ງເປັນບ່ອນທີ່ຂ້າພະເຈົ້າໃຫຍ່ທັງໄດ້ເຫັນຄວາມປ່ຽນແປງຫລາຍກວ່າແຫ່ງອື່ນ. ແລະຂ້າພະເຈົ້າເຊື່ອວ່າກິດການທຸກສິ່ງທຸກຢ່າງທີ່ຈະເລົ່າສູ່ຟັງນີ້ ຄົງຈະບໍ່ແຕກຕ່າງກັນຫລາຍກັບທີ່ຂະເຈົ້າປະຕິບັດກັນຢູ່ຖິ່ນອື່ນໆພາຍໃນປະເທດ. ດ້ວຍເຫດວ່າປະຊາຊົນລາວສ່ວນໃຫຍ່ມີການຄອງຊີບແລະການທໍາມາຫາກິນດ້ວຍການປູກຝັງແລະເຮັດໄຮ່ໃສ່ນາ.

ແຕ່ກ່ອນຄົນໃນບ້ານສວນມອນນີ້ ເກືອບທົດທຸກຄົນເປັນຊາວໄຮ່ຊາວນາ ທັງເຮັດຮົ້ວເຮັດສວນເຊັ່ນປູກຢາສູບ, ຕົ້ນມອນເປັນຕົ້ນ. ແລະມີໜ້ອຍຄົນທີ່ສຸດທີ່ໄດ້ໄປຮໍ່າຮຽນໜັງສື ນອກຈາກພວກຜູ້ຊາຍບາງຄົນທີ່ນັ້ນທີ່ໄດ້ໄປບວດຮຽນຂຽນອ່ານຢູ່ວັດ. ການທໍາມາຫາກິນລ້ຽງຊີບຂອງຄົນໃນບ້ານນີ້ກໍດີສົມຄວນ ທຸກຄອບຄົວມີພໍຢູ່ພໍກິນ. ວຽກໄຮ່ການນາເປັນວຽກໜັກ ຄົນໃນຄອບຄົວບໍ່ວ່າຜູ້ເຖົ້າຜູ້ແກ່ຫລືໜຸ່ມນ້ອຍ ກໍຊົດຊ່ອຍກັນເຮັດ. ຂະເຈົ້າແບ່ງປັນໜ້າທີ່ວຽກການເຮັດຕາມຄວາມສາມາດແລະເຫື່ອແຮງຂອງໃຜລາວດັ່ງນີ້: ຜູ້ເຖົ້າເຝົ້າຫລານເຫລັນຢູ່ເຮືອນ. ລາງເທື່ອເພິ່ນກໍໄປທໍາບຸນທໍາທານຢູ່ວັດ. ພໍ່ເຖົ້າຈັກຕອກສານກະດົ້ງ ຫວດກະຕ່າ ກະບຸງ ຫລືສານແຫສານມອງເປັນຕົ້ນ. ພວກທີ່ຍັງໜຸ່ມນ້ອຍແລະແຂງແຮງກໍໄປເຮັດວຽກໜັກຢູ່ໃນນາ ແລະພວກເດັກນ້ອຍລາງຄົນກໍເອົານ້ອງ ຫລືເອົາຄວາຍໄປກິນຫຍ້າ ແລະໄປສົ່ງເຂົ້າຜູ້ໃຫຍ່ຢູ່ທົ່ງນາເປັນຕົ້ນ.

ຕາມທີ່ໄດ້ເວົ້າມານັ້ນ ພວກເດັກນ້ອຍກໍປາກົດວ່າຊ່ອຍວຽກທີ່ຈໍາເປັນໃນຄອບຄົວໄດ້ດີຫລາຍຢ່າງ. ດ້ວຍເຫດນີ້ເອງ ພວກຜູ້ໃຫຍ່ພໍ່ແມ່ຈຶ່ງບໍ່ຢາກສົ່ງລູກຫລານຂອງຂະເຈົ້າໄປເຂົ້າໂຮງຮຽນ. ທຸກໆປີໃດໃກ້ຈະຮອດຍາມເຂົ້າໂຮງຮຽນພວກພໍ່ບ້ານຕາແສງກໍອອກປ່າວເຕືອນພວກລູກບ້ານໃຫ້ສົ່ງລູກຫລານຂະເຈົ້າໄປ

ຊີວິດໃນໝູ່ບ້ານ.(ຕໍ່)

ເຂົ້າໂຮງຮຽນ. ແຕ່ປານນັ້ນຍັງມີຫລາຍຄອບຄົວບໍ່ສົ່ງລູກຫລານໄປໂຮງຮຽນ ໂດຍໃຫ້ເຫດຜົນວ່າບໍ່ມີຜູ້ຊ່ອຍວຽກຢູ່ເຮືອນ.

ມາເຖິງສມັຍປັດຈຸບັນ ຊີວິດການຢູ່ກິນຂອງຣາສດອນໃນບ້ານນີ້ກໍ່ປ່ຽນແປງຫລາຍ ແລະຄົນໃນບ້ານນີ້ກໍບໍ່ເປັນຊາວບ້ານນອກອີກແລ້ວ ໃນເມື່ອໂຕເມືອງໄດ້ຂຍາຍລາມອອກໄປເຖິງບ້ານຂະເຈົ້າແລ້ວ. ໃນດ້ານການສຶກສາ ພວກພໍ່ບ້ານຕາແສງກໍ່ບໍ່ໄດ້ຫຍຸ້ງຍາກຈຳເປັນອອກໄປປ່າວພໍ່ແມ່ໃຫ້ສົ່ງລູກໄປເຂົ້າໂຮງຮຽນຄືແຕ່ກ່ອນ. ພວກຊາວບ້ານເອງຫາກເຫັນຄວາມຈະເຣີນ ແລະຮູ້ຈັກຄວາມສຳຄັນແລະຄຸນຄ່າຂອງການສຶກສາຫນ້ອຍຫລາຍພໍປານໃດ ຂະເຈົ້າຈຶ່ງສົ່ງລູກຫລານໄປເຂົ້າໂຮງຮຽນໝົດທຸກຄົນ. ລາງຄົນບໍ່ຄັກໃຈວ່າເດັກຂອງຕົນຈະຮຽນບໍ່ໄດ້ດີຈາກໂຮງຮຽນຣັຖບານ ກໍ່ສົ່ງໄປເຂົ້າໂຮງຮຽນຈ້າງຫລືໂຮງຮຽນຄຸມພໍ່. ເດັກນ້ອຍຍິງຊາຍໃນບ້ານນັ້ນທຸກຄົນພາກັນໄປໂຮງຮຽນແລະໄດ້ຮັບການສຶກສາຢ່າງຫນ້ອຍ ໖ ປີ. ພວກນັກຮຽນທີ່ໄປຮຽນຕໍ່ໂຮງຮຽນມັທຍົມ ທັງໂຮງຮຽນຣັຖບານແລະໂຮງຮຽນຈ້າງຢູ່ໃນເມືອງວຽງຈັນກໍມີຫລາຍແລະກໍ່ຍັງມີນັກສຶກສາຈາກບ້ານນີ້ໄດ້ຮັບທຶນຈາກຣັຖບານໄປສຶກສາຕໍ່ໃນຕ່າງປະເທດບາງເລັກຫນ້ອຍ.

ນ.ສ. ສແວງສຸກ

ໄວປາກເສັຽສິນ ໄວຕີນຕົກກົກໄມ້

ຊີວິດໃນໝູ່ບ້ານ.(ຕອນສອງ)

ພວກຊາວບ້ານບາງຄົນມີເຮືອນຢູ່ສອງບ່ອນຄືມີເຮືອນຢູ່ບ້ານແລະຢູ່ນາ. ຄົນຈຳພວກນີ້ມີນາຢູ່ໃກ້ບ້ານ ດັ່ງນັ້ນເມື່ອຮະດູເຮັດນາມາຮອດແລ້ວ ຂະເຈົ້າຈຶ່ງຍ້າຍຄົວເຮືອນໄປຢູ່ນາ ແລະປະໃຫ້ລູກທີ່ຕ້ອງໄປໂຮງຮຽນຢູ່ນຳພີ່ນ້ອງຫລືພໍ່ເຖົ້າແມ່ເຖົ້າ. ແລ້ວດົນໆຂະເຈົ້າກໍ່ເຂົ້າມາຢາມບ້ານເທື່ອນຶ່ງເພື່ອເອົາໝາກໄມ້ແລະຜັກຕ່າງໆມາໃຫ້ລູກກິນ. ນອກຈາກເຮັດນາແລ້ວຍັງມີບາງຄົນເຮັດໄຮ່ປູກເຂົ້າອີກຊຶ່ງຂະເຈົ້າໄປຕັດຕົ້ນໄມ້ຖາງປ່າຖິ້ມໄວ້ແຕ່ໃນຮະດູແລ້ງແຫ້ງແລ້ວຈຶ່ງຈູດ. ຫລັງຈາກນັ້ນຈຶ່ງສັກເຂົ້າໃສ່. ເມື່ອຝົນຕົກໃສ່ເຂົ້າທີ່ສັກໄວ້ນັ້ນກໍ່ຈະງອກງາມຂຶ້ນເອງ.

ກ່ອນຈະເຮັດນາວຽກສຳຄັນຂອງພໍ່ນາກໍ່ຄືຫາງຫາເອົາເຄື່ອງເຮັດນາໃຫ້ຄົບຖ້ວນເຊັ່ນຄາດ ໄຖ ແອກ ເຊືອກ ຈົກ ສຽມ ພ້າແລະມີດເປັນຕົ້ນ. ຄັນຝົນຕົກຫລາຍເທື່ອພໍດິນຊຸ່ມແດ່ແລ້ວຂະເຈົ້າກໍ່ໄປໄຖແລະຄາດນາຈັກສອງສາມໄຮ່ ເພື່ອຕົກກ້າ. ໃນຮະຍະເວລາກ້າໃຫຍ່ພໍດຳໄດ້ ຊຶ່ງກິນເວລາປະມານເດືອນນຶ່ງນັ້ນ ພໍ່ນາກໍ່ໄຖນາຕໍ່ໄປເລື້ອຍໆຈົນໝົດທຸກໄຮ່. ຕາມທັມມະດາເພິ່ນເລີ້ມຕົ້ນໄຖນາພະອງກ່ອນ ແລ້ວຈຶ່ງໄຖນາໂພນ(ນາເທິງ). ສ່ວນພວກຜູ້ຍິງໃນຮະຍະນີ້ກໍ່ຫາງສີເຂົ້າຄົງໄວ້ ເພື່ອບໍ່ໃຫ້ຍາກແລະເສັຽເວລາກັບເວລາຍາມດຳນາ. ນອກຈາກນັ້ນ ຂະເຈົ້າຍັງມີວຽກອື່ນຫລາຍຢ່າງທີ່ຈະຕ້ອງເຮັດຄື: ທຸກເຊົ້າແລະແລງໄປຕັກນ້ຳກິນແລະໃຊ້ໃສ່ໄຫໃຫ້ເຕັມ; ຫາງເຮັດກິນສຳລັບຄອບຄົວເຮືອນທັງບົວຣະບັດນຳຜູ້ເຖົ້າລູກເຕົ້າແລະເຮືອນຊານອີກ.

ຊີວິດປະຈຳວັນຂອງຊາວບ້ານເຫລົ່ານີ້ ເມື່ອວາດພາບເບິ່ງແລ້ວ ປາກົດວ່າມີວຽກຫຍຸ້ງຍາກລຳບາກຫລາຍ ເໝືອນກັບວ່າຊິບໍ່ມີເວລາພັກໃຈ, ຫລືເອົາມີແຮງແລະຊຸມນຸມສັງສັນກັບຄົນອື່ນຈັກເທື່ອພຸ້ນລະ. ແຕ່ວ່າບໍ່ເປັນຈັ່ງຊັ້ນຕລອດໄປດອກ ຂະເຈົ້າກໍ່ມີໂອກາດໄດ້ໄປເຮັດບຸນເຮັດທານ, ໄປວັດຟັງທັມແລະເຮັດບຸນເຮັດທານຕ່າງໆຕາມຮີດຄອງປະເພນີອັນເກົ່າເດີມຢູ່ ຊຶ່ງທ່ານຈະໄດ້ຮຽນຮູ້ກ່ຽວກັບເຣື່ອງນີ້ ຢູ່ໃນພິທີແລະ

ຊີວິດໃນໝູ່ບ້ານ (ຕອນສອງຕໍ່)

ເວລາເຮັດບຸນງານສຳຄັນຕ່າງໆປະຈຳທ້ອງຖິ່ນແລະປະຈຳຊາດ ຕົວຢ່າງຄືບຸນບັ້ງໄຟ ບຸນເຂົ້າພັນສາ ບຸນອອກພັນສາແລະ ບຸນພະເຫວດເປັນຕົ້ນ. ນອກນັ້ນ ພວກພໍ່ນາຍັງໄດ້ພັກຜ່ອນໃນມື້ວັນສິນໃຫຍ່ອີກ ຄືເວລາຂະເຈົ້າຢຸດພັກບໍ່ໃຫ້ງົວຄວາຍເຮັດວຽກໜັກ.

ບັດນີ້ຣະດູດຳນາມາຮອດແລ້ວ. ເມື່ອຕົ້ນກ້າພໍດຳໄດ້ ພໍ່ນາກໍກັບຄືນມາໄຖຄົ້ນນາທີ່ໄຖແລ້ວອີກເທື່ອນຶ່ງແລ້ວຈຶ່ງຄາດໃຫ້ດິນແຕກເປັນຕົມເພື່ອໃຫ້ຜູ້ຍິງດຳ. ແຕ່ເຈົ້າມືດຂອງທຸກໆມື້ຜູ້ຊາຍກໍເອົາຄວາຍອອກໄປໄຖນາ, ປ້ານຄັນນາແລະຖ້ານ້ຳບໍ່ມີກໍເອົາກະໂຊ້ສະນ້ຳເຂົ້າໃສ່ນາ ພວກຜູ້ຍິງກໍລຸກໜຶ້ງເຂົ້າຫ້າງເຮັດກິນແລ້ວກໍໄປດຳນາ. ຕາມທັມມະດາເດັກນ້ອຍ ເອົາໄວ້ນຳຕູ້ເຖົ້າຫລືອ້າຍເອື້ອຍຢູ່ເຮືອນເວລາແມ່ໄປດຳນາ. ແຕ່ແມ່ລູກອ່ອນທີ່ບໍ່ມີຜູ້ເບິ່ງ ຫລືໄປສົ່ງນົມເສັງເວລາດົນ ຂະເຈົ້າກໍເອົາອູ່ຜ້າຫລືອູ່ໄມ້ໄປແຂວນໄວ້ຮົ່ມຕົ້ນໄມ້ທີ່ໃກ້ຂະເຈົ້າ ແລ້ວຫງວນມາເບິ່ງເວລາລູກໃຫ້ຢາກກິນນົມ. ພວກຜູ້ຍິງກໍພາກັນໄປຫລົກກ້າໄດ້ຫລາຍພໍດຳແລ້ວ ຫລັງຈາກນັ້ນລາງເທື່ອຂະເຈົ້າກໍໄປສ້ອນປາດ້ວຍເຂີງ ມາເຮັດກິນແລງ.

ຕໍ່ນັ້ນໄປອີກ ມີ ຫາ ໔ ເດືອນ ຕົ້ນເຂົ້າກໍຈະມີຮວງເຫລືອງເຕັມທົ່ງນາ. ເມື່ອຣະດູກ່ຽວເຂົ້າມາຮອດແລ້ວ ພວກພໍ່ນາທັງຫລາຍກໍພາກັນເຮັດລານໄວ້ກອງເຂົ້າ. ແຕ່ເຈົ້າຮອດບ່າຍພວກຍິງຊາຍໃນຄອບຄົວກໍພາກັນຈັບກ່ຽວອອກໄປຊ່ອຍກັນກ່ຽວເຂົ້າ. ພໍເຖິງຍາມແລງມາຜູ້ຊາຍກໍໄປມັດເຂົ້າທີ່ກ່ຽວວາງເປັນຜາດໄວ້ແຕ່ມື້ກ່ອນ. ບັດນັ້ນຜູ້ຍິງກໍໄປຫາບເອົາມັດເຂົ້າມາກອງໄວ້ລານ. ຖ້າເຂົ້າສຸກໄວຫລາຍກ່ຽວບໍ່ທັນຂະເຈົ້າກໍວານພີ່ນ້ອງແລະໝູ່ເພື່ອນມາຊ່ອຍ. ຂະເຈົ້າເຮັດດ້ວຍຄວາມມ່ວນຊື່ນ ຄືລາງຄົນກໍຂັບລຳແລະລາງຄົນກໍເລົ່ານິທານສູ່ໝູ່ຟັງ. ສຳລັບພວກທີ່ມີນາຫລາຍ ນອກຈາກວານຄົນມາຊ່ອຍແລ້ວ ຖ້າບໍ່ແລ້ວຍັງໄດ້ຈ້າງຄົນມາກ່ຽວຊ່ອຍອີກ. ຫລັງຈາກຂົນມັດເຂົ້າມາກອງໄວ້ລານພົດແລ້ວ ຜູ້ຊາຍຈຶ່ງຟາດແລະວີເຂົ້າແລ້ວກໍຂົນເຂົ້າໄປໃສ່ເລົ້າ. ຊ້ຳພ້ອມກັນນັ້ນຂະເຈົ້າກໍຍ້າຍຄົວເຮືອນຂອງຂະເຈົ້າເຂົ້າມາຢູ່ໃນບ້ານດ້ວຍ.

ມ.ສ. ສແວງສຸກ

2.31 ຊີວິດຂອງຄອບຄົວໃນເມືອງໃຫຍ່.

ປະເທດລາວຈັດຢູ່ໃນປະເທດນ້ອຍປະເທດນຶ່ງ. ຊີວິດຂອງຄອບຄົວທີ່ຢູ່ຂົງເຂດໃນເມືອງແຕກຕ່າງກັບພວກທີ່ມີຊີວິດຢູ່ຕາມບ້ານນອກຫລືພວກທີ່ຢູ່ຫ່າງຈາກຄວາມຈະເຣີນ. ສິ່ງແວດລ້ອມຕາມໃນເມືອງຫລວງໄດ້ເຮັດໃຫ້ຄົນປ່ຽນສະພາບມາລຶ້ງເຄີຍກັບສຽງຟົດສັ່ນຂອງຣົດ, ຄົນເດີນຕາມຖນົນ ແລະພວກພໍ່ຄ້າຊາວຂາຍແລະອື່ນໆອີກ. ເຖິງອາກາດຕາມໃນເມືອງຈະບໍ່ສົດກໍດີ ແຕ່ອາທິດໃດເທື່ອນຶ່ງຄອບຄົວໃນເມືອງຈະຕ້ອງຂັບຣົດອອກໄປເລາະຊົມແລະກິນອາກາດຕາມບ້ານນອກ. ຄວາມຈິງແລ້ວ ຊີວິດຢູ່ໃນເມືອງຫຍຸ້ງຍາກທັງອຶດອັດຫລາຍ ແລະຄ່າຄອງຊີບກໍແພງ. ໃນເຣື້ອງເຂົ້າປາອາຫານແລ້ວ ຊາວໃນເມືອງຕ້ອງອາສັຍແລະໄດ້ມາຈາກພວກຊາວໄຮ່ຊາວນາທັງນັ້ນ.

ຖ້າພວກເຮົາສັງເກດດີໆແລ້ວ ບໍ່ວ່າຈະຢູ່ປະເທດໃດ ຕາມຫົວເມືອງໃຫຍ່ຂອງປະເທດ ຊີວິດຈະຕ້ອງຫຍຸ້ງຍາກເພາະມີຄົນຫລາຍຍາດແຍ່ງອາຊີບກັນ. ເມືອງລາວກໍຄືກັນ ເຣື້ອງໜ້າທີ່ການຕາມໃນເມືອງນັ້ນ ໄດ້ວ່າມີຕັ້ງແຕ່ຄົນຮັບໃຊ້ຊັ້ນຕ່ຳໆຂຶ້ນໄປຮອດຂ້າຣາຊການຊັ້ນຜູ້ໃຫຍ່. ຊີວິດປະຈຳວັນຂອງຄອບຄົວລາວທີ່ຢູ່ໃນເມືອງນີ້ຄື: ຜູ້ຊາຍຫລືພໍ່ເຮືອນທຸກໆເຊົ້າຕ້ອງເອົາຊີວິດອອກຕໍ່ສູ້ ເພື່ອແລກປ່ຽນເອົາເງິນມາອຸດໜູນຄ່າຢູ່ກິນແລະຊຸກຍູ້ຄວາມກ້າວໜ້າໃນການສຶກສາຂອງລູກ. ມີພໍ່ເຮືອນອີກຫລາຍຄົນຍັງຕ້ອງໄດ້ເຮັດວຽກພິເສດຄືເວລາກາງຄືນຫລືວັນເສົາວັນອາທິດເປັນຕົ້ນ. ແຕ່ຕາມທັມມະດາແລ້ວຂະເຈົ້າເຮັດການ ໕ ມື້ເທົ່ານັ້ນ. ສຳລັບວັນເສົາແລະວັນອາທິດຂະເຈົ້າພັກຜ່ອນ. ລາງເທື່ອກໍອອກກິນລ້ຽງຫລືຊຸມແຊວກັບໝູ່ເພື່ອນຮ່ວມງານແລະພີ່ນ້ອງ. ຜູ້ຍິງແລະແມ່ເຮືອນກໍເຮັດວຽກຢູ່ກັບບ້ານເຊັ່ນ: ມ້ຽນເຮືອນປັດຊານ. ສ່ວນຫລາຍແລ້ວພວກຢູ່ໃນເມືອງນັກຈ້າງຄົນໃຊ້ມາຢູ່ນຳ ເພື່ອເບິ່ງລູກແລະຊ່ວຍວຽກເຮືອນຕ່າງໆ. ແມ່ເຮືອນບາງຄົນກໍດີ ໄປຕລາດແລ້ວກັບບ້ານແຕ່ງອາຫານອັນແຊບໆໄວ້ຕ້ອນຜົວທີ່ຮັກແລະລູກຂອງຂະເຈົ້າ. ລາງເທື່ອແມ່ເຮືອນບາງຄົນກໍນັກອອກບ້ານຫລັງຈາກຫວ່າງວຽກຄືເວລາຜົວໄປການ ເພື່ອໄປລົມຫລິ້ນຊຸມແຊວນຳເພື່ອນ

ຊີວິດຂອງຄອບຄົວໃນເມືອງໃຫຍ່.(ຕໍ່)

ບ້ານໃກ້ຄຽງ. ເມື່ອມີງານກິນລ້ຽງອັນສຳຄັນ ເພື່ອໃຫ້ສົມກຽດແລະເໝາະສົມກັບສັງຄົມ ແມ່ເຮືອນຫລືເມັຽເຈົ້ານາຍກໍອອກໄປແຕ່ງຜົມຫລືເກົ້າຜົມຕາມຮ້ານເສີມສວຍ ສ່ວນຫລາຍ ຜູ້ຍິງລາວບໍ່ວ່າສັງຄົມຕ່ຳຫລືສູງ ຖ້າເຮືອນໝູ່ເພື່ອນພີ່ນ້ອງເຮັດບຸນເຮັດທານ, ແຕ່ງດອງຫລືງັນເຮືອນດີ ກໍໄປຊ່ວຍວຽກກັນຢ່າງອົບອຸ່ນ.

ສຳລັບເດັກນ້ອຍຫລືລູກ ທຸກໆເຊົ້າກໍຕ້ອງພາກັນໄປໂຮງຮຽນ. ບາງຄອບຄົວກໍມີຣົດໄປສົ່ງລູກໂຮງຮຽນ. ແຕ່ສ່ວນຫລາຍເຮືອນໃດມີຣົດ ລູກມັກຈະອອກຈາກບ້ານໄປໂຮງຮຽນພ້ອມພໍ່ໄປການ. ແລ້ວເວລາເລີກກໍກັບພ້ອມກັນ ນີ້ກໍເພື່ອຄວາມສະດວກຂອງການໄປມາທັງສອງຝ່າຍ. ສ່ວນແມ່ແລະຄົນໃຊ້ຢູ່ເຮືອນອີກພາຣະນຶ່ງກໍເບິ່ງແຍງໃນການນຸ່ງຫົ່ມແລະເຂົ້າປາອາຫານ. ແລະພໍ່ກໍເປັນຜູ້ສິດສອນວິຊາຄວາມຮູ້ເພີ້ມເຕີມຈາກໂຮງຮຽນໃຫ້ລູກ.

ອ. ສົມບັດ

ຢ່າໄວ້ໃຈທາງ ຢ່າວາງໃຈຄົນ
ມັນຈົມໃຈໂຕ

2.32 ຜູ້ຍິງລາວ.

ຜູ້ຍິງລາວໃນສມັຍກ່ອນເກືອບທຸກຄົນບໍ່ໄດ້ຮຽນໜັງສື. ຂະເຈົ້າຢູ່ໃກ້ຊິດແລະເຮັດວຽກຊ່ອຍພໍ່ແມ່ຢູ່ເຮືອນ. ເວລາຊ່ອຍວຽກຢູ່ນັ້ນແມ່ຫລືແມ່ເຖົ້າມັກຈະອົບຮົມສັ່ງສອນລູກສາວຫລານສາວໃຫ້ເປັນຜູ້ດີມີສເນ່ແລະໜ້າຮັກຄື: ໃຫ້ມີໃຈອົດທົນເຊັ່ນບໍ່ໃຫ້ສະແດງຄວາມຄຽດຂຶ້ນ ໃຈຮ້າຍ ເສັຽໃຈອອກມາແລະເວລາເມື່ອຍເພັຽກໍບໍ່ໃຫ້ຈົ່ມວ່າອອກມາ; ໃຫ້ເປັນຄົນຊ່າງເວົ້າຊ່າງລົມຄືເວົ້າຫວານຂານມ່ວນ ບໍ່ໃຫ້ເປັນຄົນປາກກ້າຄາງແຂງ. ໃຫ້ມີກິຣິຍາມາຣະຍາດຮຽບຮ້ອຍແລະຄ່ຽມຄົມດີ ເຊັ່ນເຄົາຣົບນັບຖືຜູ້ໃຫຍ່ ດັ່ງທີ່ມີຄຳສອນເວົ້າໄວ້ວ່າ, "ໃຫຍ່ໃຫ້ເອີ້ນລຸງ ສູງໃຫ້ເອີ້ນປ້າ". ແລະເວລາເອົາຂອງໄປໃຫ້ຜູ້ຄົນກໍໃຫ້ຄ່ອຍກົ້ມໝອບໄປ ຫລືເວລາຍ່າງຜ່ານຜູ້ເຖົ້າຫລືຜູ້ຄົນທີ່ນັ່ງຢູ່ກໍໃຫ້ຍ່າງກົ້ມຫລອບຫລັງຫລືຄານໄປ. ເວລາເຮັດອັນໃດກໍໃຫ້ຮຽບຮ້ອຍແລະມ້ຽນໄວ້ເປັນຣະບຽບ. ເວລາມີຄົນນອນຫລັບຢູ່ກໍບໍ່ໃຫ້ເຮັດສຽງດັງ ແລະໃຫ້ຍ່າງຄ່ອຍໆໂດຍເອົາປາຍຕີນລົງກ່ອນ. ໃຫ້ຟັງຄຳແນະນຳສັ່ງສອນຂອງພໍ່ແມ່ແລະຢ່າໃຫ້ເພິ່ນໄດ້ຮັບຄວາມລຳບາກແລະເສັຽໃຈນຳຈັກເທື່ອ.

ເມື່ອໃຫຍ່ມາອີກຂັ້ນນຶ່ງຄືອາຍຸໃນລາວ ໑໐–໑໔ ປີກໍມີພາຣະໜ້າທີ່ເພີ່ມຂຶ້ນມາຄື: ເບິ່ງແຍງນຳນ້ອງ ນ້ອງນຸ່ງຕາງແມ່; ໄປຕັກນ້ຳແລະຫົດນ້ຳຜັກຊ່ອຍແມ່ ແລະຊ່ອຍແມ່ຄົວກິນ; ຮຽນບົວຣະບັດຢ້າວເຮືອນຄືປັດກວາດໃຫ້ສອາດ; ເວລາເຖິງວັນສິນມາກໍເກັບດອກໄມ້ໄປບູຊາເຮືອນ ເຊັ່ນບູຊາຫົວຂັ້ນໄດ, ປະຕູເຮືອນ ຄີໄຟ ໄຫເຂົ້າ ໄຫນ້ຳ ເປັນຕົ້ນ. ແລະທຸກໆແລງເກັບດອກໄມ້ມາບູຊາຮ້ານພຣະ; ແລະໄດ້ຮຽນຕ່ຳຫູກມັດໝີ່ ເກັບຂິດ ແລະລາງຄົນກໍໄດ້ຮຽນທຍິບປັກຖັກແສ່ວ. ເວລາແມ່ເຈັບປ່ວຍຫລືມີວຽກການເຮັດຢູ່ນອກບ້ານເປັນເວລາດົນ ລູກສາວກໍໄດ້ຮັບພາຣະວຽກການແທນແມ່. ແລະເມື່ອໃຫຍ່ເປັນສາວມາ ສິ່ງທີ່ຮຽນຮູ້ແລະເຮັດມາເລື້ອຍໆໃນຄອບຄົວນັ້ນ ກໍຈະລຶ້ງເຄີຍແລະຊຳນານ ຊຶ່ງຈະເລີຍກາຍເປັນໜ້າທີ່ແມ່ເຮືອນໃນຄອບຄົວຂອງຕົນເອງໃນອະນາຄົດ.

ມາເຖິງສມັຍປັດຈຸບັນ ພວກຍິງລາວທຸກຄົນໄດ້ໄປໂຮງຮຽນແລະໃຫ້ໂອກາດຮ່ຳຮຽນເທົ່າທຽມກັບຜູ້

ຜູ້ຍິງລາວ.(ຕໍ່)

ຈາຍຕາມຄວາມສາມາດຂອງຂະເຈົ້າ. ການສັ່ງສອນແລະການປະຕິບັດທາງກິຣິຍາມາຣະຍາດຍັງປະຕິບັດໃນຄອບຄົວເໜືອນເດີມ. ແຕ່ວຽກການຫລາຍຢ່າງທີ່ໄດ້ເວົ້າມາກ່ອນນັ້ນເຊັ່ນວິຊາສອນຢູ່ເຮືອນແລ້ວ ກໍຍ້ອນວ່າພໍ່ແມ່ແລະລູກເຕົ້າບໍ່ມີເວລາໄດ້ຢູ່ເຮັດວຽກຮ່ວມກັນ. ດຽວນີ້ວຽກການຫລາຍສິ່ງຫລາຍຢ່າງທີ່ເຄີຍທຳຢູ່ເຮືອນມາແຕ່ກ່ອນ ໄດ້ກາຍເປັນວິຊາຮຽນໃນໂຮງຮຽນຕ່າງໆໂດຍສະເພາະຢູ່ໃນເມືອງໃຫຍ່ ຄືວ່າງວິຊາສອນຕຳຫູກເຮັດຜ້າຍ, ບົວຣະບັດເດັກນ້ອຍ, ບົວຣະບັດເຮືອນຊານແລະເຮັດຢູ່ເຮັດກິນເປັນຕົ້ນໄດ້ຈັດສອນຢູ່ໂຮງຮຽນການເຮືອນ. ແລະນັກຮຽນຍິງບາງສ່ວນໄດ້ຮັບການຄ້ຳຮຽນໃນດ້ານການທຍິບແສ່ວຫລືຖັກເສື້ອຫລືຖັກດ້ວຍເຂັມຂໍເຮັດຜ້າແພມົນ ຜ້າຮອງຈອກ ຜ້າພອນ ຜ້າປູໂຕະຈາກໂຮງຮຽນປະຖົມສຶກສາແລະມັທຍົມຕ່າງໆ. ແລະມີນັກຮຽນຍິງບາງເລັກໜ້ອຍໄດ້ໄປຮຽນຟ້ອນແລະຣະຍາດອັນຄຸ້ມຄົມຈາກໂຮງຮຽນນາຕສິນແຫ່ງຊາດ.

ນ.ສ. ສແວງສຸກ

ພົບຄົນເດີມີສີເຫົາຕົວ ພົບຄົນຈົ່ວພາຕົວໝົ່ນໝອງ

2.33 ພືດຜັກໃນສວນແລະສວນຄົວ.

ເວລາບ້ານເມືອງຢູ່ດີສງົບສຸກ ເມື່ອຂັບຣົດອອກໄປຫລີ້ນທາງນອກເມືອງ ເພື່ອເບິ່ງເຢັນແລະປ່ຽນບັນຍາກາດອັນອຶດອັດຂອງໃນເມືອງ ເຮົາຈະເຫັນນາເປັນຄັນເປັນແຖວ ແລະເຫັນຮົ້ວສວນເປັນຣະບຽບຮຽບຮ້ອຍຢູ່ທຸກແຫ່ງ ທັງເຫັນຊີວິດຂອງຊາວນາຊາວສວນແຕກຕ່າງກັບຊີວິດການຢູ່ກິນຂອງຊາວໃນເມືອງຫລາຍຢ່າງ.

ດັ່ງທີ່ທ່ານເຫັນຢູ່ໃນຮູບແຕ້ມນີ້ ຄ້ອມເຮືອນຫລືຄຸ້ງນາຂອງຊາວນານັກຈະມີສວນຄົວ ທັງມີເຄື່ອງປູກຂອງຝັງອື່ນໆອີກຫລາຍຢ່າງ. ຢູ່ບໍຣິເວນບ້ານຂອງຂະເຈົ້າ ມີຮົ້ວໄມ້ແກ່ນຫລືໄມ້ໄຜ່ລ້ອມຮອບຢ່າງແໜ້ນໜາ ເພື່ອປ້ອງກັນບໍ່ໃຫ້ສັດໃຫຍ່ຄື: ງົວ ຄວາຍ ແລະມ້າຂອງຄົນອື່ນເຂົ້າມາກວນເຄື່ອງປູກຂອງຝັງແລະເຟືອງທີ່ກອງໄວ້ນັ້ນໄດ້. ສວນຄົວຂອງຂະເຈົ້າກໍເຮັດຮົ້ວສານແຕະຖີ່ລ້ອມອີກເທື່ອນຶ່ງ ເພື່ອບໍ່ໃຫ້ສັດນ້ອຍເຊັ່ນ ແມວ ໝາ ໄກ່ ຫ່ານທີ່ຂະເຈົ້າປ່ອຍໃຫ້ຫາກິນເອງຕາມທັມມະຊາດເຂົ້າທຳອັນຕະຣາຍໄດ້.

ເຄື່ອງປູກຂອງຝັງທີ່ຂະເຈົ້າປູກມີຫລາຍຊນິດ ແຕ່ແບ່ງອອກເປັນສອງຈຳພວກໃຫຍ່ໆດ້ວຍກັນ: ຄືຈຳພວກນຶ່ງ ເມື່ອປູກແລ້ວຈະເກັບກິນໄປໄດ້ຫລາຍປີທັງຕົ້ນໃຫຍ່ ແລະເພິ່ນມັກປູກເລາະຕາມແຄມຮົ້ວບ້ານຄື: ຕົ້ນໝາກພ້າວ ຕົ້ນໝາກນາວ ໝາກກ້ວຍ ໝາກຫຸ່ງ ໝາກຂີ້ຫູດ ຜັກຂະ ຕົ້ນແຄ ຕົ້ນສົ້ມປ່ອຍເປັນຕົ້ນ. ພວກທີ່ເປັນຫົວກໍມີ ຂ່ານ້ອຍ ຫົວສີໄຄ ຂ່າໃຫຍ່ແລະມັນຕົ້ນ. ແລະອີກຈຳພວກນຶ່ງແມ່ນຜັກທີ່ປູກຕາມຣະດູການທຸກໆປີ ແລະເພິ່ນນິຍົມປູກກັນຫລາຍແຕ່ໃນຣະດູແລ້ງທີ່ມີອາກາດເຢັນ ຄືຕົ້ນຣະດູເກັບກ່ຽວເປັນຕົ້ນໄປ. ຜັກລາງແນວປູກໃສ່ຫນານ; ແຕ່ລາງແນວເປັນເຄືອ ເມື່ອປູກແລ້ວເຮັດຄ້າງແລະຮ້ານໃຫ້ເລືອຂຶ້ນ ແລະຜັກອີກແນວນຶ່ງປູກເປັນຄູເຮັດດິນຫລົມໆເປັນຕົ້ນ. ຜັກທີ່ປູກໃສ່ຫນານມີຄື ຜັກບົ່ວ ຜັກທຽມ ຜັກກາດ ຜັກສລັດ ຫອມປ້ອມ ຫອມຫູ້ ຜັກຊີ ກະລຳປີ ຜັກກາດນາເປັນຕົ້ນ, ຜັກເຫລົ່ານີ້ ເພິ່ນມັກປູກພ້ອມກັນ ແຕ່ຕາມທັມມະດາຜັກທີ່ເປັນໃບມັກອາກາດເຢັນກວ່າພວກທີ່ເປັນຫມາກ.

ນອກຈາກພວກຊາວນາປູກຜັກເຫລົ່ານີ້ແລ້ວ ຢູ່ໃນເມືອງຍັງມີພວກຄອບຄົວຂ້າຣາຊການເຈົ້ານາຍ


ທາງເຂົ້າ
ໝາກຂີ້ຫູດ
ຕົ້ນແຄ
ໝາກນາວ
ກ້ວຍ
ໝາກຫຸ່ງ
ຜັກກະລໍ່າປີ
ຜັກສະລັດ
ຜັກຊີ
ຜັກກາດຫົວ
ໝາກເຜັດ
ຜັກຕັ້ງໂອ
ຜັກກາດຂຽວກວາງຕຸ້ງ
ຮົ້ວ





ຣິມຮົ້ວດ້ານໃນປູກຜັກທີ່ເກັບຮັບປະທານອະຍະຍາວເຊັ່ນ ຕົ້ນແຄ ຜັກກັ້ນ ຖົ່ວ ຜັກຂະແລະພືນໄມ້ເຊັ່ນ ໝາກຫຸ່ງ ກ້ວຍ ໝາກນາວ ຕາມແຄມຮົ້ວ ດ້ານນອກປູກຜັກເປັນເຄືອ ເຊັ່ນ ຜັກຕໍາລຶງ ຜັກບົ້ງ ແລະອື່ນໆ ຕາມໃຈມັກ.

ຝຶກຜັກໃນສວນແລະສວນຄົວ.(ຕໍ່)

ຜູ້ໃຫຍ່ບາງຄົນທີ່ມີດິນເປົ່າຫວ່າງແລະຫວ່າງວຽກກໍເຮັດສວນຄົວປູກຜັກເພື່ອລະເລັກລະໜ້ອຍໄວ້ເກັບເຊົ້າກິນຄ່ຳອີກເໝືອນກັນ ເປັນຕົ້ນປູກຜັກຫອມຕ່າງໆ,

ມ.ສ ສແວງສຸກ

ໄກ່ງາມຍ້ອນຂົນ ຄົນງາມຍ້ອນແຕ່ງ

ເບິ່ງຊ້າງໃຫ້ເບິ່ງຫາງ ເບິ່ງນາງໃຫ້ເບິ່ງແມ່

2.40 ການສຶກສາໃນເມືອງລາວ.

ກະຊວງສຶກສາທິການແບ່ງການສຶກສາອອກເປັນຫລາຍກົມມີຄື: ກົມການພິພິທພັນແລະຫໍສມຸດແຫ່ງຊາດ, ກົມຝຶກຫັດອົບຮົມບຸກຄົນ, ກົມການຊ່າງແລະອາຊີວະສຶກສາ, ກົມປະຖົມສຶກສາແລະການສຶກສາຜູ້ໃຫຍ່, ກົມມັທຍົມສຶກສາແລະກົມການສຶກສາສູງ.

ການຮຽນຂັ້ນປະຖົມສຶກສາມີຫລັກສູດສອນ ໖ ປີແລະການຮຽນທຸກວິຊາສອນເປັນພາສາລາວ. ເມື່ອນັກຮຽນໆຈົບ ໖ ປີແລ້ວກໍເສັງເອົາແຊກຫລືໃບປະກາດສະນີຍະບັດຂັ້ນຕົ້ນ ພ້ອມທັງເລືອກເສັງເຂົ້າໂຮງຮຽນຕ່າງໆ ເຊັ່ນໂຮງຮຽນມັທຍົມ ຫລືໂຮງຮຽນອົບຮົມຄຣູ ຫລືໂຮງຮຽນພຍາບານຂັ້ນຕົ້ນຫລືໂຮງຮຽນການຊ່າງແລະອາຊີບ ຕາມໃຈມັກແລະຕາມຄວາມສາມາດ. ຫລັກສູດການຮຽນຂັ້ນມັທຍົມສຶກສາມີທັງຫມົດ ໗ ປີ ແຕ່ແບ່ງເປັນສອງຂັ້ນ: ຂັ້ນທີ່ນຶ່ງຮຽນ ໔ ປີແລະຂັ້ນທີ່ສອງຮຽນ ໓ ປີ. ໂຮງຮຽນແບບປະສົບຟ້າງຸ່ມມີຫລັກສູດການຮຽນ ໗ ປີແລະວິຊາສອນທັງຫມົດເປັນພາສາລາວ. ຕົວຢ່າງຂອງວິຊາຮຽນແລະຈຳນວນຊົ່ວໂມງປະຈຳອາທິດດັ່ງນີ້: ພາສາລາວແລະວັນນະຄະດີ ໔ ຊົ່ວໂມງ, ພາສາຕ່າງປະເທດ ໘ ຊົ່ວໂມງ, ວິທຍາສາດ ໔ ຊົ່ວໂມງ, ຄນິດສາດ ໔ ຊົ່ວໂມງ, ສິລປະປະຕິບັດ(ກະເສດກັມ, ພານິຊກັມ, (ຄຫະກັມ, ອຸດສາຫະກັມ) ໔ ຊົ່ວໂມງ, ພະລະສຶກສາ ໒ ຊົ່ວໂມງ. ໃນປັດຈຸບັນໂຮງຮຽນດັ່ງກ່າວນີ້ຕັ້ງຢູ່ວຽງຈັນ, ໂພນໂຮງ, ສວັນນະເຂດ, ແລະຄາດວ່າຈະເປີດໃຫມ່ອີກຢູ່ຫລວງພຣະບາງໃນເດືອນກັນຍາ ໑໙໗໑ ນີ້. ແຕ່ວ່າໂຮງຮຽນມັທຍົມແຫ່ງອື່ນໃນປະເທດຍັງສອນວິຊາຕ່າງໆເປັນພາສາຝຣັ່ງຢູ່ ມີ໑໐ ແຫ່ງດ້ວຍກັນຄື: ຢູ່ວຽງຈັນມີຫລັກສູດສອນເຕັມ ໗ ປີ, ຢູ່ຫລວງພຣະບາງ ປາກເຊ ສວັນນະເຂດ ມີຫລັກສູດສອນ ໖ ປີ, ແລະແຫ່ງກອກ ຄຳມ່ວນ ໄຊງ ອັດປື ສາຣະວັນ ແລະປາກຊັນ ມີຫລັກສູດສອນ ໔ ປີ. ສຳລັບວິທຍາລັຍຄຣູມີຫລັກສູດສອນແຕ່ ໒–໓ ປີ ຊຶ່ງນັກຮຽນເລີ້ມຕົ້ນຮຽນແຕ່ປີທີ່ ໗ ໄປແລະມີຫລາຍຂັ້ນຮຽນດ້ວຍກັນ: ໑. ຫລັກສູດສອນ ໒ ປີ ສຳລັບຝຶກຫັດນັກຮຽນຄຣູປະຖົມສຶກສາຂັ້ນຕົ້ນເພື່ອອອກສອນ ປ. ໑, ໒, ໓.

໒. ຫລັກສູດສອນ ໔ ປີ ຝຶກຄຣູປະຖົມສຶກສາຕອນປາຍເພື່ອອອກສອນ ປ. ໔, ໕, ໖.

ການສຶກສາໃນເມືອງລາວ.(ຕໍ່)

໓. ຫລັກສູດສອນ ໗ ປີ ແລະ ໑ ປີຝຶກຫັດຄູມັທຍົມສຶກສາ. ຫລັງຈາກຮຽນຈົບແລ້ວບາງຄົນກໍໄດ້ທຶນໄປດູງານຕ່າງປະເທດອີກປີນຶ່ງ ແລ້ວອອກໄປສອນຢູ່ໂຮງຮຽນມັທຍົມຫລືໂຮງຮຽນຝຶກຫັດຄູຕ່າງໆ. ສູນການສຶກສາວິທຍາລັຍຄູຕັ້ງຢູ່ດົງໂດກທ່າງຈາກເມືອງວຽງຈັນໄປປະມານ ໕ ຫລັກກິໂລແມັດ ແລະມີຫລັກສູດການຮຽນ ໓ ປີ. ແຕ່ແຂວງອື່ນມີຫລັກສູດການຮຽນແຕ່ ໔ ປີ. ຄູທຸກຄົນທີ່ຮຽນອອກຈາກໂຮງຮຽນເຫລົ່ານີ້ ບໍ່ວ່າຈາກຫລັກສູດ ໔ ປີຫລື ໓ ປີ ຫລືໄປຮຽນຕໍ່ເມືອງນອກກໍຕາມ ຕ້ອງໄດ້ກັບມາທຳການສອນຮັບໃຊ້ຣັຖບານຢ່າງນ້ອຍສິບປີ ຕາມຂໍ້ຜູກມັດຂອງຣັຖບານທີ່ໄດ້ວາງໄວ້. ນອກຈາກບາງກໍຣະນີຈະຍົກເວັ້ນໄດ້ຄື: ໄປເຂົ້າເປັນທະຫານ ຫລືຕິດຕາມຜົວໄປຕ່າງປະເທດໂດຍຫວັງຈະກັບຄືນມາ. ຖ້າບໍ່ດັ່ງນັ້ນຜູ້ກ່ຽວຕ້ອງໄດ້ສົ່ງເງິນທຶນຄືນໃຫ້ຣັຖບານຕາມຈຳນວນທີ່ເບີ່ງໄວ້.

ນອກຈາກໂຮງຮຽນທີ່ໄດ້ເວົ້າມານີ້ ກໍຍັງມີໂຮງຮຽນການຊ່າງແລະອາຊີວະສຶກສາຕາມແຂວງຕ່າງໆ. ຢູ່ວຽງຈັນວິທຍາລັຍການຊ່າງແລະອາຊີວະສຶກສາຊຶ່ງມີຫລັກສູດສອນ ໔+໓ ປີແລະມີວິຊາຮຽນຫລາຍແນວດ້ວຍກັນຄື: ແປງຣົດ ແປງຈັກຫົວໄປ ກໍ່ສ້າງ ຊ່າງໄມ້ ຊ່າງໄຟຟ້າ ແປງເຄື່ອງອາຍເຢັນ ການຄ້າເປັນຕົ້ນແລະໂຮງຮຽນເທັກນິກລາວ-ເຢຣະມັນສອນວິຊາເຄື່ອງຈັກຣົດແລະໄຟຟ້າ ຊຶ່ງມີຫລັກສູດສອນ ໓ ປີ. ສ່ວນໂຮງຮຽນການຊ່າງຢູ່ສວັນນະເຂດມີວິຊາຮຽນເທົ່າກັນກັບຢູ່ວຽງຈັນແຕ່ມີຫລັກສູດສອນແຕ່ ໔ ປີ. ໂຮງຮຽນການຊ່າງທຸກໆບ່ອນເລີ້ມຕົ້ນຮຽນແຕ່ປີທີ່ ໗ ໄປ.

ເມື່ອນັກຮຽນມັທຍົມຮຽນຈົບແລ້ວຫວັງຈະຮຽນຕໍ່ກໍສມັກເສັງເຂົ້າຮຽນຢູ່ວິທຍາລັຍການແພດ, ວິທຍາລັຍຄູ, ວິທຍາລັຍກົດໝາຍແລະການປົກຄອງ. ວິຊາການແພດມີຫລັກສູດສອນ ໔ ປີຫລັງຈາກການຮຽນປີທີ່ ໑໒ ແລະການປົກຄອງມີຫລັກສູດ ໓ ປີ ຫລັງຈາກການຮຽນປີທີ ໑໐. ເມື່ອຮຽນຈົບຂັ້ນສູງສຸດໃນປະເທດແລ້ວ ຖ້ານັກສຶກສາຜູ້ໃດມີຄວາມສາມາດແລະຫວັງຈະຮຽນຕໍ່ອີກກໍເສັງເອົາທຶນຣັຖບານລາວຫລືທຶນຂອງປະເທດເພື່ອນມິດ ໄປຮຽນຕໍ່ຢູ່ມະຫາວິທຍາລັຍຢູ່ຕ່າງປະເທດທີ່ະພົ້ນມີເງິນ ງົບປະມານທຶນການສຶກສາປະຈຳປີໄວ້ໃຫ້ນັກຮຽນທຸກໆປີ.

ນ.ສ. ສແວງສຸກ


ວິທຍາລັຍ
ວິທຍາລັຍກົດໝາຍແລະການປົກຄອງ
ວິທຍາລັຍການແພດ
ໂຮງຮຽນມັທຍົມ
ມະຫາວິທຍາລັຍສີສວ່າງວົງ
ກົມມັທຍົມສຶກສາ
ກົມການສຶກສາຂັ້ນສູງ
ຫໍພິພິທພັນແຫ່ງຊາດ
ໂຮງຮຽນການຊ່າງເທັກນິກ
ກົມການພິພິທພັນແລະຫໍສມຸດແຫ່ງຊາດ
ກະຊວງສຶກສາທິການ
ກົມການຊ່າງແລະອາຊີວະສຶກສາ
ຫໍສມຸດແຫ່ງຊາດ
ວິທຍາລັຍການຊ່າງເທັກນິກ
ກົມປະຖົມສຶກສາແລະການສຶກສາຜູ້ໃຫຍ່
ກົມຝຶກອົບຮົມບຸກຄົນ
ໂຮງຮຽນປະຖົມສຶກສາ
ສະຖາບັນອົບຮົມຄຣູ
ປະຖົມສຶກສາປະຈຳແຂວງ
ໂຮງຮຽນອົບຮົມຄຣູຂັ້ນຕົ້ນ
ໂຮງຮຽນຫັດຖກັມປະຈຳທ້ອງຖິ່ນ
ວິທຍາລັຍຄຣູ

2.41 ຫລັກຣະບຽບຂອງການສຶກສາໃນໝູ່ບ້ານ.

ການສຶກສາປຽບເໝືອນແສງໄຟອັນແຈ້ງສວ່າງສ່ອງແຍງທາງໃຫ້ປວງຊົນ ແລະນຳປະເທດຊາດໄປສູ່ຄວາມຈະເຣີນສີວິໄລ. ເພື່ອສົ່ງເສີມທາງດ້ານການສຶກສາຂອງປະຊາຊົນໃນປະເທດ ໃຫ້ເປັນພົລເມືອງດີມີຄວາມຮູ້ຫລັກແຫລມ ພຣະບາດສົມເດັດພຣະເຈົ້າມະຫາຊີວິດໄດ້ຊົງອອກກົດຣະບຽບຂອງການສຶກສາຊີ້ແຈງໄວ້ດັ່ງນີ້: ໃຫ້ການສຶກສາເປັນການຈຳເປັນແກ່ເດັກນ້ອຍທັງຍິງແລະຊາຍທຸກຄົນໃນໝູ່ບ້ານທີ່ມີອາຍຸຄົບ ໖ ປີ ບໍຣິບູນ.

ເພື່ອຊັກຈູງລູກບ້ານໄປສູ່ການສຶກສາ ນາຍບ້ານມີຄວາມຈຳເປັນຕ້ອງກອດເບິ່ງບັນຊີຊະຕາອັນເກີດເດັກນ້ອຍທີ່ມີອາຍຸເຂົ້າໂຮງຮຽນ ແລ້ວເຮັດບັນຊີລາຍຊື່ເດັກສອງສະບັບໄປຍື່ນໃຫ້ນາຍຄຣູສະບັບນຶ່ງ ແລະອີກສະບັບນຶ່ງສົ່ງໃຫ້ຕາແສງໄວ້ພິຈາຣະນາຕາມທາງການ ເພື່ອໃຫ້ຮູ້ຈັກຈຳນວນນັກຮຽນວ່າສົມຄວນພໍຂໍຄຣູຫລືເພີ່ມຈຳນວນຄຣູຂຶ້ນຫລືບໍ່. ນາຍບ້ານຕ້ອງບອກໃຫ້ພໍ່ແມ່ຫລືຜູ້ປົກຄອງຂອງເດັກນ້ອຍ ສົ່ງລູກຫລານໄປໂຮງຮຽນ ອີກປະການນຶ່ງນາຍບ້ານມີສິດອຳນາດຂໍຄຣູສອນໄດ້ ຖ້າໃນບ້ານນັ້ນມີຈຳນວນເດັກນ້ອຍມີອາຍຸເຂົ້າໂຮງຮຽນເຖິງ ໔໕ ຄົນຂຶ້ນໄປເຖິງ ໖໐ ຄົນ. ສ່ວນການສ້າງສາໂຮງຮຽນ ເຮືອນພັກນາຍຄຣູ ພ້ອມດ້ວຍອຸປກອນການຮຽນ ເຊັ່ນ: ໂຕະ ຕັ່ງ ຕູ້ ແລະກະດານນັ້ນ ຕົກເປັນພາຣະວຽກການຂອງຣາສດອນບ້ານນັ້ນເປັນເຈົ້າສັດທາ ແຕ່ພວກບ້ານອື່ນທີ່ຢູ່ໃກ້ຄຽງຈະຕ້ອງໄດ້ໄປໂມທະນາຊ່ອຍແຮງກໍ່ສ້າງຮ່ວມກັບເຈົ້າສັດທາຂອງບ້ານນັ້ນ. ຫລັງຈາກການສ້າງສາໝົດທຸກຢ່າງແລ້ວໆ ການຮັກສາບົວຣະບັດປົວແປງໃນປີຕໍ່ໄປແມ່ນພາຣະໜ້າທີ່ສ່ວນຕົວເອງຂອງເຈົ້າຂອງໂຮງຮຽນທັງໝົດ.

ໃນບ້ານໃດມີໂຮງຮຽນປະຊາບານຫລືໂຮງຮຽນປະຖົມສຶກສາ ເດັກນ້ອຍທັງຍິງແລະຊາຍຕ້ອງໄປເຂົ້າໂຮງຮຽນໂດຍບໍ່ມີຂໍ້ຍົກເວັ້ນ ຖ້າບໍ່ມີ ຜູ້ປົກຄອງເດັກຈະສົ່ງລູກໄປຮຽນຢູ່ໂຮງຮຽນຈ້າງ

ຫລັກຣະບຽບຂອງການສຶກສາໃນໝູ່ບ້ານ (ຕໍ່).

(ໂຮງຮຽນພໍ່ຄ້າ) ຫລືໂຮງຮຽນຄຸມພໍ່(ຄຣິສຕຽນ) ກໍໄດ້.ພວກນັກຮຽນທີ່ຮຽນຢູ່ໂຮງຮຽນປະຖົມສຶກສາ ຫລືໂຮງຮຽນຣັຖບານບໍ່ໄດ້ເສັຽເງິນຄ່າຮຽນໃຫ້ນາຍຄຣູແຕ່ຢ່າງໃດເລີຍ ແລະຣັຖບານຍັງແຈກຢາຍປຶ້ມຮຽນ ບາງວິຊາໃຫ້ນັກຮຽນຢືມລ້າອີກ.

ເດັກນ້ອຍຍິງຊາຍທີ່ມີອາຍຸເຂົ້າໂຮງຮຽນ ຕ້ອງມີສຸຂພາບສົມບຸນແລະແຂງແຮງດີກ່ອນ ຈຶ່ງໄປເຂົ້າໂຮງຮຽນ. ຖ້າເດັກມີພຍາດຕິດຕໍ່ ເຊັ່ນເປັນຕາປຽກ ຂີ້ກາກ ຂີ້ທູດ ຂີ້ທິດ ປອດແຫ້ງເປັນຕົ້ນ ພໍ່ແມ່ຜູ້ປົກຄອງຕ້ອງເອົາເດັກໄປປົວໃຫ້ດີເສັຽກ່ອນ ເພາະຢ້ານຕິດນັກຮຽນຄົນອື່ນ ຖ້າຫາກປົວບໍ່ດີ ກໍບໍ່ຕ້ອງໄປເຂົ້າໂຮງຮຽນເລີຍ.

ຖ້າເດັກນ້ອຍຂາດໂຮງຮຽນ ຄື ເວລາເຈັບໄຂ້ໄດ້ປ່ວຍຊົ່ວຄາວ ຫລືຕິດທຸຣະກິດຈຳເປັນໃນຄອບຄົວຜູ້ປົກຄອງເດັກຕ້ອງໄປບອກນາຍຄຣູໃຫ້ຊາບນຳທຸກໆເທື່ອ. ຄັນຫາກບໍ່ເຊື່ອຟັງແລະປະຕິບັດຕາມແລະບໍ່ສົ່ງລູກໄປໂຮງຮຽນ ຜູ້ປົກຄອງຈະຖືກປັບໄໝ ແລະຖ້າບໍ່ເຂັດບໍ່ຫລາບໄໝສອງຕໍ່.

ເມື່ອນັກຮຽນຕິດພຍາດຕິດຕໍ່ ນາຍຄຣູເອງແລະນາຍໝໍປະຈຳທ້ອງຖິ່ນຖານີ ຈະເປັນຜູ້ສັ່ງໃຫ້ພັກໂຮງຮຽນຢູ່ເຮືອນ ຊຶ່ງໃນກໍຣະນີນີ້ຜູ້ປົກຄອງບໍ່ຈຳເປັນມາຄອບຄຣູໃຫ້ຊາບ.

ຜູ້ປົກຄອງຂອງເດັກນ້ອຍມີສິດໄປສືບຖາມເຖິງການຮ່ຳຮຽນຂອງລູກຫລານຂອງຕົນ ແລະນາຍຄຣູກໍຕ້ອງສົ່ງລາຍງານການຮຽນເປັນຣະຍະໆໃຫ້ຜູ້ປົກຄອງເດັກ ໃຫ້ຮູ້ວ່າເດັກປຶກຫລືປ່ອງໃນການຮຽນວິຊາໃດແດ່ ເພື່ອຈະໃຫ້ພໍ່ແມ່ສອນວິຊາທີ່ລູກຮຽນບໍ່ໄດ້ດີຕື່ມເຕີມໃຫ້ ຖ້າມີຄວາມສາມາດ ຫລືຈະໃຫ້ລູກໄປຈ້າງຮຽນເພີ່ມເຕີມນຳຜູ້ໃດຜູ້ນຶ່ງ ກໍແລ້ວແຕ່ຜູ້ປົກຄອງເດັກມີຄວາມປະສົງ.

ແລະຜູ້ປົກຄອງຂອງເດັກຈະຍ້າຍບ້ານເຮືອນໄປຢູ່ບ້ານອື່ນ ກໍຕ້ອງຂໍໜັງສືຢັ້ງຢືນຈາກນາຍຄຣູເກົ່າຂອງເດັກໄປນຳ ຖ້າບໍ່ດັ່ງນັ້ນ ຄຣູຜູ້ໃໝ່ກໍບໍ່ຊ່າງຊິຮັບເອົາເດັກນັ້ນໄດ້ ເພາະບໍ່ຮູ້ວ່າຄວາມຮູ້ຂອງເດັກຮຽນຕ່ຳສູງພໍປານໃດ.

2.42 ການສຶກສາຂອງຜູ້ໃຫຍ່.

ເພື່ອກຳຈັດການອ່ານໜັງສືບໍ່ໄດ້ຂອງຜູ້ໃຫຍ່ໃນໝູ່ບ້ານຕ່າງໆໃຫ້ລຶດໜ້ອຍລົງ ທາງກະຊວງສຶກສາທິການໄດ້ຈັດຕັ້ງໃຫ້ມີການສອນໜັງສືຜູ້ໃຫຍ່ແລະໃຫ້ຂື້ນກັບກົມປະຖົມສຶກສາ. ເພາະຈິງແລ້ວ ເມື່ອເພື່ອນບ່າວສາວຫລືພໍ່ເຮືອນແມ່ຊານເຫັນເພື່ອນໃກ້ເຮືອນຄຽງຂອງຕົນອ່ານໄດ້ຂຽນເປັນກໍຄຶດກິນແໜງ ມີຄວາມເສັຽດາຍໃຈທີ່ພໍ່ແມ່ຂອງຕົນບໍ່ໄດ້ສົ່ງຕົນໄປໂຮງຮຽນ. ເພື່ອແກ້ໄຂປັນຫາອັນນີ້ ທາງຣັຖບານໃຫ້ນາຍບ້ານເປັນຜູ້ຮ່ວມງານ ຄືເອົາບັນຊີສຳມະໂນຄົວເຮືອນອອກມາກວດເບິ່ງ ແລ້ວສືບຖາມຫາລູກບ້ານຂອງຕົນວ່າມີຍິງແລະຊາຍຄົນໃດແດ່ທີ່ຍັງອ່ານແລະຂຽນໜັງສືລາວບໍ່ທັນໄດ້.

ເມື່ອຮູ້ຈຳນວນຄັກແນ່ແລ້ວ ນາຍບ້ານກໍຈະຈັດໃຫ້ຂະເຈົ້າຮຽນໜັງສືເວລາກາງຄືນ ໃນຣະດູທີ່ຫວ່າງຈາກວຽກໄຮ່ການນາ. ສ່ວນຄຣູສອນນັ້ນຈະແມ່ນຜູ້ໃດກໍໄດ້ຖ້າມີຄວາມສາມາດ ແລະຄຣູສອນຜູ້ນຶ່ງໃຫ້ສອນນັກຮຽນແຕ່ ໕ ຄົນຫາ ໑໐ ຄົນເທົ່ານັ້ນ ແລະຈະສອນຢູ່ເຮືອນໃຜກໍໄດ້ແລ້ວແຕ່ຈະຕົກລົງກັນແລະສດວກ. ຖ້າມີຫລາຍຄົນຈະຕົກລົງກັນໄປຮຽນຢູ່ທີ່ແຈກວັດ ທີ່ນາຍບ້ານໄປປຶກສາທາຍທານໄວ້ແລ້ວ ແລະຈະນິມົນພຣະມະຫາໃນວັດນັ້ນສອນໃຫ້ກໍໄດ້.

ສຳລັບປຶ້ມອ່ານ ນາຍບ້ານເປັນຜູ້ລາຍງານໄປຍັງຕາແສງ ເພື່ອຈະໄດ້ຮຽນຂໍແລະໃຫ້ທ່ານເຈົ້າເມືອງຊາບ ແລ້ວທ່ານເຈົ້າເມືອງກໍຈະຫາຊ່ອງທາງສົ່ງປຶ້ມອ່ານ "ກໍກາ" ມາໃຫ້.

ມ.ສ. ສແວງສຸກ

2.5 ສຸຂະອະນາໄມແລະໂຣກໄພຕ່າງໆໃນເມືອງລາວ.

ຄວາມຢູ່ດີກິນດີຂອງຄົນເຮົາກໍຂຶ້ນກັບຄວາມຮັກສາສຸຂະພາບຂອງຕົນເອງ ແລະຮັກສາຄວາມສະອາດຢູ່ສເມີ. ຕົວຢ່າງ ອາຫານເປັນຂອງລ້ຽງຊີວິດ ແຕ່ອາຫານກໍເປັນຢາພິດເພື່ອທຳລາຍຊີວິດເຮົາໄດ້ເໝືອນກັນ ຖ້າເຮົາຂາດຄວາມຣະມັດຣະວັງຫລືຄວາມສະອາດ. ແຕ່ກ່ອນຄົນລາວໄດ້ຫາຢູ່ຫາກິນຕາມທັມມະຊາດເທົ່າ ໂດຍຂະເຈົ້າບໍ່ໄດ້ຄິດຄຳນຶງເຖິງຄວາມຢູ່ດີກິນດີເລີຍ. ຊີວິດຂອງຂະເຈົ້າປະປົນຢູ່ກັບຄວາມມືດມົນຂອງແມ່ພຍາດຫລາຍຊນິດ, ແຕ່ຂະເຈົ້າບໍ່ຮູ້ເລີຍວ່າພຍາດແມ່ນຫຍັງ. ແຕ່ສມັຍກ່ອນຄົນລາວພາກັນເຊື່ອຖືໄປໃນເຣື່ອງຜີໆສາງໆຫລາຍກວ່າ. ສມັຍນັ້ນ ຫາກຜູ້ໃດເຈັບໜັກເຊັ່ນເປັນໄຂ້ປ່າ, ໄຂ້ຂຶ້ນ ເຈັບທ້ອງ ໄສ້ຕິ່ງເຫລົ່ານີ້ເປັນຕົ້ນ ຂະເຈົ້າກໍເອົາຄົນເຫລົ່ານີ້ໄປໃຫ້ໝໍຜີຫລືໝໍຮາກໄມ້ປົວ.

ຄົນລາວບໍ່ໄດ້ຄຳນຶງເຖິງສາຍເຫດທີ່ພາໃຫ້ຂະເຈົ້າເຈັບປ່ວຍຫລືຕາຍຍ້ອນຫຍັງເລີຍ. ຖ້າແມ່ນວ່າຂະເຈົ້າຫາກຮູ້ຈັກສາຍເຫດທີ່ພາໃຫ້ຄົນເຫລົ່ານີ້ລົ້ມເຈັບປ່ວຍຫລືຕາຍໄປ ຄົນລາວກໍຄົງຈະຮູ້ຈັກຮັກສາບົວຣະບັດຕົນເອງແລະພຍາຍາມປ້ອງກັນບໍ່ໃຫ້ພຍາດເກີດຂຶ້ນ ທັງຮັກສາອາຫານການກິນແລະເຄື່ອງນຸ່ງຫົ່ມໃຫ້ສະອາດຮຽບຮ້ອຍດີ. ພຍາດຕ່າງໆໄດ້ເກີດຈາກສິ່ງແວດລ້ອມທີ່ອາສັຍຢູ່ອ້ອມຂ້າງອ້ອມແອ້ມເຮົານີ້ເອງ ຕົວຢ່າງ ດິນຟ້າອາກາດ ອາຫານການກິນ ນ້ຳດື່ມ ແລະເຄື່ອງນຸ່ງຫົ່ມເປັນຕົ້ນ. ສິ່ງເຫລົ່ານີ້ອາດນຳເຊື້ອໂຣກເຂົ້າສູ່ຕົນຕົວເຮົາໄດ້ຢ່າງງ່າຍດາຍ. ພຍາດທີ່ຮ້າຍແຮງແລະມີຜູ້ຄົນເຈັບປ່ວຍຍ້ອນຫລາຍໃນປະເທດລາວກໍມີພຍາດໄຂ້ປ່າ ພຍາດປອດເທ້ງ ພຍາດຂາດອາຫານ ພຍາດກ່ຽວກັບການສູບລົມຫາຍໃຈເປັນຕົ້ນ.

ດິນຟ້າອາກາດສຳຄັນຫລາຍໃນເມືອງລາວ ໂດຍສະເພາະແຕ່ລະຣະດູອາກາດກໍນຳຄວາມເຈັບປ່ວຍມາສູ່ຜູ້ຄົນຢ່າງຫລວງຫລາຍ ເຊັ່ນຣະດູໜາວບໍ່ວ່າເດັກນ້ອຍຫລືຜູ້ໃຫຍ່ພາກັນເປັນຫວັດເປັນໄອຫລາຍ. ຕາມຊົນນະບົດນອກຈາກຈະເປັນຫວັດແລ້ວບາງຄົນກໍຈັບໜາວກາຍເປັນປອດບວມ ແຕ່ສ່ວນຫລາຍແມ່ນພວກເດັກນ້ອຍ. ຄັນຍາມຮ້ອນມາກໍມີຄົນເຈັບຫລາຍເພາະບໍ່ພາກັນຣະວັງນຳການຢູ່ກິນເຊັ່ນ: ຕຳສົ້ມໝາກຫຸ່ງເຜັດໆເຄັມໆສົ້ມໆ ກິນໝາກຂາມອ່ອນຫລືໝາກມ່ວງເທີ່ມ ຈ້ຳປາແດກດັ່ງນີ້ເປັນຕົ້ນ. ອາຫານພວກນີ້ມັກ

ສຸຂະອະນາໄມແລະໂຣກໄພຕ່າງໆໃນເມືອງລາວ.(ຕໍ່)

ພາໃຫ້ເຈັບທ້ອງ ຖອກທ້ອງ ເປັນທ້ອງຂີ້ຣາກ ທ້ອງບິດ ຫລືປຸ້ມທ້ອງຊຶ່ງພາໃຫ້ຢູ່ບໍ່ສະບາຍຈ່ອຍຜອມ. ແລະລາງກໍຣະບາດພຍາດກໍເກີດຂຶ້ນໄດ້ ຍ້ອນບໍ່ຮັກສາອາຫານດີຄື: ປະໃຫ້ແມງຫວີ່ ແມງວັນຕອມຫລືວ່າກິນອາຫານທີ່ບູດເນົ່າ. ຢູ່ເມືອງຮ້ອນຄືເມືອງລາວນີ້ ໂຣກຜິວໜັງກໍມີຫລາຍ. ຖ້າເຮົາຮັກສາຕົນຕົວເຮົາບໍ່ສະອາດກໍຈະເກີດເປັນຕຸ່ມຄັນຄາຍແລະກາຍເປັນຂີ້ທຶດ ຂີ້ເຮື້ອນເປັນຕົ້ນ.

ປັດຈຸບັນນີ້ເມືອງລາວກໍມີຜູ້ຄົນໄດ້ຮັບການສຶກສາຫລາຍຂຶ້ນທຸກໆມື້ ສະນັ້ນເຣື່ອງການຮັກສາອະນາໄມຂອງຄົນລາວດຽວນີ້ກໍດີຂຶ້ນຫລາຍ. ແລະຕາມເມືອງໃຫຍ່ຕ່າງໆກໍມີໂຮງພຍາບານຕັ້ງຢູ່ເປັນປະຈຳແລະມີທ່ານໝໍທັນສມັຍຫລາຍສົມຄວນ. ແຕ່ຕາມໝູ່ບ້ານຊົນນະບົດຂອງເມືອງລາວຜູ້ຄົນຍັງບໍ່ຮູ້ຈັກອະນາໄມດີປານໃດ. ແຕ່ເຖິງຢ່າງໃດກໍດີ ທາງຣັຖບານກໍໄດ້ຫາທາງຊ່ວຍປະຊາຣາສດອນໃຫ້ມີຊີວິດໄດ້ຢູ່ດີກິນດີຄື: ປັບປຸງນ້ຳໃຫ້ສະອາດ ສີດຢາຂ້າແມງໄມ້ແລະຍຸງ.ກະຊວງສາທາຣະນະສຸກກໍໄດ້ສົ່ງທ່ານໝໍແລະນາງພຍາບານອອກໄປຊ່ວຍປິ່ນປົວຄົນເຈັບໃຫ້ລ້ຽງກັບຢາທັນສມັຍແລະນຳຮູບໄປແຈກຢາຍພ້ອມທັງອະທິບາຍເຣື່ອງການຮັກສາອະນາໄມປະຈຳຄອບຄົວ. ນອກຈາກທ່ານໝໍໄປເປັນບາງຄັ້ງບາງຄາວແລ້ວ ກະຊວງສາທາຣະນະສຸກຍັງໄດ້ຈັດໃຫ້ມີໂຮງໝໍນ້ອຍຫລັງນຶ່ງໂດຍມີນາງພຍາບານຫລືນາງພະດຸງຄັນເປັນຜູ້ຢູ່ປະຈຳເພື່ອຊ່ວຍປົວຄົນເຈັບຕໍ່ສອງສາມໝູ່ບ້ານໃກ້ຄຽງ. ທຸກປີໃດ ຕາມໂຮງຮຽນຕ່າງໆບໍ່ວ່າຢູ່ໃນເມືອງຫລືບ້ານນອກ ໜ່ວຍພຍາບານເຄື່ອນທີ່ໄດ້ອອກໄປສັກຢາແລະແຈກຢາກັນໂຣກຕ່າງໆໃຫ້ນັກຮຽນແລະຊາວບ້ານເຊັ່ນສັກໝາກສຸກ ສັກຢາກັນໂຣກອະຫິວາແລະໃຫ້ຢາກັນໄຂ້ປ່າ ເປັນຕົ້ນ.

ຄວາມຈິງແລ້ວຄົນລາວຍັງຕ້ອງການໂຮງໝໍແລະທ່ານໝໍຕື່ມອີກຫລາຍ ໂດຍສະເພາະຢູ່ຕາມຊົນນະບົດ. ຢາແລະເຄື່ອງມືທັນສມັຍກໍຂາດເຂີນຢູ່ຫລາຍ. ຣົດຮັບຄວາມເຈັບກະທັນຫັນກໍບໍ່ພຽງພໍ ແລະຖນົນຫົນທາງກໍບໍ່ດີ ຊຶ່ງທຳໃຫ້ຊັກຊ້າໃນການເອົາຄົນເຈັບໄປສົ່ງໂຮງໝໍໃຫຍ່ ແລະບາງຄັ້ງຄົນເຈັບກໍບໍ່ມີໂອກາດໄດ້ເຫັນໜ້າທ່ານໝໍເລີຍ.

9. ສົມບັດ

2.51 ພໍຢາລາວ ຫລືພໍຢາປະຈຳບ້ານ.

ແຕ່ກ່ອນຄື ໔໐ ປີຜ່ານມາແລ້ວເມື່ອເວລາມີຄົນເຈັບປ່ວຍຢູ່ຕາມໝູ່ບ້ານຕ່າງໆທີ່ຫ່າງໄກຈາກເມືອງ ໃຫຍ່ແລະຂາດທ່ານໝໍ ເພິ່ນພາກັນໄປປົວນຳພໍຢາປະຈຳບ້ານຫລືພໍຢາລາວ. ພໍຢາເຫລົ່ານີ້ມີຄືພໍຢາຮາກໄມ້ ໝໍເປົ່າ ໝໍບີບເອັ້ນ ໝໍສັກເອັ້ນແລະໝໍຕໍ່ດູກເປັນຕົ້ນ. ພວກໝໍເຫລົ່ານີ້ບໍ່ແມ່ນໝໍຜີ ແຕ່ຂະເຈົ້າໃຊ້ມົນ ເປົ່າ. ຢູ່ໃນບ້ານຂ້ອຍແມ່ນພໍ່ເຖົ້າຂ້ອຍເປັນຜູ້ທີ່ມີຊື່ສຽງແລະໄດ້ຊ່ອຍຊີວິດໄທບ້ານໄວ້ໄດ້ຫລາຍຄົນ. ເພິ່ນ ສາມາດປົວພຍາດໄດ້ຫລາຍແນວ ເຊັ່ນໄຂ້ປ່າ ໄຂ້ໝາກໄມ້ ເຈັບທ້ອງ ປວດໝາກເບີດເປັນຕົ້ນ. ນອກ ຈາກປົວໄທບ້ານນັ້ນແລ້ວ ເພິ່ນຍັງໄດ້ປົວຣອດຄົນຕ່າງປະເທດອີກຊຶ່ງສ່ວນມາກມາສັກເອັ້ນນຳເພິ່ນ. ເມື່ອ ເວລາຄົນເຈັບມາຫາເພິ່ນຢູ່ເຮືອນ, ຂະເຈົ້າກໍ່ເລົ່າເຣື່ອງອາການເຈັບປວດຕ່າງໆໃຫ້ເພິ່ນຟັງ ແລ້ວເພິ່ນ ຈຶ່ງເອົາພົກຮາກຢາຂອງເພິ່ນມາໄຂ (ມີຫລາຍຫໍ່)ແລະເລືອກເອົາຮາກໄມ້ທີ່ເພິ່ນຕ້ອງການອອກມາກອງ ໄວ້ເພື່ອຝົນ. ເວລາຝົນ ເພິ່ນເອົາປາຍຮາກຢາແຫ້ງຈຸ່ມໃສ່ນ້ຳ; ມືນຶ່ງຈັບກ້ອນຫີນຂນາດ ນິ×ຜ ນີ້ວແລະ ອີກມືນຶ່ງຖູຮາກໄມ້ໃສ່ພ້າຫີນ. ເມື່ອຖູໄດ້ບຶດນຶ່ງແລ້ວເພິ່ນກໍ່ລ້າງຫີນໃສ່ນ້ຳກິນຢູ່ໂອແລ້ວຝົນອີກຈົນກະວ່າພໍ ແລ້ວຈຶ່ງປ່ຽນເອົາຢາຮາກໃຫມ່ມາຝົນ. ຂ້ອຍຈື່ໄດ້ວ່າຫີນກ້ອນນັ້ນເພິ່ນໃຊ້ມັນຫລາຍຈົນຫ້ຽນເກືອບຂອດ. ພຍາດລາງແນວຂ້ອຍເຫັນເພິ່ນວາງຢາມີຢາຮາກໄມ້ແລະເຂົາສັດຫລືກະດູກແນວໃດແນວນຶ່ງປົນຢູ່ນຳດ້ວຍ. ຫລັງຈາກຝົນຢາພໍດທຸກອັນແລ້ວ ເພິ່ນກໍ່ຈຶ່ງຍົກເອົາໂອນ້ຳຢາຂຶ້ນແລ້ວຈົ່ມມົນເປົ່າສາມເທື່ອກ່ອນຈະເອົາໄປ ໃຫ້ຄົນເຈັບກິນຕາມທີ່ເພິ່ນສັ່ງຄື,"ກິນມື້ນຶ່ງສາມເທື່ອ ເມື່ອນ້ຳພົດ ໃຫ້ເອົານ້ຳກິນຜ່າໃສ່ອີກຈັກເທື່ອນຶ່ງຫລື ສອງເທື່ອ" ຢ່າງນີ້ເປັນຕົ້ນ. ແລະພຍາດລາງແນວເພິ່ນບໍ່ຕ້ອງການ ໃຊ້ຮາກໄມ້ ມີແຕ່ເອົາປູນແຫລວ ອຸ່ນໆມາແຕ້ມອ້ອມບ່ອນທີ່ໃຄ່ ແລ້ວຈົ່ມມົນເປົ່າສາມເທື່ອເທົ່ານັ້ນ ເຊັ່ນເປັນພາກເບີດແລະພາກກະດັນຂາ ຫລືເປັນຕຸ່ມໃສ່ຂີ້ແຮ້ແລະກະແຕ້ຫູ.

ເມື່ອເວລາມີຄົນປວດເອັ້ນມາຫາພໍ່ເຖົ້າຂ້ອຍ ເພິ່ນກໍ່ສັກເອັ້ນໃຫ້ຂະເຈົ້າ. ເວລາສັກເອັ້ນເພິ່ນເອົາ

ພິຢາລາວ ຫລືພິຢາປະຈຳບ້ານ.(ຕໍ່)

ນ້ຳມັນງາແຈະໃສ່ເປັນຍ່ານໆຕາມເສັ້ນເອັນທີ່ເຄັ່ງຕຶງນັ້ນ ແລ້ວໃຊ້ບັ້ງສັກທີ່ມີເຂັມສັ້ນໆປະມານ ໑໐-໑໔ ອັນປັກຢູ່ອ້ອມປາຍບັ້ງສັກໃສ່ບ່ອນມີນ້ຳມັນງາ. ເມື່ອສັກແລ້ວບ່ອນນຶ່ງເຊັ່ນກ້ານຄໍແລະບ່າໄຫລ່ເພິ່ນກໍຍຸດເປົ່າມົນໃສ່ເສັ້ງກ່ອນຈຶ່ງຍ້າຍໄປສັກບ່ອນອື່ນຕໍ່ໄປ.

ພິຢາລາວທີ່ຂ້ອຍເລົ່າມານີ້ຕາມເຂດຊົນນະບົດທີ່ຫ່າງຈາກໂຮງໝໍແລະຢາສມັຍໃໝ່ ກໍຍັງໃຊ້ຫວ້ານຢາຮາກໄມ້ຢູ່. ສຳລັບພໍ່ເຖົ້າຂ້ອຍເພິ່ນເຊົາປົວຄົນດ້ວຍຢາຮາກໄມ້ແລ້ວ ແຕ່ເພິ່ນຍັງສັກເອັນຢູ່ຈົນຮອດທຸກວັນນີ້. ມາຮອດປັດຈຸບັນເພິ່ນເອງເຈັບປ່ວຍເຜວດຽວເພິ່ນກໍໄປຫາທ່ານພໍ່ປົວໃຫ້ເພິ່ນເໝືອນຄົນອື່ນໃນບ້ານນັ້ນ.

ນ.ສ. ສແວງສຸກ

ຢາກກິນຫລາຍ ໄດ້ກິນທໍ່ກ້ອຍ
ຢາກກິນໜ້ອຍ ໄດ້ກິນທໍ່ໂປ້ມື

2.6 Religion and Ethics

INTRODUCTION[1]

The American who comes in contact with Buddhism for the first time in Laos will be impressed by certain outward features of the religion, such as beautiful temple buildings with many statues of Buddha and saffron-clad priests walking the streets. These are only the most superficial signs of a religion which is held by almost all Laotians and by some other ethnic groups in Laos. Since it is central to much of what Laotians think and do, it will be considered in some detail.

As with all religions it is useful to distinguish between what the basic tenets of the religion are and what the adherents actually believe and do. The latter will be called 'folk Buddhism' to distinguish it from the former.

Buddhism began in India in the sixth century B.C. with the birth of Prince Siddhartha Gotama.[2] At an early age Prince Gotama gave up all his wealth and left his wife and family and went out into the woods in search of the cause of suffering in this life. He discovered that human suffering of all kinds was caused by desire or the craving for sensual and other pleasures and that it would cease if one renounced all desires. When one reached the stage at which he had renounced all desires, he would have found enlightenment and would have attained nirvana. Buddha himself reached nirvana and preached to his disciples on how to reach this state. What he preached was called the 'doctrine' or dharma. The Buddhist doctrine began to spread during the lifetime of Buddha and by 600 A.D. had spread throughout most of Asia.

The essential doctrine of Buddhism is that life is full of sorrow caused by desire and that the sorrow can be eliminated by

1. An introduction has been written to this section because of its importance to Lao culture.
2. After he became enlightened, he was called Buddha, 'the enlightened one'.

ceasing to desire. As long as one keeps the desire for sensual pleasures and other satisfactions of life, one will have sorrows, and it will be necessary for him to continue to go through reincarnations until he has eliminated these desires and has achieved the state of nirvana, at which time he will not be reborn again. Since the achievement of nirvana is a personal matter, each individual can and must reach that stage through his own deeds and thoughts; that is, no other person can do this for him. He does, however, have the doctrine as his guide and Buddha as his model. During each life on earth each individual does good and bad deeds. These are called his karma. The form in which one is reborn (whether as a god, an animal, or a person) is a direct consequence of his karma. Observing the following vows, which are the Five Precepts of Buddhism, will help one to attain a good karma: (1) Do not kill; (2) Do not steal; (3) Do not indulge in forbidden sexual pleasure; (4) Do not lie; and (5) Take no intoxicating or stupefying drugs or liquors.

The priests and nuns who make up the monastic order of Buddhism live in the monastery and follow the 227 rules of the order. The function of the Sangha or Order is to provide the best possible place for individual development of the members and to teach the doctrine to the rest of the people. Each monastery is headed by an abbot who is elected by the priests. Life in the temple is strictly regulated. All able-bodied members go out at dawn with their bowls and in silence take the rice that is offered them. They do not usually thank the giver since he earns merit by his alms. They return to the temple and eat the early meal. They may eat again before noon, but they do not eat anything after noon until the following day. They may drink liquids or smoke. They spend most of their day in study, meditation, prayer, or teaching. The priests in Laos wear saffron robes, the nuns white ones. The possessions of priests are limited to 3 robes, a begging bowl, a water strainer, a needle, and a razor. In some cases they are also

allowed to have an umbrella and a pair of sandals. The temple is open to all men over 20 who are healthy. All Lao men are supposed to spend some period of time in the temple, whether it be a matter of a few weeks or a few years. Nuns are usually older women whose husbands have died or younger ones who have been unhappy or unsuccessful in love. In some cases young children who are orphans go to live in the temple at an early age. Priests are required to live in the temple except for certain periods during the dry season when they may be out wandering around the countryside teaching the doctrine.

The Buddhist temple compound is called a wat. It contains a (large) meeting hall, living quarters for priests (and nuns), and a sim or temple building in which the main statue of Buddha and the temple treasures are kept. The sim is where prayer sessions and special ceremonies (such as ordination of priests, etc.) are held. On occasion Buddhist doctrine is explained to the laity in the sim. The morning offering of food (other than rice) by the people to the priests is made in the meeting hall. Classes in Buddhist doctrine may be held in the sim or in some other wat building.

The term 'folk Buddhism' refers to the manner in which Buddhism is understood and practiced by most Laotians. All Laotians know and at least in theory subscribe to the five principles listed above (Do not kill, etc.). They also accept the idea of rebirth and believe that the form in which one is reborn is a direct consequence of his karma. They know about 'the sublime States of Consciousness': karuna 'compassion', metta 'loving kindness', mudita 'sympathetic joy' and upekkha 'equanimity'. They may be only slightly familiar with these terms but they regard highly these virtues.

In actual practice Laotians do break some of the rules of the Buddhist moral code. Proof that they kill is found in the present war in Laos. They likewise eat meat so must kill animals. They also break some of the other rules, such as drinking alcoholic beverages. The belief in the direct causal relationship between

one's karma and one's status in the next life causes the Lao Buddhist to accept his present existence and that of others around him with equanimity. This calm acceptance of life has tended to promote stability. The fact that this in only one of many lives that one will live has caused those persons with power to exercise it circumspectly. A master who mistreats his servants in this life may well find himself as a servant in his next life.

The ritualistic demands of Buddhism are light. Ceremonies may be held in the temple on the eighth and fifteenth days of the waxing and waning moon[1], but attendance is purely a matter of choice. At the temple the believer lights a candle and an incense stick and puts a lotus blossom before the statue of Buddha and bows down three times before it.

Buddhism is the state religion of Laos. It occupies a higher position in the state than any person including the King who is required to uphold the Buddhist faith. Every Lao king has spent some time in a monastery carrying out monastic vows. Every ceremony of any significance is preceded by saying the 'Praise of Buddha'[2] and the 'Refuge formula'[3] three times. All Buddhist holidays are national holidays. Buddhism is taught in all public and private schools. Ceremonies of all kinds are held in the temple compound; in fact, in small towns the temple is the focus of social activity. Members of the National Assembly take the oath of office at Wat Srisaket in Vientiane.

Laotians are aware that Westerners are not Buddhists, and they will not expect you to be one. Your conduct in regard to Buddhism will be completely acceptable to them if you show the pro-

1. Recently there has been an increase in activities in the temples on Sundays in the big cities due to the fact that more people are free on that day.

2. The Praise of Buddha, which is said in Pali, may be translated as: 'Praise to the Blessed One, the Perfect One, the fully Self-Enlightened One!'

3. The Refuge formula is: 'I go to the Buddha for Refuge. I go to the Doctrime for Refuge. I go to the Order for Refuge.'

per respect for it. If you should enter the Sim, you will be expected to take off your hat and shoes. After you enter, you may or may not do as your Lao host does, i.e., make obeisance to the statue of Buddha, etc. You will not be expected to do these things, but your host will generally be pleased if you do.

Although Buddhism may be spoken of as the main religion in Laos, it is not the only type of religion there; in fact, with some Laotians there is more concern with phii 'spirits' than with Buddhism. The spirits live everywhere and directly affect the lives of everybody. A great deal of time and effort is spent in placating them. It may involve putting out food for them, participating in some sort of ritual of appeasement, etc. Most Laotians believe in spirits and Buddhism without any feeling of contradiction. Buddhism is concerned with the present life only in so far as it is the gateway to better (it is hoped) lives to come; whereas, animism (the spirit cult) is concerned only with visible and invisible manifestations of good and evil spirits and their immediate effects.

Buddhism developed in India at a time when Hinduism was the dominant religion. Buddha himself was a Hindu and Buddhism was actually a reforming sect of Hinduism. It has retained many features of Hinduism, such as Rebirth, Liberation, Karma, Dharma, etc. Many of the practices associated with Buddhism are actually from Hinduism, such as Baci, etc. Most of the customs and traditions associated with the monarchy were derived from Hindu tradition.

2.61 ພຣະພຸທສາສນາໃນພຣະຣາຊອານາຈັກລາວ.

ພຣະພຸທສາສນາເກີດຢູ່ໃນປະເທດອິນເດັຽ ເມື່ອ ໒໕໑໔ ກ່ອນ ແລະໄດ້ແຜ່ຜາຍອອກໄປຢູ່ໃນຫລາຍປະເທດເປັນຕົ້ນວ່າ: ປະເທດລັງກາ, ຈີນ, ຍີ່ປຸ່ນ, ພະມ້າ, ຂເມນ, ໄທ, ລາວ, ວຽດນາມ, ແລະອື່ນໆອີກ ພ້ອມທັງຢູ່ໃນປະເທດອິນເດັຽເອງກໍມີ.

ທ່ານກາງການເຊື່ອຖືຜີຟ້າຜີແຖນຕລອດທັງຜີສາງນາງໄມ້ອື່ນໆ, ເມື່ອສັຕວັດທີ ໑໔ ສົມເດັດພຣະເຈົ້າຟ້າງຸ່ມໄດ້ຊົງນຳເອົາພຣະພຸທສາສນາເຂົ້າມາຈາກປະເທດຂເມນ, ພາຍຫລັງທີ່ພຣະອົງໄດ້ຊົງທ້ອນໂຮມປະຊາຊົນລາວທັງຫລາຍໃຫ້ມີຄວາມສາມັກຄີແລະເປັນປຶກແຜ່ນເພັນພາທັງປະເທດ. ແຕ່ນັ້ນມາ ພຣະພຸທສາສນາກໍໄດ້ຖືກຖືເອົາເປັນສາສນາປະຈຳຊາດ. ພຣະເຈົ້າມະຫາຊີວິດລາວທຸກໆອົງກໍໄດ້ຊົງນຳພາປະຊາຣາສດອນລາວ ເຄົາຣົບນັບຖືຂາບໄຫວ້ສັກກາຣະບູຊາແລະທະນຸບຳຣຸງໃຫ້ຮຸ່ງເຮືອງສືບມາເທົ້າທຸກມື້ນີ້.

ເຖິງແມ່ນບາງສມັຍຈະຕ້ອງໄດ້ພົບພໍ້ກັບເຫດການອັນພ້າເສົ້າສລົດໃຈກໍຕາມ, ຊຶ່ງນັ້ນກໍຄືໃນຣະຫວ່າງປີພຸທສັກຣາດ ໒໒ນີກ ພາຍຫລັງການສິ້ນພຣະຊົນຂອງສົມເດັດພຣະເຈົ້າສຸຣິຍະວົງສາ ທາ ພ.ສ. ໒໔໑໖: ພຣະພຸທສາສນາໃນລາວໄດ້ຮັບຄວາມກະທົບກະເທືອນຍ້ອນການລຸກລານຂອງປະເທດເພື່ອນບ້ານຊຶ່ງເຂົ້າມາປຸ້ນສະດົມເອົາພຣະພຸທຮູບອັນມີຄ່າແລະສັກສິດຂອງລາວໄປ; ພ້ອມກັນນັ້ນກໍໄດ້ທຳລາຍວັດວາອາຣາມເປັນຈຳນວນນັບບໍ່ຖ້ວນ. ແຕ່ຍ້ອນວ່າຊາວລາວໄດ້ມອບຊີວິດຈິດໃຈໄວ້ກັບພຣະທັມຄຳສັ່ງສອນຂອງພຸທອົງແລ້ວນີ້ເອງ ພຣະພຸທສາສນາຈຶ່ງໄດ້ຍືນຍົງມາຈົນເທົ້າທຸກວັນນີ້.

ຊາວລາວເຮົາທົ່ວປະເທດພາກັນນັບຖືພຣະພຸທສາສນາກໍເພາະວ່າພຣະພຸທສາສນາສອນໃຫ້ເຮົາຮູ້ວ່າອັນໃດດີອັນໃດຊົ່ວແລະສິ່ງໃດເປັນບຸນສິ່ງໃດເປັນບາບ. ນອກຈາກນີ້ພຣະພຸທສາສນາຍັງສອນໄວ້ອີກວ່າທຳດີໄດ້ດີ ທຳຊົ່ວໄດ້ຊົ່ວ. ແກ່ນພຣະທັມຂອງພຣະພຸທອົງມີຢູ່ວ່າ " ຈົ່ງສ້າງຄວາມດີ, ລະເວັ້ນຈາກການກະທຳຊົ່ວ ແລະຈົ່ງເຮັດໃຫ້ຈິດໃຈບໍຣິສຸດ".

ສ. ໄຊຍະສິທເສນາ

2.62 ພຸທປະວັດ.

ພຣະພຸທເຈົ້າປະສູດໃນມື້ເດືອນຫົກເພັງ, ຄື ມື້ອອກໃໝ່ ໑໕ ຄ່ຳ, ກ່ອນພຸທສັກຣາດ ໘໐ ປີ. ພຣະອົງຊົງເປັນພຣະຣາຊໂອຣົດຂອງພຣະເຈົ້າສຸໂທທະນະກັບພຣະນາງສິຣິມະຫາມາຍາ. ພຣະຣາຊບິດາຂອງພຣະອົງຊົງເປັນກະສັດແຫ່ງນະຄອນກະບິລພັດໃນປະເທດອິນເດັຽ.

ເມື່ອພຣະອົງມີພຣະຊົນມາຍຸໄດ້ ໕ ວັນ ພຣະຣາຊບິດາກໍໄດ້ຊົງຖວາຍພຣະນາມໃຫ້ວ່າ ເຈົ້າຊາຍສິດທັດຖະ ເມື່ອເຖິງວັນຖ້ວນເຈັດພຣະຣາຊມາດາຂອງພຣະອົງກໍສິ້ນພຣະຊົນ. ດັ່ງນັ້ນພຣະເຈົ້າສຸໂທທະນະຜູ້ເປັນອົງພຣະຣາຊບິດາຈຶ່ງໄດ້ຊົງມອບໝາຍໃຫ້ພຣະນາງປະຊາໂຄຕະມີ, ເຊິ່ງເປັນນ້າສາວຂອງເຈົ້າສິດທັດຖະ, ລ້ຽງດູເຈົ້າຊາຍແທນ.

ເມື່ອໃຫຍ່ຂຶ້ນມາ ເຈົ້າຊາຍສິດທັດຖະຊົງມີຄວາມເກັ່ງກ້າສາມາດຮ່ຳຮຽນວິຊາການຣົບແລະການປົກຄອງຈາກສຳນັກຂອງອາຈານວິສວາມິດຈົນສຳເຣັດ.

ເມື່ອພຣະອົງມີພຣະຊົນມາຍຸໄດ້ ໑໖ ພັນສາ ພຣະອົງກໍໄດ້ຊົງສົມຣົດກັບພຣະນາງພິມພາຊຶ່ງເປັນພຣະຣາຊທິດາຂອງເຈົ້າຊີວິດນະຄອນເທວະທະຫະ ຕໍ່ມາກໍຊົງໄດ້ພຣະຣາຊໂອຣົດນຳກັນອົງນຶ່ງ.

ເມື່ອເຈົ້າຊາຍສິດທັດຖະມີພຣະຊົນມາຍຸໄດ້ ໒໙ ພັນສາ ພຣະອົງຊົງຄິດເຫັນວ່າຄົນເຮົາທຸກຄົນເກີດມາແລ້ວຕ້ອງເຖົ້າ, ຕ້ອງແກ່, ຕ້ອງເຈັບໄຂ້ໄດ້ປ່ວຍ ແລ້ວຜົນສຸດທ້າຍກໍຕ້ອງຕາຍເໝືອນກັນທຸກຄົນ. ດັ່ງນັ້ນພຣະອົງຈຶ່ງເກີດຄວາມເບື່ອໜ່າຍ ແລ້ວຈຶ່ງໄດ້ສລະຣາຊສົມບັດບ້ານເມືອງອອກໄປບວດ.

ເມື່ອບວດແລ້ວ ພຣະອົງກໍໄດ້ພາກພຽນພຍາຍາມສຶກສາຮ່ຳຮຽນຫາຄວາມຮູ້ໄປເລື້ອຍໆຈົນໃນທີ່ສຸດພຣະອົງກໍໄດ້ຄົ້ນພົບພຣະທັມອັນວິເສດ ຄື ໄດ້ຊົງຕັສຣູ້ເປັນພຣະພຸທເຈົ້າໃນມື້ອອກໃໝ່ ໑໕ ຄ່ຳ ເດືອນຫົກປີວອກຊຶ່ງເວລານັ້ນພຣະອົງມີພຣະຊົນມາຍຸ ໓໕ ພັນສາ.

ພຣະທັມທີ່ພຣະອົງໄດ້ຕັສຣູ້ຫລືເຫັນນັ້ນຄືອະຣິຍະສັດ ໔ ອັນໄດ້ແກ່ຄວາມຈິງ ໔ ຢ່າງຄື: ທຸກ, ເຫດທີ່ພາໃຫ້ເກີດທຸກ, ຄວາມດັບທຸກ ແລະທາງປະຕິບັດໃຫ້ເຖິງຄວາມດັບທຸກ.

ພຸທປວັດ.(ຕໍ່)

ເມື່ອພຣະອົງໄດ້ຕັສຮູ້ແລ້ວກໍໄດ້ຊົງສະເດັດທ່ຽວສັ່ງສອນປະຊາຊົນພົລເມືອງໃນເຂດແຄ້ວນຕ່າງໆ ຊຶ່ງກໍໄດ້ພາກັນເຫລື້ອມໃສນັບຖືແລະປະຕິບັດຕາມຄໍາສັ່ງສອນຂອງພຣະອົງເປັນຈໍານວນຫລວງຫລາຍ.

ເມື່ອພຣະອົງມີພຣະຊົນມາຍຸໄດ້ ໘໐ ພັນສາພຣະອົງກໍຊົງສະເດັດສູ່ປະຣິນິພານນະເມືອງກຸສິນາຣາ, ໃນມື້ອອກໃໝ່ ໑໕ ຄໍ່າເດືອນຫົກ ຊຶ່ງເປັນວັນທີ່ພຣະອົງຊົງປະສູດແລະຕັສຮູ້ເໝືອນກັນ.

ດັ່ງນັ້ນ, ພຸທສາສນິກະຊົນທັງຫລາຍຈຶ່ງພາກັນນັບຖືວັນນີ້ວ່າ ເປັນວັນສໍາຄັນໃນທາງພຣະພຸທສາສນາ ແລະໄດ້ພາກັນເອີ້ນວ່າ ວັນວິສາຂະບູຊາ. ທຸກໆປີເມື່ອວັນນີ້ວຽນມາເຖິງ, ບັນດາພຸທສາສນິກະຊົນກໍໄດ້ພາກັນເຮັດບຸນໃຫ້ທານ, ຟັງທັມ, ຈໍາສິນ ແລະວຽນທຽນບູຊາຣະລຶກເຖິງພຣະພຸທເຈົ້າເປັນປະເພນີມາຈົນເທົ້າທຸກມື້ນີ້.

ສ. ໄຊຍະສິທເສນາ

ຢາກໄວ ໃຫ້ຄານ ຢາກນານ ໃຫ້ແລ່ນ

ເກົ້າອຶດ ເກົ້າເຍືອນ ທາກສິໄດ້ທ່ອນຄໍາ

2.63 ອະຣິຍະສັດ ໔.

ອະຣິຍະສັດ ໔ ແມ່ນພຣະທັມອັນປະເສີດທີ່ພຣະພຸທເຈົ້າໄດ້ຕັສຣູ້ຫລິງເຫັນ ຊຶ່ງໝາຍຄວາມວ່າ "ຄວາມຈິງ ຫລືສັດຈະອັນປະເສີດ". ອະຣິຍະສັດ ໔ ໄດ້ແກ່: ໑- ທຸກ, ໒- ເຫດໃຫ້ເກີດທຸກ, ໓- ຄວາມດັບທຸກ ແລະ ໔- ທາງປະຕິບັດໃຫ້ເຖິງຄວາມດັບທຸກ, ດັ່ງຈະຂໍຍົກເອົາຄໍາອະທິບາຍມາກ່າວດັ່ງຕໍ່ໄປນີ້:

໑- <u>ທຸກ</u>. ໄດ້ແກ່ຄວາມເກີດ, ຄວາມແກ່, ຄວາມເຈັບ, ຄວາມຕາຍ ຊຶ່ງມີເປັນທັມມະດາຂອງຊີວິດ; ຄວາມໂສກ, ຄວາມອຸກຄວາມອັ່ງໃນໃຈ, ຄວາມບໍ່ສະບາຍກາຍບໍ່ສະບາຍໃຈ, ຄວາມຄັບແຄ້ນເພັ້ນໃຈຊຶ່ງເກີດມີແກ່ຈິດໃຈເປັນບາງຄັ້ງບາງຄາວ; ຄວາມປະສົບພົບພໍ້ກັບສິ່ງທີ່ບໍ່ປະຖນາ, ຄວາມພັດພາກຈາກສິ່ງຂອງຫລືຄົນທີ່ຮັກແພງ ແລະຄວາມຜິດຫວັງຫລືຄວາມບໍ່ໄດ້ຮັບສິ່ງທີ່ໃຈປາຖນາ ເຫລົ່ານີ້ໄດ້ຊື່ວ່າເປັນຄວາມທຸກທາງກາຍແລະທາງໃຈຂອງຊີວິດ.

໒- <u>ເຫດໃຫ້ເກີດທຸກ</u>. ໄດ້ແກ່ຕັນຫາທັງມວນ, ຄວາມດີ້ນຣົນທະເຍີທະຍານຢາກຂອງຈິດໃຈ ຄື ດີ້ນຣົນທະເຍີທະຍານເພື່ອທີ່ຈະໄດ້ສິ່ງທີ່ປາຖນາຢາກໄດ້, ດີ້ນຣົນທະເຍີທະຍານຢາກເປັນນັ້ນເປັນນີ້ ແລະ ດີ້ນຣົນທະເຍີທະຍານບໍ່ຢາກເປັນຫລືຕົກຢູ່ໃນສະພາບຕ່າງໆທີ່ຕົນບໍ່ປາຖນາ ເຫລົ່ານີ້ເປັນຮາກເຫງົ້າແຫ່ງຄວາມທຸກທັງປວງ.

ຕັນຫາພາໃຫ້ເຮົາໜ້າມືດຈົນມອງບໍ່ເຫັນເຫດເຫັນຜົນ; ຕັນຫາເປັນຕົ້ນເຫງົ້າແຫ່ງຄວາມໂລບຄວາມໂກດແລະຄວາມຫລົງ ຊຶ່ງທັງໝົດນີ້ເປັນບ່ອນມາແຫ່ງກອງທຸກທັງມວນ.

໓- <u>ຄວາມດັບທຸກ</u>. ໄດ້ແກ່ການດັບສູນໄປຂອງຕັນຫາອັນພາໃຫ້ເກີດຄວາມດີ້ນຣົນທະເຍີທະຍານຕ່າງໆ ຊຶ່ງກໍ່ໃຫ້ເກີດຄວາມທຸກດັ່ງກ່າວມາໃນຂໍ້ ໒. ຄວາມດັບທຸກໄດ້ແກ່ການຄວບຄຸມກິເລດດ້ວຍອຳນາດຈິດໃຈ ເພື່ອໃຫ້ຄວາມເຫັນແກ່ຕົວລົດໜ້ອຍລົງ, ຄວາມໂລບເບົາບາງລົງ, ຄວາມໂກດແລະຄວາມຫລົງດັບສູນໄປ, ແລ້ວໃຫ້ເກີດຄວາມເຫັນອົກເຫັນໃຈຜູ້ອື່ນ ຕລອດຈົນຄວາມປິຕິຍິນດີ ແລ້ວຜົນສຸດທ້າຍຄວາມສງົບກໍຈະເກີດຂື້ນ.

ອະຣິຍະສັດ ໔.(ຕໍ່)

(໔)- <u>ທາງປະຕິບັດໃຫ້ເກີດຄວາມດັບທຸກ</u>. ໄດ້ແກ່ແນວທາງປະຕິບັດ ໘ ຢ່າງ ຄື:

(໑)- ຄວາມເຫັນຊອບ- ຄື ເຫັນວ່າອະຣິຍະສັດ ໔ ນີ້ມີເຫດຜົນຕາມຄວາມຈິງ.

(໒)- ຄວາມຄິດຊອບ- ໝາຍເຖິງການຄິດອອກຈາກສິ່ງທີ່ຈະນຳໄປສູ່ຄວາມທຸກ, ການຄິດໄປໃນທາງທີ່ບໍ່ພຍາບາດມຸ້ງຮ້າຍ ຫລື ຄິດໄປໃນທາງທີ່ບໍ່ບຽດບຽນ.

(໓)- ວາຈາຊອບ- ຄືເວັ້ນຈາກການເວົ້າຄວາມເທັດ ຫລື ຄວາມຕົວະ, ເວັ້ນຈາກການເວົ້າສໍ່ສຽດສີກັນ ແລະເວັ້ນຈາກການເວົ້າຄວາມຫຍາບຊ້າ.

(໔)- ການກະທຳຊອບ- ຄື ເວັ້ນຈາກການຂ້າ, ການທໍຣະມານ, ການລັກ, ການປະພຶດຜິດໃນທາງກາມ ແລະການກະທຳອື່ນໆອີກທຸກຢ່າງ ອັນຈະນຳມາຊຶ່ງຄວາມທຸກ.

(໕)- ທຳມາຫາກິນໃນທາງຊອບ- ຄື ປະກອບອາຊີບທີ່ຊອບ, ຫາລ້ຽງຊີວິດໃນແນວທາງທີ່ຈະບໍ່ກໍ່ໃຫ້ເກີດຄວາມທຸກດັ່ງກ່າວມາແລ້ວ.

(໖)- ພາກພຽນພຍາຍາມໃນທາງຊອບ- ຄື ຣະວັງບໍ່ໃຫ້ບາບທີ່ຕົນຍັງບໍ່ມີເກີດຂຶ້ນ, ພຍາຍາມລະບາບທີ່ເກີດຂຶ້ນແລ້ວບໍ່ໃຫ້ເກີດຊ້ຳຕື່ມອີກ, ພຽນສ້າງກຸສົນທີ່ຍັງບໍ່ມີໃຫ້ເກີດຂຶ້ນ ແລະພຍາຍາມຮັກສາກຸສົນທີ່ເກີດຂຶ້ນແລ້ວບໍ່ໃຫ້ເສື່ອມ ແຕ່ໃຫ້ຈະເຣີນຍິ່ງໆຂຶ້ນໄປ.

(໗)- ມີສະຕິໃນທາງຊອບ- ຄື ຣະລຶກໄປໃນທີ່ຕັ້ງຂອງສະຕິທັງຫລາຍ. ນັ້ນກໍຄືທີ່ຕັ້ງສະຕິຂອງຜູ່ຈະເຣີນ ຫລືຜູ່ທີ່ມອງເຫັນ ທາດແທ້ຂອງພຣະທັມແລ້ວ.

(໘)- ມີຄວາມຕັ້ງໃຈໃນທາງຊອບ- ຄື ຕັ້ງໃຈຢ່າງແນ່ນອນໃນການກະທຳສິ່ງຕົນເຫັນວ່າເປັນສິ່ງທີ່ຊອບແລ້ວ.

ສ. ໄຊຍະສິທເສນາ

2.64 ຣະບົບການປົກຄອງສົງຢູ່ໃນພຣະຣາຊອານາຈັກລາວ.

ລາຍລະອຽດແບບເວົ້າລັດຕັດຕອນຂອງເຣື່ອງນີ້ ຄັດມາຈາກໜັງສື "ບົດຄວາມຣ່ຳຣຽນ" ຂອງກະຊວງສຶກສາທິການແຫ່ງພຣະຣາຊອານາຈັກລາວ ຊຶ່ງພິມອອກເທື່ອທີນຶ່ງເມື່ອ ພ.ສ. ໒໕໐໔. ຖ້າຫາກທ່ານຜູ້ໃດມີຄວາມສົນໃຈຢາກຊາບລາຍລະອຽດເພີ່ມເຕີມກໍຂໍເຊີນຫາອ່ານຕື່ມອີກຢູ່ໃນໜັງສືດັ່ງກ່າວ.

ວັດວາສາສນາແລະສັງຄະເຈົ້າຕລອດທັງພຣະພຸທຮູບທັງຫລາຍ ຕ່າງກໍເປັນນິ່ງຂວັນຂອງທຸກໆບ້ານຂອງລາວເຮົາ. ເມື່ອສມັຍທີ່ພຣະພຸທເຈົ້າຍັງມີພຣະຊົນຢູ່ນັ້ນດາພິກຂຸທັງຫລາຍຕ່າງກໍລ້ວນແຕ່ເປັນສານຸສິດຂອງພຣະພຸທອົງໂດຍກົງ; ມີໜ້າທີ່ສຶກສາປະຕິບັດແລະເຜີຍແຜ່ພຣະທັມທີ່ພຣະອົງຕຣັສຮູ້ແລ້ວ. ໜ້າທີ່ຂອງພິກຂຸໃນສມັຍນີ້ກໍບໍ່ມີຫຍັງແຕກຕ່າງ ນອກຈາກວ່າພິກຂຸໃນສມັຍເຮົານີ້ອາດຈະຕ້ອງຕໍ່ສູ້ກັບການຄວບຄຸມກິເລດຕັນຫາໜັກຍິ່ງກວ່າສມັຍພຣະພຸທເຈົ້າ; ທັງນີ້ກໍຍ້ອນຄວາມຈະເຣີນທາງດ້ານວັດຖຸຂອງໂລກສມັຍໃໝ່, ຊຶ່ງຄອຍຊັກຈ່ອງແລະຍົວະເຍົ້າໃຫ້ຈິດໃຈຂອງຄົນເຮົາເກີດຄວາມທະເຍີທະຍານຢາກຫລາຍຍິ່ງຂຶ້ນ.

ດັ່ງນັ້ນເພິ່ນຈຶ່ງໄດ້ມີຣະບຽບປົກຄອງໂດຍສະເພາະທາງຂອງສົງແລະສາມະເນນຂຶ້ນ ຄື ເມື່ອປີ ໑໙໕໙ ໄດ້ມີພຣະຣາຊໂອງການເລກທີ ໑໖໐ ລົງວັນທີ ໒໕ ພຶສພາ ຊຶ່ງມີໃຈຄວາມວ່າ: ທຸກໆວັດຕ້ອງມີເຈົ້າອະທິການວັດປົກຄອງ ໂດຍພຣະພິກຂຸແລະສາມະເນນຢູ່ໃນວັດນັ້ນຕ້ອງຢູ່ພາຍໃຕ້ການປົກຄອງຂອງເພິ່ນ.

ເຈົ້າອະທິການວັດໃນເຂດຕາແສງນຶ່ງຢູ່ພາຍໃຕ້ອຳນາດການປົກຄອງຂອງເຈົ້າຄນະຕາແສງອົງນຶ່ງ ຊຶ່ງມີສຳນັກຢູ່ໃນວັດນຶ່ງພາຍໃນເຂດຕາແສງນັ້ນ.

ເຈົ້າຄນະຕາແສງທັງໝົດໃນເຂດເມືອງນຶ່ງຢູ່ພາຍໃຕ້ການປົກຄອງຂອງເຈົ້າຄນະເມືອງ ຊຶ່ງມີສຳນັກຢູ່ໃນວັດໃດວັດນຶ່ງໃນເມືອງທີ່ມີໂຮງການຂອງເຈົ້າເມືອງ.

ເຈົ້າຄນະເມືອງທັງຫລາຍໃນແຂວງນຶ່ງຂຶ້ນກັບອຳນາດການປົກຄອງຂອງເຈົ້າຄນະແຂວງຊຶ່ງມີສຳນັກຢູ່ໃນວັດໃດວັດນຶ່ງຢູ່ໃນເມືອງທີ່ມີໂຮງການເຈົ້າແຂວງ.

ຣະບົບການປົກຄອງສົງຢູ່ໃນພຣະຣາຊອານາຈັກລາວ.(ຕໍ່)

ແລະເຈົ້າຄນະແຂວງທັງຫລາຍໃນປະເທດລາວຂຶ້ນກັບອຳນາດການປົກຄອງຂອງພຣະສັງຄະຣາດອົງນຶ່ງຊຶ່ງມີສຳນັກຢູ່ໃນວັດໃດວັດນຶ່ງຂອງນະຄອນຫລວງຂອງປະເທດລາວ.

ພຣະພິກຂຸແລະສາມະເນນທຸກຕົນຕ້ອງປະຕິບັດຕາມພຣະທັມວິນັຍແລະລະບຽບສົງ ທັງໃຫ້ສູດພຸທວະຈະນະ (ຄື: ພຣະທັມຄຳສັ່ງສອນຂອງພຣະພຸທເຈົ້າ) ແລະໃຫ້ຊ່ອຍໜ້າທີ່ການຂອງເຈົ້າອະທິການວັດ ຄື: ກຳກັບນຳໂຮງຮຽນວັດ; ໃຫ້ເດັກຢູ່ຕາມດ້ອມແອ້ມວັດມາສຶກສາຮ່ຳຮຽນໜັງສືລາວແລະວິຊາຕ່າງໆ ເຊັ່ນ: ເລກແລະພົງສາວະດານ ເປັນຕົ້ນ; ເບິ່ງແຍງຄວາມເປັນຣະບຽບຮຽບຮ້ອຍຂອງພຣະພິກຂຸສົງສາມະເນນ ຕລອດທັງຂອງນັກຮຽນວັດແລະຍາດໂຍມທີ່ມາພັກເຊົາໃນວັດຂອງຕົນ; ເບິ່ງແຍງຄວາມສະອາດ, ນ້ຽນມັດ, ຮັກສາແລະປະຕິສັງຂອນຊັບສິ່ງຂອງອື່ນໆທີ່ເປັນສົມບັດຂອງວັດ.

ສ. ໄຊຍະສິທເສນາ

ສິບຕຳລຶງຢູ່ພ່າກນ້ຳ ຢ່າໄດ້ອາວຄະນຶງຫາ
ສອງສລຶງແຜ່ນມານີ້ ໃຫ້ເຈົ້າກຳເອົາໄວ້

2.65 ວັດວາອາຣາມ.

ທຸກໆບ້ານຢູ່ໃນປະເທດລາວ ຢ່າງນ້ອຍຈະຕ້ອງມີວັດໜຶ່ງ. ວັດເປັນບ່ອນຢູ່ຂອງພຣະພິກຂຸແລະສາມະເນນ; ເປັນບ່ອນແຜ່ຜາຍພຣະທັມຄຳສັ່ງສອນຂອງພຣະພຸທເຈົ້າ ແລະເປັນບ່ອນປະກອບພິທີຕ່າງໆທາງສາສນາ, ເປັນຕົ້ນວ່າ ການເຮັດບຸນປະຈຳປີແລະບຸນອື່ນໆ; ວັດເປັນບ່ອນສຶກສາຣ່ຳຣຽນຂອງຜູ່ໃຫຍ່ແລະເດັກນ້ອຍຢູ່ຕາມຫລາຍແຫ່ງ. ໃນສມັຍກອນ ວັດຍັງເປັນບ່ອນຫລົບລີ້ໄພຫລືເຫດຮ້າຍຕ່າງໆອີກ ເຊັ່ນເມື່ອມີຂະໂມຍຫລືໂຈນເຂົ້າບ້ານ, ກໍຈະມີຄົນໄປບອກເຈົ້າຫົວຢູ່ວັດ ແລ້ວເພິ່ນຈະຕີກອງທ້ອງຂຶ້ນ ພວກຜູ່ຍ່າຜູ່ຍິງແລະຜູ່ເລັກເດັກແດງກໍຈະເອົາກັນໄປອາສັຍຢູ່ໃນວັດ, ສ່ວນຜູ່ຊາຍຈະພາກັນຈັບອາວຸດແຍກຍ້າຍກັນໄປເຝົ້າຍາມແລະອອກຄົ້ນຫາໂຈນທີ່ເຂົ້າມາໃນບ້ານ; ຫລືເມື່ອເກີດໄຟໄໝ້ເຮືອນ ສຽງກອງທ້ອງກໍຈະເປັນສັນຍານເຕືອນໃຫ້ຊາວບ້ານໄປຊ່ວຍກັນມອດໄຟ, ດັ່ງນີ້ເປັນຕົ້ນ. ໃນສມັຍນີ້ ວັດກໍຍິ່ງມີຄວາມສຳຄັນຫລາຍຍິ່ງຂຶ້ນ ຍ້ອນວ່າສີລທັມຂອງສັງຄົມມະນຸດເຮົານັບມື້ນັບເຊື່ອມໂຊມລົງ. ວັດມີບົດບາດໃນການຊ່ວຍບໍ່ໃຫ້ຈິດໃຈຂອງຄົນເຮົາຕ່ຳຊາມລົງໄປຈົນເທົ່າທຽມກັບສັດເດັຽຣະສານ.

ຢູ່ໃນບໍຣິເວນວັດມີ:

ສິມຊຶ່ງເປັນບ່ອນສະຖິດຂອງພຣະພຸທຮູບໃຫຍ່ແລະເປັນບ່ອນໄຫວ້ພຣະສູດມົນ.

ຫໍແຈກ ຫລືອາຣາມ ເປັນບ່ອນທີ່ພຸທບໍຣິສັດທັງຫລາຍຮັບສິນແລະຟັງທັມມະເທສນາຕລອດທັງແຈກເຄື່ອງສັງຄະທານອື່ນໆ.

ກຸຕິ ຫລືກະຕິ ເປັນບ່ອນຢູ່ບ່ອນນອນຂອງພຣະພິກຂຸແລະສາມະເນນ.

ບາງວັດມີໂຮງຮຽນເປັນພິເສດອີກຫລັງໜຶ່ງ ຫລືບາງວັດກໍໃຊ້ຫໍແຈກເປັນບ່ອນສິດສອນກັນ. ທຸກວັດມີເດີ່ນກວ້າງແລະຮົ່ມດີດ້ວຍຕົ້ນໄມ້ແລະຕົ້ນຫມາກໄມ້ຫລາຍຊະນິດ.

ບາງວັດກໍມີທາດໃຫຍ່ແລະນ້ອຍຢູ່ຕາມແຄມຮົ້ວຫລືກຳແພງວັດ. ທາດເຫລົ່ານັ້ນບັນຈຸພົ້ກະດູກຂອງຄົນຕາຍແລະລາງເທື່ອກໍມີຊັບສິນບັດເລັກນ້ອຍຢູ່ໃນນັ້ນນຳດ້ວຍ.

ວັດວາອາຣາມ.(ຕໍ່)

ທຸກໆວັດມີນ້ຳສ້າງຊຶ່ງເປັນບ່ອນຕັກນ້ຳກິນແລະໃຊ້ສຳລັບວັດເອງແລະຊາວບ້ານໃກ້ຄຽງ. ຢູ່ວັດສ່ວນມາກມີຕົ້ນໂພ ຢ່າງນ້ອຍນຶ່ງຕົ້ນ ເພາະຖືວ່າເປັນຕົ້ນໄມ້ທີ່ສັກສິດຍ້ອນວ່າພຣະພຸທເຈົ້າໄດ້ຕັສຣູ້ຢູ່ພາຍໃຕ້ຮົ່ມຕົ້ນໂພ. ທຸກໆວັດມີກອງໃຫຍ່ຊຶ່ງເອີ້ນວ່າກອງເພນ. ບາງວັດກໍ່ມີຫໍກອງຕ່າງຫາກ ແລະບາງວັດກໍ່ເອົາແຂວນໄວ້ໃນກຸຕິຫລັງໃດຫລັງນຶ່ງ. ນອກຈາກຕີເພນແລ້ວເພິ່ນຍັງຕີກອງແລງແລະກອງເດິກໃນຍາມວັນສິນແລະໃນໂອກາດບຸນຕ່າງໆ ຕລອດທັງຍາມມີເຫດຮ້າຍເກີດຂຶ້ນດັ່ງທີ່ກ່າວມາແລ້ວ. ທຸກໆວັດມີຄ້ອງໃຫຍ່ແລະນ້ອຍ ເພື່ອໃຊ້ປ່າວເຕືອນໃນໂອກາດຕ່າງໆ ຫລືຕີສລັບກອງໃນຍາມວັນສິນ. ນອກຈາກນີ້ບາງວັດຍັງມີໂປງຫລືເກາະລໍຊຶ່ງໃຊ້ທັງໃນຕອນເຊົ້າກ່ອນເວລາພຣະສົງໄປບິນທະບາດ ແລະຕອນແລງກ່ອນເຂົ້າສູດມົນໄຫວ້ພຣະ.

ວັດຢູ່ໃນປະເທດລາວໄດ້ຮັບຄວາມອຸປຖັມຄ້ຳຊູຈາກຊາວບ້ານ ແລະພຸທສາສນິກະຊົນທັງຫລາຍທີ່ໄດ້ເສັຽສລະກຳລັງກາຍແລະກຳລັງຊັບ ຕລອດກຳລັງຄວາມຄິດ ເພື່ອເປັນການສ້າງກຸສົນຜົນບຸນໃຫ້ແກ່ຕົນແລະພີ່ນ້ອງວົງວານ ທັງຊາດນີ້ແລະຊາດໜ້າຕໍ່ໆໄປ.

ສ. ໄຊຍະສິທເສນາ

ຂອງກິນ ບໍ່ກິນມັນເໝົ້າ
ຂອງເກົ່າ ບໍ່ເລົ່າມັນລືມ

MODULE 3: ARTISTIC EXPRESSION

3.0 Introduction

Buddhist writings constitute a large part of all of Lao literature. Included in them are the canonical (the scriptures) and the extracanonical writings (writings related to the scriptures). The major canonical writing is called the Tripitaka and consists of (a) the Sutra (sermons of Buddha), (b) the Vinaya (rules for monastic discipline), and (c) the Abhidharma (the dogmatics). In addition to the Tripitaka there is the Jatakam which is a collection of tales relating to reincarnations of Buddha Gautama. Extracanonical writings are largely Laotian versions of stories about saints and gods, and draw on Hindu, Brahmanic, as well as Buddhist sources.

Secular writing has been strongly influenced by religious writings and has also drawn heavily upon Buddhist and Indic sources. The Indian epic Ramayana and the Panchatantra in particular have provided source material for Lao stories and fables.

In discussing Lao literature and the religious literature in particular it should be made clear that it is read by only a very small percentage of the population. The Tripitaka was originally written in Pali (a Middle Indian language related to Sanskrit) and was later transcribed into a special type of Lao writing called tham. Since only Buddhist priests or laymen who have spent some years in the temple can read tham (which resembles the Burmese script somewhat), the readers of these documents probably number in the thousands. The Jatakam was also written in tham. About ten years ago one section of the Jatakam (actually one reincarnation of Buddha) was printed in Laos. The text of the story is explained in Laotian. It is difficult reading even for educated Laos.

To say that most Laotians haven't (and probably can't) read any of the literature referred to above is not to say that it isn't part of their cultural heritage, as it is. There has always been a strong tradition for the oral transmission of literature in

Laos. Most Laotians have heard parts of the Tripitaka read and explained to them by Buddhist priests, and they have heard tales, fables, stories, etc. from the other works from their parents, story tellers, or others.

Lao classical music and dance borrowed heavily from the Indic. Episodes from the Ramayana form the plot of most music dramas. The costumes are Indic in origin. The dance movements are very stylized and highly symbolic. It is mainly supported by the King, and performances are usually given in Vientiane or other large cities.

Lao folk music is an essential part of the life of the Lao people. It forms an integral part of all festivals and ceremonies. The musical instruments and the melodies are native Lao. The instruments are the khuy (flute), so (violin), nangnat (xylophone), khong vong (gongs), and the khene. The khene is the instrument most closely associated with Laos. It is made by attaching from 4 to 16 medium-sized bamboo canes of different length together. When it is blown, the music resembles a harmonium or organ.

Although there are highly skilled musicians, there are no professionals. Aspiring musicians go and study under the masters. There is no system of musical notation, so learning is done through memorization and practice.

Folk dancing is closely related to folk music. The most common folk dance is the lamvong. The lamvong is a type of dance in which couples dance around each other without any bodily contact.

One of the most popular types of entertainment in Laos is the mohlam. There are four types: mohlam luang, mohlam khu, mohlam chote, and mohlam dio. The mohlam luang is a musical drama or opera. There are several performers, sometimes in costume, who sing or talk alternately the parts in a story. They may perform on a stage or in front of a painted backdrop. In the mohlam khu a

man and a woman carry out a courtship ritual, in which clever use of repartee plays a major role. In the mohlam chote two people of the same sex issue various kinds of challenges to each other (such as asking for the answer to a question, or requiring someone to finish an unfinished story, etc.) which are responded to, then the roles shift, and the game continues. Each tries to outdo the other. In mohlam dio there is only one performer, who sings or narrates. The subject of the performance is not restricted. It may be morality, politics, religion, communism, etc. The mohlam is frequently used by the government to get certain kinds of information to the people, since it will always draw a good audience. The language used in all types of mohlam is highly informal, colloquial. Earthy language is expected and invariably brings a cheer when it is used. There is a great deal of play on words. The richness of the Lao vocabulary is nowhere more evident than in the mohlam. It is invariably accompanied by the music of the khene.

Craftsmanship has developed to a high level in Laos, particularly in the production of an infinite variety of objects for household and farm use. However, luxury items of good quality, such as silver bowls, golden belts, wood and ivory carvings, etc. are also made. Weaving is probably the most highly developed craft in Laos. It is practiced (almost exclusively by women) in every household. Gold and silver threads are woven into cotton or silk articles (dresses, scarves, etc.) of frequently complex design with exceptionally beautiful results.

3.10 ວັນນະຄະດີລາວ.

ຄົນຊາດລາວເປັນຊາດເກົ່າແກ່ແລະເປັນຊາດໃຫຍ່ ມີຄົນຫລາຍມາຕັ້ງແຕ່ບູຮານຫລາຍພັນປີ, ພາສາລາວຈຶ່ງເປັນພາສາເກົ່າແກ່ພາສານຶ່ງໃນໂລກ. ພາສາລາວແທ້ແຕ່ດັ້ງເດີມນັ້ນເປັນພາສາໂທນ ຄືເປັນຄຳມີພຍາງດຽວ ຄ້າຍຄືກັນກັບພາສາຈີນ. ພາຍລຸນມາ ເມື່ອເຮົາໄດ້ຮັບເອົາວັທນະທັມຂອງຊາວອິນເດັຽມາໃຊ້ໂດຍທາງພຸທສາສນາ ພາສາປາລີແລະສັນສະກິຣິດ ຈຶ່ງເຂົ້າມາປົນຢູ່ໃນພາສາລາວເປັນອັນມາກ, ແລະໄດ້ເປັນພາສາຂອງເຮົາຕໍ່ມາຈົນເຖິງທຸກວັນນີ້. ຖ້າພິຈາຣະນາເບິ່ງຢ່າງຖ້ວນຖີ່ແລ້ວ ກໍຈະເຫັນວ່າເຮົາເອົາພາສາປາລີແລະສັນສະກຣິດມາໃຊ້ເປັນພາສາຂອງເຮົາເກືອບເຖິງ ໕໐%.

ບັດນີ້ເຮົາລອງພິຈາຣະນາເບິ່ງວ່າຕົວອັກສອນລາວເຮົາທຸກວັນນີ້ໄດ້ຕົວຢ່າງມາຈາກໃສ? ພົງສາວະດານລາວໄດ້ກ່າວໄວ້ວ່າໃນຣະຫວ່າງປີ ພ.ສ. ໖໐໐ ເສດ ພຣະເຈົ້າແຜ່ນດິນຈີນຜູ້ມີນາມວ່າ ມີ້ງຕີ່ ໄດ້ແຕ່ງທູດອອກໄປນຳເອົາພຣະພຸທສາສນາມາຈາກອິນເດັຽ. ສມັຍນັ້ນລາວເຮົາຕັ້ງບ້ານເມືອງຢູ່ໃນເຂດພອງກະແສ ອັນເປັນມົນທົນຢູນານຂອງຈີນທຸກວັນນີ້ ພຣະເຈົ້າແຜ່ນດິນລາວຄັ້ງນັ້ນ ຊື່ຂຸນຫລວງລີເມົາ ພຣະອົງໄດ້ຊົງຮັບນັບຖືພຣະພຸທສາສນາທີ່ພຣະມະຫາກະສັດຈີນໄດ້ນຳມາແຜ່ພາຍໃນຄາວນັ້ນດ້ວຍ.

ພຣະພຸທສາສນາທີ່ຈີນນຳມາຄາວນັ້ນ ແມ່ນຣັດທິມະຫາຍານ ດັ່ງນັ້ນໃນເມື່ອຄົນຊາດລາວໄດ້ນັບຖືພຣະພຸທສາສນາຣັດທິມະຫາຍານກ່ອນ ແລະດ້ວຍເຫດວ່າຣັດທິມະຫາຍານໃຊ້ຕົວສັນສະກຣິດ ເຮົາຄົງໄດ້ດັດແປງເອົາຕົວສັນສະກຣິດມາເປັນຕົວລາວ ດັ່ງເຮົາຈະເຫັນໄດ້ຈາກໃຊ້ຕົວທ້ອຍຫລືຕົວເຟືອງ. ຕໍ່ມາເມື່ອເຮົາອົພຍົບລົງມາຢູ່ໃກ້ພວກມອນແລະພະມ້າ ພວກເຮົາຈຶ່ງໄດ້ເລີ້ມນັບຖືພຣະພຸທສາສນາຣັດທິຫີນະຍານ ທີ່ພວກມອນນຳມາຈາກປະເທດລັງກາ. ເຮົາໄດ້ເອົາຕົວພົງສີແບບມອນແລະພະມ້າມາໃຊ້ຈາຣຶກພຣະທັມຄຳສັ່ງສອນແລ້ວຮຽກຕົວພົງສີນີ້ວ່າຕົວທັມ ເພາະໃຊ້ສຳລັບຂຽນພຣະທັມຄຳສັ່ງສອນທໍ່ນັ້ນ. ສ່ວນຕົວພົງສີດັ້ງເດີມຂອງເຮົານັ້ນຮຽກວ່າຕົວລາວໃຊ້ສຳລັບບັນທຶກເຫດການບ້ານເມືອງຕລອດມາ. ດ້ວຍເຫດນີ້ ຕົວອັກສອນທີ່ໃຊ້ຢູ່ໃນໝູ່ປະຊາຊົນລາວຈຶ່ງມີມາສອງແບບ ຄື: ຕົວລາວ ແລະຕົວທັມ.

ວັນນະຄະດີລາວ.(ຕໍ່)

ຕໍ່ມາ ເມື່ອປີ ຄ.ສ. ໑໙໔໙ ພຣະບາດສົມເດັດພຣະເຈົ້າມະຫາຊີວິດ ສຣີສວ່າງວົງ ຈຶ່ງໄດ້ຊົງມີພຣະຣາຊໂອງການເລກທີ ໑໐ ລົງວັນທີ ໑໗ ມົກກະຣາກຳໜົດການສະກົດຄຳໃນພາສາລາວໄວ້ ໂດຍໃຫ້ຂຽນຕາມສຽງເວົ້າໃນພາສາລາວ ຊຶ່ງພຣະຣາຊໂອງການດັ່ງກ່າວໄດ້ເປັນຜົນໃຫ້ມີການຈັດຕັ້ງຄນະກັມມະການວັນນະຄະດີລາວຄນະນຶ່ງຂື້ນເມື່ອ ຄ.ສ. ໑໙໕໐.

ຕໍ່ມາເມື່ອ ພ.ສ. ໒໕໐໔, ຄ.ສ. ໑໙໖໑ ມະຫາສີລາ ວີຣະວົງ ຈຶ່ງໄດ້ສຳເຣັດຮຽບຮຽງວັຈນານຸກົມລາວ ແລະໜັງສືໄວຍະກອນ ໔ ພາກ ຄື: ໑. ອັກຂຣະວິທີ ໒. ວະຈີວິພາກ ໓. ວາກຍະສັມພັນ ແລະ ໔. ສັນທະລັກສນະ. ໜັງສືເຫລົ່ານີ້ໄດ້ພິມອອກແຜ່ພາຍໂດຍກະຊວງສຶກສາທິການແຫ່ງພຣະຣາຊອານາຈັກລາວ. ນັບວ່າໜັງສືດັ່ງກ່າວເປັນຫລັກເກນອັນທຳອິດໃນປະວັດສາດຂອງການຂຽນຕົວໜັງສືລາວ. ສ່ວນຕົວໜັງສືທັມນັ້ນກໍຍັງມີການສຶກສາຮ່ຳຮຽນກັນຢູ່ໂຮງຮຽນອະພິທັມ.

ເມື່ອສົມມຸດຖານວ່າ ຕົວອັກສອນລາວຄົງມີມາແລ້ວແຕ່ລະຫວ່າງ ພ.ສ. ໖໐໐ ປາຍດັ່ງນີ້ ວັນນະຄະດີຂອງລາວກໍຄົງມີມາແລ້ວແຕ່ເຫິງນານດັ່ງດຽວກັນ.

ຕາມທັມມະດາ ວັນນະຄະດີເກີດຂື້ນຍ້ອນອາຣົມມ່ວນ ຫລືໂສກເສົ້າເຫງົາໃຈ ເປັນສ່ວນສຳຄັນ. ຄົນລາວເຮົາຕັ້ງແຕ່ໃດມາເປັນຄົນນິຍົມຊົມຊອບໃນວັນນະຄະດີເກືອບໝົດທຸກຫົວຕົວຄົນ. ເຣື່ອງນີ້ເຮົາຈະເຫັນໄດ້ຈາກຄຳຜຍາຕ່າງໆທີ່ພວກບ່າວສາວເວົ້າຕອບກັນ. ຄຳຜຍານີ້ແຫລະ ເປັນວັນນະຄະດີຊັ້ນຕົ້ນຂອງເຮົາຕໍ່ມາຈຶ່ງມີຄຳກາບ ຄຳກອນ ໂຄງສານອື່ນໆ ຕາມລຳດັບ.

ຕໍ່ໄປນີ້ຂ້າພະເຈົ້າຈະຂໍຄັດເອົາ ຄຳຜຍາແລະກາບກອນ ໂຄງສານມາຂຽນລົງພໍໃຫ້ຜູ້ອ່ານຊາບຈັກເລັກນ້ອຍວ່າມັນມີຄວາມແຕກຕ່າງກັນຢ່າງໃດ.

<u>ຜຍາ</u>: ຄຳວ່າ "ຜຍາ" ແປວ່າ ຄວາມຮູ້, ຄວາມສລາດຫລັກແຫລມ. ຄຳກອນຜຍາ ສ່ວນຫລາຍເປັນ

ວັນນະຄະດີລາວ.(ຕໍ່)

ຄຳທີ່ບ່າວສາວຄິດຂຶ້ນເວົ້າໃສ່ກັນໃນທັນທີທັນໃດ ແລະເປັນຄຳເວົ້າປຽບທຽບອັນມີຫລ່ຽມຄົມແລະໜ້າອອນ ຊອນດັ່ງນີ້:

<u>ຊາຍ:</u>
ທາງພີ່ສ້າງ ຂົວແປ້ນ ນ້ອງບໍ່ນຳ ສານໍ
ທາງພີ່ສ້າງ ຂົວຄຳ ນ້ອງບໍ່ໄຕ່
ບາດຜູ່ບ່າວ ໄທໄກ ສ້າງແຕ່ຂົວໄມ້ອໍ້
ມີແຕ່ຕໍ່ໄມ້ແຕ້ ເປັນສ້ຽນ ຊິ່ຄອຍຄານ ຊັ້ນບໍ?
ເຈົ້າຜູ່ຫາກພີ່ພອນ ມັນຫາກສຸກຟາກມາ
ເຈົ້າຜູ່ຫາກພີ່ລາ ມັນຫາກສຸກຟາກນ້ຳ ກ້ານກ່ອງສເນ່ຫາ
ບາດວ່າກາກິນແລ້ວ ບິນໜີ້ຮອຍຫູ່
ເຈົ້າຫາກມີພື້ນຊູ້ ຕາຂ້ອຍບໍ່ເຫັນດອກນາ.

<u>ຍິງ:</u>
ນ້ອງນີ້ ປອດລ້ອຍຊ້ອຍ ສເນີ້ອອຍກາງກໍ
ກາຍບໍ່ທໍ່ ພໍ່ນ້ອຍ ກໍບໍ່ຊອນ
ຊູ້ຊີ້ຊອນ ຜົວແອ້ນ ກໍບໍ່ມີ.

<u>ຊາຍ:</u>
ວ່າບໍ່ມີສອງຊ້ອນ ຂົນຄິ້ວນ້ອງສັງມາລາ
ວ່າບໍ່ມີສອງຊ້ອນ ຂົນຕານ້ອງສັງມາຫຍໍ່
ຫລື ນາງໃຫ້ຕໍ່ຊູ້ ແຄນຮົ້ວປ່າພາກເຍົາ.

<u>ຍິງ:</u>
ເຈົ້າຜູ່ຜູ່ເຫລືອຄ້າງ ອິດບີປັ້ນນ້ອງແດ່
ນ້ອງນີ້ມີແຕ່ຄ້າງ ເຄືອຊີ້ກຽວກໍບໍ່ມີ.

ວັນນະຄະດີລາວ.(ຕໍ່)

<u>ຊາຍ:</u> ວ່າບໍ່ມີເຄືອກ້ຽວ ສັງມາເປັນຍາບ່າງ
ວ່າໃຕ້ລາງໆບໍ່ກວາງ ສັງມາໄດ້ແຫລ່ງຄວາຍ.

<u>ຍິງ:</u> ນ້ອງນີ້ເປັນດັ່ງຈອກຢູ່ນໍ້າ ຮາກຢັ່ງບໍ່ເຖິງດິນ
ໄຫລເອີນໄປເອີນມາ ໂລດບໍ່ມີເຟືອຍຄ້າງ
ອ້າຍພີ່ ອິດພໍເປັນກໍໄຄ້ ໄຫລມາໃຫ້ຄ້າງແດ່
ອັນນີ້ ມີແຕ່ໄຫລຢູ່ເລື້ອຍ ຊິໄປຄ້າງບ່ອນຈັ່ງໃດ.

ຢູ່ຕາມບ່ອນຊຸມນຸມຫລືບ່ອນມ່ວນຊື່ນກັນ ເມື່ອໄດ້ໂອກາດພວກບ່າວສາວຈະຈ່າຍຜຍາໃສ່ກັນໃນທຳນອງດັ່ງກ່າວ ຈົນລາງເທື່ອຝ່າຍນຶ່ງໝົດຄວາມສາມາດທີ່ຈະຄິດຫາຄຳຜຍາມາຈ່າຍຕອບ ກໍຈຶ່ງຕ້ອງຍອມພ່າຍແພ້ ສ່ວນຜູ້ຊະນະກໍຖືກຍ້ອງຍໍວ່າ ມີຄວາມສລາດແລະຈ່າຍຜຍາເກັ່ງ.

<u>ກອນລຳ:</u> ແມ່ນຄຳກອນທີ່ຈະລຳໃສ່ແຄນ, ຄວາມຈິງຄຳກອນລາວເກືອບທຸກປະເພດໃຊ້ລຳໃສ່ແຄນໄດ້ທັງມ່ວນ. ລັກສນະຂອງກອນລຳມີສອງຢ່າງຄືກອນຕັດແລະກອນເຍີ້ນ.

ກ. <u>ກອນຕັດ:</u> ມີຈັ່ງຫວະໄວກວ່າກອນເຍີ້ນເປັນຕົ້ນ ລຳເດີນດົງ, ລຳກ້ຽວ...

ຂ. <u>ກອນເຍີ້ນ:</u> ມີຈັ່ງຫວະຊ້າແລະມີການຫລິ້ນສຽງ. ເປັນຕົ້ນລຳລ່ອງຂອງ, ລຳເຣື້ອງ...

ການຂັບລຳນີ້ມີຄວາມແຕກຕ່າງກັນໄປຕາມທ້ອງຖິ່ນ ແຕ່ທຸກໆການຂັບລຳຈະສັງເກດໄດ້ຈາກການມີແຄນສລັບ.

ນອກຈາກນີ້ຍັງມີກອນອ່ານແລະກອນຮ່າຍສຳລັບໂອກາດຕ່າງໆ. ຍ້ອນຄວາມຈຳກັດໃນໜ້າເຈ້ຽແລະເວລາຜູ້ຂຽນຈຶ່ງຂໍຍຸຕິໄວ້ພຽງເທົ່ານັ້ນ. ຖ້າຫາກຜູ້ອ່ານເສິນໃຈກໍຂໍເຊີນຕິດຕໍ່ກັບກົມວັນນະຄະດີລາວໄດ້ທຸກໂອກາດ.

ຮຽບຮຽງໂດຍ

ສ. ໄຊຍະສິທເສນາ

ວັນນະຄະດີລາວ.(ຕໍ່)

ໜັງສືວັນນະຄະດີລາວທີ່ເຫັນນາມຜູ້ແຕ່ງຈິງມີຢູ່ແຕ່ ໗ ເຣື້ອງຄື:

(໑)- ເຣື້ອງສັງສິນໄຊ ແຕ່ງໂດຍທ້າວຄຳປາງ.

(໒)- ເຣື້ອງກາບປູ່ສອນຫລານ ແຕ່ງໂດຍເພັຽແກ້ວດວງຕາ ຢູ່ເມືອງລ້ານຊ້າງ (ວຽງຈັນ).

(໓)- ເຣື້ອງພຍາປັດເສນຖານເຫດ (ທຳນາຍຄວາມຝັນ ໑໖ ຂໍ້) ແຕ່ງໂດຍເພັຽຣາຊມາດ.

(໔)- ເຣື້ອງອິນທິຍານສອນລູກ ແຕ່ງໂດຍນັກປາດ ອິນທິຍານ.

(໕)- ເຣື້ອງນິທານປັນຈະຕັນຕະ ຫລືປະກອນທັງ ໔ ແຕ່ງໂດຍ ສົມເດັດພຣະມະຫາຣາຊຄູວິຊຸລມະຫາວິຫາຣາທິບໍດີ ຢູ່ຫລວງພຣະບາງ ໃນສມັຍພຣະເຈົ້າວິຊຸລຣາດ.

(໖)- ຕຳນານ ພຣະແກ້ວມໍຣະກົດ, ຕຳນານພຣະແຊກຄຳ ແລະຕຳນານພຣະບາງ ແຕ່ງໂດຍ ພຣະອະຣິຍະວັງໂສ ຢູ່ວຽງຈັນ ໃນຣັຊການຂອງສົມເດັດພຣະເຈົ້າໄຊຍະເສດຖາທິຣາດ ໃນປີ ຄ.ສ. ໑໕໖໗.

(໗)- ແລະນິທານ ຂຸນບູຣົມຣາຊທິຣາດ ແຕ່ງໂດຍສອງທ່ານຄື ພຣະມະຫາເທພເຖມ, ພຣະທັມມະເສນາ ຢູ່ວັດວິຊຸລມະຫາວິຫານ ແລະພຣະມະຫາມຸງຄຸລສິດທິ ຢູ່ຫລວງພຣະບາງ ໃນສມັຍຂອງພຣະເຈົ້າວິຊຸລມະຫາວິຫານ ເມື່ອປີ ຄ.ສ. ໑໕໑໓.

ໜັງສືວັນນະຄະດີລາວເຣື້ອງນຶ່ງທີ່ຍັງບໍ່ຊາບຊື່ຂອງຜູ້ແຕ່ງ ຄື ເຣື້ອງສຽວສວາດທັມມິກະບັນດິດ ຊຶ່ງຂຽນເປັນຄຳເວົ້າທັມມະດາແລະເຂົ້າໃຈງ່າຍ. ຜູ້ແຕ່ງໄດ້ຍົກເອົາຄຳສຸພາສິດຂຶ້ນມາ ແລ້ວຫານິທານມາປະກອບໃສ່ ແລະນິທານທີ່ອ້າງມາປະກອບນັ້ນ ແມ່ນນິທານທີ່ມີຢູ່ໃນຄຳພີທັມບົດແລະຄຳພີມັງຄະລັດຖະທີປະນີ ດັ່ງຈະຂໍຍົກເອົານິທານຕອນນຶ່ງເຣື້ອງ "ທຸພພວກທັງ ໔" ມາຂຽນພໍໃຫ້ທ່ານຜູ້ອ່ານໄດ້ຊີມຣົດຊາດຂອງໜັງສືດັ່ງກ່າວ.

ວັນນະຄະດີລາວ.(ຕໍ່)

ສຽວສວາດທັມມິກະບັນດິດ ໄດ້ເວົ້າຂຶ້ນວ່າ: "ພວກເຈົ້າທັງຫລາຍເຮີຍ! ອັນວ່າຂ້ານເພືອແລະ ຕຶກໃຕ້ ຄຳໄຫວ່າ ຊາຕາລົງແລ." ວ່າດັ່ງນີ້.

ຍັງມີຄົນຫູໜວກທັງສີ່ ຢູ່ກິນດອນກັນ ຄື ພໍ່, ແມ່, ລູກຊາຍ ແລະລູກສະໃພ້. ໃນຕອນເຊົ້າມື້ນຶ່ງ ຊາຍພໍ່ເຮືອນຫູໜວກກໍໄປໄຖນາ. ລາວມີງົວສອງຕົວຊື່ວ່າ ອ້າຍກ່ຳແລະອ້າຍກວາງ. ໄຖຂອງລາວເຮັດດ້ວຍໄມ້ສີສຽດ. ນາຂອງລາວຢູ່ບ່ອນທາງສາມເສັ້ນມາຄົບກັນ.

ໃນຂະນະທີ່ລາວກຳລັງໄຖນາຢູ່ນັ້ນ ມີຊາຍເຈັດຄົນເດີນທາງມາແຕ່ບ້ານນອກ ເພື່ອຈະເຂົ້າໄປສູ່ເມືອງ ພາລານະສີ. ເມື່ອມາເຫັນຊາຍພໍ່ນາ ຂະເຈົ້າຈຶ່ງເຂົ້າໄປຖາມລາວວ່າ: "ພໍ່ລຸງເຮີຍ! ຫົນທາງໄປສູ່ ເມືອງພາຣານະສີແມ່ນເສັ້ນໃດ?"

ຊາຍຫູໜວກຜູ້ນັ້ນກໍເວົ້າວ່າ: "ງົວບັກກ່ຳຂອງຂ້ອຍຕົວນີ້ ຂ້ອຍກໍເອົາພ່ອຍຖົ່ວຊື້ເອົາມາແຕ່ໃນບ້ານ ພຸ້ນ."

ຄົນທັງເຈັດຊ້ຳຖາມອີກວ່າ: "ພວກຂ້ອຍຖາມຫາຫົນທາງໄປສູ່ເມືອງພາຣານະສີ, ແມ່ນເສັ້ນໃດ ພໍ່ລຸງເຮີຍ!"

ຊາຍຫູໜວກຜູ້ນັ້ນຄິດໃນໃຈວ່າ ເຂົາພູ່ນີ້ຕ້ອງຫາວ່າກູລັກເອົາງົວເຂົາມາ ກູຈະບອກໃຫ້ເຂົາຮູ້ແຈ້ງ ເສັຽກ່ອນ ຄິດດັ່ງນັ້ນແລ້ວລາວຈຶ່ງເວົ້າຂຶ້ນວ່າ: "ພວກເຈົ້າທັງຫລາຍເຮີຍ! ງົວຕົວນີ້ຊື່ວ່າບັກກວາງ ຂ້ອຍ ເອົານ້ຳມັນແລກເອົາດອນອື່ອາວໃນບ້ານພຸ້ນມາລ້ຽງ ຄົນທັງຫລາຍກໍທາກຮູ້ເຫັນນຳເທ້ແລ້ວ ຢ່າວ່າຂ້ອຍລັກ ເອົາງົວເຈົ້າທັງຫລາຍມາເຖີ້ນ."

ຊາຍທັງເຈັດກໍກ່າວວ່າ; "ເຮົາບໍ່ໄດ້ວ່າເຈົ້າລັກເອົາງົວມານາ! ຂ້ອຍທັງຫລາຍກໍຂໍຖາມຫາຫົນທາງ ອັນຈະໄປສູ່ວຽງພຸ້ນ ດອກນາ!"

ຊາຍຜູ້ນັ້ນກໍຊ້ຳກ່າວວ່າ: "ຂ້ອຍບໍ່ໄດ້ລັກເອົາໄຖຂອງເຈົ້າທັງຫລາຍມານາ ໄຖອັນນີ້ ຂ້ອຍກໍໄປຟັນ

ອັນນະຄະດີລາວ.(ຕໍ່)

ເອົາໄມ້ສີສຽດມາແປງເອົາດາຍ ຄົນທັງຫລາຍໃນບ້ານພຸ້ນກໍຫາກເຫັນນຳທັງບ້ານແລ້ວເດ! ເຮັດແນວໃດຈຶ່ງຊິມາຕູ່ວ່າ ຂ້ອຍລັກເອົາໄຖຂອງພວກເຈົ້າມາ!"

ເມື່ອນັ້ນຊາຍທັງເຈັດກໍພາກັນກ່າວວ່າ: "ພໍ່ລຸງເຮີຍ, ພວກຜູ້ຂ້າທັງຫລາຍ ກໍຖາມຫາຫົນທາງອັນເມືອສູ່ເມືອງພາຣານະສີ ທີ່ນັ້ນມາ."

ຊາຍຫູໜວກຜູ້ນັ້ນຈ້ຳເລີຍຄຽດ ແລ້ວກ່າວຂື້ນວ່າ: "ເຈົ້າທັງຫລາຍເຮີຍ! ພວກເຈົ້າຊິພາກັນມາວ່າຍັງຄວາມແທ່ງຂ້ອຍມີຊັ້ນບໍ? ນາອັນນີ້ ຂ້ອຍກໍໄດ້ໄປຊື້ເອົາດອນເຈົ້າອື່ຕາຈາກວານບ້ານພຸ້ນດາຍ ດ້ວຍເຫດໃດຈຶ່ງຈະພາກັນມາຖຽງເອົາວ່ານາຂອງໂຕນີ້ເດ? ອັນວ່ານານີ້ ສິບຜູ້ເຖົ້າເກົ້າຜູ້ໜຸ່ມກໍຫາກມາຮູ້ມາເຫັນນຳຂ້ອຍສູ່ຄົນ."

ຄົນທັງເຈັດກໍເລີຍຫັນມາເວົ້ານຳກັນວ່າ: "ຊາຍຄົນນີ້ຕ້ອງເປັນຄົນຫູໜວກແນ່ນອນແທ້ແລ້ວ, ຫລືຄັນບໍ່ດັ່ງນັ້ນ ກໍຫາກຊິແມ່ນຄົນຜີບ້າແນ່ນອນ ເຮົາມາພາກັນເດີນທາງຕໍ່ໄປທ້ອນ!" ວ່າແລ້ວພວກເຂົາກໍພາກັນໜີໄປ.

ໃນຂນະນັ້ນ ເມັຽຂອງຊາຍຫູໜວກຜູ້ນັ້ນກໍມາສົ່ງເຂົ້າຜົວຢູ່ນາ ເມື່ອມາຮອດແລ້ວ ລາວກໍເອົາກະຊ້າເຂົ້າໄປຫ້ອຍໄວ້ງ່າໄມ້ຢູ່ຫົວນາ ແລ້ວກໍຍ່າງເຂົ້າໄປຫາຜົວ. ກາທັງຫລາຍເມື່ອເຫັນຊ້າເຂົ້າທີ່ຫ້ອຍໄວ້ກໍພາກັນບິນເຂົ້າມາຈັບຢູ່ໃກ້ໆນັ້ນ ເພື່ອຈະກິນທໍ່ເຂົ້າ. ເມື່ອຊາຍຜູ້ນັ້ນເຫັນວ່າກາຊິກິນທໍ່ເຂົ້າດັ່ງນັ້ນ ກໍບາຍເອົາໄມ້ຄ້ອນແລ້ວເງືອດຂຶ້ນ ພ້ອມທັງຮ້ອງວ່າ: "ກາໆ!" ສ່ວນເມັຽຜູ້ກຳລັງຍ່າງເຂົ້າມາຫາ ເມື່ອເຫັນຜົວຕົນຖືໄມ້ຄ້ອນເງືອດຂື້ນດັ່ງນັ້ນກໍມີຄວາມຄຽດໃຫຍ່ ຄິດໃນໃຈວ່າຜົວກູນີ້ ຄົງຈະໄປມີເມັຽໃໝ່ແທ້ແລ້ວ ມັນຈຶ່ງຊິເອົາໄມ້ຄ້ອນຕີຫົວກູໃຫ້ຕາຍ. ແລ້ວກໍເລີຍຈົ່ມວ່າ: "ມຶງຊິເອົາກໍ່ໃຫ້ມຶງເອົາສາເຖີ້ນ!" ແລ້ວລາວກໍຫັນໜ້າເມືອສູ່ເຮືອນ.

ເມື່ອໄປຮອດບ້ານແລ້ວ ກໍເລີຍເລົ່າສູ່ລູກສະໃພ້ຟັງວ່າ: "ວັນນີ້ແມ່ໄປສົ່ງເຂົ້າພໍ່ເຈົ້າ ຄັນໄປຮອດ

ວັນນະຄະດີລາວ.(ຕໍ່)

ແລ້ວຊ້ຳພັດມາເງືອດງ່າໄມ້ຄ້ອນວ່າຊິຕີຫົວແມ່ນີ້."

ລູກສະໃພ້ຊ້ຳພັດເວົ້າຕໍ່ແມ່ຍ່າວ່າ: "ແມ່ເຮີຍ, ຂ້ອຍບໍ່ໄດ້ລັກເອົາເຂົ້າແລະເຫລົ້າໄປສູ່ຜົວຂ້ອຍກິນນາ ເປັນຫຍັງຈຶ່ງມາຕູ່ວ່າຂ້ອຍລັກນີ້ເດ! ຂ້ອຍກໍ່ຕັ້ງບົວຣະບັດພໍ່ແມ່ທຸກຄ່ຳເຊົ້ານອນເວັນ ເພ້ນາ! ເມື່ອຕາເວັນຕົກຂ້ອຍກໍນອນກ່ອນເຈົ້າ ຄັນວ່າຮຸ່ງມາແລ້ວຂ້ອຍກໍຕື່ນລຸນ ອັນວ່າເປັນຍິງລູກສະໃພ້ ກໍສຸດເທົ້າແຕ່ອຸປຖາກປານນີ້ແລ້ວເດ! ຄັນວ່າກາຍກວ່ານີ້ ກໍກິນບໍ່ແຊບແມບໆເທົ້າແລ້ວ."

ຊາຍຜູ້ເປັນພໍ່, ເມື່ອໄຖນາແລ້ວກໍເຂົ້າມາບ້ານເຮືອນເທິງຕົນ ແລ້ວຈຶ່ງເວົ້າຈາດອນລູກແລະເມັຽວ່າ: "ພວກເຈົ້າແມ່ລູກເຮີຍ! ວັນນີ້ໄດ້ມີຊາຍເຈັດຄົນມາຖຽງເອົາຍັງນາແລະງົວແລະຄາດແລະໄຖ ວ່າພໍ່ນີ້ໄປລັກຂອງເຂົາວ່າດັ່ງນັ້ນ ພໍ່ກໍເວົ້າຕອກໃສ່ໜ້າຜາກເຂົາ ເຂົາກໍພ້າເບື່ອຍໄປ ແລ້ວເຂົາກໍຈຶ່ງພາກັນໜີໄປ."

ຜູ້ເປັນແມ່ຊ້ຳພັດເວົ້າຕໍ່ລູກສະໃພ້ວ່າ: "ລູກສະໃພ້ເຮີຍ, ພໍ່ເຈົ້ານີ້ ຫາກແມ່ນຄືຄວາມແມ່ເວົ້າແຕ່ທົວທີ່ວ່າຊິຕີຫົວແມ່ແຕ່ຢູ່ນາພຸ້ນ. ບັດນີ້ຊ້ຳພັດຍັງມ້ານມາວ່າໂຕບໍ່ໄດ້ກິນເຂົ້າ ແມ່ກໍຍັງເອົາຊ້າທໍ່ເຂົ້າໄປຫ້ອຍໄວ້ບ່ອນລາວກິນແລ້ວນັ້ນເດ."

ລູກສະໃພ້ກໍບໍ່ໄດ້ຍິນຄວາມແມ່ຜົວເວົ້າ ມີແຕ່ຄິດວ່າແມ່ຜົວຈົ່ມໃຫ້ແກ່ຕົນສິ່ງດຽວ ນັນກໍເລີຍກ່າວຕໍ່ແມ່ຜົວວ່າ: "ແມ່ເຮີຍ! ເຂົ້າຂ້ອຍກໍຍັງມ່າໄວ້ໃນແອ່ງອັນພາກິນນັ້ນເດ ເຮັດເນວໃດຈຶ່ງຊິນາວ່າຂ້ອຍຊິ້ຄ້ານ. ຂ້ອຍກໍຫາກນອນກ່ອນລຸກລຸນເຈົ້າເທົ້າທຸກມື້." ວ່າດັ່ງນັ້ນແລ້ວລູກສະໃພ້ກໍເອົາເຂົ້າໄປສົ່ງຜົວຕົນຢູ່ນາພຸ້ນ.

ເມື່ອໄປຮອດແລ້ວ ກໍເລີຍກ່າວຕໍ່ຜົວວ່າ: "ພໍ່ແອ້ດເຮີຍ! ວັນນີ້ພໍ່ແລະແມ່ຂອງເຈົ້າມາຕິຕຽນຂ້ອຍຫລາຍເພ້ ວ່າຂ້ອຍນີ້ລັກເອົາເຂົ້າແລະເຫລົ້າມາໃຫ້ເຈົ້າກິນ!"

ຊາຍຜູ້ເປັນຜົວກໍບໍ່ໄດ້ຍິນຄວາມເວົ້າຂອງເມັຽຈັກຄຳ ຈຶ່ງເວົ້າຕໍ່ເມັຽວ່າ: "ແມ່ແອ້ດເຮີຍ! ເປັນຫຍັງເຈົ້າຈຶ່ງມາເຮັດຄຽດໃສ່ຂ້ອຍນີ້ເດ? ຕັ້ງແຕ່ເອົາກັນມາໄດ້ ໕ ປີປາຍແລ້ວ ບັດນີ້ຊິເລົ່າມາຄຽດມາດ່າ

ວັນນະຄະດີລາວ.(ຕໍ່)

ຂ້ອຍເຮັດຫຍັງ? ຄັນວ່າບໍ່ມັກກໍເປັນສັງບໍ່ເວົ້າແຕ່ທີ້ ຂ້ອຍຫາກຊິເອົາເມືອສົ່ງໃຫ້ພີ່ນ້ອງພໍ່ແມ່ເຈົ້າດອກ."

ສ່ວນເມັຽກໍບໍ່ໄດ້ຍິນຄຳຈົ່ມຂອງຜົວ ຊ້ຳກ່າວຕໍ່ຜົວວ່າ: "ພໍ່ແອ້ດເຮີຍ! ເຈົ້າຈົ່ງມາກິນເຂົ້າກ່ອນເຖີ້ນ ຂ້ອຍໄດ້ໄປເກັບຜັກກັບພື້ງພາກປີນມານີ້ເດ ເຈົ້າມາກິນກ່ອນສາ."

ຜູ້ເປັນຜົວຊ້ຳພັດເວົ້າວ່າ: "ແມ່ແອ້ດເຮີຍ! ແຕ່ເມື່ອຂ້ອຍຫາຄົນທັງຫລາຍໄປກ່າວໂອນເອົາເຈົ້າ ພ້ອມດ້ວຍຂັນພາກພູຄຳ ເຈົ້າສັງບໍ່ວ່າບໍ່ເອົາ! ບັດນີ້ຊິມາຈົ່ມມາຄຽດວ່າຊິພີຈັງໃດ! ຄັນວ່າຊິພີແທ້ ກໍຕາມໃຈເຈົ້າເຖີ້ນ!"

ຜູ້ເປັນເມັຽກໍບໍ່ໄດ້ຍິນ ຊ້ຳພັດເວົ້າຕໍ່ຜົວວ່າ: "ພໍ່ແອ້ດເຮີຍ! ມື້ພາຂ້ອຍຊິຕຳແຈ່ວມາຫາເຈົ້າກ່ອນສວາຍເນີ້ ເຈົ້າຢ່າຊູ້ຄຽດໃຫ້ຂ້ອຍເຖີ້ນ."

ຜົວແລະເມັຽທັງສອງກໍບໍ່ໄດ້ຍິນຄຳເວົ້າຂອງກັນແລະກັນ ກໍມີແຕ່ເວົ້າຈາກັນໄປຄົນລະທາງແລະບໍ່ຖືກກັນຈັກເທື່ອ.

ສຽວສວາດທັມມິກະບັນດິດ ກໍຍົກເອົາບຸພກັມແຫ່ງຄົນທັງສີ່ ມາເລົ່າສູ່ພຍາຈຳປານະຄອນແລະຊາວເມືອງທັງຫລາຍຟັງວ່າ ເມື່ອຊາດກ່ອນພຸ້ນ ມີສອງຜົວເມັຽແລະລູກຊາຍຜູ້ນຶ່ງກັບຫລານຍິງຜູ້ນຶ່ງ ເຮືອນຢູ່ໃກ້ວັດ ພວກເຂົາເຈົ້າກໍໄດ້ພາກັນເຮັດແຕ່ໄຮ່ແຕ່ນາ. ສ່ວນພວກຊາວບ້ານຕ່າງກໍພາກັນໃຫ້ທານຮັກສາສິນຟັງທັມຢູ່ບໍ່ຂາດ. ຢູ່ໃນວັດນັ້ນມີພຣະພິກຂຸສົງເຈັດອົງ ຊຶ່ງໄດ້ໃຫ້ສິນແລະສະແດງທັມມະເທສນາແກ່ອຸບາສົກອຸບາສິກາທັງຫລາຍທຸກໆວັນ. ສ່ວນສອງຜົວເມັຽແລະລູກຫລານທີ່ມີເຮືອນຢູ່ໃກ້ວັດນັ້ນ, ເມື່ອຄົນທັງຫລາຍເຂົ້າມາຟັງທັມມະເທສນາ ເຂົາເຈົ້າກໍບໍ່ທ້ອນມາຟັງດອນເພິ່ນ ມີແຕ່ຈາຄຳອັນເປັນໄຮ່ນາຮົ້ວສວນງົວຄວາຍຢູ່ຊູ່ວັນ ຫາຜູ້ຈະຊວນກັນໄປຮັກສາສິນຟັງທັມນຳເພິ່ນກໍບໍ່ມີ. ດ້ວຍກັມວິບາກອັນນັ້ນເອງເຂົາເຈົ້າຈຶ່ງໄດ້ເກີດມາຢູ່ນຳກັນອີກ ແລະລູກສະໃພ້ນັ້ນກໍຫາກເປັນຫລານຍິງແຕ່ຊາດກ່ອນນັ້ນເອງ. ຍ້ອນກັມວິບາກທີ່ບໍ່ໄດ້ຮັກສາສິນຟັງທັມໃນຊາດກ່ອນ ຈຶ່ງໄດ້ກາຍເປັນຄົນຫູໜວກ. ສ່ວນຄົນເດີນທາງທັງເຈັດກໍຫາກເປັນພິກຂຸທັງເຈັດນັ້ນເອງ.

ວັນນະຄະດີລາວ.(ຕໍ່)

ນີ້ຄືຕອນນຶ່ງຂອງນິທານອັນຍືດຍາວ ເລື່ອງສຽວສວາດທັມມິກະບັນດິດ. ຂ້າພະເຈົ້າໄດ້ຖືວິສາສະປ່ຽນແປງຂໍ້ຄວາມໃນບາງຕອນ ເພື່ອໃຫ້ເຂົ້າກັບສຳນຽງແລະພາສາເວົ້າໃນປັດຈຸບັນ ທັງໆທີ່ຂ້າພະເຈົ້າຮູ້ຢູ່ວ່າ ການກະທຳດັ່ງກ່າວຍ່ອມພາໃຫ້ລົດຊາດຂອງນິທານຈືດຈາງລົງອີກ. ເທົ່າທີ່ຜົມເຮັດໄປກໍເພື່ອອຳນວຍຄວາມສະດວກໃຫ້ຜູ້ທີ່ຮຽນພາສາລາວເທົ່ານັ້ນ. ຫວັງວ່າຕໍ່ໄປທ່ານຈະຊອກຫາອ່ານນິທານຈົບຕລອດເລື່ອງໂດຍທ່ານເອງ.

ສ. ໄຊຍະສິທເສນາ

3.11 ນາງຜົມຫອມ.

ແຕ່ປາງກ່ອນ ຍັງມີນາງໝ້າຍຜູ້ນຶ່ງ ໄດ້ເຮັດໄຮ່ຢູ່ກາງໂຄກພູດຽວຊຶ່ງຫ່າງຈາກບ້ານຄົນຫລາຍຫລັກກິໂລແມັດ. ມື້ນຶ່ງໃນຄນະທີ່ເຮັດວຽກຢູ່ນັ້ນ ແດດກໍຮ້ອນລາວຮູ້ສຶກຫອດຫິວແລະຢາກນ້ຳຫລາຍ. ລາວຮູ້ແລ້ວວ່າໃກ້ໆບ່ອນລາວເຮັດຢູ່ນີ້ບໍ່ມີນ້ຳສ້າງ ລາວຈຶ່ງຍ່າງໄປເບິ່ງບັ້ງນ້ຳຂອງລາວ ແຕ່ນ້ຳຢູ່ໃນບັ້ງນັ້ນໝົດໄປແລ້ວ. ລາວຕັດສິນໃຈຍ່າງຄືນໄປຊອກຫານ້ຳສ້າງຢູ່ຕີນບ້ານ ແຕ່ຕອນລາວຜ່ານປ່າໄປນັ້ນ ຍ້ອນລາວຫິວນ້ຳຫລາຍເກີນໄປໂພດ ເວລາລາວຫລຽວໄປເຫັນນ້ຳຢູ່ຮອຍຕີນຊ້າງລາວຈຶ່ງເອົາມືກອບຂຶ້ນມາດື່ມ. ຫລາຍເດືອນຕໍ່ມາເລີຍມີທ້ອງ ແລ້ວກໍອອກລູກມາເປັນຜູ້ຍິງທີ່ມີຜົມອ່ອນນຸ້ມນວນຄືເສັ້ນໄໝ ແລະທັງມີກິ່ນຫອມ. ແມ່ຂອງລາວຈຶ່ງໃສ່ຊື່ໃຫ້ວ່າ, "ນາງຜົມຫອມ".

ໜ້າທີ່ທຳໄຮ່ຂອງນາງໝ້າຍກໍຍັງທຳຕໍ່ໄປໂດຍບໍ່ເຄີຍວ່າຈະປະລະເລີຍຈັກເທື່ອ. ໃນປີຕໍ່ມາ ມື້ນຶ່ງແດດຮ້ອນຫລາຍນາງໄດ້ເກີດຫິວນ້ຳຫລາຍຈຶ່ງຊອກຫານ້ຳດື່ມອີກ ແຕ່ຄາວນີ້ໄປພົບນ້ຳຢູ່ຮອຍຕີນເສືອ ນາງຈຶ່ງເລັ່ງກິນ. ຫລາຍເດືອນຕໍ່ມາ ນາງໝ້າຍກໍເລີຍມີທ້ອງອີກ ແລ້ວກໍອອກມາເປັນຜູ້ຍິງແຕ່ຜົມບໍ່ຫອມຄືຜູ້ເອື້ອຍ.

ພວກເພື່ອນບ້ານໃກ້ຄຽງທຸກຄົນກໍຮູ້ດີວ່ານາງໝ້າຍຜູ້ນີ້ບໍ່ເຄີຍມີຊູ້ຫລືຄູ່ຮັກຈັກເທື່ອ. ແຕ່ຂເຈົ້າບໍ່ຍອມເຂົ້າໃຈໃນຄຳບອກເລົ່າຂອງການມີລູກແບບແປກປະຫລາດນີ້ ຊ້ຳບໍ່ໜຳພວກໄທບ້ານຍັງພາກັນເວົ້າຂວັນຕິຕຽນນິນທາຍິວະເຍີ້ຍທັງແກມຫລິ້ນ. ແຕ່ວຽກປະຈຳວັນ ນາງໝ້າຍກໍບໍ່ໄດ້ປະວາງໜ້າທີ່ເປັນແມ່ທີ່ດີ ຄືຍັງຖະນຸຖະນອມລູກທັງສອງຂອງນາງຕາມໜ້າທີ່ ເຖິງປານນັ້ນຍັງຫລີກຈາກສັງຄົມຂອງການເວົ້າຂວັນແລດູໝິ່ນປະໝາດຂອງຊາວບ້ານບໍ່ໄດ້. ດ້ວຍເຫດນີ້ເອງ ຈຶ່ງເຮັດໃຫ້ນາງອຸກໃຈ ບໍ່ຮູ້ວ່າຈະເຮັດແນວໃດໄທບ້ານຈຶ່ງຈະເຊື່ອຄວາມຈິງຂອງຕົນ.

ຫລາຍປີຕໍ່ມາ ລູກສາວທັງສອງກໍໃຫຍ່ເຕີບໂຕມາແດ່ແລ້ວ. ເມື່ອອອກໄປຫລິ້ນນຳໝູ່ເພື່ອນບ້ານທາງໃດກໍໄດ້ຍິນແຕ່ໝູ່ຄູ່ເວົ້າວ່າ "ພວກລູກບໍ່ມີພໍ່ຄືເພິ່ນ" ຫລື "ພວກລູກຊ້າງລູກເສືອໜີໄປຢູ່ປ່າພຸ້ນ". ເມື່ອອົດທົນເກັບຄວາມເຈັບຊ້ຳໃຈໄວ້ໃນຫົວໃຈຕໍ່ໄປອີກດົນກວ່ານີ້ບໍ່ໄດ້ ຈຶ່ງໄດ້ອອນວອນຜູ້ເປັນແມ່.

ນາງຜົມຫອມ(ຕໍ່).

ນາງໄດ້ເລົ່າຄວາມເປັນມາໃຫ້ພວກລູກຟັງດ້ວຍຄວາມເຈັບຊ້ຳແລະນ້ອຍໃຈ. ເວລານາງເລົ່າຢູ່ນັ້ນ ນ້ຳຕາຂອງນາງໄຫລອອກມາພ້ອມກັບສຽງສັ່ນສະອື້ນ ເຮັດໃຫ້ນ້ຳຕາພວກລູກໄຫລອອກນຳ. ຄຳສຸດທ້າຍຂອງນາງໄດ້ກ່າວວ່າ "ໂອນໍ ແມ່ນກັມເວນຫຍັງເດພຣະພຸດພຣະເຈົ້າຊ່າງມາຊ້ຳເຕີມໃສ່ກັນໃສ່ເວນແຕ່ຜູ້ຂ້າເພັ້ນໍ" ພໍສິ້ນຄວາມເວົ້າຈຶ່ງລົ້ມທ່າວເປັນລົມຕາຍຈາກພວກລູກທັງສອງໄປ.

ຫລັງຈາກໄດ້ທຳບຸນກຸສົນ ມ້ຽນສົບຂອງແມ່ແລ້ວ ນາງຜົມຫອມກັບນ້ອງຈຶ່ງອອກເດີນທາງໄປຕິດຕາມຫາພໍ່ຢູ່ໃນປ່າ. ຕາມປ່າອັນຕຶບໜາ ນາງຜົມຫອມໄດ້ຖາມຝູງສັດທຸກຊະນິດວ່າ," ດູລາເຈົ້າທັງຫລາຍເຮີຍ ໄດ້ເຫັນພໍ່ຂ້ອຍບໍ່ ທີ່ເປັນພຍາຊ້າງເຜືອກແລະຄຸ້ມຄອງໃນປ່າແຫ່ງນີ້". ຝູງສັດທັງຫລາຍກໍໄດ້ຊີ້ທາງໃຫ້. ນາງຂອບໃຈແລ້ວກໍ ລາຈາກໄປ. ພໍຜົມຫອມໄປເຖິງບ່ອນກໍພົບກັບພຍາຊ້າງເຜືອກໂຕໃຫຍ່ ແລ້ວນາງຈຶ່ງເລົ່າເລື່ອງເປັນມາໃຫ້ພຍາຊ້າງຟັງ. ເມື່ອໄດ້ຍິນດັ່ງນັ້ນພຍາຊ້າງເຜືອກຈຶ່ງເດ່ຫາງແກວ່ງງວງເປົ່ງເປັນສຽງເວົ້າຂຶ້ນວ່າ, "ຖ້າວ່າເຈົ້າແມ່ນລູກຂອງພໍ່ຈິງແລ້ວພວກລູກກໍຈະຮູ້ດຽວນີ້ລະ ຄັນຫາກຜູ້ໃດໄຕ່ຫລັງພໍ່ແຕ່ຫົວສຸດຫາງໄດ້". ຜູ້ເປັນນ້ອງໄຕ່ກ່ອນພໍແຕ່ຂຶ້ນກໍຕົກລົງໂລດ ຕົກຫລາຍເທື່ອເລີຍເຮັດໃຫ້ພຍາຊ້າງເກີດໂມໂຫຈຶ່ງຍົກຕີນຢຽບຕາຍຊ້ຳ. ນາງຜົມຫອມຈະຂໍໄວ້ກໍບໍ່ທັນ. ນາງໄດ້ຮ້ອງໄຫ້ນຳການຕາຍຈາກໄປໂດຍບໍ່ມີວັນຄືນມາຂອງຜູ້ເປັນນ້ອງ ທັງສັ່ນສາຍຢ້ານໂຕຈະໄຕ່ຫລັງຊ້າງບໍ່ໄດ້. ພໍຮອດທີຂອງນາງມາ ນາງຜົມຫອມກໍຂຶ້ນໄຕ່ຫລັງຊ້າງໄດ້ຢ່າງສະບາຍແຕ່ຫົວສຸດຫາງ ແຕ່ຫາງສຸດຫົວ. ພຍາຊ້າງເຜືອກຈຶ່ງພໍໃຈແລ້ວກໍຮັບເອົານາງໄປເປັນລູກ.

ຕໍ່ນັ້ນມາ ນາງຜົມຫອມກໍໄດ້ຢູ່ຜະສາດອັນງົດງາມນຳພໍ່ພ້ອມດ້ວຍຄວາມສຸກສຳຣານໃຈ. ມື້ໃດພໍ່ນາງກໍດຸມດອນໄປຊອກຫາຜົລໄມ້ມາໄວ້ໃຫ້ນາງກິນແລະສະຜົມ. ພວກຝູງສັດທັງຫລາຍກໍພາກັນຮັກແລະນັບຖືນາງ ບັດນີ້ພຍາຊ້າງເຜືອກເຖົ້າແລ້ວຮູ້ວ່າຕົນຈະບໍ່ຍືນນຳລູກຕໍ່ໄປອີກແລ້ວຈຶ່ງໄດ້ສັ່ງລູກວ່າ, "ໃຫ້ລູກເບິ່ງແຍງຮັກສາຜາສາດຣາຊວັງໄວ້ໃຫ້ດີເດີ". ຫລັງຈາກພໍ່ໄດ້ສິ້ນພຣະຊົນໄປແລ້ວ ນາງກໍມີແຕ່ຄວາມງຽບເຫງົາຄິດຢາກຈະມີຄູ່ຊີວິດມາຄຸ້ມຄອງຜາສາດນຳ.

ນາງຜົມຫອມ(ຕໍ່ແລະສຸດ).

ມື້ນຶ່ງນາງລົງໄປອາບນໍ້າ ສະຜົມຢູ່ທ່ານໍ້າທີ່ຢູ່ໃກ້ພາສາດຂອງນາງໆຄິດຢາກລອງສ່ຽງບຸນວາດສນາ ຫາຄູ່ຊີວິດເບິ່ງ. ນາງຜົມຫອມຄິດໄດ້ຈຶ່ງເດັດເອົາຜົມສອງສາມເສັ້ນໃສ່ໃນໂອ ແລ້ວກໍຍໍໃສ່ຫົວອະທິຖານ ໄຫວ້ວອນຫາເທວະບຸດເທວະດາວາ, "ສາທຸເດີ ຄັນແມ່ນບຸນວາດສນາມີແມ່ນໃຜຊິໄດ້ເປັນຜົວເຜົ້າຜົວທິບ ນັ້ນ ຂໍໃຫ້ໂອນີ້ເວີນໄປຫາ ແລະນໍາເອົາຜົມຄືນມາໃຫ້ຂ້ນ້ອຍແດ່ທ້ອນ". ເວົ້າແລ້ວນາງກໍປ່ອຍໂອໄຫລຕາມ ນໍ້າໄປ.

ຍັງມີອີກເມືອງນຶ່ງທີ່ຢູ່ຟາກຟ້າແດນໄກຈາກບ່ອນນາງຜົມຫອມຢູ່. ເຈົ້າຊາຍຈິງນຶ່ງແລະເສນາອາ ມາດໄດ້ພາກັນລົງໄປອາບນໍ້າ ຫລິ້ນຢູ່ທ່ານໍ້າແຫ່ງນຶ່ງພວກຂເຈົ້າເຫັນໂອນ້ອຍໄຫລລ່ອງນໍ້າມາ ພວກເສນາ ອາມາດພາກັນໄລ່ຈັບເອົາ ແຕ່ໂອນັ້ນກໍເວີນໜີຈາກຂເຈົ້າ. ສຸດທ້າຍໂອນັ້ນເລີຍເວີນເຂົ້າໄປໃກ້ເຈົ້າຊາຍໆ ຈຶ່ງຈັບເອົາກໍກາຍເປັນເຈົ້າຂອງໂອພ້ອຍນັ້ນ. ຄວາມງາມແລະກິ່ນຫອມຂອງຜົມຢູ່ໃນໂອນັ້ນ ເຮັດໃຫ້ເຈົ້າ ຊາຍເກີດຄວາມຮັກແລະເພີ້ຝັນທຸກເວລາ ຈົນທໍາໃຫ້ເຈົ້າຊາຍກິນກໍ່ບໍ່ໄດ້ນອນກໍບໍ່ຫລັບ ຍ້ອນຄວາມຮັກຖ້ວມ ຫົວໃຈເກີນສ່ວນໂພດ ຈຶ່ງໄດ້ລາພໍ່ແມ່ອອກຈາກພຣະຣາຊວັງ ເພື່ອໄປຊອກຫາເຈົ້າຂອງເສັ້ນຜົມ. ເມື່ອ ເຈົ້າຊາຍພົບແລ້ວຈຶ່ງໃຫ້ເສນາອາມາດແຫ່ແຫນນາງຜົມຫອມກັບເຈົ້າຊາຍຄືນສູ່ພຣະຣາຊວັງ. ພິທີແຕ່ງງານ ສົມຣົດຣະຫວ່າງນາງຜົມຫອມແລະເຈົ້າຊາຍກໍສິ້ນສຸດລົງແລະທັງສອງກໍປົກຄອງບ້ານເມືອງດ້ວຍຄວາມສຸກ ສໍາຣານຕໍ່ມາ.

ອ. ສົມບັດ

3.12 ນາງສິບສອງ.

ແຕ່ປາງກ່ອນ ຍັງມີຄອບຄົວນຶ່ງທີ່ທຸກພໍປະມານ. ໃນຄອບຄົວນີ້ມີລູກ ໑໔ ຄົນເປັນຍິງໝົດ. ພໍ່ຂອງນາງສິບສອງເປັນຄົນຟັນຟືນຂາຍ. ສ່ວນແມ່ຢູ່ເຮືອນນຳລູກ ພໍເຖິງຍາມກິນເຂົ້າຍາມໃດ ພວກນາງສິບສອງກໍພາກັນຍາດກັນກິນພິດກ່ອນພໍ່ກ່ອນແມ່. ມີຫລາຍໆເທື່ອທີ່ພໍ່ແລະແມ່ມາລັກກິນອາຫານຍາມເດິກແຕ່ພໍ່ຕ້ອງຖ້ວຍເທົ່ານັ້ນພວກລູກກໍຫຸ້ມພີບມາໃສ່. ບາງເທື່ອກໍພາກັນບີບຄໍພໍ່ແມ່ລັດໄວ້ກໍມີ.

ໃນກາງຄືນມື້ນຶ່ງສອງຜົວເມັຽລົມກັນເລື່ອງຄ່າຄອງຊີບແລະການຢູ່ກິນພາຍໃນຄອບຄົວຂອງຂເຈົ້າ. ແຕ່ເປັນຍ້ອນເຫດປະການໃດບໍ່ຮູ້ລູກສາວຜູ້ຫລ້າມາຈອບລັກຟັງພໍ່ແມ່ລົມກັນ.

ຜົວ: ໂອຍ! ແມ່ນາງເອີຍຂ້ອຍນີ້ລະເມື່ອຍຫລາຍແລ້ວ ຫາລ້ຽງລູກນີ້ນະ ຜົວກ່າວຂຶ້ນ.

ເມັຽ: ຊິເຮັດຈັ່ງໃດແລ້ວ ຂ້ອຍເອງກໍເມື່ອຍຄືກັນ ຊ້ຳຍັງທອດຫິວອີກຊ້ຳ ນາງເມັຽເພີ່ງຊ້ຳຄວາມທຸກພັກໃຈເຂົ້າໄປອີກ.

ຜົວ: ຄັນຊັ້ນ ຂ້ອຍຄິດວ່າເຮົາເອົາລູກເຮົາໄປປ່ອຍປ່າດີບໍ່?

ເມັຽ: ກໍດີຄືກັນ ພໍສອງຜົວເມັຽຕົກລົງກັນໄດ້ແລ້ວກໍພາກັນນອນ. ສ່ວນລູກສາວຫລ້າຜູ້ຈອບຟັງກໍຮູ້ຈັກເລື່ອງ ວ່າພໍ່ຊິເອົາພວກເອື້ອຍທັງສິບເອັດຄົນພ້ອມດ້ວຍຕົນເອງໄປໂຜດໃນປ່າ ຕື່ນມາໃນມື້ໃໝ່ພໍ່ກໍຊວນພວກນາງສິບສອງໄປຫາຟືນໃນປ່າ. ສ່ວນຜູ້ເປັນແມ່ກໍໄດ້ແຕ່ງຫໍ່ເຂົ້າໃຫ້ລູກທຸກໆຄົນພ້ອມດ້ວຍຂອງພໍ່. ລູກສາວຫລ້າເມື່ອຮູ້ວ່າພໍ່ຈະເອົາໄປໂຜດດັ່ງນັ້ນຈຶ່ງໄດ້ຫາເກັບເອົາກ້ອນຫີນນ້ອຍເຊື່ອງໃສ່ຖົງໄວ້ເວລາພວກຂເຈົ້າຍ່າງເປັນຂບວນອອກບ້ານໄປໄດ້ພໍສົມຄວນກະວ່ານາງຈະຫລົງທາງແລ້ວ ນາງຈຶ່ງຖິ້ມກ້ອນຫີນຢາຍໄປຕາມທາງ. ເມື່ອເຖິງກາງປ່າພວກລູກທັງຫລາຍກໍພາກັນຕັດລຳໄມ້ເພື່ອເຮັດເປັນທ່ອນຟືນ.

ພໍເຖິງຍາມໃກ້ຈະເພນ ພໍ່ຈຶ່ງຕົວະລູກວ່າຈະໄປຊອກຫາເອົານ້ຳມາໄວ້ກິນເວລາກິນງາຍແລ້ວ. ພໍ່ບອກວ່າຈະໄປຫານ້ຳແຕ່ຈົນໃກ້ຈະຄ່ຳກໍບໍ່ເຫັນກັບມາຫາລູກ ພວກລູກຈຶ່ງໄດ້ພາກັນກັບບ້ານເອງເພາະນ້ອງສາວຫລ້າຈື່ທາງໄດ້ຍ້ອນກ້ອນຫີນທີ່ນາງຢາຍໄວ້ນັ້ນເອງ.

ນາງສິບສອງ.(ຕໍ່)

ຄັ້ງທຳອິດກໍບໍ່ເປັນຜົນສຳເຣັດ ດ້ວຍເຫດນັ້ນຈຶ່ງໄດ້ຫາວິທີໃໝ່ອີກ ເພື່ອຈະໄປໂຜດລູກໃຫ້ໄດ້.

ຄາວນີ້ພໍ່ຂອງນາງສິບສອງໄດ້ພາລູກໄປໃນປ່າຕຶບໜາ ແລະໄກກວ່າເທື່ອກ່ອນ. ສະນັ້ນຈຶ່ງເປັນເຫດໃຫ້ກ້ອນຫີນຂອງນາງຫລ້າທີ່ຕັ້ງໃຈຢູ່ສເມີວ່າພໍ່ຈະເອົາໄປປ່ອຍປ່ານັ້ນບໍ່ພົ້ນຄວາມໄກຂອງທາງ. ພໍ່ນາງສິບສອງກະວ່າໄກພໍແຮງແລ້ວຈຶ່ງບອກໃຫ້ລູກລົງມືຕັດຟືນໄດ້ ໃນຂນະທີ່ພວກລູກພາກັນເມົາມົວນຳແຕ່ຕັດຟືນແລະປອກກັນແດ່ນັ້ນ ພໍ່ຂອງນາງຈຶ່ງໄດ້ຫາໂອກາດລັກໜີຈາກລູກໄປ ພໍເຖິງຕອນສວາຍມາ ພວກນາງສິບສອງຫິວເຂົ້າຫລາຍ ຄິດຈະຊວນພໍ່ກິນເຂົ້າ ແຕ່ຫລຽວຫາພໍ່ທາງໃດກໍບໍ່ເຫັນ ເອີ້ນເນອໃດກໍບໍ່ໄດ້ຍິນສຽງຕອບ ຫລັງຈາກນັ້ນ ນາງທັງສິບສອງຈຶ່ງພາກັນໄຂເຂົ້າອອກກິນ. ຜູ່ເອື້ອຍໄຂຫໍ່ເຂົ້າອອກມາກໍມີແຕ່ຂີ້ຊາຍ ຜູ່ຕໍ່ມາກໍຄືກັນ. ເມື່ອຜູ່ນ້ອງຫລ້າສຸດໄຂຫໍ່ເຂົ້າຂເຈົ້າພາກັນດີໃຈ ເມື່ອເຫັນວ່າແມ່ນເຂົ້າແທ້. ພວກຂເຈົ້າແບ່ງກັນກິນຜູ່ລະເລັກລະໜ້ອຍ ເມື່ອຮູ້ວ່າພໍ່ລັກໜີປ່ອຍໄວ້ໃນປ່າແລ້ວຂເຈົ້າຈຶ່ງຊອກຫາທາງຈະກັບບ້ານ. ເທື່ອນີ້ບໍ່ຮູ້ຈັກທາງກັບບ້ານສະແລ້ວ ເພາະນ້ອງສາວຫລ້າບໍ່ມີກ້ອນຫີນພໍທີ່ຈະໝາຍທາງໄວ້.

ຫລາຍວັນຜ່ານພົ້ນເຂົ້າເປັນເດືອນ ຫລາຍເດືອນຜ່ານພົ້ນເຂົ້າເປັນປີ ພວກນາງສິບສອງທີ່ຢູ່ໃນປ່າກໍໄດ້ຊອກຫາແຕ່ຜົລໄມ້ກິນ ພວກຂເຈົ້ານອນກັບດິນກິນກັບຫຍ້າ. ແຂນ ຂາ ຕົນໂຕຂອງພວກນາງສິບສອງກໍເກີດມີຂົນເຕັມໂຕໝົດ ແລະຍ້ອນຄວາມຊຳນານໃນການຊອກປີນໄຕ່ເອົາພາກໄມ້ຕາມຕົ້ນໄມ້ຕ່າງໆ ຈຶ່ງພາໃຫ້ພວກນາງສິບສອງມີຄວາມວ່ອງໄວແລະເຕັ້ນໄຕ່ໄປຕາມຕົ້ນໄມ້ໄດ້ຢ່າງງ່າຍດາຍ.

ບັດນີ້ຫວນມາເວົ້າເລື່ອງພໍ່ແມ່ຢູ່ທາງບ້ານ ຫລັງຈາກປ່ອຍລູກໄວ້ໃນປ່າໄດ້ຫລາຍປີແລ້ວ ພວກຂເຈົ້າທັງສອງຈຶ່ງມີໂອກາດສ້າງສາ ຫາເງິນຄຳຢ່າງສະດວກສະບາຍ. ເວລານີ້ຂເຈົ້າທັງສອງມີຄວາມສຸກ ແລະອຸດົມສົມບູນທຸກປະການ ເງິນຄຳກໍມີເຫລືອໃຊ້ເຫລືອຈ່າຍ ອາຫານການກິນກໍມີຫລາຍເຫລືອຢູ່ເຫລືອກິນ. ຍ້ອນຄວາມອີ່ມຕົນຄິດຮອດຄິດເຖິງພວກລູກຫລາຍ ທັງສອງຜົວເມັຽຈຶ່ງພາກັນເຂົ້າໄປໃນປ່າ

ນາງສິບສອງ(ຕໍ່).

ເພື່ອຊອກຫາເອົາລູກກັບຄືນມາຢູ່ນຳ ທັງສອງໄດ້ເອີ້ນຫາລູກຕາມປ່າວ່າ" ລູກເອີຍ! ມາຫາພໍ່ແມ່ທ້ອນດຽວນີ້ເຂົ້າກໍເຕັມນາປາກໍເຕັມນ້ຳແລ້ວ". ເມື່ອພວກນາງສິບສອງໄດ້ຍິນສຽງເອີ້ນຈາກພໍ່ແມ່ ອຶດບໍ່ໄດ້ກໍຕອບໄປຈາກປາຍໄມ້ວ່າ "ພໍ່ແມ່ເອີຍດຽວນີ້ພວກລູກໄປນຳພໍ່ແມ່ບໍ່ໄດ້ແລ້ວ ດຽວນີ້ຂົນແຂ່ງພ້ອຍປາ ຂົນຂາພ້ອຍຂຽດ ຂົນຂີ້ແຮ້ພໍ່ຜຶ້ງດງາໄຊ." ພໍເວົ້າສຸດຄວາມພວກນາງສິບສອງທີ່ກາຍເປັນລີງນັ້ນກໍພາກັນເຕັ້ນໄຕ່ໜີໄປ ຄົງເຫລືອພຽງແຕ່ຄວາມໂສກເສົ້າໃຫ້ຜູ້ເປັນພໍ່ແລະແມ່ໄວ້ເປັນອານຸສອນ.

ອ. ສົມບັດ

3.20 ເຄື່ອງດົນຕຣີລາວ.

ແຄນ ຊໍ ຂຸ່ຍ ລະນາດ ປີ່ ມີລັກຊະນະບໍ່ຄືກັນ. ສ່ວນລາງອັນເຮັດດ້ວຍໄມ້ໄຜ່ ລາງອັນເຮັດດ້ວຍໄມ້ເຮັ້ງແລະຂອງແນວອື່ນໆເປັນຕົ້ນ. ກະໂປະໝາກພ້າວ ຫລືໄມ້ຊນິດອື່ນໆ. ປີ່ ແຄນ ຊໍ ຂຸ່ຍ ແລະລະນາດເປັນເຄື່ອງດົນຕຣີຊນິດນຶ່ງທີ່ຄົນລາວໃຊ້ກັນມາແຕ່ໂບຮານຈົນເທົ່າທຸກວັນນີ້. ແຄນໃຊ້ສຳລັບເປົ່າຄັບລຳເວລາມີບຸນງານຕ່າງໆ. ແຕ່ສມັຍກ່ອນຜູ້ຊາຍລາວສ່ວນມາກໃຊ້ແຄນ ປີ່ ຂຸ່ຍເຫລົ່ານີ້ພາກັນເປົ່າເລາະຕາມຮ່ອມບ້ານຫລືເວລາໄປລົມສາວ. ເຄື່ອງດົນຕຣີເຫລົ່ານີ້ແລ້ວແຕ່ຜູ້ຊ່າງເປົ່າ ຖ້າຜູ້ໃດຊ່າງເປົ່າກໍມ່ວນຫລາຍ.

ໃນປັດຈຸບັນນີ້ ຍັງໃຊ້ເຄື່ອງເສບເຫລົ່ານີ້ ສຳລັບເສບປະສານງານການຂັບຮ້ອງເພັງກໍໄດ້, ລະນາດເປັນເຄື່ອງດົນຕຣີລາວເດີມອັນນຶ່ງໃຊ້ສຳລັບເສບຟ້ອນນາດຕະສິນຫລືເສບແຫ່ກອງບຸນຫລືງັນບຸນຕ່າງໆ. ເຄື່ອງເສບເຫລົ່ານີ້ນອກຈາກຄົນລາວໃຊ້ແລ້ວພວກຕ່າງປະເທດກໍໃຊ້ຄືກັນຄື: ປະເທດໄທ ເຂມນ ອິນເດັຽ ພະມ້າ ລາງເທື່ອພວກຕ່າງປະເທດຂະເຈົ້າກໍຊື້ໄປເປົ່າຫລິ້ນ. ເຄື່ອງດົນຕຣີລາວ ນອກຈາກແຄນ ຊໍ ຂຸ່ຍ ປີ່ ລະນາດ ແລ້ວຍັງມີກອງຫາງແຊ່ງ ຊິ່ງ ມີໄວ້ຕີແຫ່ບັ້ງໄຟ ເຊີ້ງຕ່າງໆ ກະຈັບປີ່ ກອງຂ້ານີ້ໃຊ້ເວລາຮ້ອງເພັງຫລືເສບຟ້ອນລຳວົງ ຄອງນີ້ໃຊ້ສຳລັບຕີເວລາມີກອງບຸນຢູ່ເຮືອນຫລືມີກິນນິທານຢູ່ຕາມວັດຕ່າງໆ.

ຄອງວົງນີ້ ຄົນລາວສ່ວນມາກບໍ່ມີປະຈຳຢູ່ເຮືອນຄືເຄື່ອງເສບແນວອື່ນ, ຖ້າຜູ້ໃດມີວຽກກໍໄປຢືມຢູ່ວັດເວລາວຽກແລ້ວໆກໍເອົາໄປສົ່ງວັດ. ແຕ່ວ່າຢູ່ວັດເພິ່ນຕ້ອງໃຊ້ຕີທຸກມື້ເວລາແລງ.

ດ. ໄຊຍະສິດເສນາ

ຊໍ

ແຄນ

ລະນາດ



ຄ້ອງວົງ

3.30 ເຄື່ອງໃນເຮືອນຄົວຄົນລາວ.

ໃນເຮືອນຄົວຂອງຄົນລາວຕາມທັມມະດາ ຢູ່ແປະຝາຂ້າງນຶ່ງເພິ່ນວາງຕູ້ໃສ່ອາຫານການກິນຕ່າງໆ. ແຕ່ຢູ່ຕາມຊົນນະບົດເພິ່ນໃຊ້ຫິ້ງຊຶ່ງສານດ້ວຍໄມ້ໄຜ່ເປັນແຕະເອົາເຊືອກຫລືເຫລັກລວດມັດສີ່ແຈແລ້ວເອົາແຂວນຢູ່ເທິງຄີໄຟ. ຕູ້ເຄື່ອງກິນນີ້ເຮັດດ້ວຍໄມ້ທັງມີຝາຕາໜ່າງເຫລັກຖີ່ໆ ແລະຂາຂອງມັນຮອງດ້ວຍຖ້ວຍທີ່ມີນ້ຳທັງສີ່ຂາ ເພື່ອປ້ອງກັນແມງວັນຕອມແລະບໍ່ໃຫ້ມົດຂຶ້ນຫາອາຫານໄດ້. ຢູ່ອີກແຈນຶ່ງ ເພິ່ນຈະມ້ຽນທໍ່ເກືອ ທໍ່ໝາກເຜັດແຫ້ງ ໄຫປາແດກ ໄຫນ້ຳປາ ແລະໄຫ່ເຂົ້າສານ. ຢູ່ແປະຝາເຮືອນຄົວອີກເບື້ອງນຶ່ງຈະມີຄີໄຟຊຶ່ງເພິ່ນກອງຟືນຫລືວາງທີ່ຖ່ານໄວ້ທາງຂ້າງຫັ້ນ. ຢູ່ໃກ້ຄີໄຟມີຕັ່ງຫວາຍສອງສາມໜ່ວຍເພື່ອນັ່ງຄອຍກິນຫລືນັ່ງກິນເຂົ້າ. ຂ້າງຄີໄຟອີກດ້ານນຶ່ງມີຮ້ານເກັບເຄື່ອງຄົວກິນເຊັ່ນ: ບົມອິເຂົ້າ ໝໍ້ຫຸງຕົ້ມ ໝໍ້ຂາງ   ຄົກ ສາກ ມີດ ພ້າ ບ່ວງ ຈອງ ຂຽງ ພາເຂົ້າ ແລະຖ້ວຍຊາມເປັນຕົ້ນ.

ເວລາຈະໜຶ້ງເຂົ້າເພິ່ນເອົາເຂົ້າໜຽວທີ່ໝ່າໄວ້ແລ້ວ ໃສ່ຫວດເອົາໄປວາງໃສ່ປາກໝໍ້ໜຶ້ງທີ່ມີນ້ຳກຳລັງຟົດຢູ່. ຄັນມັນສຸກແລ້ວ ເພິ່ນກໍເອົາຫວດເຂົ້າໄປເທລົງໃສ່ບົມແລ້ວວີຫລືສ່ວາຍເອົາເຂົ້ານັ້ນໃສ່ໄວ້ໃນຕິບເພື່ອບໍ່ໃຫ້ມັນເຢັນໄວ. ເພິ່ນຕຳແຈ່ວດ້ວຍຄົກແລະສາກ. ເພິ່ນຟັກລາບ ຟັກກ້ອຍດ້ວຍມີດແລະພ້າ, ປາດປາແລະຊີ້ນຫລືຊອຍຜັກຕ່າງໆດ້ວຍມີດໃສ່ເທິງຂຽງ, ແລ້ວເຮັດເອາະຫລືແກງໃສ່ໝໍ້, ເຮັດຂົ້ວຫລືຈືນປາແລະຊີ້ນໃສ່ໝໍ້ຂາງ(ບົ້ງ). ເພິ່ນຄົນອາຫານດ້ວຍຈອງ. ເມື່ອອາຫານສຸກແລ້ວເພິ່ນກໍໃຊ້ຈອງອີກສຳລັບຕັກອາຫານອອກຈາກໝໍ້ໃສ່ຖ້ວຍ. ຕາມທັມມະດາຊາວບ້ານເຮັດບ່ວງແລະຈອງດ້ວຍກະໂປະໝາກພ້າວ.

ມ.ສ. ສແວງສຸກ

ຄົກແລະສາກ

ຂຽງແລະພ້າ

ຫມໍ້ຫນຶ້ງແລະຫວດ



ກ່ອງເຂົ້າ

ຫມໍ້ຂາງ



ຕູ້ເກັບເຄື່ອງກິນ



ພາເຂົ້າ



ກະຕ່າຍ

3.31 ອາຫານການກິນຂອງຄົນລາວ.

ປະເທດລາວເປັນປະເທດທີ່ມີອາກາດຮ້ອນອົບເອົ້າຊຶ່ງເຮັດໃຫ້ອາຫານການກິນບູດແລະເນົ່າໄວ ອີກປະການນຶ່ງກໍຍ້ອນວ່າບໍ່ມີຕູ້ເຢັນຫລືເຄື່ອງເກັບເຄື່ອງກິນດີພຽງພໍ. ດ້ວຍເຫດນີ້ພວກແມ່ຄົວລາວ ຢູ່ຕາມເມືອງໃຫຍ່ຕ້ອງອາໄສຕລາດຊື້ເຄື່ອງຢູ່ຂອງກິນມາກິນ ແລະກໍຈໍາເປັນຕ້ອງໄປຕລາດທຸກໆມື້. ມື້ລະເທື່ອ ຫລືສອງເທື່ອ. ສໍາຫລັບຄອບຄົວໃຫຍ່ ເຖິງແມ່ນວ່າຈະມີຕູ້ເຢັນໃຫຍ່ປານໃດກໍຕາມ ຂເຈົ້າກໍຕ້ອງໄດ້ໄປຕລາດທຸກມື້ເໝືອນຄົນອື່ນ ເພື່ອໄດ້ເຄື່ອງກິນສົດມາກິນ. ແຕ່ສິ່ງສໍາຄັນທີ່ສຸດກໍຄືຂເຈົ້າແພງບ່ອນຕູ້ເຢັນໄວ້ໃສ່ຢ່າງອື່ນເຊັ່ນ: ໃສ່ແກ້ວນໍ້າກິນ ຂອງຫວານ ຜັກບາງຢ່າງ ແລະກໍແພງບ່ອນໄວ້ເຮັດນໍ້າກ້ອນ ແທນທີ່ຈະເອົາຊີ້ນ ປາແຊ່ເຢັນໄວ້ກິນມື້ໜ້າ. ສ່ວນພວກຄອບຄົວຢູ່ຕາມບ້ານນອກດົນໆຂເຈົ້າຈຶ່ງໄປຕລາດເທື່ອນຶ່ງເພື່ອຊື້ຊີ້ນງົວ ຄວາຍ ໝູ ແລະເຄື່ອງທີ່ບໍ່ມີໄປກິນ. ປູ ປາ ທີ່ຂເຈົ້າໄດ້ມາກິນ ລ້ວນແລ້ວແຕ່ລ້ຽງເອົາເອງ ຫລືອອກໄປທົ່ງໄຮ່ທົ່ງນາຫລືເຂົ້າປ່າເຂົ້າດົງຊອກຫາມາກິນ ແລະລາງເທື່ອຂເຈົ້າກໍຊື້ຊີ້ນໄທບ້ານດຽວກັນນັ້ນ ເວລາຂເຈົ້າຂ້າງົວ ຄວາຍ ໝູແລະອື່ນໆຂາຍ.

ຕາມທັມມະດາແລ້ວ ຄົນລາວທົ່ວໄປເປັນຊົນຊາດທີ່ມັກຢູ່ງ່າຍກິນງ່າຍ ພວກແມ່ຄົວລາວເຮັດກິນໂດຍທັມມະຊາດທີ່ສຸດ ຄືໃຊ້ເຄື່ອງຂອງທີ່ຫາມາໄດ້ຕາມທ້ອງຖິ່ນນັ້ນໆ ຫລືມີຢູ່ອ້ອມແອ້ມເຮືອນເຮັດກິນ ຫລື ເຮັດກິນຕາມຂອງທີ່ມີໃນຣະດູການ. ຕົວຢ່າງໃນຣະດູຝົນ ໄທບ້ານກໍເຂົ້າປ່າຫາໜໍ່ໄມ້ ໜໍ່ຂ່າ ແລະຜັກຕ່າງໆມາກິນ ໜໍ່ໄມ້ທີ່ຫາມາໄດ້ຂເຈົ້າກໍເຮັດແກງ ແຈ່ວ ຂົ້ວໃສ່ຊີ້ນຕ່າງໆ ຕົ້ມປອກຈຸແຈ່ວປາແດກ ພົມ ແລະໝັກເປັນຕົ້ນ. ຄົນຫາກໄດ້ຫລາຍເຫລືອກິນ ຂເຈົ້າກໍເຮັດໜໍ່ໄມ້ສົ້ມ ໜໍ່ໄມ້ດອງ ໜໍ່ແຊ່ ຫລືຕົ້ມປອກແຜ່ຕາກແດດ ເອົາໄວ້ກິນຍາມບໍ່ມີ. ເວລາຂາດປາກິນໄທບ້ານກໍໄປຫາປາຕາມຫ້ວຍໜອງຄອງບຶງຕ່າງໆມາຂັງໄວ້ກິນ ຊຶ່ງລາງເທື່ອກໍກຸ້ມເປັນຫລາຍໆມື້. ຍາມໃດໝານຫາໄດ້ຫລາຍ ຂເຈົ້າກໍຄືແຜ່ໃສ່ເກືອຕາກແດດໄວ້ກິນແຫ້ງ ຢ້າງໄຟໄວ້ ເຮັດສົ້ມ ຫລືວ່າເຮັດປາແດກ ນໍ້າປາ ເພື່ອເກັບໄວ້ກິນດົນໄດ້.

ອາຫານການກິນຂອງຄົນລາວ.(ຕໍ່)

ເວລາຫວ່າງວຽກນາ ພວກພໍ່ມາກໍພາກັນເຂົ້າປ່າໄປໂທ່ເນື້ອລ່າສັດເອົາກວາງ ຟານ ກະຕ່າຍ ກະຮອກ ແລະໄກ່ປ່າມາເຮັດລາບກິນ. ເທື່ອໃດໄດ້ຫລາຍຄືໄດ້ກວາງໄດ້ຟານດັ່ງນັ້ນຂເຈົ້າມັກເຮັດໝ້ຳ ຊີ້ນຫລອດໄວ້ໄປຂາຍຫລືກິນໃນຄອບຄົວເອງ.

ເຄື່ອງບໍຣິໂພກທຸກຊນິດທີ່ໄດ້ກ່າວມານີ້ ເຖິງແມ່ນວ່າຊາວເມືອງໃຫຍ່ໄປຊຸດຄົ້ນຊອກຫາມາກິນດ້ວຍຕົນເອງບໍ່ໄດ້ ແຕ່ກໍມີຂາຍຢູ່ຕາມຫ້ອງຕລາດຕ່າງໆຕາມຣະດູການທີ່ຫາໄດ້ ທັງມີໃຫ້ເລືອກຕາມໃຈມັກແລະຕາມຄວາມສາມາດທີ່ຈະຊື້ໄດ້ຢ່າງຫລວງຫລາຍ ນອກຈາກນັ້ນຕາມຕລາດເມືອງໃຫຍ່ຍັງມີເຄື່ອງກິນທະເລເຊັ່ນ: ກະປູ ປາທູ ກຸ້ງ ປາອື່ຣີ ຫອຍແຄງ ຊຶ່ງພວກບ້ານນອກບໍ່ມີໂອກາດຈະໄດ້ກິນ ເພາະເປັນອາຫານແພງພິເສດແລະສັ່ງຊື້ເຂົ້າມາຂາຍຈາກປະເທດອື່ນ.

ມ.ສ. ສແວງສຸກ

3.32 ອາຫານການກິນຂອງຄົນລາວ(ຕອນສອງ).

ຄົນລາວສ່ວນມາກກິນເຂົ້າມື້ນຶ່ງສາມຄາບຄື ເຂົ້າເຊົ້າ ເຂົ້າສວາຍ ແລະເຂົ້າແລງ. ເວລາຂະເຈົ້າເຊົາເມື່ອຍນັ່ງຫລິ້ນເບີຍເຢັນ ຫລືບ່າວສາວຊຸມແຊວກັນຍາມສວາຍຂະເຈົ້າກໍພາກັນກິນອາຫານຫວ່າງ ແລະມີຫລາຍຊະນິດດ້ວຍກັນຄື: ຕຳສົ້ມໝາກຮຸ່ງ ກິນສົ້ມໝາກຂາມອ່ອນ ເຂົ້າໂຄບ ໝາກກ້ວຍຈີ່ ຈືນກ້ວຍ ເປັນຕົ້ນ.

ອາຫານທີ່ຄົນລາວມັກກິນກັນສ່ວນມາກເປັນອາຫານເຜັດ ມີຣົດໄປທາງຂ້ອນຂ້າງເຄັມ ແລະອາຫານເກືອບທຸກເນວມີຜັກດິບຫລືສຸກກິນກັບ. ອາຫານບາງຊະນິດກໍມີຣົດທັງເຜັດສົ້ມແລະເຄັມ ເຊັ່ນຕຳສົ້ມໝາກຮຸ່ງ. ອາຫານອີກບາງຊະນິດກໍມີເຄື່ອງຫອມແລະຜັກຫອມເສີມໃສ່ນຳຫລາຍໆ ເພື່ອໃຫ້ມັນງາມແລະຊ່ອຍຂ້າກິ່ນຄາວອີກ ຕົວຢ່າງແມ່ນລາບ ຍຳ ຊຸບເປັນຕົ້ນ. ຄົນລາວເກືອບທຸກຄົນມັກກິນອາຫານເຜັດ ອາຫານບາງຊນິດກໍເຜັດຫລາຍແລ້ວ ແຕ່ກໍຍັງມີບາງຄົນກິນໝາກເຜັດກັບອີກ. ການຄົວກິນອາຫານທຸກສິ່ງທຸກຢ່າງທີ່ເລົ່າມານີ້ກໍບໍ່ຍາກເກີນໄປດອກ ແຕ່ຕ້ອງໃຊ້ເວລາດົນເພື່ອຟັກຊອຍແລະຕຳເຄື່ອງປຸງຕ່າງໆ ແລະຕິດເຕົາດັງໄຟ ແລະລາງເທື່ອໄຟກໍບໍ່ຮ້ອນສມ່ຳສເມີກັນອີກກໍແຫ່ງເຮັດໃຫ້ເສັຽເວລາດົນ.

ແຕ່ກ່ອນຊາວລາວທັງຫລາຍກິນເຂົ້າໃສ່ພາເຂົ້າ ເພີ່ນເອົາຖ້ວຍ ຈານເຄື່ອງກິນຕັ້ງໃສ່ເທິງພາເຂົ້າຫວາຍ ແບບມີຕີນສູງຫລືແບບພາຄາດຕີນຕ່ຳກໍມີ ແລະຍັງນິຍົມກິນກັນແບບນີ້ຈົນຮອດທຸກມື້ນີ້. ສ່ວນຄົນປັດຈຸບັນໃນເມືອງໃຫຍ່ໄດ້ປ່ຽນແປງຊາວໃນເມືອງຫັນໄປກິນເຂົ້າຢູ່ໂຕະຂອງແບບຕາເວັນຕົກ ແຕ່ກໍມີບາງຄອບຄົວຍັງກິນໃສ່ທັງພາເຂົ້າແລະໂຕະ ແລ້ວແຕ່ໃຈປະສົງຂອງຂະເຈົ້າແລະເໝາະສົມກັບເວລາ ຄືເວລາເຊີນແຂກຄົນຕ່າງປະເທດມາຮັບປະທານອາຫານຢູ່ເຮືອນ ເຈົ້າພາບຢາກເຮັດໃຫ້ຖືກໃຈແລະສົມກຽດຜູ້ເປັນແຂກກໍພາກິນຢູ່ໂຕະ. ຄັນຫາກພີ່ນ້ອງຜູ້ເຖົ້າຜູ້ແກ່ທີ່ບໍ່ເຄີຍກິນຢູ່ໂຕະມາຢ້ຽມຢາມຂະເຈົ້າກໍພາກິນຢູ່ພາເຂົ້າ.

ການກິນຈາກພາເຂົ້າ ເມື່ອເຖິງຍາມກິນເຂົ້າມາຜູ້ຊາຍນັ່ງຂັດສມາດ ຜູ້ຍິງນັ່ງພະແພບອ້ອມພາເຂົ້າຫວາຍຕັ້ງຢູ່ສາດກາງເຮືອນ. ຄັນຈົກເຂົ້າຢູ່ຕີບບໍ່ເຖິງ ຜູ້ທີ່ນັ່ງຢູ່ໃກ້ກໍຈົກຍື່ນໃຫ້ເດັກນ້ອຍຕໍ່ກັນໄປ. ຕົວຢ່າງ

ອາຫານການກິນຂອງຄົນລາວ(ຕອນສອງຕໍ່).

ອາຫານເຊົ້າ ຂະເຈົ້າປັ້ນເຂົ້າເຊົ້າກັບປີ້ງໄກ່ຫລືຊີ້ນຫລອດຈີ່ກັບແຈ່ວບອງຫລືແຈ່ວນ້ຳປາແລະເຂົ້າໜຽວ; ຫລືຂົ້ວໄຂ່ຫລືຈືນໄຂ່ກັບແຈ່ວແລະເຂົ້າໜຽວ; ຫລືປີ້ງປາກັບສົ້ມຜັກກາດກິນກັບເຂົ້າໜຽວເປັນຕົ້ນ. ສ່ວນອາຫານຄາບເຂົ້າສວາຍແລະຄາບເຂົ້າແລງສອງຄາບນີ້ ບໍ່ແຕກຕ່າງກັນຫລາຍ. ແຕ່ອາຫານທີ່ຂາດຈາກພາເຂົ້າຂອງຄົນລາວບໍ່ໄດ້ແທ້ໆນັ້ນແມ່ນແກງ ຜັກກັບຫລາຍແນວແລະເຂົ້າໜຽວຫລືເຂົ້າຈ້າວ. ແລະຄົນລາວສ່ວນມາກມັກກິນເຂົ້າໜຽວຫລາຍກວ່າເຂົ້າຈ້າວ. ນອກຈາກນັ້ນແລ້ວ ກໍມີອາຫານແນວອື່ນອີກກິນນຳມີຄື: ເອາະ ປົ່ນ ຂົ້ວ ໝົກ ພັນ ຊຸບ ຕົ້ມເຄັມ ກ້ອຍ ແລະລາບເປັນຕົ້ນ. ຕົວຢ່າງຂອງອາຫານຄາບໜຶ່ງ ຢູ່ໃນພາເຂົ້າແລງມີບ່ວງຫລາຍຄັນແລະຖ້ວຍຫລາຍໃບຊຶ່ງເພິ່ນໃສ່ລາບປ່າ ແກງສົ້ມປາໃສ່ໃບພາກຂາມສົ້ມອ່ອມແລະຊາມຜັກ. ເພິ່ນຈົກເອົາເຂົ້າໜຽວຢູ່ໃນຕິບຫລືກ່ອງທີ່ຕັ້ງຢູ່ຂ້າງເພິ່ນ ເຮັດເປັນຄຳ(ກ້ອນ) ນ້ອຍໆພໍຫລົມປາກ ແລ້ວທຸກໆຄົນຄຸ້ຍເອົາລາບຢູ່ໃນຖ້ວຍໃບດຽວກັນ. ລາງເທື່ອເພິ່ນກໍເອົາຜັກຄຸ້ຍລາບກໍມີ ແລ້ວຈິດແກງຢູ່ໃນຖ້ວຍແກງໃຫຍ່ໃບດຽວກັນດ້ວຍບ່ວງ. ຫລັງຈາກກິນເຂົ້າແລ້ວໆ ເພິ່ນກໍກິນພາກໄມ້ ຂນົມຫລືຂອງຫວານແນວໃດແນວໜຶ່ງ ແລ້ວດື່ມນ້ຳເປັນມ້ວນທ້າຍ.

ມ.ສ. ສແວງສຸກ

3.33 ແກງສົ້ມຫົວປາໃສ່ຜັກກາດ (ສຳລັບ ໕ ຄົນ).

ເຄື່ອງປະກອບ: ຫົວປາ (໑ ຫົວຣາມ) ຜັກກາດຂາວສົດ (໖ ຕົ້ນຣາມ) ຫລື ຜັກກາດຂຽວ (໓-໔ ຕົ້ນຣາມ) ໝາກເຜັດດິບຫລືແຫ້ງ (໑/໖ ພ່ອຍ) ເກືອ ປາແດກ ຫລືນ້ຳປາ ແປ້ງນົວ (໑/໖ ບ່ວງຊາ) ຜັກຊີ (໓-໔ ຕົ້ນຣາມ).

ຈັດເຄື່ອງແກງ: ເອົາຫົວປາລ້າງນ້ຳດີໆ ແລ້ວຕັດເປັນທ່ອນໆລະ ໖ ຊັ້ມີໃສ່ຖ້ວຍໄວ້. ເອົາຜັກກາດຜັກຊີໄປລ້າງແລ້ວຊອຍເປັນທ່ອນຍາວປະມານ ໖ ຊັ້ມີແລ້ວເອົາໃສ່ຖ້ວຍໄວ້. ລ້າງໝາກເລັ່ນແລ້ວຊອຍເປັນປ່ຽງໜາປະມານເຄິ່ງຊັ້ມີ.

ວິທີແກງ ເອົານ້ຳ(໓ ຖ້ວຍນ້ອຍ)ໃສ່ໝໍ້ຕັ້ງໄຟ ເອົາເກືອໃສ່ຈັກສອງຫຍິບນ້ອຍ ທຸບແລະຂອດຫົວສີໃຄໃສ່ໝໍ້ ເມື່ອຟົດແລ້ວ ເອົາຫົວປາທີ່ລ້າງດີໆແລະຕັດໄວ້ນັ້ນມາໃສ່.ພໍທ່ອນປາໃກ້ຈະສຸກ ເອົາໝາກເຜັດ ຜັກກາດ ຜັກຊີ ແລະໝາກເລັ່ນທີ່ຊອຍໄວ້ມາໃສ່. ພໍຜັກຫຍຸບແລ້ວ ເອົານ້ຳປາຫລືປາແດກໃສ່ຈັກໜ້ອຍແລະແປ້ງນົວໃສ່ ແລ້ວຊີມເບິ່ງໃຫ້ນົວພໍດີ ຄັນຣົດແຊບພໍດີແລ້ວ ເອົາຜັກອີ່ຕູ່ພຶກໃສ່ອັດຝາໝໍ້ ແລ້ວປົງລົງຈາກເຕົາໄຟ ຕັກໃສ່ຖ້ວຍໄປກິນໄດ້.

ໝາຍເຫດ.ຖ້າຢ້ານແກງເຜັດ ເວລາຊີມໄດ້ຣົດເຜັດພ້ອຍນຶ່ງແລ້ວໃຫ້ຕັກໝາກເຜັດອອກໂລດ.

ນ.ສ. ສແວງສຸກ

3.34 ເຂົ້າປຸ້ນ.

ອາຫານເບື້ອງນຶ່ງອີກທີ່ຄົນລາວມັກເຮັດກິນ ເຮັດລ້ຽງຜູ້ຄົນເປັນຈຳນວນຫລາຍໄດ້ດີ ທັງເອງານໂຕະ ງານຕາອີກກໍແມ່ນເຂົ່າປຸ້ນ ແລະມີຫລາຍຊນິດດ້ວຍກັນ ຄື: ເຂົ້າປຸ້ນນ້ຳແຈ່ວ ເຂົ້າປຸ້ນນ້ຳກະທິໝາກພ້າວ ເຂົ້າປຸ້ນນ້ຳຊີ້ນ ເຂົ້າປຸ້ນນ້ຳປາແລະອື່ນໆ. ເຂົ້າປຸ້ນທຸກຊນິດມີສ້າ(ເຫຍື່ອ) ກິນກັບຫລາຍທັງມີນ້ຳຈານສະເພາະຂອງເຂົ້າປຸ້ນແຕ່ລະແນວ.

ເຂົ້າປຸ້ນນ້ຳກະທິໝາກພ້າວ(ສຳຫລັບ ໑໐ ຄົນ).

<u>ເຄື່ອງປະກອບ</u>: ເຂົ່າປຸ້ນ (໔ ກິໂລ) ຊີ້ນປາ (໑/໒ ກິໂລ) ຊີ້ນໝູລ້ອນໆ (໑/໒ ກິໂລ) ໝາກພ້າວແຫ້ງ (໑ ໜ່ວຍ) ໝາກເຜັດແຫ້ງ (໕ ໜ່ວຍ) ຂ່າ (໓ ຝານ) ຫົວຜັກບົ່ວນ້ອຍແຫ້ງ (໕ ຫົວ) ຫົວຜັກທຽມແຫ້ງ (໑/໒ ຫົວ) ໃບຂີ້ຫູດ (໔-໕ໃບ).

<u>ຜັກສຳຫລັບເຮັດສ້າ</u>: ໝາກປີ (ຫົວນຶ່ງ) ຖົ່ວຍາວ (ກຳນຶ່ງ) ຖົ່ວງອກ (໑/໒ ກິໂລ) ຜັກບົ້ງ (ກຳນຶ່ງ) ກະລຳປີ (໑/໒ ຫົວຂນາດກາງ) ຫົວກາຣົດ ຫອມປ້ອມ ໃບຜັກບົ່ວ ຫອມຫົ້ ຫອມແປ້ວ (ແນວລະໜ້ອຍ).

<u>ກຣມເຄື່ອງປະສົມນ້ຳເຂົ້າປຸ້ນ</u>:໑- ເອົາໝາກເຜັດແຫ້ງມາແກະແກ່ນຖິ້ມ ແລ້ວແຊ່ນ້ຳໃຫ້ໄມ່ຈຶ່ງຟັກໃສ່ຂຽງໃຫ້ມຸ່ນແລະປຽນປະໄວ້.

໒- ເອົາຊີ້ນໝູມາຟັກໃຫ້ມັນແຫລກແລ້ວປັ້ນເປັນກ້ອນທໍ່ກຳປັ້ນໃສ່ຖ້ວຍໄວ້.

໓- ເອົາໝາກພ້າວໄປຜ່າແລ້ວຂູດໃສ່ກະຕ່າຍ ຫລືຊອຍເປັນຕ່ອນ (ໝາທໍ່ນິ້ວມື) ແລ້ວບີດໃສ່ຈັກບີດກໍໄດ້ (ເອົານ້ຳໃສ່ພໍ້ຖ້ວມໝາກພ້າວຈຶ່ງບີດງ່າຍ) ຫລັງຈາກນັ້ນປັ້ນເອົາກະທິນ້ຳກົກຕອງດ້ວຍກະເຊາະໃສ່ຖ້ວຍແຍກໄວ້ຕ່າງຫາກ (ຈັກຖ້ວຍນ້ອຍນຶ່ງ) ນ້ຳຕໍ່ໄປແລະນ້ຳປາຍນັ້ນຄັນແລ້ວ ປັ້ນຕອງໃສ່ໝໍ້ແຫວງໃຫຍ່ ຄັ້ນອີກຈັກສອງສາມນ້ຳຈົນໃຫ້ນ້ຳກະທິອອກໝົດ ປະພໍ້ໄວ້ທັ້ນກ່ອນ.

໔- ປອກຫົວຜັກບົ່ວຜັກທຽມ ຊອຍແລ້ວເອົາໄປຕຳໃສ່ຄົກໃຫ້ແຫລກ ແລ້ວເອົາໝາກເຜັດທີ່ຟັກໄວ້ນັ້ນມາ

ເຂົ້າປຸ້ນ(ຕໍ່).

ຕຳໃສ່ປົນກັນແລະປະໄວ້ຫັ້ນກ່ອນ.

<u>ວິທີເຮັດນ້ຳເຂົ້າປຸ້ນ</u>: ໑- ເອົາໝໍ້ນ້ຳກະທິນ້ຳປາຍຕັ້ງໄຟ (ກະເບິ່ງໃຫ້ນ້ຳຖ້ອຍນ້ອຍນຶ່ງຕໍ່ຄົນຜູ້ນຶ່ງ ຖ້າບໍ່ພໍໃຫ້ເອົານ້ຳລາຕື່ມ) ແລ້ວເອົາຂ່າກັບເກືອໜ້ອຍນຶ່ງໃສ່ ເມື່ອຟົດແລ້ວເອົາປາແລະກ້ອນຊີ້ນໝູລົງໃສ່ໝໍ້ ອັດໝໍ້ແລ້ວລີ່ໄຟລົງໃຫ້ໝໍ້ຟົດຄ່ອຍໆ.

໒- ເອົາໝໍ້ຂາງຄ້າງໄຟ ຂ້ຽວນ້ຳຫົວກະທິທີ່ຈົ້ງໄວ້ນັ້ນ (ເຄິ່ງນຶ່ງ) ຈົນໃຫ້ມັນແຫ້ງລົງເປັນນ້ຳມັນຫັງຫອມດີ ຈຶ່ງເອົາເຄື່ອງຫອມຢູ່ຄົກນັ້ນລົງຈືນໃສ່ ຫອມແລະເຫລືອງດີແລ້ວປົງລົງ ເອົາຝາໝໍ້ອັດໄວ້ກ່ອນ.

໓- ເມື່ອປາສຸກແລ້ວ ຕັກອອກມາໄຈ້ກ້າງອອກໃຫ້ຄັກໆແລ້ວຕຳໃຫ້ລະອຽດ ບາດນັ້ນຕັກເອົາກ້ອນຊີ້ນໝູຢູ່ໃນໝໍ້ນ້ຳເຂົ້າປຸ້ນອອກມາຕຳໃສ່ກັບຊີ້ນປາໃຫ້ລະອຽດ.

໔- ຍົກໝໍ້ຂາງເຄື່ອງຫອມຄ້າງໄຟອີກ ຮ້ອນແລ້ວເອົາຊີ້ນປາກັບຊີ້ນໝູທີ່ຕຳແລ້ວນັ້ນຈືນໃສ່ກັນຈົນຫອມ. ປົງໝໍ້ລົງແລ້ວຕັກຄືນໃສ່ໝໍ້ນ້ຳເຂົ້າປຸ້ນ.

໕- ເອົາໃບຂີ້ຫູດໃສ່ ແລ້ວຊີມເບິ່ງໃຫ້ເຄັມນ້ອຍນຶ່ງແລະນົວເຜັດຕາມໃຈມັກ. ເມື່ອພໍດີພົດທຸກຢ່າງແລ້ວ ເອົານ້ຳກະທິນ້ຳກົກທີ່ຈົ້ງໄວ້ລົງໃສ່ໝໍ້ນ້ຳເຂົ້າປຸ້ນ (ຢ່າຄົນໝໍ້) ເອົາຝາປິດດີໆແລ້ວປົງລົງຈາກໄຟແລະຕັກໄປກິນໄດ້.

<u>ການຈັດສ້າເຂົ້າປຸ້ນ</u>: ໑- ຊອຍພາກປີ ພາກຖົ່ວຍາວ ກະລຳປີ ກາຣົດ (ແຕ່ລະເບື່ອງເອົາແຍກກັນໄວ້ຕ່າງຫາກ ຫລືຈະເອົາປົນໃສ່ກັນໝົດກໍໄດ້).

໒- ເດັດໃບຫອມແລ້ວລ້າງດີໆ (ປະສົມກັນກໍໄດ້).

໓- ຊອຍໃບຜັກບົ້ວແລບໆ.

ບັດນີ້ ເອົາຜັກທີ່ຊອຍນັ້ນທຸກຢ່າງມາກອງໄວ້ຊາມແບນໃຫຍ່ຫລືພາຖາດເປັນຍ່ອນໆ ເພື່ອໃຫ້ຜູ້ຄົນຈັບເອົາຜັກທີ່ຂເຈົ້າມັກໄດ້ງ່າຍໆ.

ເຂົ້າປຸ້ນ.(ຕໍ່)

<u>ວິທີກິນ</u>: ເອົາສ້າເຂົ້າປຸ້ນໃສ່ຖ້ວຍແກງໃຫຍ່ (ແນວລະພ້ອຍ) ເອົາເຂົ້າປຸ້ນຈັກ (ນີ ຈັບຣານ) ວາງໃສ່ເທິງສ້າ ເອົາຈອງຄົນນ້ຳເຂົ້າປຸ້ນຢູ່ຖ້ວຍກາງຈັກພ້ອຍ ໃຫ້ຊິ້ນຂຶ້ນມາເທິງ ແລ້ວຕັກໃສ່ຖ້ວຍພໍຖ້ວມເຂົ້າປຸ້ນໃຊ້ບ່ວງຄົນໃຫ້ເຂົ້າກັນດີແລ້ວເຊີນກິນແຊບ.

<u>ໝາຍເຫດ</u>:໑- ສ້າເຂົ້າປຸ້ນມີຜັກຫລາຍແນວທີ່ໃດແທ້ງດີ ແຕ່ຖ້າບໍ່ມີຫລາຍມີແນວນຶ່ງຫລືສອງແນວກໍໄດ້ແລ້ວ.

<u>ໝາຍເຫດ</u>:໒- ຢູ່ເມືອງລາວ ເຂົ້າປຸ້ນສົດກິນໄດ້ໂລດຊື້ໄດ້ຢູ່ຕາມຕລາດ ສ່ວນຢູ່ສຫະຣັດອະເມຣິກາ ຊື້ເສັ້ນແຫ້ງເປັນທີ່ໄດ້ຢູ່ຕາມຮ້ານຂາຍເຄື່ອງກິນຈີນ ຍີ່ປຸ່ນ ແລະເກົາຫລີ ແຕ່ຕ້ອງໄດ້ມາຕົ້ມເສັຽກ່ອນແລະໄດ້ຈັບທົວເຂົ້າປຸ້ນເອົາເອງ.

ມ.ສ. ສແວງສຸກ

3.35 ລາບ.

ອາຫານເບື້ອງນຶ່ງທີ່ເຈົ້າພາບພູມໃຈຢາກເອົາສະແດງອອກໜ້າອອກຕາ ກໍແມ່ນລາບແລະອາດຈະເວົ້າໄດ້ວ່າເປັນອາຫານປະຈຳຊາດ. ລາບເປັນອາຫານອັນແຊບແລະເໝາະສົມທັງນິຍົມກັນເຮັດ ສຳລັບລ້ຽງຜູ້ຄົນເຈົ້ານາຍຜູ້ໃຫຍ່ແລະໝູ່ເພື່ອນທີ່ຮັກແພງມາຢ້ຽມຢາມເຮືອນ ຫລືເວລາເຮັດບຸນເຮັດທານຕ່າງໆ ຫລືອ່າເຮັດກິນໃນຄອບຄົວ ຫລືໃນໂອກາດສຳຄັນຊຶ່ງຊາວລາວບາງຈຳພວກຖືວ່າຈະນຳໂຊກລາບມາໃຫ້ຂເຈົ້າ ຄື: ເຮັດລາບປາບຶກ ປາຄູນໃນໂອກາດປີໃໝ່ລາວດັ່ງນີ້ເປັນຕົ້ນ ແລະລາງເທື່ອກໍເຮັດກິນໃນຄອບຄົວເວລາທີ່ຂເຈົ້າມີຊື່ນງານແລະຄິດຢາກກິນ. ລາບທີ່ຊາວລາວພາກັນເຮັດກິນມີຫລາຍຊນິດ ແຕ່ແບ່ງອອກເປັນສອງຈຳພວກໃຫຍ່ໆ ຄື: ລາບເຫລວ ແລະລາບສ້າຫລື້ກອຍ ແລະເຮັດດ້ວຍຊີ້ນສັດຫລາຍແນວ ຄື: ຊີ້ນສັດປ່າຕ່າງໆ ຊີ້ນປາໜັງ ປາເກັດ ຊີ້ນຄວາຍ ຊີ້ນງົວ ໝູ ເປັດ ແລະໄກ່ ເປັນຕົ້ນ. ຕາມທັມມະດາ ເວລາເຮັດລາບເພິ່ນມັກເຮັດແກງກິນນຳຊຶ່ງເພິ່ນເອົາກະດູກທີ່ລືບເອົາຊີ້ນໄປເຮັດລາບນັ້ນຕົ້ມເຮັດເປັນນ້ຳແກງ.

ນອກຈາກນັ້ນເພິ່ນຍັງມີເຂົ້າໜຽວແລະຜັກກັບຫລາຍແນວກິນກັບອີກ.

<u>ເຄື່ອງປະກອບ:</u> ລາບເຫລວ (ສຳຫລັບ ໖ ຄົນ).

ເນື້ອປາ (໑/໒ ກິໂລ) ປາແດກ (໒ ບ່ວງໃຫຍ່) ນ້ຳປາ ແປ້ງນົວ ໝາກເຂືອຫວານ (໔-໕ ໜ່ວຍ) ໝາກເຜັດຜົງ (໑/໒ ບ່ວງໃຫຍ່) ຂ່າສົດ (໕ ຝານ) ຫົວຜັກທຽມແຫ້ງ (ຫົວນຶ່ງ) ຜັກບົ່ວຫົວນ້ອຍ (໔ ຫົວ) ຜັກຫອມ: ຫອມທ້ ຫອມປ້ອມ ຫອມແພວ ໃບຜັກບົ່ວສົດ (ແນວລະໜ້ອຍ) ຜັກກັບ: ຜັກສລັດຂົມ ກະລຳປີ ໝາກເຜັດຂີ້ໜູ ໝາກເຂືອເປົ່າ ຜັກຊີ ຜັກກາດ ຜັກບົ້ງ ໝາກແຕງ ກາຣົດ ຫົວຜັກກາດແດງ ຜັກນ້ຳ (ແນວລະໜ້ອຍ).

<u>ກຽມເຄື່ອງປະກອບ</u>: ໑- ເຂົ້າຂົ້ວ ເອົາເຂົ້າສານຈ້າວຫລືໜຽວໄປຂົ້ວ ເຮັດໄຟອ່ອນໆ ໃຫ້ເຂົ້າດຳແດ່ໜ້ອຍນຶ່ງ ແລ້ວເອົາໄປຕຳຫລືບົດຈົນໃຫ້ມຸ່ນລະອຽດດີແລ້ວໃສ່ຖ້ວຍໄວ້.

ລາບ(ຕໍ່).

໒- ພາກເຜັດຜົງ ເອົາພາກເຜັດໃຫຍ່ແຫ້ງໄປຂາງໄຟ ຫລືຂົ້ວໃສ່ໝໍ້ຂາງໃຫ້ກອບ (ຢ່າໃຫ້ໄໝ້ໃຊ້ໄຟອ່ອນໆ) ແລ້ວເອົາມາຕຳຫລືບົດໃຫ້ລະອຽດ ແລ້ວໃສ່ຖ້ວຍໄວ້.

໓- ເອົາຫົວຜັກບົ່ວຜັກທຽມແຫ້ງແລະພາກເຂືອໝົກໄຟໃຫ້ສຸກແລະໄໝ້ໜ້ອຍນຶ່ງ.

໔- ນ້ຳລາບ (ລາບແຫລວຕ້ອງການນ້ຳລາບຫລາຍ).

ກ. ເອົານ້ຳໃສ່ໝໍ້ (ຈັກ ໔ ຖ້ວຍນ້ອຍ) ຕັ້ງໄຟ ເອົາເກືອໃສ່ (ຢິບນ້ອຍນຶ່ງ) ນ້ຳຟົດແລ້ວ ຈຶ່ງເອົາກະດູກປາ ຫົວປາໃສ່ ຖ້າມີໄສ້ ພຸງ ແລະໜັງກໍເອົາໃສ່ ເມື່ອຟົດດີແລ້ວຊີມເບິ່ງ ຖ້າບໍ່ນົວເອົານ້ຳປາໃສ່ຕື່ມແລະເອົາແປ້ງນົວໃສ່ຈັກໜ້ອຍ ໃຫ້ມີຣົດເຄັບຈັກໜ້ອຍແລ້ວປົງລົງໄວ້ໃຫ້ມັນເຢັນ (ພໍອຸ່ນໃຫ້ມືຈຸ່ມໄດ້) ເຄື່ອງໃນນັ້ນຕັກອອກມາຊອຍໄວ້ໃສ່ລາບ.

ຂ. ເອົາປາແດກປານ້ອຍມາຂຽວຈົນໂຕປາເປື່ອຍພົດແລະຫອມດີ ເອົານ້ຳໃສ່ນ້ອຍນຶ່ງ ຟົດແລ້ວ ຈຶ່ງເອົາມາຕອງກ້ວຍກະເຊາະປາແດກໃສ່ຖ້ວຍນ້ອຍໄວ້.

໕- ເອົາຊີ້ນປາມາຊອຍແລບໆ ແລ້ວຟັກໃສ່ກັບຂ່າ ແຫລກແດ່ແລ້ວຟັກພາກເຂືອທີ່ໝົກໄວ້ໃສ່ ພໍຟັກແຫລກດີ ແລ້ວເອົາຝາດລາບໃສ່ແອ່ງໄວ້ແລະເອົາພາກເຜັດຜົງໂຮຍໜ້າ ເອົາຝາປິດແອ່ງໄວ້.

໖- ຊອຍຫົວຜັກບົ່ວຜັກທຽມໝົກແລະຜັກຫອມຕ່າງໆທີ່ລ້າງສະເດັດນ້ຳແລ້ວນັ້ນໃສ່ຖ້ວຍໄວ້.

໗- ລ້າງຜັກໃສ່ກະເຊາະໃຫ້ສະເດັດນ້ຳໄວ້.

ວິທີກິນລາບ: ໑- ໃນແອ່ງທີ່ມີຝາດລາບ ເອົານ້ຳລາບທີ່ອຸ່ນຢູ່ນັ້ນຖອກໃສ່ເທື່ອລະໜ້ອຍແລ້ວກິນ ແລະກະເບິ່ງບໍ່ໃຫ້ແຂ້ນແລະບໍ່ໃຫ້ແຫລວຫລາຍ ຫລືລອງເອົາກໍໄດ້ ຄື ຕັກໃສ່ບ່ວງແລ້ວຖອກລົງພໍໄຫລຊ້າໆກໍພໍດີແລ້ວ.

໒- ເອົາເຄື່ອງໃນທີ່ຊອຍໄວ້ໃສ່ແລ້ວກິນ.

໓- ເອົາເຂົ້າຂົ້ວໃສ່ແລ້ວກິນ,

ລາຍ(ຕໍ່).

໔- ເອົານ້ຳປາແດກໃສ່ຈັກພ້ອຍແລະຄົນໃຫ້ເຂົ້າກັນດີໆ.

໕- ເອົາເຄື່ອງຫອມ ຜັກຫອມໃສ່ແລ້ວຄົນ ແລ້ວຊີມເບິ່ງຖ້າແຊບແລະນົວດີ ທັງເພລວພໍດີແລ້ວກໍຕັກໃສ່ຖ້ວຍໄປຕັ້ງໃສ່ພາເຂົ້າກິນໄດ້.

ວັດນີ້ ຈັດຜັກກິນກັບໃສ່ຈານ ແລ້ວເອົາໄປໃສ່ພາເຂົ້າ ແລະເຊີນກິນແຊບ.

ມ.ສ. ສແວງສຸກ

3.36 ໜຶ້ງເຂົ້າໜຽວ (ກິນ ໕ ຄົນ).

<u>ເຄື່ອງທີ່ຕ້ອງການ:</u> ໝໍ້ໜຶ້ງ ຫວດ (ໃຊ້ກະເຊາະໃສ່ຜັກກໍໄດ້) ເຂົ້າສານໜຽວ (໔ ກິໂລ) ຕິບເຂົ້າ (ກ່ອງເຂົ້າ), ບົມວີເຂົ່າ (ບໍ່ມີກໍໄດ້).

<u>ວິທີໝ່າເຂົ້າ</u>: ເອົາເຂົ້າສານໜຽວໃສ່ແອ່ງຫລືຊາມໂຫ້ງໃຫຍ່ (ຢ່າໃຫ້ເຕັມ ຈຶ່ງບ່ອນໃຫ້ເຂົ້າໄຄ່ຈັກສາມຂໍ້ມື ຈາກປາກແອ່ງ) ແລ້ວເອົານ້ຳເຢັນຫລືອຸ່ນໃສ່ຈົນເຕັມ ແລ້ວປະໄວ້ຈົນເຂົ້າໄມ່ຄືໃນຣາວ ໔ ຊົ່ວໂມງຫລືດົນທໍ່ໃດແທ່ງດີ ຖ້າມີເວລາຫລາຍຈະເຮັດໃຫ້ເຂົ້າອ່ອນດີ.

<u>ວິທີໜຶ້ງ</u>: ເອົານ້ຳໃສ່ໝໍ້ໜຶ້ງ (ຈັກ ໓ ຂໍ້ມື) ຄ້າງໄຟ (ຣະວັງຢ່າໃຫ້ນ້ຳຟົດຈຸຫວດ) ເອົາເຂົ້າສານທີ່ໝ່າໄມ່ນັ້ນໃສ່ຫວດແລ້ວ ວາງໃສ່ປາກໝໍ້ໜຶ້ງ. ພໍເຂົ້າຂຶ້ນສຸກອ່ອນແດ່ແລ້ວຈຶ່ງຊິກ ເພື່ອປິ້ນເອົາເຂົ້າຢູ່ເທິງລົງໄປໄວ້ລຸ່ມ (ໃຫ້ມັນສຸກສມ່ຳສເມີກັນ ເວລານັ້ນຄັນເຫັນນ້ຳຍັງພ້ອຍກໍໃຫ້ຕື່ມນ້ຳອີກ).

ຖ້າອີກຈັກ ໔໕ ນາທີ. ຄັນເຫັນວ່າສຸກແລ້ວກໍຍົກໄປວີໃສ່ບົມ ແລ້ວເອົາເຂົ້າໃສ່ກ່ອງໄວ້.

ມ.ສ. ສແວງສຸກ

3.37 ເຄື່ອງຫາປາວິທີເຮັດຂ້ອງ.

ຂ້ອງນີ້ເພິ່ນເຮັດດ້ວຍໄມ້ໄຜ່ຊະນິດນຶ່ງເພິ່ນເອີ້ນກັນວ່າໄມ້ປ້ອງ ມາເຫລົາໃຫ້ມັນກົມໆນ້ອຍໆແລ້ວເອົາມາສານຕໍ່ໆກັນຂອງຂ້ອງນີ້ທາງພໍຫລິ່ມນີ້ວກ້ອຍເພິ່ນສານໃຫ້ປຸ້ງອອກ. ແຕ່ວ່າຄໍຂອງຂ້ອງນີ້ນ້ອຍເທົ່າກັບຄໍຄົນທັມມະດາປາກຂອງຂ້ອງນີ້ແຫວອອກໜ້ອຍນຶ່ງແລະມີງາອັດຫູທັງສອງຂ້າງເຮັດດ້ວຍຫວາຍ, ເພື່ອໃຫ້ມັນທົນທານຂ້ອງນີ້ໃຊ້ສຳລັບໃສ່ປາເວລາໄປຫາປາເປັນຕົ້ນ.

ວິທີເຮັດເຂີງ.

ເຂີງນີ້ເຮັດດ້ວຍໄມ້ໄຜ່ ເພິ່ນເອົາໄມ້ໄຜ່ມາຈັກແລ້ວເຫລົາມັນກ້ຽງບໍ່ອ່ອນບໍ່ແຂງແລ້ວເພິ່ນກໍສານຖີ່ແຕ່ບໍ່ຖີ່ເພີ້, ສານໃຫ້ມັນກວ້າງພໍປະມານແລ້ວເພິ່ນເອົາມາກົດເຂົ້າກັນແລ້ວເພິ່ນເອົາໄມ້ທີ່ທົວໂປ້ມືຍາວໆສອງອັນແລ້ວມາມັດອ້ອມປາກເຂີງແລະຄຽນດ້ວຍຫວາຍ ເພື່ອບໍ່ໃຫ້ໄມ້ໄຜ່ທີ່ເອົາມາມັດນັ້ນລຸດອອກ ເຂີງນີ້ໃຊ້ສຳລັບຊ້ອນປາເທົ່ານັ້ນ.

ວິທີເຮັດຊຸ່ມ.

ຊຸ່ມນີ້ເພິ່ນເຮັດດ້ວຍໄມ້ໄຜ່ເກົ່າ ເພິ່ນເອົາໄມ້ໄຜ່ມາຜ່າແລະເຫລົາໃຫ້ເປັນຕີ້ວກົມໆໃຫຍ່ເທົ່ານິ້ວມືທາງຍາວປະມານແຂນນຶ່ງໄມ້ນີ້ເພິ່ນເອົາຫລາຍອັນປະມານ ໓໐ ອັນແລ້ວເພິ່ນເອົາຫວາຍມາທັກກັບໄມ້ໄຜ່ທີ່ເຫລົາໄວ້ນັ້ນ ການທັກນີ້ເພິ່ນບໍ່ໃຫ້ມັນຫ່າງກັນປານໃດ, ຫ່ວາງນຶ່ງພໍຫລິ່ມນິ້ວມືເພື່ອປ້ອງກັນປາໂຕນ້ອຍບໍ່ໃຫ້ມັນລອດອອກໄດ້. ຫລັງຈາກທັກແລ້ວໆເພິ່ນກໍເອົາມາໂກບເຂົ້າກັນໃຫ້ທາງຕີນຂອງມັນກວ້າງປະມານ ໔ ຄືບຕີນຂອງຊຸ່ມນີ້ກົມ ທັງຫົວຊຸ່ມນັ້ນຮອນເຂົ້າພໍຫລິ່ມແຂນເພື່ອງົມເອົາປາ, ຊຸ່ມນີ້ໃຊ້ຫາປາຢູ່ໃນໜອງເພິ່ນເອີ້ນວ່າໄປຊັກຊຸ່ມ.

ດ. ໄຊຍະສິທເສນາ

ວິທີໃຊ້ໄມ້ຊາງໄພເຮັດບັ້ງໄຟ.

ເພິ່ນເອົາໄມ້ເຮັ້ຍມາລຳນຶ່ງຍາວໆແຕ່ໃຫ້ໄມ້ເຮັ້ຍນັ້ນຊື່ໆງາມໆແລ້ວເພິ່ນຍັງມາຕັດໄມ້ເຮັ້ຽເປັນປ້ອງ ປະມານ ໑໐ ປ້ອງ ແລ້ວເພິ່ນມາຕຳພື້ໃສ່ໃນຮູໄມ້ເຮັ້ຽທີ່ຕັດເປັນປ້ອງນັ້ນໃຫ້ເຕັມແລ້ວເອົາມາຕິດໃສ່ກັນ ກັບໄມ້ຊາງໄພນັ້ນແລ້ວເອົາມາຈູດໄດ້.

ວິທີເຮັດສແນນດ້ວຍໄມ້ໄຜ່.

ເພິ່ນເອົາໄມ້ໄຜ່ເຜົ່າມາຕັດຍາວປະມານ ໔ ແມັດແລ້ວມາຜ່າເປັນກີບທີ່ສອງນີ້ວມື. ແລ້ວມາເຫຼົາ ໃຫ້ມັນກ້ຽງຫລາຍນີ້ວປະມານ ໗໐ ນີ້ວທາງລຸ່ມຂອງສະແນນນີ້ເພິ່ນໃຊ້ໄມ້ສີ່ຫລຽມທັມມະດາຍາວປະມານ ແຂນເຄິ່ງແລ້ວເອົາຕາປູຕອກໃສ່ ນີ້ວໄມ້ໄຜ່ລຽນກັນຖີ່ໆພໍຫລີນນີ້ວມື ແລ້ວເພິ່ນກໍມາເຮັດຂາຂອງສະແນນໃສ່ ເປັນທີ່ຂາ ລາງເທື່ອເພິ່ນກໍບໍ່ເຮັດອັນນີ້ເພິ່ນເອີ້ນວ່າສະແນນຫລີດຽງ.

ວິທີເອົາໄມ້ໄຜ່ຄົວກິນ.

ເພິ່ນເອົາໄມ້ໄຜ່ທີ່ບໍ່ເຜົ່າແຕ່ບໍ່ລຳໃຫຍ່ປານໃດ ເວລາຈະເອົາໄມ້ໄຜ່ມາເຮັດເຂົ້າຫລາມນີ້ເພິ່ນຕ້ອງ ເບິ່ງທາງໃນລຳມັນມີເຈັ້ຽບ້າງບໍ່ ຖ້າມີເຈັ້ຽບາງໆແລ້ວກໍເອົາມາເຮັດເຂົ້າຫລາມໄດ້ ເພິ່ນເອົາເຂົ້າໜຽວ ໃສ່ທາງໃນແລ້ວເພິ່ນເອົານ້ຳກະທິໝາກພ້າວໃສ່ແລ້ວເອົາອອກມາກິນໄດ້.

ດ. ໄຊຍະສິທເສນາ

ວິທີເຮັດກະເຊາະຕອງ.

ເຄື່ອງເຮືອນຄົວເຮັດດ້ວຍໄມ້ໄຜ່ແລະໄມ້ເຮັ້ງ ກະເຊາະຕອງປາແດກເຮັດດ້ວຍໄມ້ໄຜ່ແຕ່ວ່າເພິ່ນເຫລົາໃຫ້ມັນເປັນເສັ້ນນ້ອຍໆຕາມແຕ່ຜູ້ມັກ ບາງຄົນກໍສານຖີ່ໆ ສານຂຶ້ນຄືກັນກັບຈອກແຕ່ບໍ່ນ້ອຍເທົ່າຈອກ ຕາມແຕ່ຜູ້ມັກ ບາງຄົນກໍສານໃຫຍ່ພໍສົມຄວນ, ແລ້ວເຮັດເປັນຄັນຫລືເປັນງວງສຳລັບຈັບເວລາໃຊ້ຕອງຂອງທີ່ເປັນນ້ຳ ກະເຊາະນີ້ໃຊ້ໄດ້ຫລາຍຢ່າງເຊັ່ນ ຕອງປາແດກ, ກະທິໝາກພ້າວແລະຂອງທີ່ເປັນນ້ຳແນວໃດກໍໄດ້.

ເຄື່ອງໃຊ້ໃນເຮືອນອັນທີ່ສອງ ວິທີເຮັດທໍ່.

ທໍ່ເກືອແລະທໍ່ໝາກເຜັດຄືກັນແບບດຽວກັນ, ທໍ່ເກືອແລະທໍ່ໝາກເຜັດນີ້ເພິ່ນເຮັດດ້ວຍໄມ້ໄຜ່ເພິ່ນເອົາໄມ້ໄຜ່ມາຈັກໃຫ້ມັນເທົ່ານິ້ວມື ແຕ່ໃຫ້ມັນບາງແລ້ວເພິ່ນເອົາມາສານຖີ່ໆເພື່ອບໍ່ໃຫ້ເກືອແລະໝາກເຜັດລອດອອກມາໄດ້ ການສານທໍ່ນີ້ເພິ່ນສານໃຫ້ມັນສູງປະມານແຂນນຶ່ງເປັນຮູບກົມໆປາກຂອງທໍ່ນີ້ບໍ່ກວ້າງປານໃດປະມານຄືບນຶ່ງ. ທໍ່ນີ້ໃຊ້ສຳລັບໃສ່ໝາກເຜັດແຫ້ງຫລືເກືອເທົ່ານັ້ນ.

ວິທີເຮັດພາເຂົ້າ.

ພາເຂົ້ານີ້ເພິ່ນສານດ້ວຍໄມ້ໄຜ່ ມາຈັກໃຫ້ມັນໜາພໍສົມຄວນແລ້ວເອົາມາເຫລົາໃຫ້ມັນກ້ຽງບໍ່ໃຫ້ມີສຽນຈັກໜ້ອຍ ແລ້ວເພິ່ນມາສານໃຫ້ກວ້າງແລະແບນປະມານແຂນເຄິ່ງໜ້າຂອງພາເຂົ້າເພິ່ນເຮັດໃຫ້ມັນສເມີກັນແລະເຮັດມົນໆ ແລ້ວເພິ່ນເຮັດຂອບອ້ອມເພື່ອກັນບໍ່ໃຫ້ຖ້ວຍຫລືບ່ວງຕົກເວລາຫາພາເຂົ້າກິນ. ພາເຂົ້ານີ້ເຮັດດ້ວຍໄມ້ໄຜ່ແຕ່ວ່າຂອບອ້ອມກັນບໍ່ໃຫ້ສິ່ງຂອງຕົກນັ້ນເຮັດດ້ວຍຫວາຍແລະຕີນຂອງມັນກໍເຮັດດ້ວຍຫວາຍຄືກັນ. ພາເຂົ້າມີສອງຢ່າງຄືແນວນຶ່ງມີຕີນສູງປະມານຄືບນຶ່ງ ແລະອີກແນວນຶ່ງບໍ່ມີຕີນເພິ່ນເອີ້ນວ່າພາເຂົ້າຕ່ຳ.

ດ. ໄຊຍະສິທເສນາ

ວິທີໃຊ້ໄມ້ໄຜ່ເຮັດເຄື່ອງນ້ອຍໃຊ້ໃນເຮືອນ.

ຢູ່ໃນເຮືອນເອົາໄມ້ໄຜ່ເຮັດໄມ້ຈີ້ມແຂ້ວ ເຮັດໄມ້ທູ່ ເຮັດວີຕີແມງວັນ ຫລືສຳລັບໄວ້ວີເວລາອາກາດຮ້ອນ ດັ່ງນີ້ ເພິ່ນໃຊ້ໄມ້ໄຜ່ເຮັດຈຳພວກນີ້ໄວ້ໃຊ້ໃນເຮືອນ.

ວິທີໃຊ້ໄມ້ໄຜ່ເຮັດເຮືອແພຂ້າມນ້ຳ.

ເພິ່ນເອົາໄມ້ໄຜ່ຫລາຍລຳຢ່າງນ້ອຍປະມານ ໑໕໐ ລຳແລ້ວເພິ່ນເອົາຫວາຍແລະເຊືອກແນວໃດໜັ້ນທີ່ສຸດມາມັດເຂົ້າກັນ ເວລາມັດນັ້ນຕ້ອງມັດໃຫ້ແໜ້ນຖີ່ເສັຽກ່ອນຈຶ່ງເອົາລົງໃຊ້.

ຄົນທີ່ຢູ່ຕາມແຄມນ້ຳງື່ມຂະເຈົ້າເອົາໄມ້ເຮັ້ງນີ້ເຮັດເຮືອແພ ຄືກັບກັບເຮືອແພທັມມະດາ ຕ່າງແຕ່ເຮືອແພນີ້ໃຫຍ່ກວ່າ ເວລາພາຍເພິ່ນກໍໃຊ້ໄມ້ຍາວໆພາຍ.

ວິທີເຮັດຄັນເບັດ.

ຄັນເບັດນີ້ມີສາມແນວຄື ເບັດຕຶກທັມມະດາ ເບັດລີ້ ເບັດປັກ ແຕ່ລະແນວຕ່າງກັນ. ຄັນເບັດຕຶກທັມມະດານີ້ເຮັດດ້ວຍໄມ້ເຮັ້ງນ້ອຍຍາວໆກົກໄມ້ເຮັ້ງນີ້ໃຫຍ່ພໍປານໂປ້ມືໃຫຍ່ແຕ່ປາຍຂອງມັນນ້ອຍໆຮຽວໆອ່ອນຫນ້ອຍນຶ່ງແຕ່ບໍ່ອ່ອນເກີນໄປ.

ອັນນີ້ເພິ່ນເອີ້ນວ່າຄັນເບັດຕຶກທັມມະດາ ຄັນເບັດລີ້ນີ້ເພິ່ນໃຊ້ໄມ້ເຮັ້ງເຖົາກາງບໍ່ໃຫ້ໃຫຍ່ເກີນໄປບໍ່ນ້ອຍເກີນໄປ ແຕ່ກົກໄມ້ເຮັ້ງນີ້ໃຫຍ່ສົມໄມ້ເຮັ້ງເຖົາກາງປາຍຂອງມັນນັ້ນຮຽວແລະແຂງກວ່າຄັນເບັດທັມມະດາ ຄັນເບັດລີ້ນີ້ ເພິ່ນສຳລັບໄວ້ລີ້ປາໃຫຍ່ ເຊັ່ນປາຄໍ່..ເບັດປັກນີ້ເຮັດດ້ວຍໄມ້ໄຜ່ແຕ່ລຳນັ້ນແກ່ແດ່ຫນ້ອຍນຶ່ງແລ້ວເພິ່ນເອົາມາເຫລົາກົມໆທີ່ນີ້ມີທາງຍາວປະມານແຂນເຄິ່ງເວລາເພິ່ນເຫລົາປາຍຂອງຄັນເບັດນີ້ໃຫ້ມັນອ່ອນ.

ດ. ໄຊຍະສິທເສນາ

ສິນລະປະກັມເຮັດດ້ວຍມື ທີ່ໃຊ້ໄມ້ໄຜ່ແລະໄມ້ເຮັ້ງເຮັດມີຫລາຍຊນິດ ຄົນລາວສ່ວນມາກມັກໃຊ້ໄມ້ເຫລົ່ານີ້ເປັນປໂຍດຫລາຍສຳລັບເຮັດເຄື່ອງໃຊ້ຫລືເຮັດຂາຍພາຍໃນປະເທດ. ລາງຄົນຂະເຈົ້າກໍໃຊ້ໄມ້ເຮັ້ງຫລືເພິ່ນເອີ້ນວ່າໄມ້ປ້ອງໄມ້ຊນິດນີ້ເປັນໄມ້ເຮັ້ຍແຕ່ວ່າລຳນ້ອຍທີ່ເປັນໄມ້ຫນັ້ນແລະທົນທານຫລາຍຊຶ່ງ. ຂະເຈົ້າໃຊ້ເຮັດເຊັ່ນ ກ່ອງເຂົ້າ ກະເຊາະ ຂ້ອງ ວີ ຄັນເບັດ ກະຕ່າ ໄມ້ເຮັ້ຍແລະໄມ້ໄຜ່ນີ້ໃຊ້ເຮັດເຊັ່ນກະທໍ ກະບຸງ ກະຕ່າ ຍາງໄກ່ ເຂີງ ຊຸມ ຣີ ເອົາລ້ອມຮົ້ວບ້ານຫລື ສວນ ຖ້າໄມ້ເຮັ້ງລຳນ້ອຍຂະເຈົ້າກໍເອົາເຮັດຄັນເບັດລໍ້ປາໃຫຍ່. ເຄື່ອງໃຊ້ເຫລົ່ານີ້ບາງຄົນຂະເຈົ້າມັກສານຂາຍຕາມຮ້ານຄ້າຫລືບໍຣິສັດຕ່າງໆພາຍໃນປະເທດ.ນອກຈາກນີ້ເພິ່ນຍັງໃຊ້ໄມ້ໄຜ່ທີ່ບໍ່ເຖົ້າຄືອກິນຄື: ເອົາບັ້ງໄມ້ໄຜ່ມາເຮັດເຂົ້າຫລາມຢູ່ຕາມຫົວເມືອງຕ່າງໆ ບໍ່ວ່າແຕ່ເຫນືອຕລອດໃຕ້ຂະເຈົ້າມັກເຮັດເຂົ້າຫລາມກິນຫລືເຮັດຂາຍເວລາມີບຸນຫລືມີກິນມີທານຕ່າງໆ.

ດ. ໄຊຍະສິທເສນາ

3.40 ກີລາ.

ປະເທດລາວເປັນປະເທດນຶ່ງ ທີ່ຍັງຂາດເຂີນຄວາມຈະເຣີນໃນດ້ານການຫລິ້ນກີລາຫລາຍຢູ່. ສມັຍກ່ອນ ຄົນລາວສ່ວນຫລາຍພາກັນຫາລ້ຽງຊີບໂດຍການທຳໄຮ່ທຳນາແລະຟັນຟືນຂາຍເປັນຕົ້ນ... ວຽກທຸກສິ່ງທຸກຢ່າງທີ່ຂະເຈົ້າເຮັດແຕ່ລະວັນ ລ້ວນແລ້ວແຕ່ໃຊ້ກຳລັງແລະເຫື່ອແຮງທັ້ງນັ້ນ. ນີ້ກໍເປັນກີລາເໝືອນກັນທີ່ຄົນລາວແລະຄົນທົ່ວໂລກເສັງກັນ ເພື່ອຄວາມຢູ່ດີກິນດີຂອງໃຜລາວ. ນອກຈາກກີລາປະເພດນີ້ແລ້ວ ກີລາລາວກໍຍັງມີອີກຄື: ຊ່ວງເຮືອ ຕີຄີ ແຂ່ງມ້າ ເສັງບັ້ງໄຟ ເຕະກະຕໍ້ ຕີມວຍ ຕີໄກ່ ຊົນຄວາຍ ຊົນງົວ ກັດປາ ແລະຫລິ້ນໝາກບ້າເປັນຕົ້ນ.

ເຖິງປະເທດລາວບໍ່ມີນ້ຳທະເລກໍດີ ແຕ່ຄົນລາວກໍອາສັຍລຳນ້ຳຂອງ ນ້ຳຄານ ນ້ຳເຊ ແລະລຳນ້ຳອື່ນໆອີກ ເພື່ອເປັນບ່ອນຫລິ້ນກີລາຊ່ວງເຮືອ. ເຖິງຍາມບຸນຊ່ວງເຮືອ ຕົວຢ່າງຕາມແຄມແມ່ນ້ຳຂອງກໍຈະມີຜູ້ຄົນຄອຍຖ້າເບິ່ງເຮືອຢ່າງຄັບຄັ່ງອຶ່ງອໍ່. ເວລາຊ່ວງ ທາງກັມມະການກໍຈະປ່ອຍເຮືອເທື່ອລະສາມລຳເສັງກັນລົງມາເຖິງຫລັກທຸງໄຊ. ລຳໃດໄດ້ທີ່ນຶ່ງກໍຈັດໄວ້ເສັງໃສ່ລຳທີ່ນຶ່ງຂອງຊຸດຕໍ່ໄປ. ຜົນສຸດທ້າຍ ເມື່ອທາງກັມມະການຄັດເລືອກເອົາເຮືອທີ່ນຶ່ງໄວ້ຮຽບຮ້ອຍແລ້ວ ພວກເຮືອເຫລົ່ານີ້ກໍຈະເສັງກັນອີກເອົາລາງວັນຂັນເງິນທີ່ນຶ່ງ. ເຮືອລຳໃດໄດ້ທີ່ສອງກໍຈະໄດ້ຮັບລາງວັນທີ່ສອງ. ເຮືອລຳໃດໄດ້ທີ່ສາມກໍຈະໄດ້ຮັບລາງວັນທີ່ສາມ. ກ່ອນບຸນງານຈະສິ້ນສຸດລົງ ທາງກັມມະການໄດ້ເປີດໂອກາດໃຫ້ເຮືອຂອງນັກກີລາທຸກລຳໄດ້ເສັງກັນ ເພື່ອຊີງເອົາລາງວັນຕີ້ຊ່າງນ້ຳນອງຫລືລາງວັນພິເສດ.

ຄັນເຖິງຍາມບຸນທາດຫລວງມາ ກີລາທີ່ຈັດເຂົ້າຖວາຍໃຫ້ພຣະບາດສົມເດັດພຣະເຈົ້າມະຫາຊີວິດເບິ່ງ ກໍມີຕີຄີແລະແຂ່ງມ້າ. ການຫລິ້ນຕີຄີ ກັມມະການໄດ້ແບ່ງນັກກີລາອອກເປັນສອງຝ່າຍ ເຊັ່ນທີມຂ້າຣາຊການແລະທີມຣາສດອນ(ຄົນທັມມະດາສາມັນ). ແຕ່ລະທີມມີນັກກີລາຫລາຍຄົນ ແລະແຕ່ລະຄົນຖືໄມ້ຄ້ອນຍາວສົມຄວນ ເຮັດດ້ວຍເຫງົ້າໄມ້ໄຜ່. ເມື່ອເຖິງເວລາຫລິ້ນ ທາງກັມມະການຈັດສອງທີມໄປຢືນຄົນລະຟາກຂອງເຄິ່ງກາງຂອງເດີ່ນກວ້າງ ແລ້ວວາງລູກຄີໄວ້ໃຈກາງເດີ່ນ. ເມື່ອສຽງພາກຫວີດເປົ່າສັນຍານດັງແລ້ວ

ກິລາ.(ຕໍ່)

ພວກກິລາຕີຄີກໍເສັ້ນ. ເມື່ອຝ່າຍໃດຕີລູກຄີກາຍເຂົ້າໂກນຂອງຝ່າຍກົງກັນຂ້າມ ແລ້ວຝ່າຍນັ້ນຈະໄດ້ຄແນນ.

ສຳລັບກິລາປະເພດອື່ນແລ້ວ ເມື່ອຂະເຈົ້າມີໂອກາດຫລືເວລາດີ ຂະເຈົ້າກໍຫລິ້ນກັນຕາມທັມມະດາ ຊຶ່ງບາງຄັ້ງຂະເຈົ້າພາກັນຫລິ້ນເພື່ອມ່ວນຊື່ນຊຸມແຊວກັນ. ແຕ່ບາງຄັ້ງກໍຫລິ້ນຕຸຍເງິນລົງເງິນພນັນກັນ ແລ້ວເລີຍຕໍ່ເນື່ອງໄປເປັນການພນັນຊ້ຳກໍມີ.

ຕອນທີ່ລາວຕົກຢູ່ກ້ອງອຳນາດຂອງຝຣັ່ງເສດນາ ຄົນລາວຈຶ່ງຮູ້ຈັກຫລິ້ນເຕະບານ ບາສເກດບານ ໂວນໄລບານ ຕີດອກປີກໄກ່ ແລ່ນ ເສັງຣົດຖີບ ໂຍນນ້ຳໜັກ ເຕັ້ນຂ້າມເຊືອກລວງສູງ ເຕັ້ນລວງຍາວ ແລະຢູ່ຕາມລຳແມ່ນ້ຳຕ່າງໆຕາມໂຕເມືອງໃຫຍ່ ລາງເທື່ອກໍມີຄົນພາກັນໄປຫລິ້ນສກີນ້ຳ. ດ້ວຍເຫດວ່າຄົນລາວໄດ້ອອກໄປສຶກສາຕ່າງປະເທດຫລາຍຂຶ້ນ ແລະໄດ້ເຫັນຄວາມຈະເຣີນໃນດ້ານກິລາຂອງຕ່າງປະເທດ ຈຶ່ງພາໃຫ້ຂະເຈົ້າຈັດຕັ້ງພັກພວກກັນຂຶ້ນເປັນນັກກິລາ. ໃນເມື່ອຣັຖບານລາວເຫັນວ່າປະເທດຕົນມີຄົນນິຍົມຊົມຊອບກິລາແລະການຫລິ້ນກິລາຫລາຍຂຶ້ນ ຈຶ່ງໄດ້ຈັດຕັ້ງໃຫ້ມີກະຊວງກິລາແລະຍຸວະຊົນຂຶ້ນ. ຍ້ອນຄວາມຮ່ວມໄມ້ຮ່ວມມືຂອງປະເທດເພື່ອນມິດທັງຫລາຍ ຄົນລາວກໍໄດ້ມີໂອກາດໄປຮ່ຳຮຽນເອົາຄວາມຮູ້ໃນດ້ານກິລາ ເພື່ອມາສິດສອນໃຫ້ພວກເຍົາວະຊົນໜຸ່ມນ້ອຍຕໍ່ໄປ. ບາງຄັ້ງ ຜູ້ຊ່ຽວຊານໃນດ້ານການກິລາຂອງຕ່າງປະເທດ ກໍໄດ້ໄປຢ້ຽມຢາມກະຊວງກິລາແລະຍຸວະຊົນ ແລະໂຮງຮຽນຕ່າງໆໃນເມືອງລາວ ເພື່ອສະແດງຄວາມເກັ່ງກ້າໃຫ້ນັກຮຽນແລະນັກກິລາລາວເບິ່ງ ເພື່ອຂະເຈົ້າຈະໄດ້ເອົາແບບຢ່າງ.

ສຳລັບເຣື່ອງກິລາຂອງພວກຕາເວັນຕົກແລ້ວ ຂ້າພະເຈົ້າຄິດວ່າທ່ານຄົງເຂົ້າໃຈໃນວິທີຫລິ້ນດີ. ເຖິງວ່າຄົນລາວຈະຫັນມານິຍົມຫລິ້ນກິລາຂອງພວກຕ່າງດ້າວກໍຕາມ ແຕ່ຄົນລາວບໍ່ໄດ້ປະລະເລີງກິລາລາວເລີຍ.

ທຸກວັນນີ້ ຄົນລາວພາກັນຫລິ້ນທັງກິລາເດີມແລະກິລາສາກົນ. ກິລາແຕ່ລະປະເພດກໍຈະຕ້ອງແຂ່ງຂັນກັນທຸກໆປີ ເພື່ອຊີງເອົາຂັນຊະນະເລີດປະຈຳປີ.

ອ. ສິນບັດ

3.41 ບຸນເດືອນຫ້າ ຫລື ຕຸດສົງການປີໃໝ່.

ບຸນເດືອນຫ້າ ຄື ບຸນສົງນ້ຳພຣະພຸທຮູບ ຫົດນ້ຳພຣະສົງ ຫົດຜູ້ເຖົ້າຜູ້ແກ່ແລະພູ່ເພື່ອນດ້ວຍກັນຊຶ່ງກໍາພົດເຮັດໃນເດືອນຫ້າເຣີ້ມຂື້ນ ແຕ່ມື້ ໑໕ ຄ່ຳ ເດືອນຫ້າເຖິງຂື້ນ ໑໕ ຄ່ຳ ເດືອນຫົກ ອີກຊື່ນຶ່ງແມ່ນບຸນຕຸດສົງການປີໃໝ່ກໍຄື ວັນທີ່ພຣະອາທິດເຄື່ອນຈາກປີເກົ່າກ້າວເຂົ້າສູ່ປີໃໝ່ນັ້ນເອງ ແລະກໍາພົດເຮັດທາງຣາຊການ ວັນທີ່ ໑໓-໑໔-໑໕ ສເມີນາໃນເດືອນຫ້າຂອງທຸກໆປີ.

ພິທີທໍາບຸນນີ້ ຕອນເຊົ້າຂອງວັນຕຸດສົງການສັງຂານລ່ວງ ພໍ່ແມ່ແລະລູກເຕົ້າໃນຄອບຄົວພາກັນຜັດເຮືອນຖູຊານຜັດສີໃຫ້ສະອາດຮຽບຮ້ອຍ ກ້ອງຕາລ່າງ ເດີ່ນບ້ານກໍກວາດໃຫ້ຫ້ຽນໃຫ້ແປນເປັນພິເສດເພື່ອຕ້ອນຮັບປີໃໝ່ ແລະຊໍາລະສະລ້າງສິ່ງບໍ່ດີຂີ້ໄຂ້ໂພຍໄພຕ່າງໆໃຫ້ໜີໄປນໍາປີເກົ່າ. ເມື່ອເວລາບ່າຍ ໑-໔ ໂມງມາຮອດ ຜູ້ວັດເພິ່ນກໍຕີກອງໂຮມເອົາພຣະພຸທຮູບມາປະດິດສະຖານໄວ້ຊານສົມຫລືສາລາໂຮງທັມ. ພວກຄອບຄົວທີ່ມີພຣະພຸທຮູບຢູ່ເຮືອນກໍພາກັນຍ້າຍລົງຈາກຮ້ານພຣະມາໄວ້ລຸ່ມເພື່ອຜັດສີແລະສົງໃນເວລານັ້ນເໝືອນກັນ.

ເມື່ອໄດ້ຍິນສຽງຕີກອງໄທບ້ານເຖົ້າແກ່ ໜຸ່ມສາວທັງເດັກເລັກເດັກນ້ອຍທັງຫລາຍຄ່ອຍຫລັ່ງໄຫລມາຮວມກັບພຣະສົງສົງພຣະຢູ່ວັດ. ຂະເຈົ້າເອົານ້ຳອົບນ້ຳຫອມ ກະທູບ ທຽນ ດອກໄມ້ມາພ້ອມ. ລາງຄົນກໍຫ້າງນ້ຳຫອມມາແຕ່ບ້ານ ຊຶ່ງໃນນ້ຳນັ້ນມີ ນ້ຳຫອມ ຂີ້ໝິ້ນ ໃບຫວ້ານໄພຊອຍແລບໆ ກີບດອກໄມ້ສີຕ່າງໆ ຂີ້ກະທູບເປັນຕົ້ນ.

ກ່ອນຈະສົງພຣະ ເພິ່ນຍົກໂອນ້ຳຫອມ ແລະດອກໄມ້ຂື້ນບູຊາ ໄຫວ້ພຣະກ່າວປ່າວສັກເຄເທວະດາໃຫ້ມາປົກປັກຮັກສາ ໃຫ້ບ້ານເມືອງຢູ່ເຢັນເປັນສຸກ ແລະຂໍອະພັຍໂທດຈາກພຣະພຸທຮູບ(ໂດຍສະເພາະຜູ້ຍິງທີ່ແຕະຕ້ອງບໍ່ໄດ້ເລີຍ) ຈຶ່ງອະໂຫສິກັມໃຫ້ ແລ້ວເພິ່ນກໍຫົດສົງພຣະດ້ວຍນ້ຳຫອມ ແລະຜັດສີດ້ວຍຍອງຝ້າຍ. ຢູ່ກ້ອງຮ້ານພຣະ ເພິ່ນເອົາໂອແລະຂັນໂຕ່ງເອົານ້ຳສົງພຣະທີ່ໄຫລລົງໄປນັ້ນໄວ້ ເພາະຖືວ່າເປັນນ້ຳສັກສິດ

ບຸນເດືອນຫ້າ ຫລື ຕຸດສົງການປີໃໝ່.(ຕໍ່)

ເອົາໄປອາບ ຫລືປະພົມທົ່ວພ້າຫລືຕົນໂຕ. ໃນວັນຕໍ່ໄປຂອງເວລາດຽວກັນ ເຖົ້າແກ່ບ່າວສາວກໍຈະເອົານ້ຳອົບນ້ຳຫອມມາສົງພຣະພຸທຮູບອີກດັ່ງນັ້ນທຸກວັນ. ຄັນເຖິງວັນສັງຂານຂຶ້ນມີການຕົບພຣະທາດຊາຍ ແລ້ວຕອນບ່າຍມາມີສູດມຸງຄຸນເອົາພຣະພຸທຮູບປະດິດສະຖານໄວ້ທີ່ເດີມ ແລະກ່າວຄຳອະໄພຍະໂທດພຣະພຸທຮູບຂໍໃຫ້ຫລຸດບາບຫລຸດໂທດໃຫ້ ມີພິທີບາສີ ສູ່ຂວັນແລະປ່ອຍສັດຕາມແຄມນ້ຳ.

ເມື່ອສົງພຣະແລ້ວາພວກຊາວບ້ານກໍສົງພຣະສົງຊື່ງເປັນທີ່ເຄົາຣົບສັກກາຣະຂອງເພິ່ນແລະຫົດນ້ຳຣະຫວ່າງກັນເອງ. ພວກນຸ່ມສາວນັກຮຽນພາກັນອອກໄປເປັນພູ່ຕາມຮ່ອມບ້ານ ຊອກຫາເຮືອນເພື່ອນຝູງແລ້ວຫົດນ້ຳກັນ ລາງເທື່ອກໍຫົດໃສ່ຄົນທີ່ຂເຈົ້າພົບຢູ່ຕາມທາງກໍບໍ່ເປັນຫຍັງ. ລາງພວກກໍຂຶ້ນເຮືອນເພື່ອລົງເຮືອນໃຕ້ ທ່ຽວຊອກຫາກິນເຫລົ້າກິນປາແລະລົມສາວ.

ພິທີສລອງບຸນປີໃໝ່ນີ້ ຄົງຍັງຄຶກຄື້ນມ່ວນຊື່ນຢູ່ເໝືອນເດີມ ແຕ່ມີບາງສິ່ງບາງຢ່າງໄດ້ປ່ຽນແປງໄປຕາມກາລະສມັຍໃໝ່ ເຊັ່ນໃນເມືອງໃຫຍ່ດຽວນີ້ ຄົງບໍ່ມີພວກນຸ່ມນ້ອຍຜູ້ໃດຕັກນ້ຳໄປໃຫ້ຜູ້ເຖົ້າຜູ້ແກ່ທີ່ເຮົາຖືວ່າເປັນຜູ້ທີ່ມີຄຸນຄວາມດີ ແລະເປັນທີ່ເຄົາຣົບນັບຖື ອາບສົງເໝືອນແຕ່ກ່ອນອີກແລ້ວ ນອກຈາກຢູ່ຕາມບ້ານນອກ ແຕ່ມີການກະທຳປ່ຽນແປງເປັນຮູບໃໝ່ ຄືມີບາງຄົນນິຍົມຊື້ແຜ່ນແພຫລືສິ່ງຂອງເຄື່ອງອື່ນໄປສົມມາບາສີເພິ່ນກໍອວຍໄຊໃຫ້ພອນຕອບແທນ ຄື, "ເອີ ຂໍໃຫ້ເຈົ້າຈົ່ງໄດ້ຮັບແຕ່ຄວາມສຸກຄວາມຈະເຣີນສົມຫວັງໃຫ້ອາຍຸ ວັນນະ ສຸຂະ ພະລະ ປະກອບດ້ວຍຊັບສົມບັດທຸກປະການເທີ້ນ, " ດັ່ງນີ້ເປັນຕົ້ນ. ພວກທີ່ມີພີ່ນ້ອງພູ່ເພື່ອນຢູ່ເກາະກັນຄົນລະຖິ່ນຖານກໍສົ່ງບັດອວຍພອນ ຂອງຂວັນແລກປ່ຽນຕິດຕໍ່ກັນ. ແຕ່ເດີມມາພວກຊາວບ້ານທັງຫລາຍພາກັນລົງຫົດນ້ຳມ່ວນຊື່ນກັນຕາມທ່ານ້ຳຕ່າງໆ ແລະກໍຍັງຫລິ້ນກັນເໝືອນແຕ່ກ່ອນ. ນອກຈາກນັ້ນຕາມຖນົນຫົນທາງຕ່າງໆ ມີຣົດເປີດຫລັງຄາໃສ່ຖັງນ້ຳ ແລ່ນຂຶ້ນແລ່ນລົງຫາທ່ຽວຫົດນ້ຳ ແລະຖນົນອີກບ່າງຍ່ານກໍມີຄົນລັດທາງຖ້າຫົດນ້ຳຄົນທ່ຽວທາງຜ່ານໄປຜ່ານມາ.

ບຸນເດືອນຫ້າ ຫລື ຕຸດສົງການປີໃໝ່.(ຕໍ່)

ຄັນເຖິງກາງຄືນມາ ພວກທີ່ບໍ່ມີໂອກາດໄດ້ໄປສົມມາຍາມກາງເວັນ ກໍອອກບ້ານໄປທ່ຽວຫາສົມມາຄະຣະວະຜູ້ເຖົ້າຜູ້ແກ່ພີ່ນ້ອງ. ຢູ່ເຮືອນ ພວກລູກເຕົ້າທ້າງຂັນສົມມາພໍ່ແມ່ ເມື່ອແລ້ວໆພໍ່ແມ່ແລະລູກກໍຂໍສົມມາພໍ່ເຖົ້າແມ່ເຖົ້າ ເພື່ອໃຫ້ເພິ່ນຍົກໂທດບາບກັມທີ່ໄດ້ທຳໃຫ້ເພິ່ນລຳບາກທຸກໃຈມາໃນປີເກົ່າຈົ່ງໝົດຫາຍໄປ ແລະ ຮັບເອົາພອນປະເສີດຂອງເພິ່ນມາຄອບຄອງໂຕໄວ້.

ກາງຄືນກ່ອນໃກ້ໂຮງຮຽນຈະປິດພັກບຸນພວກນັກຮຽນມັທຍົມ ວິທຍາລັຍທັງຫລາຍ ກໍພາກັນຂັນອັນແຂງແຕ່ງແປງໂຮງຮຽນເພື່ອທຳງານກິນລ້ຽງບຸນປີໃໝ່. ຂະເຈົ້າມ່ວນຊື່ນເຕັ້ນລຳ ລຳວົງກັນຈົນຮອດເດິກດື່ນ ແລະຫລາຍໆຄືນຕໍ່ກັນໄປກໍມີ ງານກິນລ້ຽງຂອງເຈົ້ານາຍຜູ້ໃຫຍ່ທີ່ເຮັດລ້ຽງຮັບເພື່ອນຮ່ວມງານ ແລະພີ່ນ້ອງທີ່ມາບາສີອວຍໄຊໃຫ້ພອນໃຫ້.

ງານບຸນປີໃໝ່ສິ້ນສຸດລົງດ້ວຍຄວາມປີຕິຍິນດີທີ່ໄດ້ລຶດລ້າງສິ່ງບໍ່ດີໄປໝົດແລ້ວ ຄົງຍັງເຫລືອຢູ່ແຕ່ຄວາມຊຸ່ມເຢັນຈາກນ້ຳພຣະ ນ້ຳມົນວິເສດແລະພອນປະເສີດທັງຫລາຍທີ່ໄດ້ຮັບເພື່ອດຳເນີນຊີວິດໃນປີຕໍ່ໄປ.

ມ.ສ. ສແວງສຸກ

3.42 ບຸນບັ້ງໄຟຫລືບຸນເດືອນຫົກ.

ບຸນບັ້ງໄຟໄດ້ກຳນົດເຮັດໃນຂ້າງຂຶ້ນຫລືຂ້າງແຮມແລ້ວແຕ່ສະດວກ ແລະນິຍົມເຮັດກັນໃນເດືອນຫົກ ຈຶ່ງໄດ້ຊື່ອີກຊື່ນຶ່ງວ່າບຸນເດືອນຫົກ ຊຶ່ງກົງກັບເດືອນພຶສພາໃນປະຕິທິນສາກົນ. ນອກນີ້ໃນເດືອນນີ້ ຍັງມີບຸນອີກປາງນຶ່ງຊື່ວ່າບຸນວິສາຂະບູຊາຫລືບຸນຖວາຍພຣະເພີງ (ແຫ່ວຽນທຽນ) ຊຶ່ງເປັນບຸນປາງມະໂຫລານແລະສຳຄັນທີ່ສຸດປະຈຳປີທາງພຣະພຸທສາສນາ ທີ່ຊາວພຸທສາສນິກະຊົນທັງຫລາຍພາກັນສລອງວັນປະສູດ ວັນຕັສຮູ້ ແລະວັນປະຣິນິພານຂອງພຣະສັມມາສັມພຸທເຈົ້າ. ທາງຣາຊການຢູ່ວຽງຈັນໄດ້ຮວມວັນວິສາຂະບູຊາແລະບຸນບັ້ງໄຟເຂົ້າກັນ ແຕ່ກໍຍັງມີຄວາມໝາຍ ຄືບູຊາຄຸນພຣະສັມມາສັມພຸທເຈົ້າເໝືອນເດີມ.

ອາກາດໃນເດືອນນີ້ຮ້ອນອຸດເອົ້າເຕັມທີ ຕາມຖນົນຫົນທາງທີ່ປູຢາງກໍເປື່ອຍລະລາຍແລະຕາມທົ່ງໄຮ່ທົ່ງນາທີ່ແຫ້ງແລ້ງ ກໍປົກຄຸມດ້ວຍແສງແດດກ້າອອນເຍີບຍັບເຫລື້ອມຕາ. ເມື່ອຄົນຍ່າງດ້ວຍຕີນເປົ່າໄປຢຽບເອົາຢາງເປື່ອຍຫລືແດດເຜົາມັ້ນ ກໍຈະເຕັ້ນແລ່ນໂຄງເຄງທົນກັບຄວາມຮ້ອນບໍ່ໄຫວ ຍ່າງໄປໃສມາໃສກໍບໍ່ສະບາຍ ໄຄແດ່ແຕ່ຢູ່ຮົ່ມ. ມູນເຫດທີ່ເຮັດບຸນບັ້ງໄຟກໍເພື່ອບູຊາເທວະບຸດເທວະດາ ເຈົ້າບ້ານຫລັກເມືອງໃຫ້ມາເບິ່ງແຍງຮັກສາ ເພື່ອໃຫ້ຝົນຕົກນ້ຳນອງອຸດົມສົມບຸນ ໃຫ້ໄດ້ເຮັດໄຮ່ໃສ່ນາ ແລະຢູ່ເຢັນເປັນສຸກທົ່ວກັນ.

ກ່ອນວັນສລອງບຸນບັ້ງໄຟຈະມາເຖິງຈັກ ໑໐-໑໕ ມື້ຂອງທຸກໆປີ ພວກພຣະສົງໄດ້ພາກັນຫາງຫາເອົາກະບອກໄມ້ເຮັ້ງໄມ້ສາງໄພ ແລະເອົາຂີ້ເຈ້ຍກັບນາດມາເຮັດພື້ໄວ້. ເວລາເຮັດບັ້ງໄຟ ເພິ່ນເອົາພື້ເຫລືງໃສ່ບັ້ງໄມ້ສາງໄພ ແລ້ວຕອກໃຫ້ມັນແໜ້ນໆ ແລະເອົາໄມ້ໄຜ່ມາເຮັດຫາງມັນ. ພວກໄທບ້ານແລະຂ້າຣາຊການກໍຫາງຫາເຮັດບັ້ງໄຟເໝືອນກັນ ແຕ່ມັກໄປຮວມກັນເຮັດຢູ່ຕາມວັດຕ່າງໆ. ຢູ່ຕາມບ້ານຕ່າງໆ ເພິ່ນຈູດບັ້ງໄຟໃສ່ຄ້າງຕົ້ນໄມ້ໃຫຍ່ຢູ່ຕີນບ້ານ ແລ້ວຈະຕົກໃສ່ທົ່ງໃສ່ນາ. ພວກບ້ານທີ່ຢູ່ຕາມແຄມແມ່ນ້ຳຕ່າງໆກໍຈູດຢູ່ແຄມນ້ຳ. ສະເພາະໃນກຳແພງນະຄອນວຽງຈັນ ເພິ່ນເຮັດບຸນບັ້ງໄຟໃສ່ເດືອນຫົກເພັງ ຄືຕອນເຊົ້າມີການຕັກບາດຢູ່ວັດອົງຕື້ ແລ້ວຕອນບ່າຍມາມີການຈູດບັ້ງໄຟຢູ່ທ່ານ້ຳແຄມຝັ່ງແມ່ນ້ຳຂອງ. ທຸກໆປີໃດ ຢູ່ວຽງຈັນມີການປະກວດການເອ້ປະດັບປະດາບັ້ງໄຟ ແລະມີການແຂ່ງຂັນຄວາມໄວໄປສູງຂອງບັ້ງໄຟທີ່ໄທບ້ານຢູ່

ບຸນບັ້ງໄຟຫລືບຸນເດືອນຫົກ. (ຕໍ່)

ໃນຂອບເຂດນະຄອນເມືອງ ພ້ອມທັງຂ້າຣາຊການຈາກກະຊວງທະບວງກົມຕ່າງໆເອົາເຂົ້າມາປະກວດ.

ຕອນບ່າຍມາ ຂບວນແຫ່ບັ້ງໄຟຈາກບ້ານຕ່າງໆກໍ່ຄ່ອຍຫລັ່ງໄຫລເຂົ້າມາ ຊ່າງບັ້ງໄຟແລະໄທບ້ານກໍພາກັນມ່ວນຊື່ນຟ້ອນລຳອ້ອມບັ້ງໄຟ ບາງຄົນກໍເຊີ້ງວ່າສັ່ງສອນຜູ້ຍິງແມ່ປ້ານ້າສາວ. ລາງຄົນກໍຟ້ອນສະແດງທ່າທາງຮຽບຮ້ອຍທັງຕລົກເຮຮາ ແຕ່ງຕົວເປັນຜູ້ຍິງ ເຈົ້ານາຍຜູ້ໃຫຍ່ ເປັນຄົນຕຶກແທ ຂາຍຢາ ດັ່ງນີ້ກໍມີ. ຢູ່ສອງຟາກທາງຂອງຖນົນສາຍແຄມແມ່ນ້ຳຂອງ ເຕັມໄປດ້ວຍຄົນມາຖ້າເບິ່ງຢ່າງຄັບຄັ່ງອັ້ງອໍແລະສັບສົນປົນກັນກັບພວກແມ່ຄ້າຂາຍປີ້ງໄກ່ ເຂົ້າຫລາມ ນ້ຳຫວານ ເຄື່ອງດື່ມແລະອື່ນໆ. ຂະເຈົ້າຂາຍເຄື່ອງຂອງໃຜຂອງມັນໂດຍບໍ່ມີເວລາພັກຜ່ອນ. ພວກທີ່ມາບຸນກໍພາກັນຍ່າງໄປຍ່າງມາລຽບແຄມຖນົນທາເບິ່ງບັ້ງໄຟທີ່ເອ້ຢ່າງວິດຖານດ້ວຍເຈັ້ຽເງິນເຈັ້ຽຄຳແລະເຈັ້ຽສີຕ່າງໆ. ຄັນບັ້ງໄຟແຫ່ໄປສຸດທາງແລ້ວກໍເອົາມາໂຮມກັນໄວ້.

ພໍເຖິງເວລາ ບັ້ງໄຟທີ່ເພິ່ນເອົາມາໂຮມກັນໄວ້ນັ້ນ ກໍຖືກນຳເອົາມາຈູດຢູ່ເທິງຄ້າງເທື່ອລະບັ້ງ ໂດຍບໍ່ຂາດຣະຍະ. ສຽງດັງກຶກກ້ອງແລະຄວັນພີ້ດຳກຸ້ມຄ້າງຂອງບັ້ງໄຟບໍ່ໄດ້ເຮັດໃຫ້ຜູ້ຊົມຢ້ານເລີຍ ຕົງກັນຂ້າມຖ້າບັ້ງໄຟໃດຂຶ້ນດີຂະເຈົ້າກໍພາກັນເຊັ່ຽແລະໂຮ້ຮ້ອງຍ້ອງຍໍສັຣເສີນສີໄມ້ລາຍມື ຄຸນນະພາບແລະຄວາມດີເດັ່ນຂອງເຈົ້າຂອງຢ່າງເຕັມທີ່..ຖ້າບັ້ງໄຟໃຜຂຶ້ນດີນາຍຊ່າງແລະຍາດຂີຍມໄທບ້ານກໍດີໃຈທັງໄດ້ລາງວັນ. ຄັນຫາກບັ້ງໄຟຊຸຫລືແຕກບໍ່ຂຶ້ນນັ້ນຄ້າງ ຜູ້ສ້າງຖືກຫາມເອົາໄປລົງຕົມ ທັງໄດ້ຍິນສຽງບໍ່ມ່ວນຫູຂອງພວກເສັຽເງິນຈາກການພນັນຈົ່ມວ່າໃຫ້.

ບັ້ງໄຟຈະຈູດໄປເລື້ອຍໆຈົນພົດ ລາງເທື່ອກໍຈົນຮອດຄ່ຳພໍດີ ແລ້ວພວກຜູ້ຄົນກໍພາກັນກັບບ້ານດ້ວຍຄວາມມ່ວນຊື່ນຈັບໃຈທີ່ໄດ້ໄປຮ່ວມສລອງວັນຍິ່ງໃຫຍ່ຂອງບຸນປະຈຳປີ ທັງໄດ້ປຽກຊຸ່ມຈາກນ້ຳຝົນທ່າທຳອິດ. ສັນຍາລັກຂອງການລົງມືຈັບດ້າມໄຖເຮັດໄຮ່ໃສ່ນາກໍມາຮອດແລ້ວ. ໃນຄືນສຸດທ້າຍຂອງວັນວິສາຂະບູຊານັ້ນ ຊາວພຸທທັງຫລາຍກໍພາກັນຖືດອກໄມ້ທູບທຽນໄປວັດ ແລ້ວວຽນທຽນອ້ອມສິມສາມຮອບ ຄືຮອບທຳອິດຈະເຣີນພຣະພຸທຄຸນ ຮອບທີສອງຈະເຣີນພຣະທັມມະຄຸນ ແລະຮອບທີສາມຈະເຣີນພຣະສັງຄະຄຸນ. ເມື່ອວຽນທຽນແລ້ວໆ

ບຸນບັ້ງໄຟຫລືບຸນເດືອນຫົກ.(ຕໍ່)

ກໍເອົາທຽນໄປຕິດໄວ້ອ້ອມສິມ ແລ້ວກໍມີການຟັງທັມມະເທສນາ. ຊາວພຸທທັງຫລາຍຍ່ອມເອົາໃຈໃສ່ເຄົາຣົບນົບນ້ອມສັກກາຣະບູຊາຕໍ່ພຣະພຸທເຈົ້າໂດຍນ້ຳໃສ່ໃຈຈິງ ເພື່ອຈະໃຫ້ມີຈິດໃຈຜ່ອງໃສແລະມີຄວາມເຊື່ອໝັ້ນໃນຕົນເອງ.

ມ.ສ. ສແວງສຸກ

ຂັນບາສີແລະພານສູ່ຂວັນ

3.43 ພິທີສູ່ຂວັນ(ບາສີ).

ການສູ່ຂວັນໄດ້ປະຕິບັດເຮັດກັນມາ ຕາມຮີດຄອງປະເພນີລາວເຮົາແຕ່ບູຮານນະການແລະເຮັດໄດ້ສອງວິທີດ້ວຍກັນຄື: ວິທີພຸທສາສນາແລະວິທີພາມ. ວິທີພຸທສາສນາ ເພິ່ນນິມົນພຣະສົງມາສູດໄຊຍະມົງຄຸນຄາຖາ ສູດນ້ຳມົນຢູ່ເຮືອນ ແລ້ວລ້ຽງເຂົ້າເພນພຣະສົງນຳກໍໄດ້. ຫລັງຈາກພິທີທາງພຸທສາສນາແລ້ວໆ ຈະທຳພິທີພາມ ຄືສູ່ຂວັນອີກກໍໄດ້ ຫລືຈະເລືອກເຮັດແນວດຽວກໍໄດ້ ແລ້ວແຕ່ເຫັນວ່າເໝາະສົມ. ເພິ່ນເຮັດສູ່ຂວັນເມື່ອເວລາມີເຫດການດີແລະຫລັງຈາກມີອຸປັສເຫດຮ້າຍເກີດຂຶ້ນຄື: ສູ່ຂວັນຣົດ ກວຽນ ຄວາຍ ເຂົ້າໃໝ່. ເວລາຂຶ້ນເຮືອນໃໝ່ ໄດ້ເລື່ອນຍົດສັກກໍສູ່ຂວັນໃຫ້ ຫລືເວລາມີພູ່ເພື່ອນຍາດພີ່ນ້ອງຈະອອກເດີນທາງຈາກບ້ານເມືອງໄປທາງໄກກໍສູ່ຂວັນ ຫລືເຮັດສູ່ຂວັນຮັບເວລາກັບມາຈາກຖິ່ນອື່ນ. ກ່ອນຈະບວດເພິ່ນກໍສູ່ຂວັນໃຫ້ນາກ. ຫລັງຈາກອອກລູກໃໝ່ໄດ້ເດືອນນຶ່ງຫລືເດືອນກວ່າໆກໍສູ່ຂວັນໃຫ້. ພິທີສູ່ຂວັນແນວສຸດທ້າຍນີ້ເອີ້ນວ່າສູ່ຂວັນອອກໄຟຫລືອອກກຳ. ນອກຈາກພິທີສູ່ຂວັນດັ່ງກ່າວນີ້ແລ້ວ ເວລາມີງານແຕ່ງດອງ(ເອົາຜົວເອົາເມັຽ) ເພິ່ນກໍສູ່ຂວັນນ້ອຍໃຫ້ເຈົ້າບ່າວແລະເຈົ້າສາວຢູ່ເຮືອນໃຜລາວ ແລ້ວຢູ່ເຮືອນເຈົ້າສາວເພິ່ນກໍເຮັດບາສີສູ່ຂວັນໃຫ້ຜົວເມັຽໃໝ່ອີກເໝືອນກັນ. ແລະອີກໂອກາດນຶ່ງກໍຄືໂອກາດບຸນປີໃໝ່ລາວ. ຈຸດປະສົງອັນສຳຄັນຂອງການສູ່ຂວັນນີ້ ກໍເພື່ອເອີ້ນເອົາຂວັນຂອງຜູ່ກ່ຽວພິດທຸກຂວັນກັບຄືນມາຢູ່ນຳຕົນໂຕຂອງລາວ ເພາະຄົນລາວເຊື່ອຖືກັນມາວ່າຢູ່ໃນຕົນໂຕຂອງຄົນແລະສັດມີຂວັນປະຈຳຊີວິດ. ຖ້າຫາກວ່າຂວັນໄດ້ຕົກລົ້ມຫລືຕົດພົນຢູ່ນຳຄົນອື່ນ ຊຶ່ງບໍ່ຢູ່ນຳຕົນເອງຄົບຖ້ວນແລ້ວຈະເຮັດໃຫ້ບໍ່ຢູ່ດີສະບາຍ ເຈັບໄຂ້ໄດ້ປ່ວຍຢູ່ເລື້ອຍ. ດັ່ງນັ້ນຈຶ່ງມີບາງຄອບຄົວ ເວລາມີຄົນເຈັບປ່ວຍເຊົາແລ້ວ ເພິ່ນກໍເຮັດສູ່ຂວັນນ້ອຍໃຫ້ແຕ່ສະເພາະຄົນໃນຄອບຄົວຂອງຕົນເອງ.

ສິ່ງປະກອບໃນພິທີສູ່ຂວັນຂອງພາມກໍມີພາຂວັນ ຊຶ່ງຕາມທັມມະດາມີພາຂວັນພາດຽວ. ນອກຈາກພາຂວັນແຕ່ງດອງ(ແຕ່ງງານ) ເທົ່ານັ້ນທີ່ຕ້ອງເຮັດເປັນຄູ່. ແລະສິ່ງປະກອບຂອງພາຂວັນກໍມີ ພາເຂົ້າແບບຕົນສູງ ພາກເບັງ ດອກໄມ້ ຝ້າຍຜູກແຂນ ທຽນ ໄກ່ຕົ້ມ ໄຂ່ຕົ້ມ ກ້ວຍ ຂນົມ ກ່ອງເຂົ້າ ເຫົ້າເຫລົ້າ

ພິທີສູ່ຂວັນ(ບາສີ).(ຕໍ່)

ຂັນເງິນ ແລະໂອເງິນ. ຢູ່ເທິງໃຈກາງພາເຂົ້ານັ້ນມີພາກເບັງຕັ້ງຢູ່ໃນໂອຫລືຂັນເງິນ ຊຶ່ງປະດັບດ້ວຍດອກໄມ້ຫລາຍສີຢ່າງງົດງາມ ແລະຢູ່ຈອມພາກເບັງນັ້ນເພິ່ນປັກທຽນໃສ່ເຫລັ້ມນຶ່ງຊຶ່ງສູງພົ້ນສິ່ງອື່ນໆ. ສ່ວນດອກໄມ້ເອ້ພາຂວັນແຕ່ງດອງ ເພິ່ນນິຍົມແຊມດ້ວຍດອກຣັກຫລືດອກໄມ້ຂາວຢ່າງອື່ນກໍໄດ້. ຫລັງຈາກແຊມດອກໄມ້ແລ້ວໆ ເພິ່ນກໍເອົາຝ້າຍຜູກແຂນພາດໄວ້ນຳດອກໄມ້ພົ້ນ ເພື່ອໃຊ້ໄວ້ມັດແຂນຫລັງຈາກພໍພອນເອົ້າພອນແລ້ວ. ຢູ່ອ້ອມຕີນຂັນພາກເບັງໃນພາເຂົ້ານັ້ນ ເພິ່ນວາງຊວຍດອກໄມ້ໄວ້ ທັງມີຖ້ວຍຫລາຍໃບຊຶ່ງເພິ່ນໃສ່ໄຂ່ ຂນົມ ແລະໄກ່ຕົ້ມ. ແລະຢູ່ຂ້າງພາຂວັນມີຂັນເງິນໃສ່ຊວຍດອກໄມ້ກັບເງິນແລະຂອງຂວັນທີ່ຜູ້ຄົນເອົາມາຊ່ອຍ ແລະມີເຫົ້າເຫລົ້າກັບຕີບເຂົ້າ. ພວກທີ່ມາຊ່ອຍແລະມາຮ່ວມໃນງານກໍຄ່ອຍຫລັ່ງໄຫລມາເທື່ອລະຫ້ອຍແລະພາກັນເລີ່ມຕົ້ນນັ່ງບ່ອນທີ່ເພິ່ນປູສາດໄວ້ໃຫ້ຄົນນັ່ງ ແລ້ວລາມອອກເລື້ອຍໆອ້ອມພາຂວັນທີ່ຕັ້ງຢູ່ກາງເຮືອນ. ຖ້າແມ່ນງານແຕ່ງດອງ ເມື່ອໄດ້ຍິນສຽງໂຮ້ຮ້ອງແຊວໆມາເປັນຍ່ານໆຂອງຂບວນແຫ່ເຈົ້າບ່າວມາເຮືອນເຈົ້າສາວໃກ້ຈະເຖິງແລ້ວ ຜູ້ເຖົ້າຜູ້ແກ່ກໍຟ້າວຈັດເອົາເຈົ້າສາວມານັ່ງແປະພາຂວັນຖ້າ ແລະປະບ່ອນທາງຂວາໄວ້ໃຫ້ເຈົ້າບ່າວນັ່ງ. ເວລານັ້ນ ທຸກຄົນຮູ້ດີວ່າພິທີສູ່ຂວັນໃກ້ຈະເລີ່ມໄດ້ແລ້ວ.

ການເລືອກມື້ດີວັນດີເພື່ອຈະຈັດພິທີສູ່ຂວັນນັ້ນແມ່ນພາຣະກິດຂອງຜູ້ເຖົ້າໃນບ້ານທີ່ຊຳນານໃນທາງນີ້ ແຕ່ຍາມສູ່ຂວັນທີ່ຖືກັນວ່າເປັນຍາມດີມີໂຊກລາບນັ້ນຕ້ອງແມ່ນກ່ອນທ່ຽງ. ບັນຍາກາດຢູ່ໃນຫ້ອງສູ່ຂວັນຄຶກຄື້ນຊື່ນບານແລະທຸກໆຄົນມີໜ້າຕາຍິ້ມແຍ້ມແຈ່ມໃສສເມີ. ໂດຍສະເພາະແມ່ນສູ່ຂວັນກິນດອງຊຶ່ງພູ່ຄູ່ນັ່ງຢູ່ສອງຟາກຂ້າງຂອງເຈົ້າບ່າວເຈົ້າສາວມັກເຮັດຢອກ ຄືເອົາເຂັມເຢາະ(ແທງ) ຫລືຍົກໃຫ້ຄູ່ຜົວເມັຽໃໝ່ຫຍັບເຂົ້າຫາກັນແລະໄດ້ແຕະຕ້ອງກັນຊຶ່ງຜິດຈາກປະເພນີສັງຄົມລາວທີ່ບ່າວສາວຈັບແລະແຕະຕ້ອງກັນບໍ່ໄດ້. ເມື່ອເຫັນຜົວເມັຽໃໝ່ໄດ້ແຕະຕ້ອງກັນຂະເຈົ້າກໍພາກັນຫົວມ່ວນດີໃຈ.

ເວລາສູ່ຂວັນ ເມື່ອເຫັນວ່າຄົນມາຊ້ອງໜ້າຊ້ອງຕານັ່ງອ້ອມພາຂວັນພໍດີສູ່ຄົນ ແລະພໍພອນໄດ້ເວລາດີແລ້ວເພິ່ນກໍໄຕ້ທຽນຂຶ້ນ. ຜູ້ທີ່ຖືກສູ່ຂວັນໃຫ້ກົ້ມຫົວລົງເອົາມືຂວາຈັບພາຂວັນ ແລະມືຊ້າຍນົບ ແລ້ວຕັ້ງຈິດ

ພິທີສູ່ຂວັນ (ບາສີ). (ຕໍ່)

ອະທິຖານໄຫວ້ວອນເທວະບຸດເທວະດາໃຫ້ບັນດານພອນເທົ້າພອນທິບຕັ້ງໝໍພອນເວົ້າ. ພວກພີ່ນ້ອງໝູ່ເພື່ອນນັ່ງອ້ອມຂ້າງອ້ອມຫລັງເອົາມືຈັບຕໍ່ຫລັງກັນແລ້ວກໍ່ຕັ້ງຈິດອະທິຖານໃຫ້ເຈົ້າຂອງຂວັນໄດ້ຮັບແຕ່ຄວາມສຸກສົມຫວັງ ປາຖນາສິ່ງໃດກໍໃຫ້ໄດ້ດັ່ງໃຈປະສົງແລະໃຫ້ມີອາຍຸຍືນຍາວ. ຖ້າເດີນທາງກໍຂໍໃຫ້ໄປແລະກັບມາດ້ວຍຄວາມປອດໄພທຸກປະການ. ຖ້າແມ່ນຜົວເມັຽໃໝ່ກໍຂໍໃຫ້ເປັນຜົວເຖົ້າເມັຽທິບ ເປັນຜົວດຽວເມັຽດຽວແລະໃຫ້ພົ້ນຍືນນຳກັນເທົ່າເຖົ້າເທົ້າແກ່. ຫລັງຈາກກົ້ມຫົວລົງໄດ້ບຶດໜຶ່ງ ໝົດທຸກຄົນກໍພາກັນນັ່ງຕັ້ງຕົວແລ້ວຍົກມືນົບ. ບັນຍາກາດຢູ່ໃນຫ້ອງໃນຂະນະນີ້ງຽບສງັດຟັງໝໍພອນເວົ້າ. ເມື່ອໝໍພອນເວົ້າພອນສຸດແລ້ວ ເພິ່ນກໍເປັນຄົນທຳອິດທີ່ມັດແຂນໃຫ້ຄົນທີ່ຖືກສູ່ຂວັນນັ້ນ. ເພິ່ນຈັບເອົາໄຂ່ ຈອບດອກໄມ້ໃສ່ມືໃຫ້ລາວແລ້ວມັດແຂນ ແລ້ວຕໍ່ໄປກໍແມ່ນພໍ່ແມ່ຜູ້ເຖົ້າຜູ້ແກ່ພີ່ນ້ອງແລະເພື່ອນຝູງ ແລະມັດໃຫ້ລະຫວ່າງໝູ່ເພື່ອນນຳກັນເອງກໍໄດ້. ເວລາມັດແຂນໃຫ້ກັນຢູ່ນັ້ນເພິ່ນກໍອວຍພອນໃຫ້ກັນນຳ. ຫລັງຈາກມັດແຂນໃຫ້ກັນແລ້ວໆ ກ່ອນຈະເລີກພິຈາກພາຂວັນ ໝໍພອນ ຜູ້ຖືກສູ່ຂວັນໃຫ້ ກໍກົ້ມຫົວລົງເອົາມືຈັບພາຂວັນອີກແລະພວກທີ່ຢູ່ຕາມຂ້າງຕາມຫລັງທີ່ຈັບພາຂວັນບໍ່ເຖິງກໍເອົາມືຈັບຫລັງຕໍ່ກັນໄປ ເພື່ອນອບເຂົ້ານອບຂວັນໃຫ້ຜູ້ກ່ຽວ.

ພິທີສູ່ຂວັນຕາມທັມມະດານ້ອມທ້າຍດ້ວຍການລ້ຽງເຂົ້າແຂກຄົນທີ່ມາຮ່ວມໃນພິທີ ເມື່ອເສັດແລ້ວກໍລາຈາກກັນໄປເຮືອນໃຜມັນ.

ມ.ສ. ສແວງສຸກ

3.44 ການມ່ວນຊື່ນໃນປະເທດລາວ.

ປະເທດລາວເປັນປະເທດນ້ອຍ ແຕ່ກໍກຳລັງມີຄວາມຈະເຣີນຂຶ້ນຕາມກາລະສມັຍ. ປະຊາຊົນລາວທົ່ວໄປມັກສງົບແລະມີການມ່ວນຊື່ນຕາມຂນົບທັມນຽມປະເພນີຮີດຄອງອັນມີມາແຕ່ປູ່ແຕ່ປູ້. ການມ່ວນຊື່ນນີ້ກໍບໍ່ມີທຸກເວລາ ແລ້ວແຕ່ເວລາມີບຸນງານ ຫລືບຸນຄົບຮອບປີ ເຊັ່ນ ບຸນປີໃໝ່ລາວ, ບຸນອອກພັນສາ, ບຸນບັ້ງໄຟ, ນອກຈາກນີ້ແລ້ວກໍມີບຸນວັດທັມມະດາ. ບຸນເຫລົ່ານີ້ມີການມ່ວນຊື່ນໃນເວລາຕ່າງໆກັນ ຄື ບຸນປີໃໝ່ລາວ ເພິ່ນໃນເດືອນຫ້າ ຊຶ່ງກົງກັບເດືອນເມສາ ແຕ່ວັນທີ ໑໓ ຫາ ໑໕. ໃນການສລອງບຸນເດືອນຫ້ານີ້ ເພິ່ນມີການຫົດນ້ຳກັນ ນັບຕັ້ງແຕ່ເດັກນ້ອຍຂຶ້ນໄປຫາຜູ້ເຖົ້າ. ພວກຜູ້ບ່າວຜູ້ສາວກໍພາກັນອອກໄປທ່ຽວຫົດນ້ຳກັນ ລາງຄົນກໍເອົາຟຸຍນ້ຳຂຶ້ນໃສ່ລົດທ່ຽວຫົດໄປແຕ່ເໜືອຕລອດໃຕ້. ເວລາຂີ່ລົດໄປນັ້ນເມື່ອເຫັນລົດຄັນອື່ນທີ່ອອກທ່ຽວຫົດນ້ຳເໝືອນກັນ ກໍໄດ້ມີການຫົດນ້ຳໃສ່ກັນຢ່າງມືນຫູມືນຕາບໍ່ໄດ້. ຢູ່ຕາມຖນົນເຮົາຈະໄດ້ຍິນສຽງຫົວ ສຽງຮ້ອງແລະສຽງຮ້ອງເພງດັງສນັ່ນໄປຕາມຖນົນ. ຄົນທັງຫລາຍມີຄວາມມ່ວນຊື່ນຈົນລືມຄວາມທຸກແລະຄວາມໂສກເສົ້າທັງຫລາຍ.

ນອກຈາກຫົດນ້ຳກັນຢູ່ຕາມຖນົນແລ້ວ ຂະເຈົ້າຍັງໄປເຮືອນພີ່ນ້ອງແລະຂ້າຣາຊການເຈົ້ານາຍຜູ້ໃຫຍ່ເພື່ອເຮັດການບາສີສູ່ຂວັນ ແລະກິນລ້ຽງກັນ. ໃນເວລາກິນລ້ຽງກັນນັ້ນ ກໍມີການຟ້ອນ ເຕັ້ນລຳ ແລະຮ້ອງເພງກັນຢ່າງມ່ວນຊື່ນ.

ນອກຈາກບຸນປີໃໝ່ແລ້ວກໍຍັງມີບຸນບັ້ງໄຟ ບຸນຊ່ວງເຮືອ ຊຶ່ງບຸນສອງປາງນີ້ກໍມີການມ່ວນກັນໄປອີກທຳນອງນຶ່ງ. ເພິ່ນບຸນບັ້ງໄຟໃນມື້ເດືອນຫົກເພັງ ແລະບຸນຊ່ວງເຮືອໃນມື້ເດືອນສິບເອັດເພັງ. ຢູ່ທີ່ວຽງຈັນເພິ່ນເຮັດບຸນສອງປາງນີ້ຢູ່ວັດຈັນ ພວກຂ້າຣາຊການໃນກົມກອງຕ່າງໆ ແລະບ້ານທີ່ຢູ່ໃກ້ຄຽງໄດ້ຖືກເຊີນໃຫ້ນຳເອົາເຮືອຫລືບັ້ງໄຟເຂົ້າໄປແຂ່ງຂັນ. ເມື່ອຮອດມື້ຈະເສັງຫລືຈະຊ່ວງແລ້ວ ຖ້າແມ່ນບຸນບັ້ງໄຟ ເພິ່ນກໍພາກັນເຊີ້ງບັ້ງໄຟເຂົ້າໄປໂຮມກັນໄວ້ຢູ່ທີ່ພານໄຊ. ເຈົ້າຂອງບັ້ງໄຟພ້ອມດ້ວຍຄນະພັກພວກຂອງລາວກໍພາຕີກອງ ຕີແຊ່ງ ເປົ່າແຄນ ແລະຟ້ອນແອະແອ່ນອ້ອນບັ້ງໄຟຂອງຕົນ ພ້ອມທັງສະແດງທ່າທາງແລະລວດລາຍ

ການມ່ອນຊື່ນໃນປະເທດລາວ. (ຕໍ່)

ໃຫ້ຜູ້ໄປຊົມເຫັນວ່າ ບັ້ງໄຟຂອງຕົນດີເລີດກວ່າໝູ່. ລາງເທື່ອຂະເຈົ້າກໍເຊີ້ງຢອກໄຍພວກແມ່ຜູ້ສາວ ແລະສະແດງທ່າທາງຕລົກ ເມື່ອເຖິງຕອນທີ່ພວກຄົນທີ່ໄປເບິ່ງພໍໃຈກໍມີສຽງເຮຮາແລະໂຮ່ຮ້ອງຂຶ້ນ. ລາງເທື່ອກໍມີຜູ້ຊາຍນຸ່ງເຄື່ອງຂອງຜູ້ຍິງ ກັ້ງຄັນຮົ່ມ ທາໜ້າທາຕາດ້ວຍສີດຳສີແດງ. ພວກຜູ້ແມ່ຜູ້ສາວລາງກໍມັກເບິ່ງແຕ່ບໍ່ເບິ່ງດົນເພາະຂະເຈົ້າອາຍ.

ເມື່ອບັ້ງໄຟຖືກນຳມາໂຮມກັນໝົດແລ້ວ ຄນະກັມມະການບຸນກໍຈະອອກມາກວດເບິ່ງຄວາມງາມຂອງບັ້ງໄຟ ແລ້ວກໍໃຫ້ຄະແນນແລະມອບລາງວັນໃຫ້ແກ່ຜູ້ທີ່ໄດ້ທີນຶ່ງ. ຫລັງຈາກນັ້ນ ເພິ່ນກໍເອົາບັ້ງໄຟຂຶ້ນໄປຈູດເສັງກັນ. ຖ້າບັ້ງໄຟຂອງຜູ້ໃດບໍ່ຂຶ້ນກໍຈະຖືກໝູ່ຫາມຖິ້ມລົງໃສ່ຂີ້ຕົມ ສ່ວນເຈົ້າຂອງບັ້ງໄຟທີ່ໄປໄກກໍໄດ້ຮັບລາງວັນ.

ນີ້ຄືຕົວຢ່າງຂອງການມ່ອນຊື່ນຂອງຊາວລາວ. ນອກຈາກທີ່ເວົ້າມາແລ້ວນີ້ກໍຍັງມີການມ່ອນອີກ.

ດ. ໄຊຍະສິທເສນາ

4.0 Economy of Laos

INTRODUCTION

The economy of Laos is largely based on agriculture. Rice provides the main staple item of food. It is produced in all of the lowland areas along the Mekhong River and to some extent in the higher plateaux. Formerly there was a surplus of rice for export, but now it is all consumed locally. In addition to rice the farmers grow vegetables and fruit and raise poultry and some livestock.

Manufactoring is limited mainly to objects for local consumption and falls into five categories: clothing, food, building materials, household items, and luxury items. The list includes cigarettes, soap, cooking pots, salt, sugar, noodles, lumber, nails, objects made of silver, etc.

Since about two-thirds of the land area of Laos is covered with forests, forestry has the potential of becoming a major source of income and possibly the major export item, but it is at present largely unexploited due to the political situation in Laos.

All economic development is hindered by the lack of transportation and communication. There are no railroads and some of the highway network is unusable during several months in the year. The major waterway is the Mekhong River, which is interrupted by rapids at several points.

Internal trade consists mainly of marketing of domestic produce and handicrafts and is limited to short distances, since transportation is confined to busses, trucks, and carts. External trade is largely one-way; that is, it consists of imports of all kinds of manufactored goods. Except for gypsum, tin, and lumber there are almost no exports. This has resulted in an unfavorable balance of trade, which has had to be met by loans and grants-in-aid from other countries.

Current military action in the country has upset the economy in every way, and will continue to do so until it is terminated.

4.10 ການປູກຝັງໃນເມືອງລາວ.

ເຖິງຄົນລາວຈະຢູ່ພື້ນປານໃດກໍຕາມ ໃນສມັຍນີ້ແລ້ວ ຖ້າຫາກຂາດເຂີນເຄື່ອງມືທັນສມັຍ ການດຳເນີນງານກໍຊ້າແລະຜົນທີ່ໄດ້ຮັບກໍໜ້ອຍ. ໃນເມືອງລາວ ນ້ຳສຳຄັນທີ່ສຸດໃນການປູກຝັງ ແລະເມືອງລາວຍັງຂາດເຂີນເຂື່ອນກັ້ນນ້ຳແລະຄອງເກັບນ້ຳຫລາຍ. ສະນັ້ນຖ້າປາສຈາກຝົນຕົກແລ້ວ ເຄື່ອງປູກຂອງຝັງກໍຈະບໍ່ງາມຫລືແຫ້ງແລ້ງຕາຍໄປຊື່ໆ.

ເຂົ້າເປັນອາຫານອັນສຳຄັນຂອງຄົນລາວ ເມື່ອໃດຫາກເຖິງຍາມຮັບປະທານອາຫານ ທ່ານຈະໄດ້ຍິນຄຳເອີ້ນຂອງຄົນພື້ນເມືອງທົ່ວໄປວ່າ, "ມາກິນເຂົ້າເດີ" ຫລື "ມາເດີກິນເຂົ້າ". ຄຳວ່າ, "ເຂົ້າ" ໄດ້ເອີ້ນແທນອາຫານທຸກສິ່ງທຸກແນວໃນພາເຂົ້າຫລືໂຕະນັ້ນ. ທົ່ວປະເທດ ແຕ່ເໜືອຕລອດໃຕ້ ຄົນລາວຈະພາກັນປູກເຂົ້າເພື່ອລ້ຽງຊີວິດ. ນອກຈາກຈະລ້ຽງຊີວິດຄົນໃນຄອບຄົວແລະພາຍໃນປະເທດແລ້ວ ຖ້າສົງຄາມບໍ່ລົບກວນຄົນລາວ ເຂົ້ານາຂອງຂະເຈົ້າກໍຈະມີໂອກາດໄດ້ປັບປຸງໃຫ້ດີແລະໄດ້ຜົນຫລາຍຂຶ້ນ ເພື່ອສົ່ງອອກໄປຂາຍຊ່ອຍລ້ຽງຊີວິດຊາວປະເທດເພື່ອນບ້ານໄດ້. ເຂົ້າມີສອງຊນິດດ້ວຍກັນ ຄືເຂົ້າຈ້າວແລະເຂົ້າໜຽວ. ແຕ່ລະຊນິດກໍແບ່ງອອກເປັນຫລາຍແນວພັນເຂົ້າ. ຄົນລາວນິຍົມປູກເຂົ້າໜຽວຫລາຍກວ່າເຂົ້າຈ້າວເພາະຄົນລາວມັກກິນເຂົ້າໜຽວ. ເຂົ້າບາງຊນິດຈະປູກໄດ້ຢູ່ຕາມໄຮ່ ຫລືຕາມສັນພູພຽງແລະເຊີງພູ ເພາະເຂົ້າເຫລົ່ານີ້ບໍ່ມັກນ້ຳປານໃດ ນອກຈາກຝົນຈະຕົກຮຳເປັນບາງເທື່ອເທົ່ານັ້ນ. ແຕ່ສ່ວນຫລາຍແລ້ວ ເຂົ້າຈະມັກເກີດຢູ່ຕາມນ້ຳຕື້ນຕາມໄຮ່ນາຂອງນາໂພນ ທີ່ມີຄັນນາປ້ານ ເກັບນ້ຳໄວ້ເປັນໄຮ່ໆ ຕົວຢ່າງແມ່ນເຂົ້າໜຽວ. ເຂົ້າລາງພັນ ເຊັ່ນເຂົ້າຈ້າວລອຍມັກເກີດແລະທົນຢູ່ກັບບ່ອນນ້ຳເລິກ ຊຶ່ງພໍ່ນາຈັດເອົາໄປປູກໃສ່ນາໜອງ. ການປູກເຂົ້າທີ່ໄດ້ຜົນຫລາຍກວ່າແຫ່ງອື່ນນັ້ນ ປູກຢູ່ເລາະລຽບຕາມຝັ່ງແມ່ນ້ຳຂອງ ຊຶ່ງບໍຣິເວນທົ່ງກວ້າງເຫລົ່ານີ້ມີຢູ່ແຂວງວຽງຈັນ, ສວັນນະເຂດ, ຈຳປາສັກແລະສາຣະວັນ.

ຫລັງຈາກການເກັບກ່ຽວເຂົ້າແລະວຽກໄຮ່ການນາແລ້ວ ຄົນລາວຍັງຊອກປູກສິ່ງຂອງຕ່າງໆ ເພື່ອຫາລາຍໄດ້ພິເສດຊ່ອຍຄອບຄົວອີກ ຫລືປູກພໍພຽງແຕ່ກິນໃນຄອບຄົວເທົ່ານັ້ນກໍມີ. ແຕ່ລະພາກພື້ນຂອງປະເທດມີພື້ນທີ່ດິນຕ່າງກັນ ແລະພືດພັນຕົ້ນໄມ້ບາງຊນິດກໍແຕກຕ່າງກັນໄປຕາມດິນຟ້າອາກາດອຳນວຍ.

ການປູກຝັງໃນເມືອງລາວ.(ຕໍ່)

ທາງພາກເໜືອ ຕົວຢ່າງຢູ່ຫລວງພຣະບາງ ຊຽງຂວາງໝາກໄມ້ ທີ່ມີຣົດແຊບກໍມີ ໝາກກ້ຽງ ໝາກໄຟ ໝາກກ້ວຍໄຂ່ ໝາກແຕງ ໝາກຄາຍ ໝາກຈອງ ໝາກລິ້ນຈີ່ແລະອື່ນໆອີກ. ນອກຈາກໝາກໄມ້ແລ້ວ ກໍມີຈຳພວກຜັກຕ່າງໆອີກ ສິນຄ້າທີ່ນຳອອກຂາຍຕ່າງປະເທດຈາກທາງພາກເໜືອ ກໍມີງິ້ວ(ສຳລັບຍັດເບາະ ແລະເຊືອເປັນຕົ້ນ) ແລະຝ້າຍ.. ພາກກາງທີ່ວຽງຈັນມີດິນຣາບພຽງດີ ເຄື່ອງປູກຂອງຝັງກໍຫລາຍເຊັ່ນ ໝາກມ່ວງ ໝາກມີ້ ໝາກກ້ວຍ ອ້ອຍ ໝາກຂຽບ ໝາກລະມຸດ ໝາກລຳໄຍ ໝາກພຸໝາກພາງ ແລະອື່ນໆອີກ. ສຳລັບຜັກທີ່ມີມາຂາຍໃນທ້ອງຕລາດກໍມີໝາກແຕງ ໝາກໂມ ເຂົ້າສາລີ ມັນຝຣັ່ງ ມັນດ້າງແລະອີກຫລາຍຊນິດ. ເຂົ້າສາລີປູກແຕ່ທາງພາກເໜືອຂອງປະເທດສ່ວນມັນຝຣັ່ງປູກທັງພາກເໜືອແລະພາກໃຕ້. ປະຊາຊົນພວກທີ່ຢູ່ຕາມແຄມແມ່ນ້ຳຂອງ ນ້ຳງື່ມເປັນຕົ້ນໄດ້ພາກັນປູກຢາສູບເພື່ອນຳສົ່ງເຂົ້າບໍຣິສັດເຮັດຢາຢູ່ວຽງຈັນ. ດຽວນີ້ໂຮງງານທີ່ເມືອງລາວກໍມີຫລາຍຂຶ້ນສະນັ້ນວັດຖຸດິບທີ່ລາວຄົ້ນຄ້ວາຫລືຜລິດໄດ້ກໍນຳເຂົ້າໂຮງງານລາວເອງ. ແລະລາງພວກກໍປູກມອນໄວ້ລ້ຽງມອນເພື່ອເອົາໄໝແລະປູກຖົ່ວດິນນຳກໍມີ. ພາກໃຕ້ຢູ່ຕາມສົມພູບໍຣິເວນສ່ວນຫລາຍແລ້ວແມ່ນປູກກາເຟ ທີ່ປາກຊ່ອງ ແລະຊາວສວນຍັງພາກັນປູກໝາກແໜ່ງ ໝາກມັດ ໝາກຫ້ວຍ ໝາກກ້ຽງ ແລະອື່ນໆອີກເໝືອນຄຸ້ມອື່ນ. ທີ່ປາກຊ່ອງຍັງສາມາດປູກດອກໄມ້, ໝາກໄມ້ ແລະຜັກຂອງພວກຊາວຕາເວັນຕົກໄດ້ອີກ. ເຄື່ອງປູກທີ່ໄດ້ສົ່ງໄປຂາຍຕ່າງປະເທດສ່ວນມາກປູກຢູ່ທາງປາກຊ່ອງເຊັ່ນ: ກາເຟ ໝາກແໜ່ງ ເປັນຕົ້ນ.

ແຕ່ລະປີທາງກົມກະສິກັມໄດ້ອອກສຳຣວດຈຳນວນສິ່ງຂອງທີ່ຊາວໄຮ່ຊາວນາແລະຊາວສວນຜລິດໄດ້. ບາງຄັ້ງ ກໍຈັດໃຫ້ມີການປະກວດເຄື່ອງປູກຂອງຕັ້ງງານ ເພື່ອໃຫ້ລາງວັນຍ້ອມນ້ຳໃຈຊາວສວນ ແລະຊັກຊວນສົ່ງເສີມໃຫ້ປູກເພີ່ມຫລາຍຂຶ້ນກວ່າເກົ່າ. ທາງກົມກະສິກັມໄດ້ອອກໄປອະທິບາຍໃຫ້ຊາວສວນແລະຈິດຊ່ອຍເທົ່າທີ່ຈະຊ່ອຍໄດ້ ເພາະຣັຖບານລາວແລະປະເທດເພື່ອນມິດກໍຢາກໃຫ້ລາວມີພໍຢູ່ພໍກິນແລະມີສິນຄ້າອອກຂາຍຕາມຕລາດຕ່າງປະເທດແລະຕລາດໂລກ.

ມ.ສ. ສແວງສຸກ

4.11 ສັດນ້ຳ, ສັດປ່າແລະສັດທີ່ຄົນລ້ຽງໃນປະເທດລາວ.

ແຕ່ສມັຍກ່ອນ ຄົນລາວບໍ່ພາກັນສົນໃຈໃນການລ້ຽງສັດເປັນຈຳນວນຫລາຍພໍສ່ຳໃດ. ນອກຈາກວ່າ ແຕ່ໃດມາເພິ່ນລ້ຽງສັດຄື ງົວ ຄວາຍ ຊ້າງ ມ້າ ຊຶ່ງເປັນຈຳພວກສັດທີ່ໃຊ້ແຮງໄດ້. ເປັນຍ້ອນຄວາມອຸດົມສົມບູນຂອງປະເທດແລະການທີ່ບໍ່ມີພົລເມືອງເພີ້ມພານັ້ນເອງ ຈຶ່ງເຮັດໃຫ້ຂະເຈົ້າບໍ່ມັກລ້ຽງສັດ. ແລະອີກຢ່າງນຶ່ງກໍຄື ຢູ່ປ່າດົງອັນຕຶບໜາຂອງປະເທດກໍເຕັມໄປດ້ວຍສັດປ່າທີ່ກິນຊີ້ນໄດ້ ເຊັ່ນ: ກວາງ ຟານ ໄກ້ ກະຕ່າຍ ກະຮອກ ແລນ ໄກ່ປ່າ ນົກເຂົາເປັນຕົ້ນ. ເມື່ອໃດຂະເຈົ້າເຂົ້າປ່າໂຫ່ເນື້ອລ່າສັດໄດ້ຫລາຍໆ ຂະເຈົ້າກໍແບ່ງປັນກັນກິນໝົດບ້ານ ໂດຍບໍ່ຕ້ອງຊື້ຂາຍກັນ. ໃນລຳແມ່ນ້ຳຂອງແລະສາຂາຂອງມັນມີປາຢ່າງຫລວງຫລາຍ ເຊັ່ນປາບຶກ ປາເລີມ ປາປາກ ປາກົດ ປາຊອຍ ປາເຜາະ ປາແຂ້ ປາສະງົ້ວ ກຸ້ງແລະອື່ນໆ. ແລະໃນບວກໜອງຄອງບຶງກໍມີປາຢ່າງອຸດົມສົມບູນເໝືອນກັນ ແຕ່ວ່າປາເຫລົ່ານີ້ບໍ່ຄືປານ້ຳຂອງທັງໂຕກໍນ້ອຍກວ່າຫລາຍ ເຊັ່ນປາຄໍ່ ປາດຸກ ປາເຂັງ ປາກະເດີດ ຫອຍຈູບ ຫອຍປັງ ເຕົ່າເປັນຕົ້ນ. ເວລາໃດໄທບ້ານຢາກກິນປາ ຂະເຈົ້າກໍແບກແຫໄປວ່ານ ຫລືໄປຕຶກມອງ ຫລືໄປຕຶກກະດຸ້ງ ຫລືເອົາເຂີງໄປສ້ອນຫລືໄປໃສ່ລອບໃສ່ໄຊເອົາປາດັ່ງນີ້ເປັນຕົ້ນ. ເທື່ອໃດຂະເຈົ້າຫາໄດ້ຫລາຍກໍປັນໃຫ້ເພື່ອນບ້ານແລະພີ່ນ້ອງກິນນຳ.

ຄັນມາເຖິງສມັຍປັດຈຸບັນ ຈຳນວນຄົນໃນປະເທດເພີ່ມຫລາຍຂຶ້ນ. ໃນເມື່ອພົລເມືອງຂຍາຍອອກເລື້ອຍໆ ຄວາມຕ້ອງການກໍມີຫລາຍຂຶ້ນ ທັງມີຫລາຍປາກຫລາຍທ້ອງຈະລ້ຽງຕື່ມອີກ ແລ້ວກໍຈຳນວນສັດປ່າສັດນ້ຳ ກໍແຫ່ງໜ້ອຍລົງ. ນີ້ກໍຍ້ອນການລ່າສັດແລະຫາປາດ້ວຍອາວຸດສມັຍໃໝ່. ແລະອີກຢ່າງນຶ່ງກໍແມ່ນການແຕກຕື່ນພ່າຍໜີຈາກຄວາມບໍ່ງຽບສງົບຂອງສຽງລູກຣະເບີດ ລູກປືນແລະເຄື່ອງບິນຈາກເສິກສົງຄາມນັ້ນເອງ. ສິ່ງລົບກວນເຫລົ່ານີ້ອາດເຮັດໃຫ້ສັດຕາຍຫລາຍ ແລະບາງຊນິດກໍຫລົບໜີໄປປະເທດອື່ນທີ່ມີປ່າດົງປອດໄພດີ. ພວກສັດທີ່ມີຊີວິດລອດຢູ່ໄດ້ ກໍບໍ່ມີຄວາມສງົບສຸກທີ່ຈະສືບພັນແລະຂຍາຍພັນ ຊຶ່ງໃນອະນາຄົດພາຍຄັ້ງໜ້າ

ສັດປ່າ, ສັດທີ່ຄົນລ້ຽງໃນປະເທດລາວ.(ຕໍ່)

ບາງຊນິດອາດຈະສູນພັນໄປໄດ້. ເນື່ອເປັນເຊັ່ນນັ້ນ ຄົນລາວຢູ່ທົ່ວທຸກແຫ່ງຈຶ່ງພາກັນຕື່ນຕົວ ແລະພາກັນສົນໃຈແລະເອົາໃຈໃສ່ໃນການລ້ຽງສັດຫລາຍຂຶ້ນ. ສັດນ້ອຍທີ່ຊາວບ້ານທົ່ວໄປພາກັນລ້ຽງໃນຄອບຄົວກໍມີໝູ ເປັດ ໄກ່ ຫ່ານ ໄກ່ງວງ ເປັນຕົ້ນ. ຢູ່ໃກ້ເມືອງໃຫຍ່ຕ່າງໆ ຄົນລາວຍັງລ້ຽງໄກ່ເປັນຈຳນວນຫລາຍເພື່ອເອົາຊີ້ນແລະໄຂ່ສົ່ງຂາຍຕລາດຫລືຕາມຮ້ານອາຫານຕ່າງໆ.

ປູປາໃນລຳນ້ຳແລະຫ້ວຍໜອງຄອງບຶງກໍອຶດໄປນຳທຸກມື້ ສນັ້ນພວກຊາວນາລາວຈຶ່ງພາກັນຂຸດສະຂຸດຫລຸມໄວ້ໃນນາຂອງຕົນເອງ ເພື່ອເກັບນ້ຳຝົນໄວ້ລ້ຽງປາຫລືເກັບເອົາປາທີ່ມີຕາມທັມມະຊາດໄວ້ກິນໄວ້ຂາຍຍາມແລ້ງ. ພັນປາທີ່ທາງກົມກະສິກັມສົ່ງເສີມໃຫ້ລ້ຽງແລະຄິດວ່າໄດ້ຜົນດີສົມຄວນແມ່ນປາສະໝໍ ປາສລິດປາໄນ ເປັນຕົ້ນ.

ງົວຄວາຍກໍລ້ຽງຢູ່ທົ່ວທຸກພາກພື້ນຂອງປະເທດ ສຳລັບໃຊ້ເຮັດວຽກ ເຊັ່ນງົວໃຊ້ໄວ້ແກ່ກວຽນແລະຄວາຍໃຊ້ໄວ້ໄຖແລະຄາດນາ. ນອກຈາກນັ້ນຍັງມີນັກລ້ຽງສັດລ້ຽງງົວຄວາຍ ເພື່ອສົ່ງຂາຍເຂົ້າໂຮງຂ້າສັດເພື່ອເອົາຊີ້ນແຈກຈ່າຍຂາຍຕາມຫ້ອງຕລາດຕ່າງໆ. ແລະເພັ່ນລ້ຽງເປັນຈຳນວນຫລາຍ ໂດຍສະເພາະຢູ່ທາງພາກໃຕ້ຂອງປະເທດ. ແຕ່ການລ້ຽງງົວສຳລັບເອົານ້ຳນົມໃນເມືອງລາວຍັງບໍ່ທັນມີເທື່ອ. ໃນເມືອເມືອງເຮົາຍັງບໍ່ມີໂຮງງານ ໜັງສັດທີ່ມີແລະຫອມໂຮມໄດ້ກໍສົ່ງອອກໄປຂາຍຕ່າງປະເທດ.

ສຳລັບຄົນລາວທີ່ມີຊີວິດຫ່າງຈາກຄວາມສີວິລັຍ ປັດຈຸບັນນີ້ຂະເຈົ້າຍັງພາກັນລ້ຽງມ້າແລະຊ້າງໃຊ້ເປັນພາຫະນະຢູ່. ມ້າລ້ຽງແຕ່ສະເພາະທາງພາກເໜືອຂອງປະເທດລາວສຳລັບໄວ້ຕ່າງສິ່ງຂອງ. ຊ້າງເປັນສັດປ່າທີ່ຄົນໄປຄ້ອງເອົາມາຝຶກສອນໃຊ້ວຽກ ຊຶ່ງມີຢູ່ບາງບ່ອນທາງພາກເໜືອແລະພາກໃຕ້ສຸດຂອງປະເທດ.ແລະມີບາງຄົນລ້ຽງຊ້າງເປັນຈຳນວນ໕-໖ ໂຕ ເພື່ອໃຊ້ຮັບຈ້າງລາກເອົາຂອນໄມ້ຈາກປ່າມາສູ່ທາງຫລວງ.

ອ. ສົນບັດ

4.20 ການອຸດສາຫະກັມໃນປະເທດລາວ.

ການອຸດສາຫະກັມພື້ນເມືອງຂອງປະເທດລາວມີແຜ່ຫລາຍຢູ່ທົ່ວທຸກແຂວງ ຊຶ່ງທຳກັນຢູ່ບ່ອນລະເລັກລະໜ້ອຍ ໂດຍສະເພາະແມ່ນການຕ່ຳແຜ່ນແພມີຢູ່ທົ່ວທຸກແຫ່ງຂອງປະເທດ ຊຶ່ງຂະເຈົ້າເຮັດຫູກເກັບຂິດ(ເກັບລາຍດອກດວງ) ຢູ່ກ້ອງຕາລ່າງເຮືອນຕາມຄອບຄົວຕ່າງໆ ແລະສ່ວນມາກເຮັດໃຊ້ສະເພາະໃນຄອບຄົວ. ແພຕັດເສື້ອ ສິ້ນ ຜ້າຂາວມ້າ ຜ້າບ່ຽງທີ່ຂະເຈົ້າຕ່ຳໆດ້ວຍໄໝ ຝ້າຍແລະລາງເພວເອົາໄໝຄຳຂາວຫລືເຫລືອງຕ່ຳໃສ່ນຳກັນກໍມີ. ຢູ່ບາງບ້ານເພິ່ນຕ່ຳຜ້າຝ້າຍດ້ວຍຝ້າຍທີ່ຂະເຈົ້າປູກເອງ. ບ້ານທີ່ລ້ຽງມ້ອນເອົາໄໝໄດ້ຫລາຍກວ່າໝູ່ຢູ່ບ້ານທອນແລະສີຖານໃຕ້. ຝ້າຍ ໄໝດິບທີ່ຂະເຈົ້າປູກແລະລ້ຽງເອງນີ້ໃຊ້ຕ່ຳໄວ້ນຸ່ງທົ່ມສຳລັບຄອບຄົວເອງຫລາຍກວ່າຈະເອົາໄປຂາຍ ເພາະເຫັນວ່າຝ້າຍແລະໄໝດິບທີ່ຜລິດເອງນີ້ໜັ້ນແລະທົນທານກວ່າຊະນິດອື່ນທີ່ຊື້ມາຈາກຕ່າງປະເທດ ແລະອີກຢ່າງນຶ່ງກໍຄືບໍ່ມີຫລາຍພໍທີ່ຈະສົ່ງອອກໄປຂາຍຕລາດ.

ບ້ານທີ່ເຮັດຫູກເປັນອຸດສາຫະກັມຕ່ຳແຜ່ນແພໂດຍສະເພາະນັ້ນ ມີຢູ່ບ້ານຜານົມໃກ້ຫລວງພຣະບາງ ແລະຢູ່ບ້ານສວນມອນ ບ້ານບໍໂອໃຕ້ວຽງຈັນໄປປະມານ ໕ ແລະ ໑໐ ຫລັກກິໂລແມັດຕາມລຳດັບ. ຊ່າງຕ່ຳຫູກແຕ່ລະຄົນເຮັດຫູກຢູ່ກ້ອງຕາລ່າງເຮືອນໃຜລາວເໝືອນແຕ່ກ່ອນ ແຕ່ມີເປັນຈຳນວນຫລາຍຊຶ່ງໃນບ້ານນຶ່ງໆມີຊ່າງຕ່ຳຫູກທີ່ຊຳນານປະມານ ໑໐໐-໑໔໐ ຄົນ. ສິນຄ້າທີ່ຂະເຈົ້າຜລິດລ້ວນແລ້ວແຕ່ເຮັດດ້ວຍໄໝແລະໄໝຄຳທີ່ຂະເຈົ້າສັ່ງຊື້ມາຈາກຕ່າງປະເທດ. ໄໝຄຳທີ່ຂະເຈົ້າຊື້ເປັນກໍ້ ມີຫລາຍສີດ້ວຍກັນ ແລະໄໝເປັນປອຍຍ້ອມສຳເຣັດຮູບແລ້ວຫລືຊື້ໄໝຂາວມາຍ້ອມເອງກໍມີ. ແຜ່ນແພທີ່ຂະເຈົ້າຕ່ຳແລ້ວໆໄດ້ຖືກສົ່ງໄປຂາຍຕລາດໃນເມືອງຕາມຮ້ານຄ້າຕ່າງໆ. ແຕ່ຍັງມີຊ່າງບາງຄົນຮັບຕ່ຳພິເສດຈາກລູກຄ້າທີ່ສັ່ງມາໂດຍກົງກໍມີ. ແຜ່ນແພທີ່ຂະເຈົ້າຕ່ຳມີຫລາຍຊະນິດ ເຫລືອຈາກສິ່ງທີ່ໄດ້ເວົ້າຢູ່ຕອນຕົ້ນແລ້ວນັ້ນກໍມີຜ້າຢາວ ຕີນສິ້ນ ຫົວສິ້ນ ແພຖື ຜ້າປູໂຕະ ຜ້າຄຸມຕຽງ ຜ້າເຊັດມື ແລະອື່ນໆເປັນຕົ້ນ.

ນອກຈາກການອຸດສາຫະກັມຕ່ຳແຜ່ນແພ ໃນບາງບ້ານຍັງມີຄວາມຊຳນານໃນດ້ານອື່ນອີກຄື ໃນການຈັກສານເຊັ່ນ: ສານອູ່ ກະຕ່າ ກະບຸງ ເຂີງ ສານມອງ ແຫ ກະດົ້ງ ເຮັດຕັ່ງຫວາຍເປັນຕົ້ນ. ລາງຄົນກໍ

ການອຸດສາຫະກັມໃນປະເທດລາວ.(ຕໍ່)

ຊຳນານໃນການປັ້ນໝໍ້ ໄຫ ແລະອື່ນໆອີກ ໂດຍມາກແມ່ນຊາວບ້ານພົນຫລວງກັບບ້ານຈານຢູ່ແຂວງຫລວງພຣະບາງ. ການຕີເຫລັກ ຕີຄຳ ແລະເງິນມີຢູ່ທົ່ວທຸກແຂວງ.

ໃນການຕີເຄື່ອງເອ້ເຄື່ອງໃຊ້ຕ່າງໆດ້ວຍເງິນແລະຄຳກໍມີຢູ່ທົ່ວທຸກແຫ່ງ ແຕ່ພວກຊ່າງທີ່ຊຳນານແລະມີຊື່ສຽງດັງດັ່ງສ່ວນມາກຢູ່ແຂວງຫລວງພຣະບາງ. ຊ່າງຕີຄຳຕີເງິນຕີເຄື່ອງເອ້ຫລາຍຊນິດດ້ວຍກັນຄື ສາຍສ້ອຍ ສາຍຄໍ ຕຸ້ມຫູ ໄມ້ປັກປິ່ນເກົ້າ ປອກແຂນ ແຫວນ ໂອ ຂັນ ນ້ຳເຕົ້າເງິນແລະອື່ນໆ ຊຶ່ງສລັກລວດລາຍດອກດວງໃສ່ຢ່າງສວຍງາມ. ຊ່າງຕີເຫລັກ ຕີມີດ ພ້າ ຈົກ ສຽມ ຂວານ ດັ່ງນີ້ເປັນຕົ້ນ. ສິ່ງຂອງເຄື່ອງເອ້ຂອງໃຊ້ທີ່ເພິ່ນຜລິດອອກມານີ້ໃຊ້ແລະຂາຍແຕ່ພາຍໃນປະເທດ. ສຳລັບພວກຊ່າງຕ່າງໆຢູ່ຕາມແຖບຊົນນະບົດ ສ່ວນມາກຜລິດສິ່ງຂອງເຄື່ອງໃຊ້ທີ່ຈຳເປັນແລະຕ້ອງການສຳລັບໃຊ້ແຕ່ໃນຄອບຄົວ.

ມ.ສ. ສແວງສຸກ

4.21 ການອຸດສາຫະກັມໃນປະເທດລາວ (ຕອນສອງ).

ດັ່ງທີ່ໄດ້ເວົ້າມາແລ້ວ ຄົນລາວສ່ວນຫລາຍເປັນຊາວໄຮ່ຊາວນາ ເມື່ອເວລາຫວ່າງຈາກວຽກນາ ຄືໃນຣະດູແລ້ງຂະເຈົ້າກໍຫາວຽກອື່ນເຮັດ ເພື່ອຫາລາຍໄດ້ພິເສດຊ່ອຍຄອບຄົວ. ຄົນໃດຊຳນານເຜົາຖ່ານ ກໍໄປຕັດຟືນໃນປ່າມາໃສ່ເຕົາເພື່ອເຜົາຖ່ານດັ່ງຂາຍ. ຄົນມີຄວາມສາມາດທາງການປັ້ນດິນຈີ່, ດິນຂໍ, ຫລືກະເບື້ອງກໍເຮັດເຕົາເຜົາດິນເຫລົ່ານີ້ຂາຍ. ລາງບ້ານມີເຄື່ອງປູກຂອງຝັງອຸດົມສົມບູນ ຊາວບ້ານກໍເຮັດນ້ຳມັນໝາກໄມ້ແລະເຮັດນ້ຳອ້ອຍນ້ຳຕານໄວ້ກິນແລະຂາຍ. ສິ່ງຂອງທີ່ຜລິດໄດ້ໃນທ້ອງຖິ່ນຊົນນະບົດຕ່າງໆ ທີ່ໄດ້ກ່າວມານີ້ ລ້ວນແລ້ວແຕ່ໃຊ້ເຄື່ອງມືພົນມະ[illegible]າເຮັດ ແລະຜລິດແຕ່ສະເພາະພໍໃຊ້ໃນຄອບຄົວແລະໃນຂົງເຂດບ້ານໃກ້ຄຽງ.

ນອກຈາກການອຸດສາຫະກັມທີ່ໄດ້ເວົ້າມາແລ້ວ ຕາມໝູ່ບ້ານຕ່າງໆຍັງມີໂຮງສີເຂົ້າແລະໂຮງເລື່ອຍໄມ້ອີກບາງເລັກນ້ອຍ. ປະເທດລາວຍັງນັບຢູ່ໃນກຸ່ມປະເທດທີ່ຍັງຂາດເຂີນທາງດ້ານອຸດສາຫະກັມໃຫຍ່ອັນທັນສມັຍຢູ່ຫລາຍ. ແຕ່ວ່າກໍມີໂຮງງານໃຫຍ່ແລະທັນສມັຍສົມຄວນບາງແຫ່ງທີ່ຜລິດສິນຄ້າໄດ້ເທື່ອລະຫລາຍໆ ຊຶ່ງສ່ວນມາກຕັ້ງຢູ່ຕາມໂຕເມືອງໃຫຍ່ຄືເມືອງວຽງຈັນມີຄື: ໂຮງງານເຮັດເກີບຢາງແລະເກີບແຕະ, ໂຮງງານເຮັດຖົງຢາງ (ປລາສຕິກ), ໂຮງງານຕ່ຳແຜ່ນແພຜ້າຍ, ໂຮງສີເຂົ້າໃຫຍ່, ໂຮງເລື່ອຍ, ໂຮງງານໄມ້ຂີດໄຟ, ໂຮງນ້ຳກ້ອນ ໂຮງຕົ້ມເຫລົ້າ ໂຮງຕົ້ມເກືອ ໂຮງງານເຮັດຢາສູບ, ໂຮງງານເຮັດເຄື່ອງດື່ມ ເຮັດເຂົ້າປຸ້ນ ເຮັດເຂົ້າລອດຊ່ອງ, ໂຮງງານເຮັດຕາປູ ແລະໂຮງງານເຮັດຊີມັງເປັນຕົ້ນ. ໂຮງງານທີ່ມີແຜນການຈະສ້າງສາຂຶ້ນໃໝ່ກໍມີ: ໂຮງງານເຮັດແປ້ງ ເຮັດໄມ້ອັດ ບົດກາເຟ ແລະເຮັດອາຫານການກິນອີກ. ສິ່ງຂອງທັງໝົດທີ່ຜລິດອອກມາໄດ້ຈາກໂຮງງານເຫລົ່ານີ້ ທາງບໍຣິສັດໄດ້ຈັດສົ່ງໄປຂາຍຕາມແຂວງຕ່າງໆແລະກໍມີແຕ່ພໍໃຊ້ພາຍໃນປະເທດ. ມີບາງແຫ່ງຍັງບໍ່ພຽງພໍກັບຄວາມຕ້ອງການກໍສັ່ງຊື້ເຂົ້າມາຈາກຕ່າງປະເທດ.

ການອຸດສາຫະກັມໃນປະເທດລາວ.(ຕອນສອງຕໍ່)

ສິນຄ້າທີ່ສັ່ງຊື້ເຂົ້າມາໃນປະເທດສ່ວນມາກເປັນເຄື່ອງສຳເຣັດຮູບມີຄື: ຣົດຍົນ ເຄື່ອງຈັກ ຣົດຈັກ ຣົດຖີບ ແຜ່ນແພຕັດເສື້ອ ເຄື່ອງຂີດຂຽນ ເຄື່ອງດື່ມບາງຢ່າງ ແປ້ງ ນົມແລະອາຫານການກິນຢ່າງອື່ນອີກບາງເລັກໜ້ອຍ.

ນ ສກ ສແວງສຸກ

4.30 ຣະບົບການເງິນຂອງປະເທດລາວ.

ພຣະຣາຊອານາຈັກລາວໃຊ້ທະນະບັດເງິນກີບ ຊຶ່ງປັດຈຸບັນນີ້ ຣັຖບານໄດ້ຕັ້ງອັດຕຣາໄວ້ດັ່ງນີ້:

-ອັດຕຣາແລກປ່ຽນທາງຣາຊການແມ່ນ ໒໔໐ ກີບຕໍ່ ໑ ໂດລາສະຫະຣັດ.

-ອັດຕຣາແລກປ່ຽນຢ່າງເສຣີຕາມທ້ອງຕລາດແລະຢ່າງຖືກຕ້ອງຕາມກົດໝາຍແມ່ນ ໔໐໐ ກີບຕໍ່ ໑ ໂດລາສະຫະຣັດ.

ສະພາບການເງິນດັ່ງກ່າວນີ້ໄດ້ເລີ້ມມາຕັ້ງແຕ່ປີ ຄ.ສ. ໑໙໖໔ ດ້ວຍຄວາມຊຸ່ມທ່ຽງພໍສົມຄວນ. ກ່ອນມີການປະຕິຮູບເງິນກີບເມື່ອປີ ຄ.ສ. ໑໙໖໔ ໄດ້ເກີດມີອັດຕຣາແລກປ່ຽນໃນຕລາດມືດຊຶ່ງສູງເຖິງ ໗໐໐ ກີບຕໍ່ ໑ ໂດລາສະຫະຣັດ.

ທະນາຄານແຫ່ງຊາດລາວເປັນຜູ້ພິມເງິນກີບອອກຈຳໜ່າຍ. ຜູ້ອຳນວຍການຂອງທະນາຄານຖືກເລືອກຂຶ້ນໂດຍກອງປະຊຸມຄນະຣັຖມົນຕີ. ທາງທະນາຄານໃຫ້ກູ້ຢືມເງິນ, ໃຊ້ເງິນສຳລັບການລົງທຶນຕ່າງໆ ແລະຮັກສາເງິນທຶນສຳຮອງ.

ສົງຄາມອັນຍືດເຍື້ອແລະເກີນຄວາມສາມາດຂອງລາວທີ່ຈະເຮັດໃຫ້ຍຸຕິລົງໄດ້ ໄດ້ເປັນເຫດໃຫ້ມີການໃຊ້ຈ່າຍເງິນເປັນຈຳນວນຫລວງຫລາຍ. ໃນເມື່ອເສຖກິດຂອງຊາດຍັງຢູ່ໃນຄວາມທຸກຈົນດັ່ງນີ້ ການໃຊ້ຈ່າຍຈະຕ້ອງໄດ້ມາຈາກການຊ່ວຍເຫລືອຂອງມິດປະເທດແລະຈາກການກູ້ຢືມ. ລາຍໄດ້ຂອງປະເທດ ໒/໓ ໄດ້ມາຈາກການເກັບພາສີແລະສ່ວຍສາອາກອນແລະຄ່າທຳນຽມສານຕ່າງໆ.

ເນື່ອງຈາກບໍ່ມີເງິນພຽງພໍ ການລົງທຶນເພື່ອພັທນາໃນດ້ານເສຖກິດຈຶ່ງໄດ້ຖືກຈຳກັດຢູ່ແຕ່ສະເພາະການອຸດສາຫະກັມເບົາ. ເຫດຜົນທີ່ສຳຄັນອີກຢ່າງນຶ່ງທີ່ພາໃຫ້ການອຸດສາຫະກັມໃຫຍ່ເກີດຂຶ້ນບໍ່ໄດ້ກໍຄືຄວາມບໍ່ສງົບແລະການຂາດນາຍຊ່າງແລະບຸກຄົນທີ່ມີຄວາມຊຳນິຊຳນານຕ່າງໆ.

ລາຍໄດ້ຂອງພົລເມືອງຕ່ຳກວ່າລາຍຈ່າຍສຳລັບຄ່າຄອງຊີບຢ່າງມາຕຖານ. ສ່ວນມາກແມ່ນຂ້າຣາຊການ, ທະຫານແລະຕຳຣວດເທົ່ານັ້ນ ທີ່ມີເງິນເດືອນກິນເປັນປະຈຳ. ຕໍ່ລົງມາກໍແມ່ນພວກພະນັກງານຢູ່

ຣະບົບການເງິນຂອງປະເທດລາວ.(ຕໍ່)

ຕາມໂຮງງານຮ້ານຄ້າແລະອົງການຕ່າງປະເທດທີ່ມີຢູ່ບໍ່ຫລາຍ. ສ່ວນພວກທີ່ທຳການຄ້າຂາຍນັ້ນມີນ້ອຍ; ການຄ້າຂາຍນ້ອຍໃຫຍ່ສ່ວນຫລາຍໄດ້ຕົກຢູ່ໃນມືຂອງຊາວຕ່າງປະເທດ ເປັນຕົ້ນ ເຈັກ, ແກວ, ອິນເດັຽ ແລະຊາວຕະເວັນຕົກ.

ເມື່ອການເງິນຍັງຜິດເຄືອງຢູ່ຢ່າງນີ້ ຢູ່ຕາມບ້ານແລະຕາມບາງເມືອງຈຶ່ງຍັງມີການເອົາສິ່ງຂອງ ຫລືສິນຄ້າແລກປ່ຽນກັນແທນການຊື້ຂາຍດ້ວຍເງິນ.

ໃນປັດຈຸບັນນີ້ ປັນຫາທີ່ໜັກໜ່ວງອີກຢ່າງນຶ່ງຂອງສັງຄົມແລະຣັຖບານກໍຄືຊາວອົພຍົບຊຶ່ງປັດຈຸບັນນີ້ໄດ້ທະວີຈຳນວນຂຶ້ນເຖິງ ໗00.000 ຄົນ. ໃນຕອນຕົ້ນທີ່ຂະເຈົ້າມາເຖິງ ຣັຖບານກໍຕ້ອງໄດ້ຈັດຫາ ຫ້ວານຢາ ເຄື່ອງນຸ່ງເຄື່ອງຫົ່ມ ເຂົ້າປາອາຫານ ຕລອດທັງບ່ອນຢູ່ບ່ອນເຊົາໃຫ້ຂະເຈົ້າ. ໃນການຕ້ອນຮັບຊາວອົພຍົບນີ້ກໍຕ້ອງມີຂ້າຣາຊການຫລືພນັກງານຄນະນຶ່ງອີກ ແລະນີ້ກໍໝາຍເຖິງການໃຊ້ຈ່າຍເພີ້ມເຕີມຂຶ້ນອີກເໝືອນກັນ.

ປັດຈຸບັນນີ້ເຂື່ອນນ້ຳງື່ມກຳລັງໃຫ້ຄວາມຫວັງແກ່ຣັຖບານແລະປະຊາຊົນລາວທີ່ຈະມີໂອກາດໄດ້ຟື້ນຟູເສຖກິດແລະການເງິນຂອງຊາດ. ຂ້າພະເຈົ້າກໍຂໍເຕືອນວ່າ ສິ່ງຂອງທຸກສິ່ງທຸກຢ່າງ ຕລອດທັງເຂື່ອນນ້ຳງື່ມເອງ ຍ່ອມຂຶ້ນຢູ່ກັບຜູ້ໃຊ້ ກ່ອນມັນຈະເປັນປໂຍດຂຶ້ນໄດ້. ເຂື່ອນນ້ຳງື່ມຈະມີສ່ວນຊ່ວຍເຫລືອຟື້ນຟູເສຖກິດຂອງຊາດຢ່າງເຕັມສ່ວນໄດ້ ກໍຍ່ອມຂຶ້ນຢູ່ກັບຜູ້ວາງແຜນຈະໃຊ້ເຂື່ອນນີ້ໃຫ້ເປັນປໂຍດ.

ສ. ໄຊຍະສິທເສນາ

5.0 Political Setting

The political system like other social systems in Laos is in a state of transition. Colonialism has ended and a new nation-state is in development. It is difficult to say what will arise from present developments.

Although the 'Lao' people are the dominant group in the country, they represent no more than half of the population. There are two types of minorities: the indigenous and the foreign. The indigenous minorities are ethnic groups living mainly in the higher plateaux or mountains. The foreign minorities, mainly Chinese and Vietnamese, live mainly in the cities, where they conduct a big percentage of the commerce.

From the beginning the social structure of Laos has been characterized by a sharp division between the aristocracy and the peasant population. Peasant life centered around small villages, where rice cultivation was the main occupation. This particular kind of life led to the development of kind of interpersonal relations, in which face-to-face contact with limited numbers of people was general. The world of the aristocracy centered on the court and was concerned largely with rank and status.

Buddhism, which was shared by the aristocracy and the peasants (although in slightly different forms), was little concerned with ideal human society, but concentrated on ideal personal characteristics. This led to a lack of consideration of the structure of society and an emphasis on the personal qualities of the rulers. It, likewise, tended to bestow legitimacy to the power and status of the elite, so that their opinions tended to become synonymous with the 'national interest'. This situation exists today to such an extent that most Laotians automatically look to this group for statements of national policy, Although the term 'elite' has been expanded to include modern, educated groups, the attitudes towards it still persist.

In Laos the development of associational groups (such as

labor unions, etc.) has been rather slow[1] with the consequence that there is no means for articulating the interests of some large social groups, such as the peasants. Such political parties as have arisen have not served to aggregate the interests of different groups. They have tended rather to present rather broad programs of national scope. One exception to this is the <u>Neo Lao Hak Xat</u> Party, which represents left-wing elements in the country.

A sense of citizenship is largely missing in Laos due to the absence of clearly stated national goals and ideals. The concept of Laos as a national state is of recent origin and is largely absent from national consciousness. There is more sense of ethnic identity than national pride. This is not to say that there is not respect for the King of national symbols, but that this is part of the general socialization of the Lao people involving concepts of respect for authority rather than loyalty to any particular political system.

The communication media in Laos do not serve as a very effective means of providing information which the people can use in understanding and evaluating political developments. There are two reasons for this: (1) There is a concentration of facilities in urban areas. Vientiane has several newspapers and 2 or 3 radio stations. Other provincial capitals have radio stations, and newspapers from Vientiane are circulated there, whereas in the rural areas communication is either a matter of face-to-face contact between itinerants and villagers, or it is unidirectional, i.e. villagers are on the receiving end of radio communications from urban centers. (2) The function of most communications is not to provide information upon which carefully considered opinions can be based, but to gather popular support for a particular course of action which the government has taken or will take.

1. There are now three organizations of ex-students. They represent largely the interests of educated youths.

The formal structures of the Lao government closely resemble those of most Western nations. There is a written constitution which defines the essential political institutions as: (1) The King as head of state; (2) the Council of Ministers as the executive power; and (3) the King's Council and the National Assembly as the legislative power. Although the Judiciary is not listed as one of the essential institutions, it is stated in Article 42 of the constitution that judicial power is independent of the legislative and executive power.

Although the National Assembly has the law-making function, laws are frequently originated in the Council of Ministers and are sent to the National Assembly for more or less routine approval. This is true because the National Assembly doesn't look upon the production of public policy in the form of laws as its principal goal. Actually rule-making is a prerogative which is assigned to several agencies in Laos: The King issues royal decrees; the National Assembly passes laws; various ministries publish administrative decrees. These rules are supplemented by customs and traditions which carry moral sanctions and are of major significance on Lao behavior.

Rule-application is carried out by the Council of Ministers acting through the administrative offices of the 18 ministries. The Prime Minister as the head of the Council is very powerful, since political power in Laos is largely resident in the central government. The Prime Minister's surrogate in the provincial government is the provincial governor, who is like all civil servants appointed by and responsible to the Ministry of Interior. The governor (with the advice of the provincial council) has very great power in a large area in the execution of laws, decrees, and royal orders. In the provinces all of the instrumentalities for the execution of rules are directly or indirectly responsible to him.

Although a system of courts exists, rule-adjudication is

dealt with in several different ways. In civil suits compromise or adjustment is usually arrived at with the assistance of the village chief or some other respected person. In most civil suits or in suits where there is conflict between laws, decrees, and orders the governor has the authority to resolve them. In criminal suits litigation normally proceeds through the court system from the courts of first instance in the provincial capitals to the courts of appeal in the larger cities.

5.1 ປະເທດລາວ

ພຣະຣາຊອານາຈັກລາວມີການປົກຄອງຕາມຣະບອບປະຊາທິປະໄຕ; ມີພຣະພຸທສາສນາເປັນສາສນາປະຈຳຊາດ; ມີພຣະບາດສົມເດັດພຣະເຈົ້າມະຫາຊີວິດເປັນອົງປະມຸກສູງສຸດຂອງປະເທດ; ມີຣັຖທັມມະນູນເປັນກົດອັນສູງສຸດ ສຳຫລັບກຳນົດຊີ້ແຈງພາຣະໜ້າທີ່ໂດຍທົ່ວໄປຂອງທຸກໆສະຖາບັນທີ່ສຳຄັນໃນຝ່າຍບໍຣິຫານປະເທດ; ມີສະຖາບັນກົດໝາຍຢູ່ສອງສະຖາບັນ ຄື: ສະພາແຫ່ງຊາດ ຫລືສະພາຜູ້ແທນຣາສດອນ ແລະ ກອງປະຊຸມຣາຊມົນຕີ; ມີຣັຖບານນຳໂດຍນາຍົກຣັຖມົນຕີ ຊຶ່ງມີນະໂຍບາຍການເມືອງຕ່າງປະເທດຕາມແນວທາງເປັນກາງ; ມີພົລເມືອງປະມານສາມລ້ານຄົນ ຊຶ່ງໃນຈຳນວນນີ້ປະກອບດ້ວຍລາວລຸ່ມແລະຊາວເຜົ່າລາວເທິງແລະລາວສູງ; ແລະພຣະຣາຊອານາຈັກລາວມີເສິກສົງຄາມແຫ່ງການລຸກລານຂອງຕ່າງປະເທດ ທີ່ຄົນລາວເບື້ອໜ່າຍແລະບໍ່ປາຖນານາເປັນເວລາດົນນານກວ່າສາມສິບປີ.

ສ.ໄຊຍະສິທເສນາ

ເປັນເຈົ້າໃຫ້ຮັກໄພ່ທັງຫລາຍ	ເປັນນາຍໃຫ້ຮັກໝູ່
ເປັນປູ່ໃຫ້ຮັກຫລານ	ເປັນກວານໃຫ້ຮັກລູກບ້ານ

5.2 ພຣະມະຫາກະສັດລາວ.

ພຣະມະຫາກະສັດລາວຊົງເປັນອົງປະມຸກສູງສຸດຂອງພຣະຣາຊອານາຈັກລາວ. ພຣະອົງຊົງເປັນທີ່ເຄົາຣົບສັກກາຣະຂອງປະຊາຊົນລາວທົ່ວປະເທດ. ພຣະອົງຊົງເປັນຜູ້ນຳພາປະຊາຊົນລາວນັບຖືແລະບຳເພັນປະຕິບັດຮີດຄອງຂອງພຣະພຸທສາສນາ.

ພຣະບາດສົມເດັດພຣະເຈົ້າມະຫາຊີວິດ ຊົງອອກພຣະຣາຊໂອງການປະກາດໃຊ້ກົດໝາຍ ທີ່ສະພາແຫ່ງຊາດໄດ້ລົງມະຕິເຫັນຊອບ ແລ້ວສົ່ງຂຶ້ນທາກອງປະຊຸມຣາຊມົນຕີເພື່ອນຳຂຶ້ນທູນເກົ້າຖວາຍແດ່ພຣະອົງ.

ພຣະອົງຊົງໃຊ້ອຳນາດບໍຣິຫານໂດຍຄນະຣັຖມົນຕີທີ່ພຣະອົງຊົງຕັ້ງຂຶ້ນ ດ້ວຍຄວາມເຫັນຊອບຂອງສະພາແຫ່ງຊາດ, ເວັ້ນແຕ່ໃນກໍຣະນີພິເສດ ຄືໃນພາວະຄັບຂັນ ຊຶ່ງພຣະອົງຈະຊົງປະກອບຣັຖບານຂຶ້ນໂດຍພຣະອົງເອງ ແລະບໍ່ຈຳເປັນຂໍຄວາມໄວ້ວາງໃຈຈາກສະພາ.

ພຣະມະຫາກະສັດຊົງດຳຣົງຕຳແໜ່ງຈອມທັບລາວ. ດ້ວຍຄວາມຍິນຍອມຂອງສະພາແຫ່ງຊາດພຣະອົງຈະຊົງປະກາດສົງຄາມກໍໄດ້. ພຣະອົງຊົງໄວ້ຊຶ່ງສິດລົງພຣະນາມໃນໜັງສືສັນຍາກັບຕ່າງປະເທດ, ແລະຊົງໄວ້ຊຶ່ງສິດແຕ່ງຕັ້ງແລະປະທານຍົດສັກຝ່າຍພົລເຮືອນແລະທະຫານ.

ໃນຖານະເປັນຜູ້ນຳສູງສຸດຂອງປະເທດ ພຣະອົງຊົງມີພາຣະໜ້າທີ່ອື່ນໆຢ່າງມາກມາຍກ່າຍກອງ.

ຂໍໃຫ້ພຣະມະຫາກະສັດລາວຈົ່ງຊົງພຣະຈະເຣີນ. ຂໍໃຫ້ປະເທດລາວຈົ່ງວັທນາຖາວອນ.

ສ. ໄຊຍະສິທເສນາ



5.21 ທຸງຊາດລາວ.

ທຸງຊາດລາວມີພື້ນສີແດງ ແລະມີຮູບຊ້າງສາມຫົວສີຂາວຢອງຢູ່ເທິງແທ່ນທ້າພັກຢູ່ເຄິ່ງກາງ. ຢູ່ເທິງຊ້າງສາມຫົວມີເສດສັດທົ່ນຂາວເຈັດຊັ້ນ.

ສ່ວນປະກອບຂອງທຸງຊາດລາວ ມີຄວາມໝາຍດັ່ງຕໍ່ໄປນີ້:

- ພື້ນສີແດງ ໝາຍເຖິງຄວາມອົງອາດກ້າຫານຂອງຊາວລາວ ຊຶ່ງກຽມພ້ອມຢູ່ສເມີທີ່ຈະສລະຊີວິດ ເລືອດເນື້ອເພື່ອປ້ອງກັນປະເທດຊາດ.
- ຊ້າງສາມຫົວ ໝາຍເຖິງການຫ້ອມໂຮມເຂົ້າເປັນອັນນຶ່ງອັນດຽວກັນຂອງພຣະຣາຊອານາຈັກລາວ ທັງສາມ ຄື ອານາຈັກລ້ານຊ້າງຫລວງພຣະບາງ, ອານາຈັກລ້ານຊ້າງວຽງຈັນ ແລະອານາຈັກ ນະຄອນຈຳປາສັກ.
- ແທ່ນທ້າພັກ ໝາຍເຖິງສັນຍາລັກແຫ່ງຄວາມສາມັກຄີປອງດອງອັນໜັ້ນແກ່ນຂອງຊາວລາວ.
- ເສດສັດເຈັດຊັ້ນ ໝາຍເຖິງພຣະບໍຣົມມະຣາຊວັງຂອງພຣະມະຫາກະສັດລາວ ຊຶ່ງຊາວລາວໄດ້ ເພິ່ງຮົ່ມໂພທິສົມພານຕລອດມາ.

ສ. ໄຊຍະສິທເສນາ

ໄມ້ລຳດຽວ ລ້ອມຮົ້ວບໍ່ໄຂ່ວ
ໄພ່ບໍ່ພ້ອມ ແປງບ້ານບໍ່ເຮືອງ

5.30 ກຳເນີດຂອງຣັຖທັມມະນູນແຫ່ງພຣະຣາຊອານາຈັກລາວ.

ພາຍຫລັງສົງຄາມໂລກຄັ້ງທີ່ສອງໄດ້ສິ້ນສຸດລົງເມື່ອຄຣິສ໌ທສັກຣາດ ໑໙໔໕ ໄດ້ມີການຣວມປະເທດລາວເຂົ້າເປັນພຣະຣາຊອານາຈັກນຶ່ງ ພາຍໃຕ້ການປົກຄອງຂອງພຣະບາດສົມເດັດພຣະເຈົ້າມະຫາຊີວິດທີ່ນະຄອນຫລວງພຣະບາງ. ແລ້ວຕໍ່ມາກໍໄດ້ມີການຈັດຕັ້ງສະພາຜູ້ແທນຣາສດອນຂຶ້ນ ໂດຍມີສະມາຊິກທີ່ຖືກເລືອກມາຈາກທຸກພາກຂອງຣາຊອານາຈັກ ໔໔ ທ່ານ. ບັນດາທ່ານສະມາຊິກເຫລົ່ານັ້ນໄດ້ຣ່າງກົດຣັຖທັມມະນູນສບັບນຶ່ງຂຶ້ນ ຊຶ່ງຈະຊີ້ແຈງໃຫ້ເຫັນວ່າອຳນາດການປົກຄອງປະເທດມາຈາກປວງຊົນຊາວລາວຕາມຣະບອບປະຊາທິປະໄຕ.

ເມື່ອວັນທີ່ ໑໑ ພຶສພາ ຄ.ສ. ໑໙໔໗ ພຣະບາດສົມເດັດພຣະເຈົ້າສີສວ່າງວົງ ຈຶ່ງໄດ້ປະກາດໃຊ້ຣັຖທັມມະນູນສບັບນີ້ເປັນທາງການ. ແຕ່ປີນັ້ນມາຈົນເຖິງເທົ່າທຸກມື້ນີ້ ວັນທີ່ ໑໑ ພຶສພາ ກໍໄດ້ຖືກຖືເອົາເປັນວັນຢຸດຣາຊການ ເພື່ອເປັນການສລອງວັນກຳເນີດແຫ່ງຣັຖທັມມະນູນຂອງຊາດ.

ສ. ໄຊຍະສິທເສນາ

ກວາງກິນຫມາກຂາມປ້ອມ ໄປຄາກົ້ນຂີ້ນັ້ງ
ບາດຣ່າ ນັ້ງບໍ່ໃສ້ ສາມມື້ ກະຕ່າຍຕາຍ

5.31 ຣັຖທັມມະນູນແຫ່ງພຣະຣາຊອານາຈັກລາວ

ຜູ້ຂຽນບໍ່ສາມາດຈະນຳເອົາລາຍລະອຽດອັນຍືດຍາວທັງໝົດຂອງກົດຣັຖທັມມະນູນມາຂຽນລົງໃນທີ່ນີ້ໄດ້ ຈຶ່ງຂໍຍົກເອົາແຕ່ພຽງບາງມາດຕຣາມາກ່າວໂດຍສັງເຂບ ດັ່ງຕໍ່ລົງໄປນີ້:

ປະເທດລາວຮູ້ສຶກຄັກແນ່ວ່າ ຕົນຈະມີກຳລັງຢູ່ໄດ້ຕໍ່ໄປໃນອະນາຄົດ ກໍຍ້ອນການຮວບຮວມແຂວງທັງໝົດຂອງປະເທດເຂົ້າກັນ ດັ່ງທີ່ປະວັດສາດຂອງຊາດເຄີຍຊີ້ໃຫ້ເຫັນມາແລ້ວ. ທັງນີ້ ກໍເພື່ອເປັນການຢັ້ງຢືນຢ່າງສວ່າງຜ່າເຜີຍເຖິງຄວາມເປັນອັນນຶ່ງອັນດຽວແລະຄວາມເປັນເອກຣາດຂອງຕົນ.

ປວງຊົນຊາວລາວ ຢັ້ງຢືນຄວາມຈົງຮັກພັກດີຕໍ່ຣະບອບມີພຣະມະຫາກະສັດ ແລະຕໍ່ພຣະບໍຣົມມະຣາຊວົງຂອງພຣະບາດສົມເດັດພຣະເຈົ້າມະຫາຊີວິດສີສວ່າງວົງ...ຯລຯ.

ມາດຕຣາ ໑- "ປະເທດລາວເປັນຣາຊອານາຈັກອັນນຶ່ງອັນດຽວ ຈະແບ່ງອອກຈາກກັນບໍ່ໄດ້ ແລະຢູ່ໃນຣະບອບປະຊາທິປະໄຕ. ນະຄອນຫລວງແມ່ນວຽງຈັ້ນ."

ມາດຕຣາ ໒- "ພາສາລາວເປັນພາສາຣາຊການ."

ມາດຕຣາ ໙- "...ພຣະມະຫາກະສັດຊົງເປັນປະມຸກສູງສຸດຂອງປະເທດ. ອົງພຣະມະຫາກະສັດຊົງດຳຣົງຢູ່ໃນຖານະອັນເປັນທີ່ສັກກາຣະ ຜູ້ໃດຈະລະລ່ວງເກີນບໍ່ໄດ້. ພຣະມະຫາກະສັດຊົງເປັນພຸທມາມະກະຢ່າງແທ້ຈິງ."

ມາດຕຣາ ໑໗- "ພຣະມະຫາກະສັດຊົງເລືອກຕັ້ງນາຍົກຣັຖມົນຕີ. ນາຍົກຣັຖມົນຕີຈັດຕັ້ງຄນະຣັຖບານຂຶ້ນແລ້ວສເນີໃຫ້ສະພາແຫ່ງຊາດຮັບຮອງ

ມາດຕຣາ ໔໕- "ສະພາແຫ່ງຊາດປະກອບດ້ວຍສະມາຊິກທີ່ປະຊາຊົນທົ່ວໄປເລືອກຕັ້ງຂຶ້ນທຸກຣະຍະ ໕ ປີ ຕາມບົດບັນຍັດໄວ້ໃນກົດໝາຍເລືອກຕັ້ງ,...ຯລຯ"

ຣັຖທັມມະນູນແຫ່ງພຣະຣາຊອານາຈັກລາວ. (ຕໍ່)

ມາດຕຣາ ໓໗- "ກອງປະຊຸມຣາຊມົນຕີມີສະມາຊິກ ໑໒ ທ່ານ ແບ່ງອອກດັ່ງນີ້:

ກ. ໖ ທ່ານ ແມ່ນພຣະມະຫາກະສັດຊົງແຕ່ງຕັ້ງຂຶ້ນໂດຍກົງ.

ຂ. ໖ ທ່ານ ແມ່ນສະພາແຫ່ງຊາດເປັນຜູ້ເລືອກ ແລ້ວພຣະມະຫາກະສັດຊົງແຕ່ງຕັ້ງຂຶ້ນ...ຯລຯ"

ມາດຕຣາ ໔໓- "ການແກ້ໄຂຣັຖທັມມະນູນສະບັບນີ້ຈະໄດ້ທຳຕາມລັກສນະດັ່ງຕໍ່ໄປນີ້:- ຄຳຕົກລົງແກ້ໄຂປ່ຽນແປງອາດມາຈາກກອງປະຊຸມຣາຊມົນຕີ ຫລືມາຈາກຄນະຣັຖມົນຕີ ຫລືມາຈາກສະມາຊິກສະພາແຫ່ງຊາດ ຊຶ່ງມີສຽງຫລາຍກວ່າເຄິ່ງໃນຈຳນວນສະມາຊິກທີ່ມາປະຊຸມ...ຯລຯ"

ມາດຕຣາ ໔໔- "...ສະພາແຫ່ງຊາດເປັນຜູ້ສງວນໄວ້ຊຶ່ງສິດເດັດຂາດໃນການຕີຄວາມໝາຍແຫ່ງຣັຖທັມມະນູນນີ້."

ສ. ໄຊຍະສິທເສນາ

ເງິນເຕັມພາ ບໍ່ທໍ່ພຍາເຕັມປູມ

5.40 ສະພາແຫ່ງຊາດລາວ

ປົກຄອງຕາມຣະບອບປະຊາທິປະໄຕແມ່ນການປົກຄອງທີ່ຝ່າຍບໍຣິຫານໄດ້ອຳນາດມາຈາກປະຊາຊົນ. ການທີ່ຈະໃຫ້ປະຊາຊົນທຸກຄົນຂອງປະເທດມາພົວພັນ ຫລືຄວບຄຸມການບໍຣິຫານປະເທດໂດຍກົງນັ້ນຍ່ອມຈະເປັນສິ່ງສຸວິສັຍ. ດັ່ງນັ້ນ ຈຶ່ງໄດ້ມີການເລືອກຕັ້ງເອົາຜູ້ແທນຣາສດອນຄນະນຶ່ງຂຶ້ນ ເພື່ອປະຕິບັດໜ້າທີ່ອັນໜັກ ແລະມີກຽດອັນສູງນີ້ຕາງໜ້າປະຊາຊົນ. ເມື່ອຖືກເລືອກຕັ້ງຂຶ້ນແລ້ວ ບັນດາຜູ້ແທນຣາສດອນທັງຫລາຍກໍຈະເຂົ້າຮ່ວມປະຊຸມກັນຢູ່ທີ່ສະພາຜູ້ແທນຣາສດອນ ຫລືເອີ້ນອີກຊື່ນຶ່ງວ່າສະພາແຫ່ງຊາດ ຊຶ່ງປັດຈຸບັນນີ້ ມີສະມາຊິກທັງໝົດ ໕໙ ທ່ານ ຕາງໜ້າປະຊາຊົນໃນ ໑໖ ແຂວງຂອງພຣະຣາຊອານາຈັກລາວ.

ສະພາແຫ່ງຊາດຊຸດໃດມີອຳນາດຢູ່ໃນຕຳແໜ່ງໄດ້ຄາວລະ ໕ ປີ ແລະຈະຮ່ວມປະຊຸມເປັນສມັຍສາມັນປະຈຳປີຕາມພາຍຣຽກຂອງພຣະມະຫາກະສັດ; ປີໃດມີກຳໜົດ ໕ ເດືອນ ນັບຕັ້ງແຕ່ວັນທີ່ ໑໑ ພຶສພາເປັນຕົ້ນໄປ. ພຣະມະຫາກະສັດຈະຊົງສັ່ງຍືດກຳໜົດນີ້ອອກໄປອີກ ຫລືຈະຊົງສັ່ງໃຫ້ອັດປະຊຸມສະພາແຫ່ງຊາດກ່ອນສິ້ນກຳໜົດນີ້ກໍໄດ້. ນອກຈາກນີ້ ພຣະມະຫາກະສັດຈະຊົງຮຽກປະຊຸມສະພາແຫ່ງຊາດສມັຍວິສາມັນກໍໄດ້ ໂດຍຊົງໃຊ້ພຣະຣາຊອຳນາດຂອງພຣະອົງເອງ, ໂດຍຄຳສເນີຂອງຣັຖບານ, ໂດຍຄຳຮ້ອງຂໍຂອງຄນະກັມມະການປະຈຳສະພາແຫ່ງຊາດ ຫລືໂດຍຄຳຮ້ອງຂໍຂອງສະມາຊິກສະພາແຫ່ງຊາດ ຢ່າງນ້ອຍເຄິ່ງນຶ່ງໃນຈຳນວນທັງໝົດ. ພິທີໄຂແລະອັດປະຊຸມຈະແມ່ນພຣະມະຫາກະສັດສະເດັດໂດຍພຣະອົງເອງ ຫລືຈະແມ່ນຜູ້ຕາງໜ້າຂອງພຣະອົງມາທຳກໍໄດ້.

ສະພາແຫ່ງຊາດເປັນຜູ້ລົງມະຕິໄວ້ວາງໃຈຣັຖບານແລະຮັບຮອງເອົາກົດໝາຍທັງໝົດອອກໃຊ້.

ຜູ້ແທນຣາສດອນມີສິດສເນີຮ່າງກົດໝາຍຕ່າງໆ. ສະພາແຫ່ງຊາດມີສິດຈັດຕັ້ງຄນະກັມມາທິການພິເສດເພື່ອສືບສວນກວດຂັນແລະເບິ່ງແຍງຮັກສາການດຳເນີນຣາຊການແລະຕຳແໜ່ງການທຸກພແນກ.

ບັນດາກົດໝາຍທີ່ສະພາແຫ່ງຊາດໄດ້ລົງມະຕິເຫັນດີແລ້ວຈະຖືກສົ່ງເຂົ້າສູ່ກອງປະຊຸມຣາຊມົນຕີ.

ສ. ໄຊຍະສິທເສນາ

171

ສະພາແຫ່ງຊາດລາວ. (ຕໍ່)

ພຣະມະຫາກະສັດຈະຊົງຍຸບສະພາແຫ່ງຊາດຕາມຂໍ້ສເນີຂອງຄນະຣັຖມົນຕີກໍໄດ້ ເມື່ອກອງປະຊຸມຣາຊມົນຕີຫາກເຫັນດີນໍາດ້ວຍ. ເມື່ອສະພາແຫ່ງຊາດຫາກຖືກຍຸບເຊັ່ນນັ້ນແລ້ວ ກໍຈະມີການເລືອກຕັ້ງຜູ້ແທນຣາສດອນໃໝ່ພາຍໃນ ໖໐ ວັນ ສະມາຊິກສະພາແຫ່ງຊາດໄດ້ຣັບເງິນບໍາຣຸງຕາມທີ່ກໍານົດໄວ້ໃນກົດໝາຍ.

ສ. ໄຊຍະສິທເສນາ

ມຸ່ງຜ້າລາຍໝາເຫົ້າ ຄົ້ນຄວາມເກົ່າຜິດກັນ

ໂລບມາກ ມັກລາຍຫາຍ

5.41 ກອງປະຊຸມຣາຊມົນຕີລາວ.

ດັ່ງທີ່ໄດ້ກ່າວມາແລ້ວໃນບົດກ່ອນ ກອງປະຊຸມຣາຊມົນຕີປະກອບດ້ວຍສະມາຊິກ ໑໔ ທ່ານ; ໖ ທ່ານ ເປັນພຣະເຈົ້າມະຫາຊີວິດຊົງແຕ່ງຕັ້ງ, ແລະອີກ ໖ ທ່ານ ຖືກເລືອກມາຈາກບັນດາສະມາຊິກສະພາແຫ່ງຊາດ.

ກ່ອນຈະເຂົ້າຮັບໜ້າທີ່ ສະມາຊິກກອງປະຊຸມຣາຊມົນຕີຕ້ອງປະຕິຍານຕົນໃນທີ່ປະຊຸມວ່າ: "ຂ້າພະເຈົ້າປະຕິຍານຕົນວ່າ ຈະຊື່ສັດສຸຈະຣິດຕໍ່ພຣະມະຫາກະສັດ, ຕໍ່ຣັຖທັມມະນູນ, ຕໍ່ກົດໝາຍຂອງພຣະຣາຊອານາຈັກແລະຂໍຮັບໃຊ້ເພື່ອຜົນປໂຍດຂອງປະເທດຢ່າງເຕັມຄວາມສາມາດ."

ອາຍຸຂອງຕຳແໜ່ງ ແລະກຳນົດແລະພາຍຣຽກປະຊຸມຂອງກອງປະຊຸມຣາຊມົນຕີກໍເໝືອນກັນກັບຂອງສະພາແຫ່ງຊາດ. ເວັ້ນແຕ່ໃນກໍຣະນີທີ່ພຣະຣາຊບັນລັງເປົ່າວ່າງ ຫລືເມື່ອພຣະມະຫາກະສັດທາກຊົງສະເດັດອອກໄປຕ່າງປະເທດເປັນເວລາຊົ່ວຄາວ ກອງປະຊຸມຣາຊມົນຕີຈະເປັນຜູ້ສຳເຣັດຣາຊການ ແລະບໍຣິຫານກິຈການແຜ່ນດິນແທນ.

ສະມາຊິກຂອງກອງປະຊຸມມີສິດຕັ້ງແລະປ່ຽນແປງຣະບຽບພາຍໃນຂອງຕົນເອງໄດ້ໂດຍອິສຣະ, ແລະໄດ້ຮັບເງິນບຳຣຸງແລະໄດ້ຮັບຜົນປໂຍດດັ່ງດຽວກັນກັບຜູ້ແທນຣາສດອນ.

ໜ້າທີ່ຂອງສະມາຊິກກອງປະຊຸມຣາຊມົນຕີຍ່ອມຂັດແຍ່ງຕໍ່ໜ້າທີ່ຂອງຜູ້ແທນຣາສດອນ ແລະຂອງຣັຖມົນຕີ. ກອງປະຊຸມຣາຊມົນຕີໃຫ້ຄວາມເຫັນໃນບັນດາຮ່າງກົດໝາຍ ແລະຂໍ້ສເນີຕ່າງໆ ທີ່ພຣະມະຫາກະສັດຫລືຣັຖບານໄດ້ມອບໝາຍໃຫ້ພິຈາຣະນາ.

ສະມາຊິກກອງປະຊຸມຣາຊມົນຕີມີສິດສເນີຮ່າງກົດໝາຍໄດ້ ແລ້ວສົ່ງຮ່າງກົດໝາຍນັ້ນໄປໃຫ້ສະພາແຫ່ງຊາດພິຈາຣະນາ.

ກອງປະຊຸມຣາຊມົນຕີຈະຕັ້ງຂຶ້ນເປັນສານສູງສຸດໂດຍສານພິເສດກໍໄດ້.

ກອງປະຊຸມຣັຖມົນຕີ

ຄນະຣັຖບານ ຫລືກອງປະຊຸມຣັຖມົນຕີລາວ ນຳໂດຍນາຍົກຣັຖມົນຕີຄົນນຶ່ງ ທີ່ພຣະມະຫາກະສັດຊົງເລືອກຕັ້ງຂຶ້ນ ໃຫ້ປະກອບຄນະຣັຖບານ ແລ້ວສເນີໃຫ້ສະພາແຫ່ງຊາດຮັບຮອງ. ໃນການປະກອບຄນະຣັຖບານນີ້, ນາຍົກຣັຖມົນຕີຈະເລືອກເອົາຣັຖມົນຕີຈາກວົງການພາຍນອກ ຫລືຈະເລືອກເອົາບາງຄົນໃນຈຳນວນຜູ້ແທນຣາສດອນກໍໄດ້.

ເມື່ອສະພາແຫ່ງຊາດໄດ້ລົງມະຕິໄວ້ວາງໃຈດ້ວຍຄະແນນສຽງເຄິ່ງນຶ່ງຂອງຈຳນວນສະມາຊິກທີ່ມາປະຊຸມ ໂດຍນັບຜູ້ແທນຣາສດອນທີ່ຈະເຂົ້າຮ່ວມໃນຄນະຣັຖບານແລ້ວ ຄນະຣັຖບານກໍຈະໄດ້ຮັບແຕ່ງຕັ້ງຂຶ້ນ.

ເມື່ອໄດ້ຮັບການແຕ່ງຕັ້ງແລ້ວ ແລະກ່ອນຈະເຂົ້າຮັບໜ້າທີ່, ຕາມທີ່ເຄີຍປະຕິບັດກັນມາ, ຄນະຣັຖບານຕ້ອງໄປປະຕິຍານຕົນຢູ່ໃນວັດສີສະເກດທີ່ວຽງຈັນ ຊ້ອງໜ້າປະທານແລະສະມາຊິກສະພາແຫ່ງຊາດວ່າ: "ຂ້າພະເຈົ້າຂໍປະຕິຍານຕົນວ່າ ຈະສື່ສັດສຸຈຣິດຕໍ່ພຣະມະຫາກະສັດ, ຈະສື່ສັດສຸຈຣິດຕໍ່ຣັຖທັມມະນູນ, ຈະປ້ອງກັນພຣະມະຫາກະສັດ ແລະຈະປ້ອງກັນຣັຖທັມມະນູນ ແລະຂໍຮັບໃຊ້ປະເທດຊາດແລະປະຊາຊົນລາວໂດຍຄວາມເອົາໃຈໃສ່ແລະຄວາມຊື່ສັດ."

ຣັຖບານລາວຊຸດປັດຈຸບັນແມ່ນຣັຖບານປະສົມຊົ່ວຄາວ ຊຶ່ງນາຍົກຣັຖມົນຕີມີຜູ້ຮອງສອງຄົນ ແລະແຕ່ລະຄົນມີຕຳແໜ່ງເປັນທັງຮອງປະທານກອງປະຊຸມຣັຖມົນຕີແລະຣັຖມົນຕີ. ນາຍົກຣັຖມົນຕີ ແລະຣັຖມົນຕີແຕ່ລະຄົນ ເປັນຜູ້ວ່າໜ້າທີ່ກະຊວງນຶ່ງຫລືຫລາຍກະຊວງກໍໄດ້, ມີສິດສເນີຮ່າງກົດໝາຍ ແລະຕັ້ງບັນດາຣັຖມົນຕີຊ່ວຍວ່າການກໍໄດ້. ຣັຖທັມມະນູນບົ່ງໄວ້ວ່າ ບໍ່ໃຫ້ມີຣັຖມົນຕີລອຍ.

ເມື່ອສະພາຫາກລົງມະຕິບໍ່ໃຫ້ຄວາມໄວ້ວາງໃຈແກ່ຣັຖບານ ຫລືຫາກໄດ້ລົງມະຕິຕິຕຽນຣັຖບານແລ້ວ ຣັຖບານຕ້ອງໄດ້ລາອອກຈາກຕຳແໜ່ງທັງຄນະ. ການລົງມະຕິນີ້ຈະເຮັດເປັນທາງລັບຫລືເປີດເຜີຍກໍໄດ້.

ຄນະຣັຖບານທີ່ລາອອກຈະດຳເນີນການງານຕໍ່ໄປຈົນກວ່າຣັຖບານຊຸດໃໝ່ຈະເຂົ້າຮັບໜ້າທີ່ແທນ.

ລະບົບການປົກຄອງແຫ່ງພຣະຣາຊອານາຈັກລາວ



175

5.50 ຣະບົບການປົກຄອງໃນພຣະຣາຊອານາຈັກລາວ.

ເຮົາອາດຈະເວົ້າໄດ້ວ່າ ອຳນາດການປົກຄອງຢູ່ໃນພຣະຣາຊອານາຈັກລາວແບ່ງອອກເປັນ ໔ ຂັ້ນດັ່ງນີ້:

໑. ປະມຸກຂອງປະເທດ, ໄດ້ແກ່ພຣະບາດສົມເດັດພຣະເຈົ້າມະຫາຊີວິດ, ຊຶ່ງມີອຳນາດສູງສຸດ ຊຶ່ງພຣະອົງຈະຊົງໃຊ້ເພື່ອຜົນປໂຍດທັງມວນຂອງຊາດ.

໒. ອຳນາດບໍຣິຫານຂອງຣັຖບານ ຫລືກອງປະຊຸມຣັຖມົນຕີ.

໓. ອຳນາດນິຕິບັນຍັດ ຂອງສະພາແຫ່ງຊາດ ແລະຂອງສະພາຣາຊມົນຕີ.

໔. ອຳນາດສານ ຊຶ່ງມາດຕຣາ ໔໒ ຂອງຣັຖທັມມະນູນໄດ້ບົ່ງໄວ້ວ່າ "ການຈັດວາງຣະບຽບ, ອຳນາດ ແລະສິດຂອງສານ, ບໍ່ວ່າສານຍຸຕິທັມ ຫລືສານຝ່າຍປົກຄອງກໍດີ, ອີກທັງການຂັດແບ່ງອຳນາດຂອງສານເຫລົ່ານັ້ນ ຈະມີກົດພາຍບັນຍັດໄວ້. ກົດພາຍນີ້ ຍັງຈະໄດ້ປະກັນຄວາມອິສຣະແຫ່ງອຳນາດສານ ຕໍ່ອຳນາດນິຕິບັນຍັດແລະອຳນາດບໍຣິຫານອີກດ້ວຍ...ฯ."

ຣັຖບານຂອງພຣະບາດສົມເດັດພຣະເຈົ້າມະຫາຊີວິດ ແບ່ງການບໍຣິຫານງານອອກເປັນ ໑໘ ກະຊວງ ຄື: ໑-ກະຊວງປ້ອງກັນປະເທດ; ໒-ກະຊວງຕ່າງປະເທດ; ໓-ກະຊວງມະຫາດໄທ; ໔-ກະຊວງການຄັງ; ໕-ກະຊວງເສຖກິດ; ໖-ກະຊວງແຜນຜັງ; ໗-ກະຊວງໂຍທາທິການແລະຂົນສົ່ງ; ໘-ກະຊວງສຶກສາທິການ; ໙-ກະຊວງໄປສະນີແລະໂທຣະຄະມະນາຄົມ; ໑໐-ກະຊວງສາທາຣະນະສຸກ; ໑໑-ກະຊວງທັມມະການ; ໑໒-ກະຊວງຍຸຕິທັມ; ໑໓-ກະຊວງຖແລງຂ່າວ,ໂຄສະນາການແລະທ່ອງທ່ຽວ; ໑໔-ກະຊວງສິລປະກັມ; ໑໕-ກະຊວງປະຊາສົງເຄາະ; ໑໖-ກະຊວງນັກຮົບເກົ່າ; ໑໗-ກະຊວງກິລາ-ຍຸວະຊົນ; ແລະ ໑໘-ກະຊວງປັບປຸງພູບ້ານ.

ແຕ່ລະກະຊວງມີຣັຖມົນຕີຄົນນຶ່ງເປັນຫົວໜ້າ ຊຶ່ງອາດຈະມີ ຫລືບໍ່ມີຣັຖມົນຕີຊ່ວຍວ່າການ. ແລະກະຊວງນຶ່ງຈະແບ່ງອອກເປັນຫລາຍກົມ ໂດຍມີອະທິບໍດີເປັນຫົວໜ້າ.

ການປົກຄອງໃນພຣະຣາຊອານາຈັກລາວ(ຕໍ່)

ໃນປັດຈຸບັນນີ້ປະເທດລາວແບ່ງການປົກຄອງທ້ອງຖິ່ນອອກເປັນ ໑໖ ແຂວງ ຄື:

໑. ແຂວງໂຜ້ງສາລີ	໕. ແຂວງໄຊຍະບຸຣີ	໙. ແຂວງຄຳມ່ວນ	໑໓. ແຂວງເຊໂດນ
໒. ແຂວງຫົວຂອງ	໖. ແຂວງຊຽງຂວາງ	໑໐. ແຂວງສວັນນະເຂດ	໑໔. ແຂວງອັຕປື
໓. ແຂວງຫລວງພຣະບາງ	໗. ແຂວງວຽງຈັນ	໑໑. ແຂວງອາປີຄຳທອງ	໑໕. ແຂວງຈຳປາສັກ
໔. ແຂວງຫົວພັນ	໘. ແຂວງບໍຣິຄັນ	໑໒. ແຂວງສາຣະວັນ	໑໖. ແຂວງສີທັນດອນ

ແຕ່ລະແຂວງນຳໂດຍເຈົ້າແຂວງຄົນນຶ່ງຊຶ່ງເປັນຜູ່ຕາງໜ້າຂອງຣັຖບານ. ແລະແຕ່ລະແຂວງແບ່ງອອກເປັນຫລາຍເມືອງ ກອງ ແລະດ່ານ. ປະເທດລາວມີທັງໝົດ ໑໑໕ ເມືອງ, ໑໘ ກອງ ແລະ ໓໘ ດ່ານ.

ພຣະມະຫາກະສັດເປັນຜູ່ອອກພຣະຣາຊໂອງການແຕ່ງຕັ້ງເຈົ້າແຂວງ, ເຈົ້າເມືອງ, ນາຍກອງ ແລະນາຍດ່ານ ຕລອດທັງຜູ່ຮອງຫລືຜູ່ຊ່ອຍຂອງເພິ່ນ.

ເຈົ້າແຂວງຈະໃຊ້ສິດອຳນາດຂອງເພິ່ນໃນນາມຣັຖບານ ຫລືຕາມຄຳສັ່ງທີ່ໄດ້ຮັບຈາກກະຊວງມະຫາດໄທກໍໄດ້. ເພິ່ນມີໜ້າທີ່ເບິ່ງແຍງການເຄົາຣົບນັບຖືກົດໝາຍ ຕລອດທັງກົດຣະບຽບແລະຄຳສັ່ງທຸກຢ່າງຂອງຣັຖບານ. ເພິ່ນເປັນຜູ່ຕາງໜ້າຂອງອົງການປົກຄອງຝ່າຍພົລເຮືອນທຸກພແນກ. ເພິ່ນມີອຳນາດຈາກສານຊຶ່ງຢູ່ເໜືອການປົກຄອງເທສບານແລະເມືອງຕ່າງໆ, ເວັ້ນໄວ້ແຕ່ນະຄອນຫລວງຂອງປະເທດ.

ເຈົ້າແຂວງຈະເຮັດລາຍງານເປັນຣະຍະໆຕໍ່ຣັຖມົນຕີກະຊວງມະຫາດໄທ ກ່ຽວກັບສະຖານະການທາງດ້ານການເມືອງ, ການເສຖກິດ ແລະກ່ຽວກັບເຫດການອື່ນໆທີ່ເກີດຂຶ້ນພາຍໃນແຂວງຂອງເພິ່ນ.

ເຈົ້າແຂວງເປັນຜູ່ຕິດຕໍ່ຣະຫວ່າງຣັຖບານແລະປະຊາຊົນພາຍໃນແຂວງຂອງເພິ່ນ. ເພິ່ນຈະສ້າງຊື່ສຽງຂອງເພິ່ນດ້ວຍການເສັຽສລະທັງກຳລັງກາຍ, ກຳລັງໃຈ ແລະກຳລັງຄວາມຄິດເພື່ອຄວາມຢູ່ເຢັນເປັນສຸກຂອງປະຊາຣາສດອນພາຍໃນແຂວງແລະເພື່ອໃຫ້ສົມກັບທີ່ເພິ່ນໄດ້ຮັບກຽດໃຫ້ເປັນຜູ່ຕາງໜ້າອັນແທ້ຈິງຂອງຣັຖບານ.

ສ.ໄຊຍະສິທເສນາ



ພຣະຣາຊອານາຈັກລາວແບ່ງອອກເປັນ ໑໖ ແຂວງ
****

5.51 ລະບົບການປົກຄອງໃນພຣະຣາຊອານາຈັກລາວ(ຕໍ່)

<u>ການປົກຄອງໃນອັນດັບເມືອງແລະສັງຄົມທ້ອງຖິ່ນຊົນນະບົດ</u>.

ບ້ານນຶ່ງຕ້ອງມີຢ່າງນ້ອຍຊາວຫລັງຄາເຮືອນ ຫລືມີຣາສດອນຢ່າງນ້ອຍນຶ່ງຮ້ອຍຄົນຂື້ນໄປ ຈຶ່ງຈະຖືກຮັບຮູ້ເປັນທາງການໄດ້. ຖ້າບໍ່ດັ່ງນັ້ນ ກໍຈະໃຫ້ເຮືອນເຂົ້າຫລືຕັ້ງໃຫ້ຂື້ນກັບບ້ານທີ່ຢູ່ໃກ້ຄຽງ. ບ້ານນຶ່ງມີນາຍບ້ານຫລືພໍ່ບ້ານຄົນນຶ່ງເປັນຜູ້ນຳ.

ຕາແສງປະກອບດ້ວຍໝູ່ບ້ານຈຳນວນນຶ່ງ ຊຶ່ງມີເຂດແດນຕິດຕໍ່ກັນ ແລະຢູ່ໃນຄວາມປົກຄອງຂອງຫົວໜ້າຜູ້ນຶ່ງເອີ້ນວ່າຕາແສງ. ຕາແສງນຶ່ງຕ້ອງປະກອບດ້ວຍຢ່າງນ້ອຍຫ້າຮ້ອຍຫລັງຄາເຮືອນ ຫລືຣາສດອນນຶ່ງພັນຫ້າຮ້ອຍຄົນ.

ແຕ່ລະຕາແສງພ້ອມດ້ວຍບ້ານທີ່ຂື້ນກັບຕົນນັ້ນປະກອບເຂົ້າກັນເປັນສັງຄົມທ້ອງຖິ່ນອັນນຶ່ງ ຊຶ່ງມີຊື່ວ່າສັງຄົມທ້ອງຖິ່ນຊົນນະບົດ. ສັງຄົມທ້ອງຖິ່ນຊົນນະບົດມີຖານະດ້ານນິຕິບຸກຄົນ ຊຶ່ງມີຕາແສງເປັນຜູ້ຕາງໜ້າສຳຣັບເຣື້ອງຄະດີແພ່ງຫລືເຣື້ອງສັນຍາຕ່າງໆ ຊຶ່ງມີຂື້ນລະຫວ່າງຜົນປໂຍດສ່ວນຣວມແລະເອກກະຊົນ.

ໃນການປະຕິບັດໜ້າທີ່ ໃນຖານະເປັນຜູ້ຕາງໜ້າຂອງສັງຄົມຊົນນະບົດ ບັນດາຕາແສງແລະພໍ່ບ້ານຕົກຢູ່ໃນຄວາມອາຣັກຂາໂດຍກົງຫລືໂດຍທາງອ້ອມຂອງເຈົ້າເມືອງ, ແລະບາງກໍຣະນີພິເສດກໍ່ຂອງເຈົ້າແຂວງອີກດ້ວຍ. ເຈົ້າເມືອງເປັນຜູ້ນຳແລະເປັນທັງທີ່ປຶກສາສູງສຸດຂອງພໍ່ບ້ານແລະຕາແສງ.

ຕາແສງແລະພໍ່ບ້ານຖືກເລືອກຕັ້ງຂື້ນໂດຍປະຊາຊົນໃນທ້ອງຖິ່ນຂອງຕົນ.

ຫລາຍຕາແສງປະກອບກັນເຂົ້າເປັນເມືອງ, ກອງ ຫລືດ່ານ. ເຈົ້າເມືອງເປັນຜູ້ຕາງໜ້າຂອງເຈົ້າແຂວງ ເພິ່ນມີສິດອຳນາດໃນການປົກຄອງເມືອງຕາງໜ້າຣັຖບານ. ນາຍກອງແລະນາຍດ່ານມີໜ້າທີ່ປົກຄອງທ້ອງຖິ່ນຂອງຕົນ ແຕ່ບາງກໍຣະນີກໍຂື້ນກັບເມືອງທີ່ຢູ່ໃກ້ຄຽງ. ເຈົ້າເມືອງ, ນາຍກອງ ແລະນາຍດ່ານເປັນຂ້າຣາຊການຂອງຣັຖບານຂອງພຣະບາດສົມເດັດພຣະເຈົ້າມະຫາຊີວິດ.

ຣະບົບການປົກຄອງໃນພຣະຣາຊອານາຈັກລາວ. (ຕໍ່)

<u>ການປົກຄອງເຂດເທສບານ</u>

ການປົກຄອງເຂດເທສບານຕ່າງໆຢູ່ໃນພຣະຣາຊອານາຈັກລາວແບ່ງອອກເປັນດັ່ງນີ້ ຄື: ກຳແພງນະຄອນແລະກຳແພງເມືອງ. ກຳແພງເມືອງ ແມ່ນເຂດປົກຄອງເທສບານຂອງນະຄອນຫລວງວຽງຈັນ, ມີເຈົ້າກຳແພງນະຄອນເປັນຫົວໜ້າ. ສ່ວນກຳແພງເມືອງນັ້ນໄດ້ແກ່ເຂດປົກຄອງເທສບານຂອງຫົວເມືອງອື່ນໆຢູ່ໃນປະເທດລາວ.

ເຈົ້າຄອງກຳແພງຖືກຄັດເລືອກໂດຍຣັຖບານ ແລ້ວພຣະເຈົ້າມະຫາຊີວິດຊົງອອກພຣະຣາຊອົງການແຕ່ງຕັ້ງຂຶ້ນ.

ໃນຖານະເປັນອາດຍາສິດສູນກາງ ຫລືໃນນາມຜູ້ຕາງໜ້າຂອງຣັດ ເຈົ້າຄອງກຳແພງມີໜ້າທີ່ເບິ່ງແຍງການປະຕິບັດຕາມຣະບຽບກົດໝາຍ; ເພິ່ນມີໜ້າທີ່ຮັບຜິດຊອບໃນການຮັກສາຄວາມເປັນຣະບຽບຂອງສາທາຣະນະ, ແລະເພິ່ນມີສິດໃຊ້ອຳນາດຕາມທີ່ກົດໝາຍໄດ້ບົ່ງໄວ້.

ໃນນາມເປັນອາດຍາສິດປົກຄອງເຂດເທສບານ ເຈົ້າກຳແພງເປັນປະທານຂອງກອງປະຊຸມເທສບານ ຊຶ່ງສະມາຊິກສອງສ່ວນສາມໄດ້ຖືກເລືອກມາຈາກແລະໂດຍປະຊາຊົນໃນເຂດເທສບານ. ເພິ່ນມີຄວາມຮັບຜິດຊອບງົບປະມານແລະຊັບສິນບັດຂອງເທສບານ; ເພິ່ນຮັກສາຄວາມປອດໄພ, ການອະນາໄມ ແລະຄວາມສງົບສຸກຂອງປະຊາຊົນໃນເຂດເທສບານ. ເພິ່ນຈັດການປົກຄອງເທສບານຕາມອີນິດສັຍ ຫລືດ້ວຍຄວາມຄິດຄວາມເຫັນຂອງກອງປະຊຸມເທສບານ.

ກອງປະຊຸມເທສບານປະກອບດ້ວຍສະມາຊິກທັງໝົດ ໑໒ ທ່ານ ຊຶ່ງໃນຈຳນວນດັ່ງກ່າວ ໘ ທ່ານ ໄດ້ຮັບການເລືອກຕັ້ງຈາກປະຊາຊົນ ແລະອີກ ໔ ທ່ານ ແມ່ນກະຊວງມະຫາດໄທແຕ່ງຕັ້ງຂຶ້ນ. ກອງປະຊຸມເທສບານແຕ່ລະຊຸດມີສິດດຳຣົງຕຳແໜ່ງເປັນເວລາສີ່ປີ.

ການປົກຄອງເຂດເທສບານ. (ຕໍ່)

ໃນດ້ານການປົກຄອງ ກອງປະຊຸມເທສບານມີໜ້າທີ່ພິຈາລະນາການເຮັດສັນຍາຍົກຊັບໃຫ້ເປັນກັມມະສິດຫລືໃຫ້ເຊົ່າ; ພິຈາລະນາແຜນຜັງການຕັດຖນົນຫົນທາງໃນເຂດເທສບານ, ການເປີດຖນົນຫົນທາງ ແລະສະຖານທີ່ຊຸມນຸມເພື່ອສາທາຣະນະຊົນ ແລະອື່ນໆອີກ.

ກ່ຽວກັບການເງິນແລະຊັບສົມບັດຂອງເທສບານ ກອງປະຊຸມເທສບານມີໜ້າທີ່ເຫັນຊອບງົບປະມານ ແລະບັນຊີການເງິນຂອງເທສບານ; ຕັ້ງອັດຕາແລະຣະບຽບການເກັບສ່ວຍສາອາກອນທີ່ຈະເກັບເຂົ້າງົບປະມານເທສບານ; ເຫັນຊອບກ່ຽວກັບການຊື້ຂາຍທີ່ດິນຣັຖບານ.

ການຕົກລົງທຸກຢ່າງຂອງກອງປະຊຸມເທສບານ ຈະຕ້ອງໄດ້ຮັບຄວາມເຫັນດີຈາກຣັຖມົນຕີກະຊວງມະຫາດໄທ, ໂດຍສະເພາະກ່ຽວກັບການເງິນແລະຊັບສົມບັດຂອງເທສບານ ຈະຕ້ອງໄດ້ຮັບຄວາມເຫັນດີຈາກຣັຖມົນຕີກະຊວງການຄັງອີກດ້ວຍ.

ການຕົກລົງຂອງກອງປະຊຸມອາດຈະຖືກລົບລ້າງ ເມື່ອມີສະມາຊິກຄົນໃດຄົນນຶ່ງຫາກມີສ່ວນໄດ້ຮັບຜົນປໂຍດທາງກົງຫລືທາງອ້ອມກໍ່ຕາມ ຈາກການລົງມະຕິ.

ສ. ໄຊຍະສິທເສນາ

ສິບຊ່າງບໍ່ທໍ່ເຄີຍ ສິບລູກເຂີຍບໍ່ທໍ່ພໍ່ເຖົ້າ

5.52 ກຳລັງໃຈເຮັດວຽກຂອງຂ້າຣາຊການ.

ກ່ອນອື່ນຂ້າພະເຈົ້າຢາກຂໍສະແດງເຈດຈຳນົງໃຫ້ເປັນທີ່ເຂົ້າໃຈກັນເສັຽກ່ອນວ່າ ເຫດການຫລືຕົວຢ່າງພ້ອມທັງທັສນະກ່ຽວກັບເຣື້ອງທີ່ຈະບັລຍາຍຕໍ່ລົງໄປນີ້ ບໍ່ໄດ້ອີງໃສ່ເຫດການຕອນໃດຕອນນຶ່ງ ຫລືເຫດການທີ່ເກີດຂຶ້ນແກ່ຜູ້ໃດຜູ້ນຶ່ງໂດຍສະເພາະ; ແລະພ້ອມດຽວກັນກໍບໍ່ມີເຈຕະນາທີ່ຈະໃສ່ຮ້າຍປ້າຍສີຜູ້ໃດຜູ້ນຶ່ງ ຫລືສັງຄົມພັກພວກໃດພັກພວກນຶ່ງໂດຍສະເພາະອີກເໝືອນກັນ. ກົງກັນຂ້າມ, ຜູ້ຂຽນຢາກຂໍຮ້ອງໃຫ້ທ່ານຜູ້ອ່ານພິນິດພິຈາຣະນາແລະສຶກສາຮ່ວມຕອງເບິ່ງປັນຫາຕ່າງໆທີ່ມີມາແລ້ວ ແລະຫາທາງຊ່ອຍກັນແກ້ໄຂຕໍ່ໄປ.

ມັນເປັນສິ່ງທີ່ຈະຫລັບຫູຫລັບຕາປະຕິເສດບໍ່ໄດ້ວ່າ ວົງການປົກຄອງຂອງລາວເຮົາເຕັມໄປດ້ວຍປັນຫາຮ້ອຍແປດພັນປະການ ຊຶ່ງໜັງສືພິມລາຍວັນຂອງລາວກໍໄດ້ລົງພິມຢູ່ທຸກມື້ ແລະປະຊາຊົນລາວເຮົາເອງກໍໄດ້ວິພາກວິຈານກັນມາຈົນໜາຫູຢູ່ແລ້ວ.

ເລີ້ມແຕ່ປີ ໑໙໖໒ ຣັຖບານລາວແມ່ນຣັຖບານປະສົມທີ່ເດີນຕາມນະໂຍບາຍເປັນກາງໂດຍມີ ໑໔ ປະເທດລົງນາມຄ້ຳປະກັນ, ແຕ່ຈົນເຖິງປັດຈຸບັນປະຊາຊົນລາວກໍຍັງໄດ້ແຕ່ຄອງຄອຍວັນທີ່ຄນະຣັຖບານເພິ່ນຈະເຂົ້າຮ່ວມກັນແລ້ວນຳພາປະເທດໄປສູ່ຄວາມສງົບສັນຕິແລະຄວາມຖືກຕ້ອງປອງດອງກັນ ຊຶ່ງມັນຈະເປັນກຳລັງອັນແຂງແຮງເພື່ອສ້າງສາບ້ານເມືອງແລະຮັກສາໄວ້ຊຶ່ງຄວາມເປັນຊາດ.

ການແຕ່ງຕັ້ງບຸກຄົນເຂົ້າປະຈຳຕຳແໜ່ງຊັ້ນຜູ້ນຳບາງບ່ອນ ຍັງຄົງມີການກະທຳໄປດ້ວຍເຫດຜົນຢ່າງອື່ນທີ່ນອກເໜືອໄປກວ່າຄວາມຈຳເປັນໃນຄວາມຊ່ຽວຊານຫລືຄວາມຮູ້ແລະຄວາມສາມາດຂອງບຸກຄົນເຫລົ່ານັ້ນ ຊຶ່ງມັນກໍຍ່ອມເປັນທັມມະດາຢູ່ເອງ ທີ່ກົມກອງ ຫລືຫ້ອງການທີ່ຢູ່ພາຍໃຕ້ການນຳຂອງເພິ່ນຈະຕ້ອງບໍ່ໄດ້ພົບກັບຄວາມກ້າວໜ້າ ຫລືພົບແຕ່ຄວາມກ້າວໜ້າພຽງເລັກນ້ອຍໆ. ທັງນີ້ກໍຍ້ອນຜູ້ນຳເຫລົ່ານັ້ນຂາດຄວາມຮູ້ໂດຍສະເພາະທີ່ຈະສາມາດເຂົ້າໃຈແລະຂົບກັບປັນຫາທີ່ເກີດຂຶ້ນ, ຕລອດທັງການວາງໂຄງການໃນໄລຍະຍາວທຸກຢ່າງອີກດ້ວຍ.

ກຳລັງໃຈເຮັດວຽກຂອງຂ້າຣາຊການ.(ຕໍ່)

ບາງກໍຣະນີກໍຕົກຢູ່ໃນສະພາບທີ່ກົງກັນຂ້າມ ຊຶ່ງບຸກຄົນທີ່ມີຄວາມຮູ້ຫລືຄວາມຊ່ຽວຊານໃນດ້ານຕ່າງໆ ຖືກບັນຈຸເຂົ້າຢູ່ໃນຕຳແໜ່ງຫລືໜ້າທີ່ຊຶ່ງບໍ່ສາມາດທີ່ຈະໃຊ້ຄວາມຮູ້ຫລືຄວາມສາມາດທີ່ຕົນມີຢູ່ໃຫ້ເປັນປໂຍດໄດ້ຢ່າງເຕັມສ່ວນ.

ເມື່ອມາຄິດເຖິງຄວາມປະພຶດຂອງຂ້າຣາຊການລາວເຮົາບາງສ່ວນແລ້ວ ກໍພາໃຫ້ຂ້າພະເຈົ້າອົດທີ່ຈະຫວນຄິດໄປເຖິງຄາວຫລັງບໍ່ໄດ້ ຊຶ່ງກໍບໍ່ແມ່ນໄລຍະທີ່ດົນ ເນມາແຕ່ຢ່າງໃດ. ນັ້ນກໍຄືໄລຍະທີ່ລາວເຮົາໄດ້ຮັບເອກກະຣາດໃໝ່; ຊາວລາວເປັນຈຳນວນຫລາຍໄດ້ຖືກບັນຈຸເຂົ້າເປັນຂ້າຣາຊການຢ່າງຮີບດ່ວນ, ທັງດ້ວຍຄວາມຈຳເປັນຂອງທາງຣາຊການ ແລະທັງດ້ວຍຄວາມສັມພັນຂອງພີ່ນ້ອງຄອບຄົວ.

ດ້ວຍເຫດນີ້ເອງຈຶ່ງບໍ່ໄດ້ມີການອົບຮົມກັນໃຫ້ເຂົ້າໃຈເຖິງໜ້າທີ່ອັນແທ້ຈິງຂອງທາງຣາຊການ. ຜົນກໍຄືຄວາມບໍ່ເປັນຣະບຽບ; ຂ້າຣາຊການບາງຄົນບໍ່ຮູ້ຈັກທຳຕົນໃຫ້ເປັນປໂຍດເທົ່າທີ່ຄວນໃຫ້ແກ່ທາງຣາຊການ; ຍິ່ງກວ່ານັ້ນຍັງໄດ້ປ່ອຍໃຫ້ເກີດນິສັຍມັກຍືບບາຍເອົາອຸປກອນແລະເຄື່ອງໃຊ້ທີ່ມີຢູ່ໃນຫ້ອງການ ຫລືພາຍໃຕ້ການປົກຄອງຂອງຕົນໄປໃຊ້ຈ່າຍເໝືອນດັ່ງສົມບັດຂອງຕົວເອງ ຈົນໄດ້ກາຍເປັນແນວທາງປະຕິບັດກັນມາຢ່າງແຜ່ຫລາຍ ແລະກໍບໍ່ຄ່ອຍເຫັນວ່າຈະມີຜູ້ໃດຄອຍຈັບຜິດຈັບແມ່ນກັນເທົ່າໃດອີກເໝືອນກັນ. ຄົງຈະເປັນຍ້ອນຄວາມຄິດທີ່ວ່າ "ຂອງຫລວງ" ເປັນຂອງທີ່ບໍ່ມີເຈົ້າ; ຜູ້ໃດມີອຳນາດວາສນາຈະເອົາໄປໃຊ້ຈ່າຍແນວໃດກໍໄດ້ຕາມໃຈ, ບໍ່ມີຜູ້ໃດຈະມາວ່າກ່າວຫຍັງໃຫ້ໄດ້.

ຕໍ່ມາຄວາມຄິດໃນການເຂົ້າເປັນຂ້າຣາຊການ ຫລື "ເປັນເຈົ້າເປັນນາຍ" ນີ້ຈຶ່ງກາຍເປັນສິ່ງທີ່ຄົນທັງຫລາຍປາຖນາຢາກຈະມີໂອກາດໄດ້ເປັນ ແລະຢາກໃຫ້ລູກຫລານຕລອດທັງຍາດພີ່ນ້ອງຜູ້ຮັກແພງຂອງຕົນ ໄດ້ເປັນນຳອີກດ້ວຍ.

ການເວົ້າດັ່ງນີ້ບໍ່ໄດ້ມີຄວາມໝາຍແບບຕີກ້ນ້ຳຫົວພຽງກັນ. ຈິງຢູ່ວ່າຣັຖບານຈະຕ້ອງມີບັນດາຂ້າຣາຊການຊ່ອຍບໍຣິຫານປະເທດ ກິຈການທຸກຢ່າງຈຶ່ງຈະດຳເນີນໄປໄດ້. ແຕ່ຣັຖບານກໍປຽບເໝືອນບໍຣິສັດການຄ້າ

ກຳລັງໃຈເຣັດວຽກຂອງຂ້າຣາຊການ.(ຕໍ່)

ໃຫ້ບໍຣິສັດນຶ່ງ ທີ່ການລົງທຶນທຸກຢ່າງຈະຕ້ອງເນື່ອງມາຈາກເຫດຜົນທີ່ວ່າ ມັນຈະນຳກຳໄລມາສູ່ບໍຣິສັດ. ຖ້າບໍ່ດັ່ງນັ້ນ ກໍຈະໄດ້ພົບພໍ້ແຕ່ຄວາມບໍ່ກ້າວໜ້າ ຫລືຄວາມຫລົ້ມຈົມ.

ໃນທີ່ນີ້ ຂ້າພະເຈົ້າບໍ່ໄດ້ກ່າວເຖິງບຸກຄົນດີຂອງຊາດທັງຫລາຍ; ທັງນີ້ກໍເນື່ອງມາຈາກຂ້າພະເຈົ້າມີຄວາມຄິດທີ່ວ່າ ປະຊາຊົນທີ່ຮູ້ຈັກທຳຕົນໃຫ້ເປັນປໂຍດແກ່ຊາດຂອງຕົນ ຍ່ອມເປັນຜູ້ທີ່ເຂົ້າໃຈ ແລະຮູ້ສຶກພາກພູມໃຈໃນການກະທຳຂອງຕົນຢູ່ສເມີ. ຂ້າພະເຈົ້າຈຶ່ງພຽງແຕ່ຂໍຍ້ອງຍໍສັລເສີນ ແລະສະແດງຄວາມເຄົາຣົບນັບຖືວ່າເປັນບຸກຄົນທີ່ຮູ້ຈັກຮັກຊາດ ແລະຫວັງດີຕໍ່ເພື່ອນຮ່ວມຊາດຂອງຕົນຢ່າງແທ້ຈິງ.

ສ. ໄຊຍະສິທເສນາ

ເພື່ອນກິນຫາງ່າຍ ເພື່ອນຕາຍຫາຍາກ

ໄວປາກເສັຽສິນ ໄວຕີນຕົກກົກໄມ້

6.0 National Security

INTRODUCTION

Laos is a nation of large size (91,000) square miles) with extended borders (approximately 2,000 miles). It borders Communist China on the north, Communist North Vietnam on the northeast, anti-communist South Vietnam and Cambodia on the south, anti-communist Thailand on the west, and neutralist Burma on the northwest. Some of these borders are ill-defined; for example, it is said (facetiously perhaps) that the only way to know when one has crossed the border from Vietnam to Laos is to observe the style of houses. Laotian houses are on stilts, Vietnamese aren't. The terrain of the country consists to a large extent of mountains or high plateaux, and communication is entirely by roads and trails, many of which are impassable during the rainy season. The total population of Laos including all ethnic groups within its borders (about 40 to 50 percent of the total) probably is less than three million. The Lao armed forces include less than one hundred thousand men. Natural resources are potentially large, but they are as yet mainly unexplored. Total agricultural production barely covers domestic needs. Industrial goods are not sufficient for local needs. The history of Laos as a nation-state is very brief (since 1947), and there has been little time for the development of the concept of Lao citizenship. If it is assumed that the geopolitical situation of a country plays a major role in the development of its national security policy, it is clear that Laos has limited options.

Given the situation described, Lao national security hinges on reaching some sort of modus vivendi with its neighbors. This is precisely what a succession of Prime Ministers have tried to do, although not all have worked in exactly the same fashion. However, before any really effective agreement can be reached with foreign nations, dissident elements within the country have to

become reconciled with each other.

Various attempts have been made to bring the Pathet Lao into the government. In 1957 through an agreement between Prince Souvanna Phouma, Prime Minister, and Prince Souphanouvong, head of the Pathet Lao, the latter was brought into the government as Minister of Plans; however, when a new government was formed in 1958, Souphanouvong was not included. In 1962 the Government of National Union was set up. This union was a coalition government of rightists, leftists and neutralists. Prince Souvanna Phouma (neutralist) was named Prime Minister; Prince Souphanouvong (leftist) and Prince Boun Oum (rightist) were named Deputy Prime Ministers. Other cabinet positions were divided up among the three factions. This loose coalition lasted until 1964 when there was a coup d'état from the right, which led to the departure of the Pathet Lao ministers from Vientiane. Their seats in the cabinet have remained vacant and reserved for them should they ever decide to return. Although technically still a member of the coalition, the Pathet Lao have been closely allied with North Vietnam, and a state of intermittent war has existed between them and the central government. It is clear from this that unification of dissident elements in the country has not so far succeeded.

The Lao foreign policy has always been one of peaceful coexistence with its neighbors. Laos has joined many international organizations (the U.N. in 1955) and has always strongly supported regional economic development programs. It has officially followed a policy of neutrality. However, in actual practice the force of circumstances has caused differing interpretations to be put on the term, so that it has received economic and military support from France, the United States, and Russia at different times.

The general military situation which was already very serious in many parts of Laos was exacerbated by the building of the Ho Chi Minh trail through Eastern Laos in 1965. It was built by the North Vietnamese to supply military equipment to their

troops. The Laotians have not had the military power to oppose these forces, and have called upon other nations for support. However, Laos is by a nature a peace-loving, Buddhist nation, and prefers to settle disagreements by negotiations rather than by armed might. Whether those nations that have taken advantage of her basically weak situation can be persuaded through negotiations to withdraw can only be answered by future events.

6.1 ບັນຫາຂອງລາວ.

ປະເທດລາວແມ່ນປະເທດນຶ່ງໃນຈຳນວນປະເທດທີ່ກຳລັງພັທນາທັງຫລາຍຢູ່ໃນພາກພື້ນເອເຊັຽອາຄະເນ. ແຕ່ປາກົດວ່າປະເທດລາວເປັນປະເທດທີ່ອາພັບກວ່າໝູ່; ໂດຍສະເພາະແລ້ວແມ່ນປັດຈຸບັນຊຶ່ງສະຖານະການທາງທະຫານກຳລັງຮ້າຍແຮງຂື້ນ, ເສດຖກິດຂອງຊາດກໍ່ກຳລັງຢູ່ໃນສະພາບລົ້ມລຸກຄຸກຄານ, ການເມືອງພາຍໃນປະເທດຢູ່ໃນຄວາມສັບສົນ ຍ້ອນຄວາມບໍ່ພ້ອມພຽງປອງດອງກັນຂອງຄົນໃນຊາດ, ການເມືອງຕ່າງປະເທດກຳລັງຜະເຊີນກັບຄວາມຫຍຸ້ງຍາກຍ້ອນການລ່ວງລະເມີດອະທິປະໄຕຂອງລາວ, ການພັທນາສ້າງສາປະເທດຕ້ອງຊັກຊ້າຍ້ອນຂາດຄວາມສງົບແລະເງີນທຶນ ຕລອດທັງຜູ້ຊ່ຽວຊານທາງດ້ານວິຊາການຕ່າງໆ.

ທຸກສິ່ງທຸກຢ່າງທີ່ກ່າວມານີ້ ລ້ວນແລ້ວແຕ່ເປັນອຸປສັກອັນໃຫຍ່ຫລວງຕໍ່ຄວາມກ້າວໜ້າຂອງຊາດລາວ. ຍິ່ງກວ່ານັ້ນຍັງເປັນອັນຕະຣາຍແກ່ຄວາມເປັນຊາດຂອງລາວອີກ. ຄົນລາວຍັງປະຖິດອາວຸດບໍ່ເປັນແຕ່ກໍ່ຕ້ອງຖືກບັງຄັບໃຫ້ຕໍ່ສູ້ສົງຄາມ. ຊາວລາວເປັນຈຳນວນຫລວງຫລາຍທີ່ເຄີຍຢູ່ກິນມາດ້ວຍຄວາມສງົບກໍ່ຕ້ອງຖືກບັງຄັບໃຫ້ກາຍເປັນພວກອົພຍົບຫລົບໄພ ໜີຈາກບ້ານເກີດເມືອງນອນທີ່ເຄີຍເປັນບ່ອນຢູ່ຊຸ່ມກິນເຢັນຂອງເຂົາເຈົ້າ. ພູຜາປ່າໄມ້, ພ້ອມທັງພູມີປະເທດອັນສວຍງາມແລະອຸດົມສົມບູນດ້ວຍຊັພຍາກອນທັມມະຊາດຂອງລາວ, ກໍ່ຕ້ອງກັບກາຍເປັນດິນແດນທີ່ເຕັມໄປດ້ວຍຄວາມທຸຣະກັນດານແລະອັນຕະຣາຍ ຈົນຄົນລາວເອງກໍ່ບໍ່ກ້າທີ່ຈະເອົາຊີວິດສ່ຽງເຂົ້າໄປຊອກຄົ້ນເພື່ອນຳເອົາຊັພຍາກອນທີ່ເປັນຂອງຕົນນັ້ນມາໃຊ້ໃຫ້ເປັນປໂຍດແກ່ຕົນ.

ຄວາມຫຍຸ້ງຍາກສ່ວນຫລາຍທີ່ກ່າວມານີ້ ເນື່ອງມາຈາກການສະແດງຄວາມບໍ່ເປັນມິດຂອງປະເທດເພື່ອນບ້ານຂອງລາວບາງປະເທດ ທີ່ຍັງມົວເມົາແລະຄິດໄຝ່ຝັນທີ່ຈະຂຍາຍອຳນາດເຂົ້າຄວບຄຸມປະເທດອື່ນ ແທນທີ່ຈະຫັນໄປພັທນາສ້າງສາຕົນເອງ ແລ້ວສ້າງສັມພັນອັນດີກັບປະເທດເພື່ອນບ້ານອື່ນໆເພື່ອການຢູ່ຮ່ວມກັນດ້ວຍຄວາມສັນຕິ.

ສ. ໄຊຍະສິທເສນາ

6.2 ຕຳຣວດລາວແລະການຈັດຕັ້ງ.

<u>ຄວາມເປັນມາຂອງຕຳຣວດລາວ:</u>

ເມື່ອວັນທີ ໙ ພຶສຈິກາ ຄ.ສ. ໑໙໔໙ ໄດ້ມີພຣະຣາຊໂອງການເລກທີ ໑໔໗ ໃຫ້ມີການຈັດຕັ້ງກົມຕຳຣວດແຫ່ງຊາດຂຶ້ນເປັນເທື່ອທຳອິດ. ໃນເວລານັ້ນການຈັດຕັ້ງຂອງຣາຊການຕຳຣວດຍັງຄົງໃຊ້ແບບທີ່ຝຣັ່ງໃຊ້ປົກຄອງທົ່ວເມືອງຂຶ້ນຕ່າງໆຂອງເຂົາ ຊຶ່ງຣາຊການດັ່ງກ່າວມີຫລາຍຊື່ແລະຫລາຍວິທີຈັດຕັ້ງ. ຫລັງຈາກນັ້ນ ໕ ປີ ກົມຕຳຣວດແຫ່ງຊາດຈຶ່ງໄດ້ເລີ້ມເຂົ້າຮູບເຂົ້າຮອຍມາຈົນເຖິງ ຄ.ສ. ໑໙໖໑. ເລີ້ມຕົ້ນແຕ່ປີ ຄ.ສ. ໑໙໕໕ ມາລາຍການຝຶກອົບຮົມເຈົ້າໜ້າທີ່ຕຳຣວດໄດ້ຢູ່ພາຍໃຕ້ຄວາມອຸປຖັມຂອງໂຄງການຊ່ວຍເຫລືອຂອງຕຳຣວດສະຫະຣັດ ທັງນີ້ໂດຍປະຕິບັດຕາມຄຳຮ້ອງຂໍຂອງຣັຖບານພຣະຣາຊອານາຈັກ. ການຝຶກອົບຮົມນີ້ຕ້ອງຢຸດໄປຊົ່ວໄລຍະນຶ່ງເມື່ອປີ ຄ.ສ. ໑໙໖໑ ເນື່ອງຈາກຄວາມວຸ້ນວາຍທີ່ເກີດຂຶ້ນພາຍໃນປະເທດຄື: ໃນເດືອນສິງຫາ ຄ.ສ. ໑໙໖໐ ໄດ້ມີການປະຕິວັດຂອງຮ້ອຍເອກກອງແລ; ແລະເດືອນທັນວາ ມີການປະຕິວັດຂອງນາຍພົນພູມີ ໜໍ່ສະວັນ ຊຶ່ງຄັ້ງສຸດທ້າຍໄດ້ເປັນຜົນໃຫ້ມີການຈັດຕັ້ງ "ກົມປະສານງານແຫ່ງຊາດ" ຂຶ້ນໂດຍໄດ້ມອບໃຫ້ນາຍພົນສີໂຫ ລານພຸທກຸນ ເປັນອະທິບໍດີຜູ້ຊຶ່ງຕໍ່ມາໄດ້ຖືກເລື່ອນຂັ້ນເປັນນາຍພົນ.

ເມື່ອເດືອນມົກກະຣາ ຄ.ສ. ໑໙໖໑ ຕຳຣວດແຫ່ງຊາດລາວໄດ້ຖືກປົດອອກຈາກການຄວບຄຸມຂອງກະຊວງມະຫາດໄທ ສ່ວນສະມາຊິກທັງຫລາຍກໍໄດ້ແຍກຍ້າຍກັນໄປເຂົ້າຢູ່ກົມປະສານງານແຫ່ງຊາດຫລືຢູ່ໃນກອງທັບ. ກົມປະສານງານແຫ່ງຊາດດຳເນີນກິຈການມາຈົນເຖິງວັນທີ ໓໑ ມົກກະຣາ ຄ.ສ. ໑໙໖໕. ຫລັງຈາກທຳການປະຕິວັດບໍ່ສຳເຣັດຜົນ ນາຍພົນພູມີ ໜໍ່ສະວັນແລະນາຍພົນສີໂຫຈຶ່ງໄດ້ຫລົບໜີໄປອາສັຍຢູ່ປະເທດໄທ. ຕັ້ງແຕ່ນັ້ນມາຈຶ່ງໄດ້ມີການຈັດຕັ້ງກົມຕຳຣວດຂຶ້ນໃໝ່ແລະໃຫ້ຂຶ້ນກັບກະຊວງມະຫາດໄທເໝືອນແຕ່ກ່ອນ. ຢູ່ຕາມເຂດປົກຄອງທ້ອງຖິ່ນກໍຂຶ້ນກັບເຈົ້າແຂວງແລະເຈົ້າເມືອງ.

ຕຳຣວດລາວແລະການຈັດຕັ້ງ.(ຕໍ່)

(໒) ກອງບັນຊາການປົກຄອງຕຳຣວດ ມີໜ້າທີ່ກຳກັບນຳການປົກຄອງພາຍໃນທຸກຢ່າງ ພ້ອມທັງຈັດໃຫ້ມີການປະສານງານກັນ ລະຫວ່າງທຸກາກົມກອງຂອງຣາຊການຕຳຣວດ.

(໓) ກອງບັນຊາການສັນຕິບານ ມີໜ້າທີ່ກຳກັບນຳການຄົ້ນຄວ້າແລະການສຳຣວດ ເພື່ອຍັງຜົນປໂຍດໃຫ້ແກ່ຣັຖບານ ຄື: ສຳຣວດແລະສຶກສາເບິ່ງລາຍງານກ່ຽວກັບຣະບຽບຂອງສັງຄົມ, ການເສຖກິດ ແລະການເມືອງ ອັນຈະນຳປໂຍດມາສູ່ການດຳເນີນກິຈການເພື່ອສາທາຣະນະປໂຍດ. ກອງບັນຊາການສັນຕິບານນີ້ຍັງມີໜ້າທີ່ຊອກຫາຮູ້ເຖິງຄວາມນຶກຄິດຂອງປະຊາຊົນທົ່ວໄປ ຕລອດການວາງແຜນຄົ້ນລົ້ມຕ່າງໆ, ສັງຄົມເລິກລັບທີ່ເກີດຂື້ນຢູ່ພາຍໃນຫລືມາຈາກນອກປະເທດ ແລະປະສານງານກັບພະແນກສື່ສານຕຳຣວດ.

(໔) ກອງບັນຊາການຕຳຣວດຍຸຕິທັມ ມີໜ້າທີ່ສຶກສາພິຈາຣະນາເບິ່ງການລ່ວງລະເມີດກົດໝາຍອາດຍາຕ່າງໆ ໂດຍການຮິບໂຮມເອົາຫລັກຖານທັງຫລາຍແລະຊອກຫາຕົວຄົນຮ້າຍຫລືຜູ້ທີ່ກະທຳຜິດ. ນອກຈາກນັ້ນກໍມີໜ້າທີ່ອອກບັດປະຈຳຕົວໃຫ້ແກ່ປະຊາຊົນແລະອອກໃບອະນຸຍາດຖືອາວຸດ.

(໕) ກອງບັນຊາການຕຳຣວດນະຄອນບານ ມີໜ້າທີ່ຮັກສາຄວາມເປັນຣະບຽບແລະຄວາມສະອາດສະອ້ານຢູ່ພາຍໃນເຂດເທສບານແລະຢູ່ຕາມຫົວເມືອງຕ່າງໆ ດ້ວຍການຕິດຕໍ່ໂດຍກົງກັບເຈົ້າກຳແພງແລະ ແລະເຈົ້າໜ້າທີ່ຝ່າຍປົກຄອງເທສບານ.

(໖) ກອງບັນຊາການຕຳຣວດພູທອນ ມີໜ້າທີ່ຮັກສາຄວາມເປັນຣະບຽບແລະຄວາມປອດໄພ, ປ້ອງກັນແລະລະງັບອາຊະຍາກັມແລະການລ່ວງລະເມີດກົດໝາຍທຸກຢ່າງຢູ່ນອກເຂດເທສບານແລະຢູ່ຕາມຫົວເມືອງຕ່າງໆ.

(໗) ກອງບັນຊາການຕຳຣວດກວດຄົນເຂົ້າເມືອງມີໜ້າທີ່ ກວດຫາຊາວຕ່າງປະເທດ, ຄວບຄຸມການເຂົ້າແລະອອກຈາກຕ່າງປະເທດຕລອດທັງການເຄື່ອນໄຫວຂອງທຸກາຄົນ; ອອກໜັງສືເດີນທາງແລະບັດອະນຸຍາດພັກແຮມແລະພຳນັກອາສັຍຂອງຊາວຕ່າງປະເທດ.

ຕຳຣວດລາວແລະການຈັດຕັ້ງ.(ຕໍ່)

ເຈົ້າໜ້າທີ່ຕຳຣວດລາວໄດ້ຮັບການຝຶກອົບຮົມວິຊາຕຳຣວດຢູ່ທີ່ສູນກາງຝຶກອົບຮົມຕຳຣວດແລະຢູ່ໃນຕ່າງປະເທດ.

<u>ການຈັດຕັ້ງຂອງຣາຊການຕຳຣວດ:</u>

ກົມຕຳຣວດແຫ່ງຊາດລາວຢູ່ພາຍໃຕ້ການປົກຄອງຂອງກະຊວງມະຫາດໄທແລະນຳໂດຍອະທິບໍດີກົມຕຳຣວດນຶ່ງທ່ານ. ຕໍ່ລົງມາກໍມີຮອງອະທິບໍດີ, ເລຂາທິການແລະຫ້ອງການຕຳຣວດສາກົນ. ໜ້າທີ່ຂອງຕຳຣວດ ຮັກສາຄວາມປອດໄພແລະຄວາມເປັນຣະບຽບຂອງສາທາຣະນະແລະປ້ອງກັນຊີວິດແລະຊັບສິນຂອງຄົນທົ່ວໄປ.

ກົມຕຳຣວດແຫ່ງຊາດແບ່ງການປົກຄອງອອກເປັນ ໑໒ ກົມກອງຄື: (໑) ກອງບັນຊາການຈະເຣຕຳຣ :--(໒) ກອງບັນຊາການປົກຄອງຕຳຣວດ--(໓) ກອງບັນຊາການສັນຕິບານ--(໔) ກອງບັນຊາການຕຳຣວດຍຸຕິທັມ--(໕) ກອງບັນຊາການຕຳຣວດນະຄອນບານ--(໖) ກອງບັນຊາການຕຳຣວດພູທອນ (໗) ກອງບັນຊາການກວດຄົນເຂົ້າເມືອງ--(໘)ກອງບັນຊາການພະລາທິການຕຳຣວດ--(໙) ກອງບັນຊາການສຶກສາຕຳຣວດ--(໑໐) ກອງບັນຊາການສາທາຣະນະສຸກຕຳຣວດ--(໑໑) ກອງບັນຊາການສື່ສານຕຳຣວດ-ແລະ (໑໒) ກອງບັນຊາການສັມພາວຸດ. ແຕ່ລະກົມກອງມີພາຣະໜ້າທີ່ດັ່ງຕໍ່ໄປນີ້:

(໑) ກອງບັນຊາການຈະເຣຕຳຣວດ ມີໜ້າທີ່ໃຫ້ຄວາມຊ່ວຍເຫລືອ ທ່ານອະທິບໍດີກົມຕຳຣວດແຫ່ງຊາດ ເບິ່ງແຍງໃນດ້ານການປະຕິບັດງານແລະການປະພຶດຕາມຣະບຽບວິນັຍຂອງເຈົ້າໜ້າທີ່ຕຳຣວດທຸກຣະດັບ, ການສຶກສາແລະວາງແຜນຈັດຕັ້ງກົດຣະບຽບຂອງຕຳຣວດ, ລາຍການປະຊາສັມພັນ ຕລອດທັງວຽກການພິເສດທີ່ທ່ານອະທິບໍດີກົມຕຳຣວດແຫ່ງຊາດໄດ້ມອບໝາຍໃຫ້.

ຕຳຣວດລາວແລະການຈັດຕັ້ງ.(ຕໍ່)

(໙) ກອງບັນຊາການສຶກສາຕຳຣວດມີໜ້າທີ່ຝຶກອົບຣົມເຈົ້າໜ້າທີ່ຕຳຣວດ; ທຳການປົກຄອງແລະເບິ່ງແຍງການດຳເນີນງານຂອງໂຮງຮຽນຕຳຣວດທັງຫລາຍ.

(໑໐) ກອງບັນຊາການສາທາຣະນະສຸກຕຳຣວດ ມີໜ້າທີ່ເບິ່ງແຍງສຸຂພາບຂອງເຈົ້າໜ້າທີ່ຕຳຣວດ; ເບິ່ງແຍງການຈັດຕັ້ງແລະການດຳເນີນວຽກການໃນດ້ານອະນາມັຍຂອງຕຳຣວດ.

(໑໑) ກອງບັນຊາການສື່ສານຕຳຣວດມີໜ້າທີ່ກຳກັບນຳການຈັດຕັ້ງແລະການດຳເນີນງານຂອງຣະບົບການຕິດຕໍ່ໂດຍທາງໂທຣະສັບແລະໂດຍທາງວິທະຍຸສື່ສານພາຍໃນຂອງຕຳຣວດ

(໑໒) ກອງບັນຊາການຂອງສັມພາວຸດມີໜ້າທີ່ຄວບຄຸມແລະສ້ອມແປງອຸປະກອນແລະເຄື່ອງອາວຸດຂອງຕຳຣວດ.

<u>ການຈັດຕັ້ງຢູ່ຕາມທ້ອງຖິ່ນ:</u>

ຢູ່ແຕ່ລະແຂວງມີຜູ້ບັງຄັບການຕຳຣວດປະຈຳແຂວງຄົນນຶ່ງຊຶ່ງຂຶ້ນກັບເຈົ້າແຂວງໂດຍກົງ. ຜູ້ບັງຄັບການຕຳຣວດປະຈຳແຂວງມີຄວາມຮັບຜິດຊອບໃນການປົກຄອງເຈົ້າໜ້າທີ່ຕຳຣວດຢູ່ໃນແຂວງຂອງຕົນໂດຍແບ່ງການປົກຄອງຂອງກອງບັງຄັບການຕຳຣວດອອກໃນລັກສນະຄ້າຍຄືກັນກັບກົມຕຳຣວດ.

ນອກຈາກນີ້ກໍ່ມີໜວດຕຳຣວດປະຈຳເມືອງຊຶ່ງມີໜ້າທີ່ກຳກັບນຳກິຈການຂອງຕຳຣວດທຸກຢ່າງຢູ່ພາຍໃນເມືອງນັ້ນ. ຄວາມສັມພັນໃນທາງຣາຊການລະຫວ່າງຫົວໜ້າໜວດຕຳຣວດປະຈຳເມືອງແລະເຈົ້າເມືອງກໍ່ຄ້າຍຄືກັນກັບຄວາມສັມພັນທາງຣາຊການລະຫວ່າງຜູ້ບັງຄັບການຕໍາ ຣວດປະຈຳແຂວງແລະເຈົ້າແຂວງ.

ຕໍ່ລົງໄປອີກກໍ່ມີໜູ່ແລະສະຖານີຕຳຣວດທີ່ປະຕິບັດຣາຊການຢູ່ຕາມຕາແສງແລະບ້ານ. ຫົວໜ້າໜູ່ແລະຫົວໜ້າສະຖານີຕຳຣວດຂຶ້ນໂດຍກົງກັບຕາແສງແລະນາຍບ້ານ.

ຕຳຣວດລາວແລະການຈັດຕັ້ງ.(ຕໍ່)

ນີ້ຄືລາຍລະອຽດໂດຍຫຍໍ້ຂອງປວັດການຈັດຕັ້ງຂອງຣາຊການຕຳຣວດແຫ່ງພຣະຣາຊອານາຈັກລາວ. ຂ້າພະເຈົ້າຂໍຂອບໃຈນຳທ່ານ ຣຕອ ຄຳເຕີມ ຊານຸບານ, ເພື່ອນຮ່ວມຫ້ອງຮຽນຂອງຂ້າພະເຈົ້າ, ທີ່ໄດ້ຊ່ວຍໃຫ້ຄວາມກະຈ່າງແຈ້ງເພີ້ມເຕີມແກ່ຂ້າພະເຈົ້າໃນຄາວທີ່ເພິ່ນໄປຮັບການອົບຮົມວິຊາຕຳຣວດຢູ່ທີ່ກຸງວໍຊິງຕັນ, ສະຫະຣັດອະເມຣິກາ.

ສ. ໄຊຍະສິທເສນາ

6.3 ກອງທັບແຫ່ງຊາດລາວ.

ພຣະຣາຊອານາຈັກລາວ ມີກຳລັງທະຫານສຳລັບປ້ອງກັນປະເທດຢູ່ ໓ ກອງທັບ ຄື (໑) ກອງທັບບົກ-- (໒) ກອງທັບອາກາດ-- (໓) ກອງທັບເຮືອ. ທັງຫມົດນີ້ຈັດເຂົ້າເປັນກອງທັບແຫ່ງຊາດອັນນຶ່ງ ກອງບັນຊາການທະຫານສູງສຸດຂອງກອງທັບແຫ່ງຊາດນຳໂດຍຜູ້ບັນຊາການສູງສຸດຄົນນຶ່ງແລະຂຶ້ນກັບຣັຖມົນຕີກະຊວງປ້ອງກັນປະເທດໂດຍກົງ.

ຜູ້ບັນຊາການທະຫານສູງສຸດມີຜູ້ຮອງສອງຄົນແລະມີຫ້ອງການນາຍພົນເສນາທິການອັນນຳໂດຍຫົວຫນ້າເສນາທິການຄົນນຶ່ງຊຶ່ງມີຜູ້ລອງສອງຄົນ; ຄົນນຶ່ງຄວບຄຸມການປະຕິບັດຕ່າງໆແລະຄົນນຶ່ງຄວບຄຸມການວາງແຜນຍຸທສາດ. ຫົວຫນ້າຝ່າຍປະຕິບັດງານຢູ່ເຫນືອບັນດາອະທິບໍດີຂອງຫ້ອງການສົງຄາມຈິຕວິທຍາ, ຫ້ອງການປະຕິບັດງານ, ຫ້ອງການວາງແຜນແລະຝຶກອົບຮົມ. ຫົວຫນ້າຝ່າຍວາງແຜນຍຸທສາດຢູ່ເຫນືອບັນດາອະທິບໍດີກົມຂົນສົ່ງ, ກົມຍຸທສາດແລະກົມຣະດົມພົນ.

ກ່ຽວກັບລາຍລະອຽດແລະຍົດຊັ້ນຂອງທະຫານ ເຊີນທ່ານເບິ່ງພາບພ້ອມດ້ວຍຄຳອະທິບາຍໃນຫນ້າຕໍ່ໄປ.

ພຣະຣາຊອານາຈັກລາວແບ່ງການປົກຄອງດ້ານທະຫານອອກເປັນຫ້າພາກຄື -ເຂດທະຫານພາກນຶ່ງມີກອງບັນຊາການຢູ່ເມືອງຫລວງພຣະບາງ, ເຂດທະຫານພາກສອງ-ມີກອງບັນຊາການຢູ່ເມືອງຊ່ຳທອງ, ເຂດທະຫານພາກສາມ-ມີກອງບັນຊາການຢູ່ເມືອງສວັນນະເຂດ, ເຂດທະຫານພາກສີ່-ມີກອງບັນຊາການຢູ່ເມືອງປາກເຊ ແລະເຂດທະຫານພາກຫ້າ-ມີກອງບັນຊາການຢູ່ກຸງວຽງຈັນ.

ສ. ໄຊຍະສິທເສນາ

ກອງທັບແຫ່ງຊາດ
INSIGNIA OF THE ROYAL LAO ARMY

ເຄື່ອງໝາຍໝວກ
HEADGEAR INSIGNIA

ໝວກອ່ອນ
AIRBORNE BERET

ໂຮງຮຽນນາຍຮ້ອຍ
MILITARY ACADEMY

ໝວກແກັບ
SERVICE CAP

ເຄື່ອງໝາຍກົມແລະກອງ
INSIGNIAS OF THE ARMS & SERVICES

ທະຫານຮາບ
Infantry

ກອງບິນ
Royal Lao Air Force



ທະຫານເຮືອ
River Flotilla

ຣົດຮົບ
Armor

ປືນໃຫຍ່
Artillery

ຍານຍົນ
Transportation

ພົນຮົ່ມ
Airborne

ສາຣະວັດ
Military Police

ກົມແລະກອງສື່ສານ
Signal

ກົມແລະກອງໂຍທາທະຫານ
Engineer

ນາຍພົນເສນາທິການ
General Staff

ກົມກະສຸນ
Ammunition

ກົມພະລາທິການ
Quartermaster

ສານທະຫານ
Military justice

ກົມສັມພາວຸດ
Materiel

ກົມເສນາຮັກ
Medical

ກົມການເງິນ
Adjutant Gen. & Finance

ພິເສດ ເຄື່ອງໝາຍ
SPECIAL INSIGNIA

ຄຣູພົນຮົ່ມ
INSTRUCTOR PARACHUTIST



ພົນຮົ່ມ
MILITARY PARACHUTIST



ນັກບິນ
AVIATOR WINGS

ເຄື່ອງໝາຍຊັ້ນປະກອບອິນທະນູ

ນາຍພົນແລະຈອມພົນ

RANK INSIGNIA OF THE ROYAL LAO ARMY
GENERAL OFFICERS

ພົນຈັດຕະວາ	ພົນຕີ	ພົນໂທ	ພົນເອກ	ຈອມພົນ
Brigadier General	Major General.	Lieutenant General	General	Field Marshal

ນາຍພັນ
FIELD GRADE OFFICERS



ພັນຕີ	ພັນໂທ	ພັນເອກ
Major	Lt. Colonel	Colonel

ນາຍຮ້ອຍ
JUNIOR OFFICERS



ນັກຮຽນນາຍຮ້ອຍ	ນັກຮຽນນາຍຮ້ອຍປີທີ	ວາເຣັ້ນຮ້ອຍຕີ	ຮ້ອຍຕີ	ຮ້ອຍໂທ	ຮ້ອຍເອກ
Cadet 1st Class	Cadet 2nd Class	Warrant Officer	2nd Lieutenant	1st Lieutenant	Captain

ພົນທະຫານ ນາຍສິບ ນາຍຈ່າ
ENLISTED GRADES

ພົນທະຫານຊັ້ນຕ)	ສິບຕີ	ສິບໂທ	ສິບເອກ	ຈ່າຕີ	ຈ່າໂທ	ຈ່າເອກ
Private First Class	Corporal	Senior Corporal	Sergeant	Senior Sergeant	Master Sergeant	Sergeant Major

ເຄື່ອງໝາຍຕິດບ່າຂອງພົນທະຫານ ນາຍສິບແລະນາຍຈ່າ

Enlisted Shoulder Insignia

6.31 ຈົດໝາຍຈາກແນວໜ້າ.

ສະບາຍດີເພື່ອນທີ່ຮັກແລະຄິດເຖິງ.

ດົນນານແລ້ວເຮົາບໍ່ໄດ້ສົ່ງຂ່າວຫາໂຕ ເຮົາຫວັງວ່າໂຕພ້ອມດ້ວຍພີ່ນ້ອງຄອບຄົວສະບາຍດີ. ສ່ວນເຮົາຢູ່ແນວໜ້າພຸ້ນກໍສະບາຍດີຢູ່.

ມື້ນີ້ເຮົາມີເຣື່ອງຕື່ນເຕັ້ນຈະເລົ່າສູ່ເພື່ອນຟັງ. ຫວ່າງອາທິດແລ້ວນີ້ ນາຍໝູ່ໄດ້ເອີ້ນເຮົາເຂົ້າໄປຫາ ແລະໄດ້ບອກເຮົາວ່າ ເຮົາໄດ້ຖືກຍ້າຍໜ້າທີ່ຈາກຜູ້ຍິງປືນກົນໄປເປັນຜູ້ຊ່ວຍຂອງຮອງຫົວໜ້າໝວດ. ໃນຂນະທີ່ເຮົາມີຄວາມພາກພູມໃຈໃນຄວາມກ້າວໜ້າຕລອດທັງຄວາມໄວ້ເນື້ອເຊື່ອໃຈແລະຄວາມຮັບຜິດຊອບເພີ່ມເຕີມທີ່ເຮົາໄດ້ຮັບນີ້ ເຮົາກໍມີຄວາມເສັຽໃຈທີ່ຈະບອກໃຫ້ເພື່ອນວ່າຊັ້ນຂອງເຮົາບໍ່ໄດ້ຂຶ້ນນຳແຕ່ຢ່າງໃດ. ແລະຕໍ່ມາ, ຄວາມຕື່ນເຕັ້ນຂອງເຮົາກໍໄດ້ຈູບຫາຍໄປ ເມື່ອນາຍຈ່າໄດ້ແຈ້ງວ່າ ພວກເຮົາຈະຕ້ອງອອກທຳການລາດຕະເວນ, ແລະມັນຈະບໍ່ແມ່ນການລາດຕະເວນໃນເຂດຈຳກັດ. ກອງຮ້ອຍທັງກອງຈະຕ້ອງອອກຢ່າງເປັນເວລາສີ່ວັນ. ບໍ່ແມ່ນພຽງແຕ່ເຮົາຍັງບໍ່ເຄີຍໄດ້ອອກປະຕິບັດງານຊະນິດນີ້ເປັນຂນາດກອງຮ້ອຍເທົ່ານັ້ນ, ລາວຍັງໄດ້ບອກພວກເຮົາອີກວ່າເຮົາຈະຕ້ອງຂ້າມຟາກແມ່ນ້ຳກະດິງໄປອີກ, ຊຶ່ງທາງດຽວ ທີ່ເຮົາຈະຂ້າມໄດ້ກໍຄືດ້ວຍການລຸຍນ້ຳໄປ. ແລະບໍ່ຕ້ອງສົງສັຍເລີຍວ່າເຂດແດນແຫ່ງນີ້ມີຄວາມກັນດານແລະອັນຕະຣາຍພຽງໃດ.

ຍ້ອນວ່າ "ຄຳສັ່ງຈະຕ້ອງເປັນຄຳສັ່ງ" ນີ້ເອງ ພວກເຮົາຈຶ່ງເລີ້ມເຄື່ອນໄຫວອອກກ່ອນເວລາໃກ້ສິຮຸ່ງ. ໝວດຂອງເຮົາຢູ່ໃນໝູ່ທີ່ສອງທີ່ໄດ້ເຄື່ອນຍ້າຍອອກ ແລະໝູ່ທີ່ສາມໄດ້ຕິດຕາມພວກເຮົາໄປ. ພວກເຮົາໄດ້ໄປເຖິງແມ່ນ້ຳແລ້ວໄດ້ລຸຍຂ້າມໄປກ່ອນເວລາກິນເຂົ້າທ່ຽງແດ່ເລັກນ້ອຍ ໂດຍປາສຈາກເຫດຮ້າຍໃດໆ. ຢູ່ຟາກນ້ຳພວກເຮົາໄດ້ຍ່າງຂຶ້ນເນີນສູງ ຊຶ່ງຕໍ່ມາບໍ່ດົນພວກເຮົາກໍໄດ້ໄປເຖິງສັນພູພຽງ. ພື້ນທີ່ແຫ່ງນັ້ນເປັນປ່າໝາແຕ່ຍ້ອນບໍ່ມີຕົ້ນໄມ້ນ້ອຍຫລາຍພວກເຮົາຈຶ່ງສາມາດເບິ່ງເຫັນໄກແດ່ຈັກໜ້ອຍ. ເມື່ອໄປຮອດຫັ້ນແລ້ວ ພວກເຮົາໄດ້ຢຸດກິນເຂົ້າແລງແລະພັກຜ່ອນ. ທັງຢ້ານກໍຢ້ານນັ້ນເພາະມັນງຽບສງັດເກີນໄປ. ເຮົາເອງແລະ

ຈົດໝາຍຈາກແນວໜ້າ.(ຕໍ່)

ພວກໝູ່ນຳກັນຕ່າງກໍໃຈບໍ່ດີຈັກຄືນ. ສິ່ງສຳຄັນທີ່ພວກເຮົາຕ້ອງເຮັດໃນເວລານັ້ນກໍຄືຂຸດຫລຸມກຳບັງ ແລະ ວາງຍາມອ້ອມພວກເຮົາ ແລະກຽມຕົວເພື່ອຕໍ່ສູ້ກັບເຫດຮ້າຍຊຶ່ງອາດຈະເກີດຂຶ້ນໄດ້ທຸກເວລາ. ພວກເຮົາລອບເຂົ້າໄປໃນເຂດນັ້ນໄດ້ແລະຫວັງວ່າການໃຊ້ສິ່ງລວງຕາກຳບັງຈະສາມາດຊ່ອຍໃຫ້ເຮົາລີ້ຢູ່ໄດ້ຕໍ່ໄປດົ້ງນີ້ໄດ້. ເຮົາເປັນຜູ່ຍາມຮອບທຳອິດ ເຮົາຈຶ່ງສວຍໂອກາດເຊັດປືນຂອງເຮົາ. ເວລານັ້ນຍັງມີແສງສວ່າງຢູ່ ແລະເຄື່ອງນຶ່ງຂອງພວກເຮົາກໍຍັງຄືງຢູ່ໃນພາບກຽມພ້ອມ. ຜົນສຸດທ້າຍກໍເຖິງຜຽນເຮົານອນ. ເມື່ອວາງຖົງທີ່ເຕັມໄປດ້ວຍເຄື່ອງຂອງສຳລັບທີ່ອັນນັ້ນລົງ ເຮົາຮູ້ສຶກມີແຮງຂຶ້ນຫລາຍເຕີບ.

ຮູ້ສຶກວ່ານີ້ເຈົ້າໄດ້ມາເຖິງໄວເກີນໄປ. ໝູ່ທະຫານຂອງເຮົາໄດ້ຖືກຕັ້ງໃຫ້ເປັນກອງອາຮັກຂາແລະໝວດທະຫານຂອງເຮົາໄດ້ຮັບໜ້າທີ່ເປັນກອງໜ້າ. ພວກເຮົາໄດ້ເລີ້ມອອກຢ່າງດ້ວຍອາການເຄິ່ງຫລັບເຄິ່ງຕື່ນ. ເມື່ອພວກເຮົາຄືບໜ້າໄປຕາມພື້ນທີ່ແບບດຽວກັບວັນກ່ອນບໍ່ໄດ້ເຖິງເຄິ່ງກິໂລແມັດພວກສັດຕຣູກໍຍິງພວກເຮົາ. ພວກເຮົາຟ້າວນອບແລ່ນເຂົ້າຫາທີ່ກຳບັງ. ໃນທັນໃດນັ້ນທະຫານກອງໜ້າຂອງເຮົາຄົນນຶ່ງໄດ້ເສັຽຊີວິດໄປ. ເຮົາໄດ້ສັ່ງທະຫານຄົນນຶ່ງກັບຄືນໄປບອກພວກຢູ່ທາງຫລັງວ່າສັດຕຣູຍິງມາຈາກຝາກຂວາ; ແຕ່ບໍ່ມີຫຍັງຮ້າຍແຮງ. ຕໍ່ມາພວກຢູ່ທາງຫລັງກໍໄດ້ເຂົ້າປະຈຳທ່າໂດຍໄວ ແລະນາທີຕໍ່ມາ ນາຍໝວດໄດ້ມອບໃຫ້ເຮົາເປັນຜູ່ກຳກັບແລະສັ່ງໃຫ້ເຮົານຳທະຫານໝູ່ນຶ່ງອອກໜ້າ. ເວລານັ້ນເຮົາບໍ່ຮູ້ວ່າທັງກອງຮ້ອຍກໍໄດ້ຄ່ອຍເຄື່ອນຍ້າຍຕາມຫລັງເຮົາໄປ. ໃນທັນທີທັນໃດນັ້ນເອງ ທຸກສິ່ງທຸກຢ່າງໄດ້ສຸມເຂົ້າໃສ່ພວກເຮົາມີທັງປືນຄົກ, ປືນກົນ, ປືນເຫລັກຍາວແລະອື່ນໆອີກ. ພວກເຮົາຈຳເປັນຕ້ອງໝອບລົງຕິດພື້ນດິນ. ໝວດທີ່ສອງຢູ່ທາງຊ້າຍຂອງເຮົາໄດ້ເອົາກັນຖອຍຄືນໄປ. ຂະເຈົ້າໄດ້ຮັບບາດເຈັບແລະເສັຽຊີວິດເປັນຈຳນວນຫລາຍ. ຕໍ່ມາພວກເຮົາໄດ້ຍິນສຽງໜ່ວຍຄວບຄຸມທາງອາກາດລ່ວງໜ້າ ວິທຍຸຂໍການສນັບສນຸນທາງອາກາດຢ່າງຮີບດ່ວນ. ເວລານັ້ນ ພວກເຮົາຢູ່ໄກກວ່າຣະຍະກະສຸນຂອງປືນໃຫຍ່ເກີນໄປ. ຕໍ່ມາສຽງປືນກໍງຽບຫາຍໄປໂດຍໄວເທົ່າກັນກັບເວລາມັນເລີ້ມຂຶ້ນ. ຫລັງຈາກເຄື່ອງບິນໄດ້ຖິ້ມຣະເບີດແລະໂຈມ

ຈົດໝາຍຈາກແນວໜ້າ.(ຕໍ່)

ຕີແລ້ວ ເຄື່ອງບິນເຮລີຄັອບເຕີຣ໌ກໍໄດ້ອອກໄປຮັບພວກເຮົາພ້ອມທັງພວກທີ່ໄດ້ຮັບບາດເຈັບແລະເສັຽຊີວິດ. ນີ້ແຫລະເພື່ອນເອີຍ ຄື ຊີວິດຢູ່ໃນແນວໜ້າ. ໂອກາດໜ້າເຮົາຈະຂຽນຫາໂຕອີກ, ລາກ່ອນ.

ຮັກແລະຄິດຮອດເພື່ອນສເມີ

<u>ທະຫານແນວໜ້າ</u>

ສ. ໄຊຍະສິທເສນາ

6.32 ວິຣະບຸຣຸດ ຂອງ ເຕ ໒໘.

ໃນມື້ນັ້ນ ລາວໄດ້ອອກປະຕິບັດໃນການໂຈມຕີມາຫລາຍຖ້ຽວ ແຕ່ລະຖ້ຽວລາວໄດ້ບິນຊອກຫາຂ້າເສິກສັດຕູຈົນເຫັນຄັກແນ່ ແລ້ວກໍປ່ອຍລູກຣະເບີດລົງໃສ່ຈາກຣະດັບຕ່ຳ ການຖິ້ມຣະເບີດຂອງລາວຈຶ່ງຖືກເປົ້າໝາຍຢ່າງຄັກແນ່ປານຈັບວາງ ເປັນເຫດໃຫ້ສັດຕູຕ້ອງເຊົາປະຕິບັດງານໃນຍາມກາງເວັນ. ແຕ່ແລ້ວໃນຕອນແລງພໍຕາເວັນພາດປາຍໄມ້ຂອງວັນທີ ໑໑ ກໍຣະກະດາ ໑໙໕໙ ກໍມີລາຍງານມາເຖິງລ່ອງແຈ້ງວ່າຂ້າເສິກກຳລັງມຸ້ງໜ້າເຂົ້າສູ່ສນາມບິນຊຽງແດດທີ່ເມືອງສຸ້ຍອີກ. ເມື່ອໄດ້ຊາບລາຍງານ ແທນທີ່ລາວຈະເຊົາພັກຜ່ອນຮ່າງກາຍ ຄວາມເຈັບແຄ້ນຍ້ອນສັດຕູບຸກລຸກປະເທດຊາດ ແລະໂດຍສະເພາະມັນກຳລັງບຸກລຸກເຂດແຂວງທີ່ເປັນບ້ານເກີດຂອງລາວ ລາວຈຶ່ງເຂົ້າໄປຂໍອະນຸຍາດຈາກຜູ້ບັນຊາການ ເພື່ອບິນໄປສັງຫານສັດຕູເປັນຖ້ຽວສຸດທ້າຍຂອງວັນນັ້ນອີກເທື່ອນຶ່ງ. ເມື່ອຜູ້ບັນຊາການລັງເລໃຈ ຍ້ອນເຫັນວ່າລາວໄດ້ອອກທຳການໂຈມຕີມາຫລາຍຖ້ຽວແລ້ວ ລາວຈຶ່ງອ້ອນວອນຂໍໄປຈົນໄດ້. ເມື່ອໄດ້ຮັບອານຸຍາດແລ້ວ ເຮືອອາກາດເອກລີລີ ພ້ອມດ້ວຍເຮືອອາກາດໂທລອກເນັ້ງ ກໍຟ້າວປ່າຍປີນຂຶ້ນເທິງບົນເຕ ໒໘ ທີ່ຕິດຣະເບີດໄວ້ຮຽບຮ້ອຍ ແລ້ວກໍທະຍານບິນຂຶ້ນຈາກລ່ອງແຈ້ງມຸ້ງໜ້າໄປສູ່ສນາມບິນຊຽງແດດພ້ອມກັບລຳອື່ນໆ.

ຍ້ອນຕາເວັນພວມຈະຕົກດິນ ລາວຈຶ່ງຈຳເປັນຕ້ອງບິນຢູ່ໃນຣະດັບຕ່ຳພໍສົມຄວນ ເພື່ອໃຫ້ມັນເຫັນເບື້ອງລຸ່ມໄດ້ຄັກ ຄວາມຄາດໝາຍຂອງລາວຖືກຕ້ອງ ລາວຫລຽວເຫັນພວກສັດຕູກຳລັງເຄື່ອນໄຫວຢູ່ອ້ອມເດີ່ນບິນຊຽງແດດ ເພື່ອສັງຫານສັດຕູຜູ້ລຸກລານ ລາວຕົກຫົວເຄື່ອງບິນດິ່ງລົງເໝືອນກັບຕົວແຫລວບິນລົງຊຸດເຫຍື່ອຂອງມັນ ລາວເລັງສູນຂອງຫົວເຄື່ອງບິນໃສ່ເປົ້າໝາຍແລ້ວກໍຣະດົມຍິງສາດກະສຸນຈາກປືນປະຈຳເຕ ໒໘ ແລະເມື່ອໄດ້ຣະດັບທີ່ເໝາະສົມລາວກໍປ່ອຍລູກຣະເບີດທັງໝົດລົງ. ໃນວິນາທີດຽວກັນນັ້ນເອງ ລູກປືນຂອງສັດຕູຈາກພື້ນດິນກໍໄດ້ປະທະຕົວເຄື່ອງບິນປານຫ່າຝົນ. ເຮືອອາກາດໂທລອກເນັ້ງ ຜູ້ນັ່ງຢູ່ທາງຫລັງຖືກລູກປືນເສັຽຊີວິດຄາທີ່ ສ່ວນລີລີຖືກລູກປືນທີ່ແຂນແລະໜ້າເອິກ ແຕ່ປານນັ້ນສະຕິຂອງລາວກໍຍັງດີຢູ່ ລາວບັງຄັບເຄື່ອງບິນໃຫ້ຍົກຫົວຂຶ້ນແລະອວາຍໜ້າກັບ. ໃນຂນະນັ້ນລູກປືນຂອງສັດຕູໄດ້ຖືກຫົວເຄື່ອງບິນແລະກໍໃຫ້

ວິຣະບຸຣຸດ ຂອງ ເຕ ໒໘.(ຕໍ່)

ເກີດໄຟໄໝ້ພຸ່ງຂື້ນກາງອາກາດ ເມື່ອເຫລືອຄວາມສາມາດທີ່ຈະບັງຄັບໄວ້ໄດ້ ເຕ ໒໘ ລຳນັ້ນກໍ່ສັກທິວລົງກະແທກກັບພື້ນດິນແລະເກີດຣະເບີດສຽງດັງສນັ່ນຫວັ່ນໄຫວ ເມື່ອເວລາ ໑໗ ໂມງ ໔໕ ນາທີ ເປັນເຫດໃຫ້ລາວເສັຽຊີວິດໄປໃນບັດນັ້ນ.

ການອອກບິນຣົບຄັ້ງສຸດທ້າຍຂອງລາວນີ້ເປັນຄັ້ງທີ ໓໔໗ ຊຶ່ງມີເວລາບິນຢູ່ເກືອບສອງພັນຊົ່ວໂມງ.

ລາວໄດ້ຮັບໃຊ້ປະເທດຊາດສົມທີ່ເກີດມາເປັນລູກຜູ້ຊາຍ. ສົບຂອງລາວແລະຂອງເຮືອອາກາດໂທລອກເນັ່ງໄດ້ຖືກນຳມາບຳເພັນກຸສົນຢ່າງສົມກຽດ.

ລີລີເປັນລູກຊາຍຂອງທ້າວຈິງເຢີແລະສາວປາ ລາວເກີດຢູ່ບ້ານຖ້ຳກູ ຕາແສງແກ້ງຄວາຍ ເມືອງແລະແຂວງຊຽງຂວາງ ເມື່ອວັນທີ ໒ ເມສາ ໑໙໓໗ ລາວເປັນຄົນຮັກອິສຣະພາບແລະຊັງການຂົ່ມເຫັງດັ່ງນັ້ນລາວຈຶ່ງໄດ້ດຳເນີນຊີວິດດ້ວຍການຕໍ່ສູ້ເພື່ອຄວາມຍຸຕິທັມຢູ່ຕລອດມາ.

ລີລີເຂົ້າເປັນທະຫານໃນກອງທັບອາສາສມັກທີ ໒໑ ເມື່ອວັນທີ ໑ ກຸມພາ ໑໙໖໑ ໄດ້ຖືກເລື່ອນຍົດຂື້ນເປັນນາຍຮ້ອຍຕີ ເມື່ອວັນທີ ໑ ພຶສພາ ໑໙໖໔ ແລະໄດ້ຍ້າຍມາສັງກັດຢູ່ໃນກອງທັບອາກາດ ເມື່ອວັນທີ ໒໙ ກຸມພາ ໑໙໖໗. ລາວໄດ້ໄປຮັບການອົບຮົມເປັນນັກບິນຢູ່ຈັງຫວັດອຸດອນໃນປະເທດໄທ. ເມື່ອສຳເຣັດການອົບຮົມແລ້ວກອງທັບອາກາດໄດ້ແຕ່ງຕັ້ງໃຫ້ລາວເປັນຫົວໜ້າຝູງບິນຂັບໄລ່ ເຕ ໒໘ ເມື່ອວັນທີ ໖ ກຸມພາ ໑໙໖໙ ພ້ອມກັບໄດ້ເລື່ອນຍົດລາວຂື້ນເປັນເຮືອອາກາດໂທ ແລະສາມເດືອນຄັດນັ້ນມາ ຍ້ອນຄວາມສາມາດເປັນພິເສດຂອງລາວ ທາງການຈຶ່ງໄດ້ເລື່ອນຍົດລາວຂື້ນເປັນເຮືອອາກາດເອກ. ແລະເພື່ອເປັນການຕອບແທນຄຸນງາມຄວາມດີ ແລະຄວາມວິຣະອາດຫານຂອງລາວເທື່ອນີ້ ທາງການໄດ້ເລື່ອນຍົດໃຫ້ລາວເປັນນາວາອາກາດຕີ ພ້ອມດ້ວຍການປະດັບຫລຽນຕາຄຳຊອບອິສຣິຍະພອນ ແລະຫລຽນກ້າຫານຊັ້ນເອກ.

ເຖິງແມ່ນຊີວິດຂອງລີລີຈະໄດ້ສູນເສັຽໄປຈາກໂລກນີ້ແລ້ວກໍ່ຕາມ ແຕ່ວິຣະກັມແລະຄຸນງາມຄວາມດີ

ວີຣະບຸຣຸດ ຂອງ ເຕ ໔໗.(ຕໍ່)

ທີ່ລາວສ້າງໄວ້ ຈະຖືກຈາຣຶກຢູ່ໃນປວັດຂອງກອງທັບອາກາດແຫ່ງພຣະຣາຊອານາຈັກລາວ ແລະຈະຝັງແໜ້ນຢູ່ໃນຈິດໃຈຂອງພໍ່ແມ່ພີ່ນ້ອງແລະມິດສະຫາຍຂອງລາວຢ່າງບໍ່ມີວັນຈະສູນສິ້ນໄປໄດ້.

ຮຽບຮຽງແລະດັດແປງຈາກ

ໜັງສື "ປັດຈຸບັນ" ສບັບທີ ໗

ໂດຍ ສ. ໄຊຍະສິທເສນາ

SELECTED LAO NEWSPAPER ARTICLES

The following newspaper articles have been chosen to illustrate some of the types of news that have appeared in Lao newspapers. Each article is identified with an English caption indicating the general content of the article.

(1) The Death of Nasser

ປະທານາທິບໍດີນາສເຊີແຫ່ງອີຢິບ ອະສັນຍະກັມດ້ວຍໂຣກຫົວໃຈວາຍ

ປະທານາທິບໍດີນາສເຊີແຫ່ງອີຢິບອະສັນຍະກັມດ້ວຍໂຣກຫົວໃຈວາຍ ເມື່ອເວລາ 15 ໂມງ 15 ເວລາທີ່ໄຄໂຣ ຫລືເວລາ 12 ໂມງ 15 ເວລາສາກົນ ຫລືເວລາ 04 ໂມງເວລາໃນເມືອງລາວ

ຄຳປະກາສການສູນເສັຽປະທານາທິບໍດີອີຢິບມື້ນີ້ ທີ່ໄຄໂຣໂດຍນາຍຊາດັກ ຮອງປະທານາທິບໍດີເປັນຜູ້ປະກາສແລະອ່ານຄຳນິໂກລານຕິດຕໍ່ກັນ

ຫລັງຈາກຖແລງການແລ້ວ ນາຍຊາດັກ ຮອງປະທານາທິບໍດີອີຢິບກໍໄດ້ກ່າວສັນເສີນວ່າເປັນການສູນເສັຽບຸກຄົນສຳຄັນຍິ່ງໃຫຍ່ທີ່ຕ້ອງສົມຈິດລົງຂນະຕໍ່ສູ້ເພື່ອອາຫລັບຢູ່ ທ່ານທຸ່ມເທສະຕິກຳລັງປ້ອງກັນຄວາມມີນາສຢ່າງເສົ້າສລົດ ທີ່ເກີດຈາກການຂັດແຍ້ງກັນໃນກຸ່ມອາຫລັ

ປະທານາທິບໍດີມາສເຊີອາຍຸ 52 ປີເປັນໂຣກຫົວໃຈວາຍ

ກຳເຣີບໃນຕອນບ່າຍເມື່ອວັນທີ່ 28 ເມື່ອເດີນທາງກັບທີ່ພັກ

ຫລັງຈາກເສັດການສລອງການຂັດແຍ່ງກັນໃນຈຳແດນເມື່ອ2—3
ປີຫລັງສຸຂະພາບຂອງທ່ານບໍ່ຄ່ອຍດີ ຍ້ອນຣະບົບທາງເດີນຂອງ
ເລືອດທີ່ຂາ ໄດ້ຮັບການຮັກສາທີ່ສຫະພາບໂຊວຽດສອງຄັ້ງ
ແລະຄັ້ງສຸດທ້າຍເມື່ອເດືອນກໍຣະກະດາທີ່ຜ່ານມາພາຍຫລັງຈາກ
ປະກາສຍອມຮັບແຜນການຢຸດຍິງຂອງສຫຣັຖແລ້ວ

ພິທີສົບຈະກະທຳວັນພະຫັສນີ້ ເວລານີ້ສົບຂອງທ່ານ
ໄດ້ນຳໄປສູ່ຕຳນຽບທີ່ໄຄໂຣແລ້ວ .

ຂ່າວອະສັນຍະກັມຂອງປະທານາທິບດີນາສເຊີ ມາໃຫ້ຕຶກຕະລຶງໃນອົງການສຫະປະຊາຊາຕ ທີ່ກຳລັງແລກປ່ຽນຄວາມຄິດເຫັນກ່ຽວກັບບັນຫາຕະວັນອອກກາງຂອງນາຍກຸນນາຈາຣິງ

ປະທານາທິບດີນິກສັນຣະວ່າງທີ່ຢູ່ອິຕາລີໄດ້ຊາບຂ່າວ ນີ້ເຖິງກັບຕຶກຕະລຶງນາຍຫລັງເຂົ້າເຝົ້າສົມເດັດພຣະສັນຕະ ປາ ປາ ປອລທີ່ ໖ ແລ້ວແລະໄດ້ສັ່ງໃຫ້ລົດທຸງຊາດສຫຣັຖເຄິ່ງເສົາເພື່ອໄວ້ອາໄລ ໂອກາສດຽວກັບນີ້ ປະທານາທິບດີນິກສັນ ກ່າວວ່າ ອະສັນຍະກັມຂອງນາສເຊີຈະຊ່ວຍໃຫ້ການເຈຣະຈາຕະວັນອອກກາງໄວເຂົ້າ

ທີ່ມອສໂຄວ໌ ທາງການໂຊວຽດຮູ້ສຶກ ເສັຽໃຈ ຢ່າງ ຍິ່ງທີ່ສູນເສັຽຜູ່ນຳອີຢິບຜູ້ມັ່ນທະມິດຂອງຕົນແລະນາຍໂກສີກິນນາຍົກຣັຖມົນຕຣີໂຊວຽຕຈະເປັນຫົວໜ້າຄນະຮ່ວມໃນພິທີສົບ

ກາມານອັບເດັນນາສເຊີເກີດ ທີ່ເມືອງອາເລັກຊານເດຣັຽ ເປັນລູກຊາຍຂອງສມຽນໄປສະນີ ສຳເຣັດການສຶກສາຈາກໂຮງຮຽນນາຍທະຫານ ເປັນນາຍທະຫານຣາບໃນສົງຄາມປາເລສໄຕປີ 1948 ເມື່ອເດືອນກໍຣະກະດາ 1952 ໄດ້ເຂົ້າຮ່ວມປະຕິວັດທີ່ໂຄໂຣທີ່ບໍ່ເສັຽເລືອດເນື້ອໃນການໂຄ່ນລົ້ມ ຣາຊບັນລັງກະສັຕຟາຣູກລົງໄດ້

ນາສເຊີເປັນນາຍທະຫານໜຸ່ມທີ່ມີທິດສະດີຈາບຊຶ້ງໃນທາງການເມືອງຫລາຍກວ່ານັກການເມືອງຄົນອື່ນໆ ຈຶ່ງໄດ້ເລື່ອນຂຶ້ນຄວບຄຸມຄນະປະຕິວັດໃນອີຢິບແລະປົດເຊັ້ງນາຍພົລເນກິບຜູ້ນຳປະຕິວັດຄົນແຣກອອກໄປ ແລ້ວເຂົ້າຮັບຕຳແໜ່ງແທນຕາມຣັຖທັມມູນ

ປະທານາທິບໍດີນາເຊີ ເປັນປະທານາທິບໍດີອີຢິບ ຮອມ 14 ປີ ນັບແຕ່ປີ 1956 ເປັນຕົ້ນມາເມື່ອເຂົ້າຮັບຕຳແໜ່ງປີແຣກໄດ້ທຳການຢຶດຄອງສຸເອດອັນເປັນທາງນຳໄປສູ່ການສູ້ຣົບກັບ ອິສຣາເອລທີ່ ແຫລມຊີນາຍ ແລະຕໍ່ມາໄດ້ເຂົ້າຢຶດຄອງສຸເອດທັງໝົດເປັນເຫດໃຫ້ອັງກິສແລະຝຣັ່ງເສສຢຶດເມືອງ ທ່າປອດຊາອິດ ແຕ່ເຖິງວ່າ ນາສເຊີຈະປຣາໃຊທາງທຫານ ແຕ່ກໍ່ຊນະທາງດ້ານການເມືອງ ແລະກ່ອນອະສັນຍະກັມນີ້ນາສເຊີກໍເອົາ ຊື່ສຽງເຂົ້າສ່ຽງກັບການຍຸດຍິງຕາມຂໍ້ສເນີຂອງສຫຣັດທີ່ກຸ່ມອາຫຣັບສ່ວນຫລາຍບໍ່ເຫັນດີດ້ວຍ.

(2) Man found Dead after Argument with Wife

ຜົວກັບເມັຽເລີ່ຽຫອບຜ້າຫນີປະ ແລ້ວກາຍເປັນສົບຢູ່ກາງປ່າ

ພໍ່ເຮືອນວັຍ 47 ປີເກີດຜິດຖຽງກັບເມັຽຈຶ່ງຫອບເຄື່ອງ
ຫນີຈາກເມັຽໄປອີກຫ້າວັນຕໍ່ມາມີຜູ້ພົບພໍ່ເຮືອນຄົນກ່າວນີ້ກາຍ
ເປັນສົບຢູ່ກາງປ່າຢ່າງປິສນາ.

ຂ່າວຈາກກອງຕຳຣວດນະຄອນບານສີສັຕນາກແຈ້ງໃຫ້
ຊາບວ່າໃນວັນທີ 27 ກັນຍານີ້ເວລາ 8 ໂມງມີພົລເມືອງດີ ໄປ
ພົບສົບຂອງນາຽທິດສຸກ·ອາຍຸ 47 ປີປັຈຈຸບັນຢູ່ບ້ານທາຽໂສກ
ຕາແສງອັດສົບເມືອງສີສັຕນາກນອນຕາຽຢູ່ກາງປ່າທີ່ ບ້ານດົງ
ລ້າງເຫືອຽຕາແສງອັດສົມເມືອງສີສັຕນາກ

ກ່ອນທີ່ນາຍທິດສຸກຈະກາຽໄປເປັນສົບຢູ່ກາງປ່ານີ້ ຈາກການສອບສວນຂອງທາງເຈົ້າໜ້າທີ່ຊາບວ່າໃນວັນທີ 23 ເດືອນດຽວກັນນີ້ນາຽທິດສຸກໄດ້ເກີດຜິດຖຽງກັບເມັຽ ຊຶ່ງໄດ້ເອົາກັນມາໄດ້ 10 ປີແຕ່ບໍ່ເຄີຽມີລູກນຳກັນຈັກຄົນ ການຜິດຖຽງກັນນີ້ໄດ້ເກີດຂຶ້ນຢ່າງຮຸນແຮງສາເຫດທີ່ພາໃຫ້ເກີດຜິດຖຽງກັນເນື່ອງຈາກຜູ້ເປັນເມັຽໄດ້ເຮັດເຄື່ອງຮັກສາຕົກລົງຈາກຮ້ານ

ການຜິດຖຽງກັນເທື່ອນີ້ນາຍທິດສຸກ ໄດ້ຕັດສິນໃຈຫອບເຄື່ອງລົງໜີຈາກເຮືອນປະເມັຽແລ້ວໄປຄອບຜູ້ເປັນເອື້ອຍຂອງຜູ້ກ່ຽວວ່າຈະໄປຢູ່ທີ່ບ້ານສ້າງເຫວີຽ ຈາກນັ້ນມາຫລາຍວັນທັງເມັຽແລະເອື້ອຍກໍບໍ່ໄດ້ພົບໜ້ານາຽທິດສຸກ ລີຽ ຈົນເຖິງວັນທີ 27 ກັນຍາຈຶ່ງໄດ້ຮັບຂ່າວວ່ານາຽທິດສຸກ ໄດ້ກາຽເປັນສົບນອນຕາຽຢູ່ກາງປ່າ

ຈາກການອອກສັລສູດພິກສົບຂອງເຈົ້າໜ້າທີ່ ຕຳຣວຈເຈົ້າໜ້າທີ່ຝ່າຽໝໍຝ່າຍສານຝ່າຽພິສູດຫລັກຖານ ໄດ້ພົບກອດຢາໄຟດີດອນກອດໜຶ່ງຕິດຢູ່ກັບຕົວ ນາຽທິດສຸກ ຈຶ່ງເຂົ້າໃຈວ່າ ນາຽທິດສຸກໄດ້ຕັດສິນໃຈກິນຢາພິດນີ້ ສັງຫານຊີວິດຕົວເອງເພື່ອໜີຄວາມເສັຽໃຈ

(3) Consideration ofReduction in Importation of Pork into Laos

ຖ້າຫາກໝູລາວພຽງພໍກັບຕລາດແລ້ວ ຈະໄດ້ພິຈາຣະນາລົດຈຳນວນໝູທີ່ມາຈາກຕ່າງປະເທສ

ຂ່າວຈາກກະຊວງເສຖກິຈແຈ້ງໃຫ້ຊາບວ່າ ໃນວັນທີ່ 9 ມີນານີ້ ຢູ່ທີ່ກະຊວງເສຖກິຈ ໄດ້ເປີດໃຫ້ມີກອງປະຊຸມຂຶ້ນ ພາຍໃຕ້ການເປັນປະທານ ຂອງທ່ານພຍາຄຸນພັນໄຊຍະສິດ ຣັຖມົນຕຣີຊ່ວຍວ່າການກະຊວງດັ່ງ ຮັກສາການກະຊວງເສຖກິຈ ຜູ້ປະຊຸມກໍ່ມີບັນດາອະທິບໍດີຕ່າງໆ ພາຍໃນກະຊວງເສຖກິຈຕລອດເຖິງຫົວໜ້າຫ້ອງການປະມານທັງໝົດ 30 ກວ່າທ່ານ

ເມື່ອໄດ້ເວລາແລ້ວ ທ່ານຣັຖມົນຕຣີ ກໍໄດ້ແຈ້ງໃຫ້ທີ່ປະຊຸມຊາບເຖິງສຖານະການແລະການ ເຄື່ອນໄຫວໃນວົງການເສຖກິຈໂດຽສະເພາະແມ່ນກ່ຽວກັບການ ເກັບກ່ຽວເຂົ້າທົ່ວປະເທສວ່າໄດ້ຮັບຜົນເກີນໜ້າພໍໃຈແລະ ທ່ານຣັຖມົນຕຣີກໍ່ວ່າເພື່ອເປັນການສາທາງຈຳນ່າຽເຂົ້າຊາວນາທີ່ຍັງຄ້າງຄ່າຊື້ຝຸ່ນແລະຢາ ຂ້າແມງໄມ້ຈາກວົງການພັທນາການກະເສດຢູ່ນັ້ນ ທາງກະຊວງເສຖກິຈຈຶ່ງໄດ້ຂໍຮ້ອງໃຫ້ວົງການຍຸເສດ ຊ່ວຍຮັບຊື້ເຂົ້າຊາວນາຈຶ່ງຍັງຄ້າງຄາຢູ່ຈຳນວນ 12.000 ໂຕນ

ເຂົ້າຈຳນວນດັ່ງກ່າວນີ້ແມ່ນຂອງຊາວນາ ທີ່ຍັງຄ້າງເງິນ

S 210

ຄ່າຝຸ່ນແລະຢາຂ້າແມງໄມ້ ຊຶ່ງຣັຖບານຈະຕ້ອງຫາທາງຊີ້ເພື່ອຊ່ວຍເຫລືອຊາວນາໃຫ້ເດີມເງິນໃຊ້ຫນີ້ດັ່ງກ່າວນີ້ ສະເພາະແຂວງວຽງຈັນຖ້າຫາກຊາວນາແກ່ເຂົ້າມາຂາຍເຖິງໂຮງສີຈະໄດ້ຣາຄາກິໂລລະ 25 ກີບຖ້າອົງການພັທນາການກະເສດໄປຮັບຊື້ເອົາຈະໄດ້ຣາຄາກິໂລລະ 23 ກີບຍົກເວັ້ນແຕ່ເຂດເມືອງວັງວຽງແລະແລະແຂວງບໍຣິຄັນຊຶ່ງການຂົນສົ່ງໄກຈະຕ້ອງຫລຸດຣາຄາລົງກ່ອນທີ່ໄດ້ກະໄວ້ແມ່

ການຮັບຊື້ເຂົ້າໃນຣາຄາທີ່ກ່າວນີ້ອົງການຍຸເສດຈະຮັບຊື້ກໍແຕ່ສະເພາະເຂົ້າຊາວນາຜູ້ທີ່ຍັງຄ້າງຄ່າຝຸ່ນແລະຢາຂ້າແມງໄມ້ຈາກອົງການພັທນາການກະເສດເທົ່ານັ້ນ ຕໍ່ບັນຫານີ້ທ່ານຣັຖມົນຕຣີໄດ້ໃຫ້ຂໍ້ຄິດເຫັນແກ່ທີ່ປະຊຸມວ່າເມື່ອອົງການຍຸເສດຮັບຊື້ເຂົ້າໃນຣາຄານີ້ ຖ້າຫາກເປັນເຂົ້າສານແລ້ວ ເຫັນວ່າຖົງນຶ່ງ 4900 ກີບ ເປັນຣາຄາແພງກ່ອນເຂົ້າທີ່ພວກແມ່ຄ້ານໍາຂ້າມມາແຕ່ປະເທສໄທຊຶ່ງຣາຄາພຽງຖົງ 3000 ກີບ ແຕ່ແນວໃດກໍດີເຣື່ອງນີ້ທ່ານຣັຖມົນຕຣີໄດ້ມອບໃຫ້ທາງອົງການຍຸເສດແລະອົງການພັທນາການກະເສດໄປສຶກສາຣາຄາຈາກຂັ້ນພື້ນຖານໃຫ້ລະອຽດອີກເທື່ອນຶ່ງຫມາຍຄວາມວ່າຈະມີຊ່ອງທາງຫລຸດຣາຄາເຂົ້າຖົງລະ 4900 ກີບລົງໄດ້ກ່ອນນັ້ນທັງນີ້ ເພື່ອໃຫ້ເງິນງົບປະມານຂອງຍຸເສດທີ່ກະໄວ້ຊື້ເຂົ້າຊ່ວຍອົບພະຍົບ ແລະກອງທັບສາມາດຊື້ເຂົ້າໄດ້ຈໍານວນຫລາຍເພີ່ມອີກ

ບັນຫາທີ່ສອງກໍໄດ້ແກ່ລາຄາຊີ້ນ ໃນຕລາດປັດຈຸບັນນີ້ ປາກົດວ່າລາຄາຊີ້ນສັດທຸກປະເພດໃນຕລາດ ຖືກລົງແລະຫຸ່ມທ່ຽງ ແຕ່ວ່າຍັງມີການກະທົບກະເທືອນ ເຖິງກະສິກອນຜູ້ລ້ຽງສັດຢູ່ທັງນີ້ເນື່ອງຈາກສັດປະເທສໃກ້ຄຽງລາຄາຖືກ ແລະເຂົ້າມາຂາຍແຂ່ງສັດກະສິກອນລາວ ແຕ່ເລື່ອງນີ້ເສຖກິຈ ກໍໄດ້ຮ່ວມມືກັບກຳແພງນະຄອນວາງຣະບຽບໃໝ່ ຢ່າງຣັດກຸມແລ້ວເປັນຕົ້ນການລຳລຽງສັດເຂົ້າສູ່ວຽງຈັນ ຈະຕ້ອງຜ່ານດ່ານຫົວສວນໂຮງຂ້າສັດແຫ່ງດຽວແລະກະສິກອນທຸກຄົນຈະນຳສັດມາກໍຕ້ອງມີໃບຢັ້ງຢືນອາຍາສິດທ້ອງຖິ່ນວ່າເປັນໝູລາວ ຖ້າເປັນໝູຕ່າງປະເທສກໍຈະຕ້ອງເສັຽຄ່າພາສີຕາມຣະບຽບ

ເລື່ອງນີ້ກະຊວງເສຖກິຈໄດ້ວາງຣະບຽບໄວ້ໃຫ້ສມາຄົມຜູ້ລ້ຽງຮັບໂຮມຊື້ໝູຈາກສມາຊິກຜູ້ລ້ຽງແລ້ວ ນຳມາຂາຍໃຫ້ຜູ້ປະມູນຂ້າສັດໃນອັດຣາ 50 ເປີເຊັນ ຂອງໝູທີ່ຂ້າທຸກວັນແລະທຸກມື້ໝູວຽງຈັນຕ້ອງຂ້າ 120 ໂຕ ໃນຈຳນວນນີ້ 60 ໂຕ ເປັນໝູກະສິກອນລາວ ແຕ່ຖ້າຫາກວ່າກະສິກອນລາວສາມາດລ້ຽງໝູໃຫ້ພຽງພໍກັບຕລາດແລ້ວ ຈຶ່ງຈະໄດ້ພິຈາຣະນາລົດຈຳນວນໝູທີ່ນຳມາຈາກຕ່າງປະເທສ

(4) **A New Park will be built in Vientiane**

3 ແຍກໄກ້ວັດສີເມືອງຈະສ້າງ ເປັນສວນຫຍ້າສາທາຣະນະ

ເຊົ້າວັນທີ 24 ພຶສຈິການີ້ ຜູ້ສື່ຂ່າວຂອງເຮົາໄດ້ເຂົ້າພົບ
ກັບທ່ານຄຳມ້າວຊຸມສວັດ ເຈົ້າຄອງກຳແພງນະຄອນວຽງຈັນ
ຜູ້ສື່ຂ່າວຂອງເຮົາໄດ້ຮຽນຖາມເຖິງບໍຣິເວນຍາມແຍກດ້ານໃຕ້
ວັດສີເມືອງຊຶ່ງປາກົດວ່າເວລານີ້ໄດ້ ມີການປູກຫຍ້າແລະສະມ້າ

ທ່ານເຈົ້າຄອງກຳແພງໄດ້ຊີ້
ແຈງໃຫ້ຊາບວ່າ ສຖານທີ່ດັ່ງກ່າວ
ນີ້ແມ່ນ ຈະສ້າງໃຫ້ເປັນສວນ
ຫຍ້າສາທາຣະນະແລະເຮັດນ້ຳພຸ
ທັງນີ້ ເພື່ອໃຫ້ເປັນສຖານທີ່ພັກ
ຜ່ອນອັນຈົບງາມ ທ່ານກ່າວວ່າ
ການເຮັດສວນຫຍ້າສາທາຣະນະ
ແຫ່ງນີ້ແມ່ນທາງກົມເຄຫະສຖານ
ເປັນຜູ້ອອກແບບ ແລະສ້າງໃຫ້
ຈົນກວ່າຈະສຳເຣັດ ແລະງົບປະ

ນານໃນການສ້າງນີ້ ກໍແມ່ນງົບ
ປະມານຂອງທາງກົມ ເຄຫະສຖານ
ເໝືອນກັນ

ຜູ້ສື່ຂ່າວ ໄດ້ຮຽນຖາມເຖິງ
ທ່ອນສີມັງໃຈກາງຖນົນລ້ານຊ້າງ

ທາງກຳແພງຮັບວ່າ ຈະໄດ້ປູກຫຍ້າແລະດອກໄມ້ໃສ່ເພື່ອເປັນ
ການຖາວອນ ແລະງົບງານນັ້ນອີກຄົນປານໃດ ທາງກຳແພງຈຶ່ງ
ຈະໄດ້ລົງມືເຮັດ ?

ທ່ານເຈົ້າຄອງກຳແພງຊີ້ແຈງວ່າ ເລື່ອງການປູກຫຍ້າ
ແລະດອກໄມ້ໃສ່ທ່ອນສີມັງໃຈກາງຖນົນລ້ານຊ້າງນີ້ ແມ່ນໜ້າ
ທີ່ຂອງກຳແພງແລະກໍຕ້ອງແມ່ນງົບ ປະມານຂອງ ທາງກຳແພງນະ
ຄອນເອງເພາະສະນັ້ນການທີ່ຈະລົງມືເຮັດນັ້ນ ຕ້ອງໄດ້ກະເບິ່ງ
ງົບປະມານເສັຽກ່ອນ ໂດຍສະເພາະແລ້ວງົບປະມານປີນີ້ບໍ່ໄດ້ກະໄວ້
ສຳຫລັບເລື່ອງນີ້ເລີຍ ຈຶ່ງຄາດວ່າການລົງມືອາດເປັນປີໜ້າ

(5) T-28 Destroys 3 Companies of Lao-Viets North of Xiang Khouang

ເຕ 28 ທຳລາຍ ລາວວຽດ 3 ກອງຮ້ອຍ ເໜືອ ຊຽງຂວາງ

ວິທະຍຸພາກ 2 ລາຍງານສຖານະການທາງທະຫານວ່າ

ໃນຕອນບ່າຍວັນທີ 7 ພຶສຈິກາ 1969 ນີ້ເວລາ 14 ໂມງ 25 ນາທີກອງທັບແຫ່ງຊາດໄດ້ສົ່ງເຮືອບິນ ເຕ 28 2 ລຳຕຳການໂຈມຕີທີ່ໝັ້ນກຳລັງທະຫານແນວລາວປະສົມວຽດນາມເໜືອປະມານ 3 ກອງຮ້ອຍທີ່ຮັກສາການໃນບໍລິເວນ ທາງເໜືອຊຽງຂວາງປະມານ 14 ກ.ມ

ຂ່າວແຈ້ງຕໍ່ໄປວ່າ ການ ໂຈມຕີຄັ້ງນີ້ ສັດຕູໄດ້ຍິງຕ້ານຍັນການໂຈມຕີຖິ້ມໝາກແຕກ ຍິງປືນກົນອາກາດຕໍ່ສູ້ເຮືອບິນຂອງຝ່າຍ ກອງ ທັບ ແຫ່ງ ຊາດ ຢ່າງແໜ້ນໜາຮຸນແຮງ ແຕ່ວ່ານັກບິນຂອງຝ່າຍເຮົາໄດ້ຮູ້ພື້ນ ພູມິ ປະເທດ ໃນບໍລິເວນ ຊຽງ ຂວາງໄດ້ເປັນຢ່າງດີ ດັ່ງນັ້ນພວກສັດຕູຈຶ່ງໄດ້ຮັບຄວາມເສັຽ ຫາຍເປັນຕົ້ນປືນຕໍ່ສູ້ອາກາດສະ ຫານ 12.7 ມິນລີແມດ ນຶ່ງກະບອກຈົນໃຊ້ການບໍ່ໄດ້ແລະບໍ່ລອຍຮັກສາການຂອງພວກ ເຂົາຈຳນວນ 10 ກ່ວາຄົນຖືກທຳລາຍຊີວິດຄາບ່ອນສ່ວນເຫຼືອນັ້ນກໍແຕກກະຈັດກະຈາຍ ໄປຄົນລະທາງຢ່າງເສັຽຂວັນ

ສ່ວນເຮືອບິນ ອິບຂອງຝ່າຍເຮົາໄດ້ບິນກັບຄືນ ສູ່ຖານທັບດ້ວຍຄວາມປອດໄພທຸກລຳ

ໃນຕອນບ່າຍຂອງມື້ ວັນ ທີ 8 ພຶສຈິກາ 1969 ນີ້ ເວລາ 12 ໂມງກົງ ກຳລັງທະຫານຂອງຝ່າຍກອງທັບ ແຫ່ງ ຊາດ ໄດ້

ອອກລາດເວນໃນເຂດຮັບ ຜິດ
ຊອບຂອງຕົນ ໄດ້ປະທະ
ກັນກັບພວກສັດຕູ ຈຳນວນ
ນຶ່ງປະມານ 20 ຄົນ ໃນບໍຣິ
ເວນທາງທິດຕາເວັນອອກ ສຽງ
ເໜືອ ຂອງເມືອງສຸ້ຍ ປະມານ
15 ກ.ມ. ໃນ ລະ ຫວ່າງ
45 ນາທີ ທີ່ຕ່າງຝ່າຍຕ່າງຍິງ
ຕອບໂຕ້ກັນ ຢ່າງດຸເດືອດຢູ່ນັ້ນ
ຝ່າຍກອງທັບແຫ່ງຊາດສາມາດ
ສັງຫານຊີວິດຂອງສັດຕູ ໄດ້ 2
ຄົນແລະ ໄດ້ຮັບບາດເຈັບອີກ
3 ຄົນ ພວກທີ່ເຫລືອຕາຍກໍ
ແຕກໜີກະຈັດກະຈາຍໄປ ຄົນ
ລະທິດລະທາງ ສ່ວນຝ່າຍກອງ
ທັບແຫ່ງຊາດ ໄດ້ມີຜູ້ໄດ້ຮັບ
ບາດເຈັບພຽງເລັກນ້ອຍນຶ່ງຄົນ
ຂນະນີ້ ກາລຕິດຕາມກວາດ
ລ້າງພວກສັດຕູ ທີ່ເຫລືອຕາຍ
ນັ້ນຢ່າງໃກ້ຊິດ

(6) Post Office issues new Stamps on U.N. Day

ສະແຕມ 3 ຊຸດທີ່ກົມສະນີຈະນຳອອກຈຳໜ່າຍເນື່ອງໃນວັນສະຫະປະຊາຊາດ

ໄປສະນີຜລິດສະແຕມ
ຈຳໜ່າຍວັນສະຫະປະຊາຊາດ

ຣາຊການໄປສະນີມີຄວາມຍິນດີຂ່າວ ໃຫ້ແຟນສະແຕມ ຊາບທົ່ວເຖິງກັນວ່າ ກ່ຽວເນື່ອງປະວັດການເປັນມາຂອງອົງການສະຫະປະຊາຊາດ ປີ 1970 ນີ້ເປັນປີບັນຈົບຄົບຮອບ 25 ປີ ແລ້ວ ສມັດຊາໃຫຍ່ຂອງອົງການນີ້ໄດ້ຕົກລົງເປັນເອກະສັນທີ່ຈະ ສລອງວັນກຳເນີດຢ່າງຄຶກຄື້ນ

ສນັ້ນທາງການໄປສນີລາວ ຈຶ່ງໄດ້ຖືໂອກາດອັນປະກາດ ການກຳເນີດຂອງ ອົງການ ນັ້ນ ເປັນອັນສຳຄັນ ແລະຈະຣ່ອນ ອອກແບບສແຕມໄວ້ເປັນທີ່ລະ ລຶກໃນວັນທີ່ 24 ຕຸລາ 1970

ສແຕມ ທີ່ ຈະ ນຳ ອອກ ຈຳ ໜ່າຍໃນວັນສເລີມສລອງສຫະ ປະຊາຊາດນັ້ນມີຢູ່ສາມ ຣາຄາ ແລະມີຮູບລັກສນະ ດັ່ງ ຕໍ່ ໄປ ນີ້

ຣາຄາ 30 ແລະ70 ກີບມີຮູບ ຕຶກສຫະປະຊາຊາດ ຢູ່ນິວຢອກ ແລະມະນຸດເຈົ້າຕອນທ້າມຍາດ ມະຄອນກະບິນລະມັດ ແລະເທ ວະທະທະແຢ້ງ ນ້ຳໄລທີ່ມີເຂົ້າໃສ່ມາ. ເວລານັ້ນເປັນເວລາ ແຫ້ງແລ້ງ .

ຣາຄາ 125 ກີບເປັນຮູບສຫະປະຊາຊາດຢູ່ນິວຢອກ ແລະນາງທໍຣະນີບີດນ້ຳຜົມ ແປສພາບເປັນສມຸດເພື່ອປາບປາມ ພຍາມານທີ່ຈະມາ ບຽດບຽນມະນຸດອົງຍາດແຍ່ງເອົາແທນ ບັນລັງ

ໃນວັນທີ 24/10/70 ຈະໄດ້ຈຳໜ່າຍຊອງວັນແຣກຈຳ ໜ່າຍປະທັບຕາພິເສດເປັນທີ່ຣະລຶກຊື້ໄດ້ຢູ່ໄປສນີການ ແລະ ທີ່ໂຮງແຮມລ້ານຊ້າງສຖານທີ່ສລອງເປັນທາງການ .

(7) Presentation by Classical Dancing Group at Opening of School of Classical Dancing is a success.

ນາດສິນ ຈັດສແດງເປີດ ໂຮງຮຽນນາດສິນໄດ້ຜົນດີ

ຄນະນາຕສິນແຫ່ງຊາຕ ຈັດສແດງການ ຟ້ອນເນື່ອງໃນພິທີເປີດໂຮງຮຽນນາຕສິນໃຫມ່ມີແຂກຜູ້ມີກຽຕແລະຊາວ ຕ່າງປະເທດໄປຊົມຢ່າງລົ້ນຫລາມແຕ່ລະລາຍການໄດ້ຮັບການຕົບ ມືສັລເສີນ ຢ່າງມາກພູມໃຈ

ເນື່ອງຈາກຄນະນາຕສິນແຫ່ງຊາຕ ໄດ້ໄປສແດງສິລປະການຟ້ອນແບບປະເພນີຂອງລາວທີ່ງານເອກສໂປ 70 ທີ່ໂອຊາກ້າໃນກາງເດືອນແລ້ວໄດ້ຮັບຄວາມນິຍົມສັລເສີນ ຈາກຊາວຍີ່ປຸ່ນເປັນຈຳນວນມາກ ເມື່ອເດີນທາງກັບຄືນມາສູ່ວຽງຈັນແລ້ວກໍ່ໄດ້ເປີດສະແດງລາຍການດັ່ງກ່າວ ໃຫ້ຊາວວຽງຈັນໄດ້ຊົມອີກໃນຄືນວັນທີ່ 30 ແລະ 31 ສິງຫາ 1970 ພ້ອມກັນນີ້ກໍ່ເປັນພິທີເປີດໂຮງຮຽນນາຕສິນຫລັງໃຫມ່ດ້ວຍ

ການສະແດງໃນຄັ້ງນີ້ໄດ້ມີແຂກຜູ້ມີກຽດ ທັງລາວແລະຕ່າງປະເທດໄປຊົມຢ່າງມາກມາຍຕລອດທັງສອງຄືນ

ການສແດງຄັ້ງນີ້ສັງເກດໄດ້ວ່າທາງນາຕສິນ ໄດ້ປະດິດລີລາການຟ້ອນຫລາຍຢ່າງເຕີມອີກ ໂດຍສະເພາະການຟ້ອນກຸ່ມ

ຊ່ວງມາໄດ້ຮັບຄວາມນິຍົມຫລາຍກວ່າໝູ່

ກ່ອນການສແດງ ທ່ານອັນທອງ ທັມມະວົງ ອະທິບໍດີກົມສິລປາກອນໄດ້ກ່າວເຖິງການສ້າງໂຮງລະຄອນຫລັງໃໝ່ ມີເນື້ອຄວາມໂດຍຫຍໍ້ແລ້ວມີດັ່ງນີ້

ທ່ານກ່າວວ່າໂຮງລະຄອນໃໝ່ນີ້ ປຸກຂຶ້ນໃນທ້ອງເດືອນອາວອິນ 1969 ໂດຍກະຊວງຄັງອະນຸມັດທຶນອອກເປັນມັງດາໃຫ້ບໍຣິສັດກໍ່ສ້າງແລະໂຮງເລື່ອຍ ເມື່ອເອົາອຸປກອນມາກໍ່ສ້າງຕຶກເປັນເງິນສອງລ້ານແປດແສນກວ່າກີບ ເງິນຈຳນວນນີ້ຍັງໄດ້ແບ່ງໄປໃຊ້ຢູ່ໂຮງງານປັ້ນຫລໍ່ຕໍ່ຫ້ອງຮຽນສິລປະກັມ ແລະປຸກຫ້ອງຮຽນສີ່ຫ້ອງໃຫ້ນັກຮຽນນາຕສິນອີກດ້ວຍ ສ່ວນແຮງງານໄດ້ອາໃສຂ້າຣາຊການຂອງກົມສິລປະກອນທັງໝົດ ນອກຈາກນີ້ຍັງໄດ້ຮັບການຊ່ອຍເຫລືອຈາກກົມກໍ່ສ້າງກອງທັບ ແຕ່ແລ້ວໃນວັນທີ 22—10—69 ລົມມະຍຸໄດ້ພັດໂຮງລະຄອນທີ່ສ້າງບໍ່ແລ້ວ ກໍລົ້ມລົງ

ແຕ່ກໍ່ພະຍາຍາມກໍ່ສ້າງຂຶ້ນອີກຈົນສຳເຣັດໂຮງຮຽນນາຕສິນຫລັງນີ້ກວ້າງ 22 ແມດ 50 ຍາວ 35 ແມດ ສອງຟາກຂ້າງໃຊ້ເປັນຫ້ອງຮຽນທາງກາງເປັນໂຮງມະຫໍຣະສົບທີ່ປະຊຸມ

ການສະແດງໃນ 2 ຄືນທີ່ຜ່ານມານີ້ຣາຍໄດ້ທັງໝົດຈະນຳໄປຊື້ເຄື່ອງ ອຸປກອນການຟ້ອນແລະອື່ນໆທີ່ຍັງຂາດເຂີນ

(8) The President of the National Assembly Calls for Self-Reliance by Laotians

ປະທານສພາວ່າບ້ານເມືອງຄັບຂັນ
ຈະຫວັງເພິ່ງຕ່າງປະເທສທັງຫມົດບໍ່ໄດ້

ແລງວັນທີ່ 23 ທັນວານີ້ພນະທ່ານຜຸຍ ຊນະນິກອນ ຜູ້ແທນຣາສດອນແຂວງວຽງຈັນ ປະທານສພາແຫ່ງຊາຕຊຶ່ງເປັນນັກການເມືອງຊັ້ນອາວຸໂສທ່ານນຶ່ງຂອງຣາຊອານາຈັກລາວໄດ້ຈັດງານລ້ຽງເປັນກຽດແກ່ຄນະກັມການບໍຣິຫານສມາຄົມມິຕະສອນຂຶ້ນທີ່ບ້ານພັກຄຸ້ມເພັຽວັດຊຶ່ງໃນງານລ້ຽງນີ້ ໄດ້ມີແຂກຜູ້ມີກຽດໄປຮ່ວມດ້ວຍຫລາຍທ່ານເປັນຕົ້ນ ທ່ານໂງ່ນ ຊນະນິກອນ ພຍາສຸກວຸປຣາວົງ ພຍາແກ້ວວິພາກອນ ພຍາເຫລື່ອມ ຣາຊສົມບັດ ພຍາກິ່ງ ສຸວັນຣາສີ ແລະອະດີຕບໍດີກົມກອງຕ່າງໆປະມານ 50 ທ່ານ

ເມື່ອການຮັປທານອາຫານຜ່ານພົ້ນໄປແລ້ວ ພນະທ່ານໃນຖານະເຈົ້າພາບກໍໄດ້ກ່າວ:

ສແດງຄວາມຍິນດີທີ່ໄດ້ມີໂອກາສເຊີນຄນະກັມການບໍຣິຫານມິຕສອນແລະມິຕສຫາຍມາຮ່ວມຮັປທານດັ່ງນີ້

ພນະທ່ານໄດ້ກ່າວເຖິງການຈັດງານລ້ຽງນີ້ວ່າ ນອກຈາກຢາກຈະພົບປະສັງສັນ ແລະຮູ້ຈັກກັບສມາຄົມນີ້ ກັບເພື່ອຂໍຂອບໃຈທີ່ທາງສມາຄົມໄດ້ເຊີນພນະທ່ານໄປປາຖະກະຖາ ເພື່ອເຜີຍແຜ່ແກ່ປະຊາຊົນ ແລະລ້ຽງແກ່ນກັບສມາຊິກຂອງສມາຄົມມິຕສອນ ແຕ່ເມື່ອພົບກັນແລ້ວ ພນະທ່ານກໍຂໍເວົ້າເລັກນ້ອຍບໍ່ແມ່ນເປັນການໂຄສນາຫາສຽງ ຫລືເປັນແບບອາຈານສອນ

ສອນລູກສິດ ເພາະທຸກທ່ານລ້ວນເປັນປັນຍາຊົນ ມີຕຳແໜ່ງ
ທາງອາຊາການສູງໆທັງນັ້ນ ແຕ່ໃນຖານະທີ່ພະນະທ່ານເປັນຜູ້ຜ່ານ
ງານຂອງປະເທດໄດ້ຮັບປະສົບການຂອງໂລກ ມາຫລາຍພໍສົມ
ຄວນ ຈຶ່ງປາກອອກຄວາມຄິດຄວາມເຫັນໄວ້ໃນໂອກາດນີ້
ຕາມສົມຄວນ

ໃນຄຳປາໄສຂອງພະນະທ່ານຕອນນຶ່ງ ກ່ຽວກັບບັນຫາການ
ເມືອງວ່າ ບ້ານເມືອງເຮົາໃນຂະນະນີ້ຄັບຂັນທີ່ສຸດ ມີແຕ່ຄວາມ
ສາມັກຄີເທົ່ານັ້ນຈະພາອີກຕະການອັນນີ້ຜ່ານພົ້ນໄປໄດ້ ບ້ານ
ເມືອງເຮົາປຽບເໝືອນຄົນຕົກນ້ຳ ທີ່ໄປໄລລິປ ໄປໄລແນວ
20 ປີແລ້ວຍັງບໍ່ມີທາງອອກ ຫລືປຽບເໝືອນເຮືອທີ່ຢູ່ກາງແກ້ງ
ກຳລັງຮ້ອງຫາປະເທດອື່ນແຕ່ບໍ່ມີປະເທດໃດສົນໃຈພໍທີ່ໄດ

ໃນຈຳນວນ 13 ປະເທດຂອງສັນຍາເຈີແນວ ຈະບໍ່ມີ
ໃດປະເທດ ເອົາໃຈໃສ່ເທົ່າທີ່ຄວນ ຣັຖບານເດີມີຣຽກຮ້ອງຫາ
ມຽງເຮືອງຂໍຄວາມຊ່ວຍເຫລືອໃນທາງການເມືອງການທູດກ່ຽວ
ກັບເຮື່ອງເຈຣະຈາ ແຕ່ກໍບໍ່ມີຜູ້ໃດສົນໃຈນຳເຮົາພໍທີ່ໄດ

ເຮົາຈະມີທາງອອກຢ່າງໃດ ເຮົາຈະຜ່ານມໍຣະສຸມອັນສນັກໜ່ວງນີ້ໄປໄດ້ຢ່າງໃດ ເຮົາຄວນມີຈາຣະນາຮ່ວມກັນຊອກຊ່ອງທາງອອກ ໃຫ້ເຮືອໄດ້ຕັ້ງລຳແລ້ວແລ່ນໄປໄດ້ ສມາຄົມຂອງພວກທ່ານເປັນພຽງອົດຕົນັກສຶກສາ ບໍ່ແມ່ນສມາຄົມການເມືອງ ແຕ່ຄວາມເປັນຄວາມຕາຍຂອງຊາຕນີ້ ທຸກຄົນຕ້ອງຊ່ວຍກັນປ້ອງກັນ ຈຶ່ງຈຳເປັນຕ້ອງເອົາມາເວົ້າອີກ ພວກທ່ານອາຈມີຄວາມຄິດເຫັນທີ່ດີ ສແດງແນວຄວາມຄິດອັນເໝາະສົມໃຫ້ແກ່ນັກການເມືອງກໍ່ໄດ້ ບຸກຄົນທີ່ກຳລັງຕົກຂະມະລືຕຶກສເຊັ່ນນີ້ອາຈຫາທາງອອກບໍ່ໄດ້

ຕອະທ້າຍນະທ່ານ ໄດ້ອະວຍພອນປີໃໝ່ສາກົນທີ່ຈະເຖິງໄວໆນີ້ ໃຫ້ເພື່ອນຝູງ ມິດສຫາຍ ສມາຄົມມິຕະສອນ ຈົ່ງຖາວອນ ປາຖນາໄດ້ສິ່ງໃດທີ່ດີ ທີ່ຊອບ

(9) Prince Sukwongsak proposes that the Bombing in Xiang Khouang be stopped before Negotiations begin

ເຈົ້າສຸກວົງສັກສເນີບໍ່ໃຫ້ຖິ້ມລູກແຕກໃສ່ແຂວງ ຊຽງຂວາງກ່ອນ ເຈຣະຈາກັນ

ໃນການເຂົ້າເຝົ້າສເດັດນາຍົກຣັຖ ມົນຕຣີສເດັດເຈົ້າສຸວັນນະພູມາຄັ້ງຫລັງ ສຸດຂອງເຈົ້າສຸກວົງສັກຜູ່ຕ່າງໜ້າມີອຳນາດເຕັມຂອງເຈົ້າສຸພານຸວົງ ປະທານສູນກາງແນວລາວຮັກຊາຕ ເມື່ອວັນທີ່ 31 ທັນວາ 1970 ທີ່ແລ້ວເພື່ອປຶກສາຫາລືກຽມການເປີດກອງປະຊຸມຣະດັບຜູ່ຕ່າງໜ້າທີ່ມີອຳນາດເຕັມ ຢູ່ຄັ້ງໄຂນັ້ນ ຜູ່ຕ່າງໜ້າແນວລາວໄດ້ສເນີ ໃຫ້ຣັຖບາລສັ່ງຍຸຕິຖິ້ມລະເບີດໃສ່ແຂວງຊຽງຂວາງກ່ອນແລະຫລັງການເຈຣະຈາ

ເປັນທີ່ ຊາບກັນແລ້ວວ່າ ໃນ ການ ພົບ ປະ ກັນ ຄັ້ງ ກ່ອນ ແນວລາວໄດ້ສເນີໃຫ້ຍຸ ຕິ ການຖິ້ມລະເບີດໃນແຂວງຊຽງຂວາງ ແລະຊຳເໜືອກ່ອນ ແລະ ຫລັງປະຊຸມຜູ່ຕ່າງໜ້າມີອຳນາດເຕັມ ຢູ່ຄັ້ງໄຂ ກໍ່ໄດ້ຫລຸດໄລຍະເວລາ ການຍຸຕິຖິ້ມລະເບີດ ທັງກ່ອນແລະຫລັງລົງ ຝ່າຍ ຣັຖບາ ລ ກໍ່ ໄດ້ຕອບ ສນອງ ແນວລາວໄປແລ້ວວ່າຍິນດີ ຮັບ ເອົາຂໍ້ສເນີຂອງແນວລາວ ຮັກ ຊາຕ ຖ້າສາກະທານອຽດນາມເໜືອ

ເຈົ້າສຸກ

ຖອນອອກໄປ ຈາກ ແຂວງ ດົ້ງ ກ່າວ

ແລະນອກຈາກນັ້ນຍັງໄດ້ສເນີຍຸຕິຖິ້ມຣະເບີດ ໃສ່ເມືອງຊຳເໜືອແລະບໍຣິເວນໃກ້ຄຽງອີກ ແຕ່ກໍ່ຜ່າກົດວ່າແນວລາວໄດ້ປະຕິເສດ ໂດຍອ້າງວ່າບໍ່ມີທະຫານວຽດນາມເໜືອ ໃນແຂວງຊຽງຂວາງ ແລະຊຳເໜືອແມ່ນແຕ່ຄົນດຽວ

ແນວໃດກໍ່ຕາມ ເພື່ອໃຫ້ກອງປະຊຸມຣະດັບຜູ້ຕາງໜ້າມີອຳນາດເຕັມມີເປີດຂຶ້ນໃວ ຣັຖບານຈຶ່ງໄດ້ສເນີເອົາມະຄອນວຽງຈັນ ແທນທີ່ຈະໄປເອົາກັມປູ່ດົງໄຂ່ແຕ່ຜ່າກົດວ່າແນວລາວກໍ່ໄດ້ປະຕິເສດອີກຕາມເຄີຍ

ສ່ວນສາເຫດທີ່ແນວລາວສເນີໃຫ້ຍຸຕິຖິ້ມລະເບີດໃນແຂວງຊຽງຂວາງກ່ອນເຈຣະຈານັ້ນກໍ່ເພາະ ຕ້ອງການໃຫ້ທະຫານແກວແດງສ້າງທາງຈາກທົ່ງໄຫຫີນລົງມາທາງລຳລຽງໂຮຈິມິນທາງພາກກາງຂອງລາວໄດ້ສດວກໂດຍປາສຈາກການໂຈມຕີຖິ້ມລະເບີດເທົ່ານັ້ນ

(10) The Minister of Economics sets up a System of Trading Animals to help the Pig Farmers

ເສຖກິຈວາງຣະບຽບ ຄ້າສັຕໃຫມ່ເພື່ອ ສົ່ງເສີມ ກະສິກອນ ລ້ຽງຫມູເປັນ

ຣັຖມົນຕຣີຊ່ວຍຄລັງແລະຮັກສາການກະຊວງເສຖການ ໄດ້ຖແລງໃນການໃຫ້ສໍາພາສ ຂ່າວຫນັງສືພິມເມື່ອບ່າຍວັນສຸກນີ້ວ່າ ເມື່ອແລງວັນພະຫັສທີ່ 17 ນັ້ນໄດ້ມີກອງປະຊຸມຂ້າຣາຊການ ກ່ຽວຂ້ອງກັບ ກະຊວງເສຖະການ ໂດຍການນັ່ງເປັນ ປະທານຂອງທ່ານເອງ ເພື່ອວາງນະໂຍບາຍໃຫມ່ບໍ່ໃຫ້ຄົນຂ້າ ແລະຄ້າສັຕເອົາປຽບກະສິກອນ ລ້ຽງຫມູເປັນຕົ້ນການບຸບຣາຄາ ແລະຕັດ ນ້ຳ ຫນັກ ຫມູ ເປັນເວລາຊົ້ງຂາຍ

ພຍາຫຸ້ມພັນກ່າວ ຕໍ່ໄປວ່າທາງກະຊວງເສຖການມີຄວາມພໍໃຈໃນຣາຄາຊີ້ນຫມູໃນ ຫ້ອງຕລາດເທສບານວຽງຈັນ ເພາະຣາຄາຊີ້ນບໍ່ກະທົບ ກະເທືອນຕໍ່ຜູ້ບໍຣິໂພກ ແຕ່ກະສິກອນຜູ້ລ້ຽງຫມູໄດ້ຖືກຫນີບເຕັງ ແລະເສັຽປຽບທັ້ງນີ້ເພາະມີການຕັດນ້ຳຫນັກຫມູເປັນເວລາຊັ່ງຂາຽອັນເປັນການເຮັດໃຫ້ ກະສິກອນຫມົດກໍາລັງໃຈ

ເພາະສນັ້ນເພື່ອເປັນການສົ່ງເສີມ ໃຫ້ມີການລ້ຽງສັຕຫລາຍຂຶ້ນກອງປະຊຸມຈຶ່ງໄດ້ວາງຫລັກການໄວ້ດັ່ງຕໍ່ໄປນີ້

1. ຕັ້ງກໍາແພງປ້ອງກັນບໍ່ໃຫ້ ສັຕຈາກຕ່າງປະເທສເຂົ້າມາຂາຽແຂ່ງຈາກສັຕລ້ຽງພາຍໃນປະເທສດ້ວຍ ການຮົ້ມພາສີສັຕເຂົ້າປະເທສ 5 ເປີເຊັນ ຈຶ່ງໄດ້ມອບໃຫ້ ເຈົ້າຫນ້າທີ່ພາສີຮັບໄປສຶກສາ

2– ເນື່ອງຈາກການປະຕິບັດສັນຍາປະມູນຂ້າແລະຂາຽຊີ້ນສັຕ ໃນນະຄອນວຽງຈັນຍັງອີກ 3 ເດືອນຈຶ່ງຈະຫມົດ ແຕ່ປາກົດວ່າຜູ້ປະມູນບໍ່ໄດ້ປະຕິບັດຕາມສັນຍາຢ່າງເຄັ່ງຄັດດັ່ງນັ້ນກອງປະຊຸມຈຶ່ງມອບໃຫ້ກໍາແພງນະຄອນ ຊອກທຸກວິທີທາງໃຫ້ຜູ້ປະມູນປະຕິບັດຕາມສັນຍາ ຕາມຫລັກການຕໍ່ໄປນີ້

ກ. ໃຫ້ຜູ້ປະມູນຊື້ໝູເປັນ ພາຍໃນປະເທສ 70 ເປີເຊັນ ເພື່ອນຳມາຂ້າປ້ອນຕລາດວຽງຈັນ ອີກ 30 ເປີເຊັນ ໃຫ້ຊື້ໄດ້ ຈາກຕ່າງປະເທສ

ຂ. ໃຫ້ກວດຂັນເຣື່ອງການຕັດນ້ຳ ໜັກ ໝູ ເປັນ ຢ່າງ ເຄັ່ງຄັດ ເພາະເປັນການກະທົບກະເທືອນຕໍ່ກະສິກອນຜູ້ລ້ຽງໝູ

ພຍາທຸມພັນກ່າວຕໍ່ໄປວ່າ ຖ້າຫາກກຳແພງນະຄອນຫລື ຜູ້ປະມູນບໍ່ສາມາຖປະຕິບັດຕາມເງື່ອນໄຂດັ່ງກ່າວນີ້ ພາຍ ໃນ 3 ເດືອນແລ້ວ ຫລັງສັນຍາປະມູນຂ້າແລະຂາຍສັດໝົດ ລົງ ກະຊວງເສຖການກໍ່ຈະໄດ້ຊອກວິທີໃໝ່ ເປັນຕົ້ນວ່າ

ກະຊວງເສຖການອາຈຕັ້ງອົງການຊື້ສັດ ຂຶ້ນເອງເພື່ອນຳ ສັດມາປ້ອນຕລາດໃນກຳແພງນະຄອນວຽງຈັນ ຫລືກະຊວງເສຖ ການອາຈຈະອະນຸຍາດໃຫ້ສມາຄົມລ້ຽງສັດ ເປັນຜູ້ຈັດຫາສັດມາ ປ້ອນຕລາດກໍໄດ້ ທັງນີ້ແລ້ວແຕ່ຄວາມເໝາະສົມ ສ່ວນວິທີ ຂາຍນັ້ນຈະບໍ່ມີການປ່ຽນແປງກ່າວຄື ຈະໃຫ້ມີການປະມູນຂາຍ ຫລາຍຄົນໂດຍມີເງື່ອນໄຂດັ່ງທີ່ເຄີຍປະຕິບັດມາ

(11) Will Recommend that the Ministry of Economics Standardize the Price of Charcoal

ຈະສເນີ ຂໍຄວາມເຫັນ ເສຖກິຈ ນຳຣາຄາຖ່ານ ມາຕຖານອອກໃຊ້

ເຊົ້າວັນທີ 18 ພຶສຈິການີ້ ຜູ້ສື່ຂ່າວຂອງເຮົາໄດ້ເຂົ້າພົບທ່ານຄຳຜ່ອນ ພຣະໄຊຍະວົງ ຮອງເຈົ້າແຂວງວຽງຈັນ ເພື່ອຂໍຊາບຂ່າວຣະອຽດ ກ່ຽວກັບຜົນຂອງການປະຊຸມເຣື່ອງຣາຄາຖ່ານ ເຊິ່ງໄດ້ເປີດປະຊຸມ ເມື່ອວັນທີ 10 ເດືອນນີ້

ທ່ານຮອງເຈົ້າແຂວງ ໄດ້ຊີ້ແຈງໃຫ້ຊາບວ່າເຣື່ອງນີ້ ແມ່ນກະຊວງເສຖກິຈ ໄດ້ອອກຄຳຣັສໃຫ້ທາງຄນະກັມການ ຄວບຄຸມຣາຄາສິນຄ້າ ປະຈຳແຂວງ ໄດ້ປະຊຸມວາງອັຕຣາ ຣາຄາຖ່ານທີ່ແນ່ນອນທັງນີ້ເນື່ອງຈາກວ່າຣາຄາຖ່ານໃນປັຈຈຸບັນນີ້ຍັງບໍ່ທັນຢູ່ໃນມາຕຣາການ ທີ່ແນ່ນອນເທື່ອສນັ້ນທາງຄນະ ກັມະການຄວບຄຸມຣາຄາສິນຄ້າ ປະຈຳແຂວງຈຶ່ງໄດ້ເປີດ ປະຊຸມຂຶ້ນພາຍໃຕ້ການ ເປັນປະທານຂອງທ່ານເຈົ້າແຂວງ ວຽງຈັນ ຂ້າປະຊຸມ ກໍມີຜູ້ຕາງຫນ້າກະຊວງເສຖກິຈ ຜູ້ຕາງຫນ້າເຈົ້າຄອງກຳແພງ ຜູ້ກຳກັບການຕຳຣວຈປະຈຳແຂວງ ຜູ້ຕາງຫນ້ານັກຣົບເກົ່າເຈົ້າເມືອງ ທຸກໆເມືອງຜູ້ຕາງຫນ້າປ່າໄມ້ ປະຈຳແຂວງສມາຊິກສພາ ການຄ້າ

ເຈົ້າໜ້າທີ່ມາສືຜູ້ຕາງໜ້າ ຜູ້ໃຊ້ຖ່ານຜູ້ຕາງໜ້າ ພໍ່ຄ້າຖ່ານ ແລະສ່ວຍສາອາກອນ

ທ່ານກ່າວວ່າເບື້ອງຕົ້ນກອງປະຊຸມໄດ້ພິຈາຣະນາກັນວ່າ ໃຫ້ຕີຣາຄາຖ່ານທັງຣະດູຝົນແລະຣະດູແລ້ງ ເປັນຢ່າງດຽວກັນ ແຕ່ກໍບໍ່ໄດ້ຕົກກັນແນວໃດ ກ່ຽວກັບເລື່ອງນີ້ຕໍ່ມາທາງຄນະກັມການຈຶ່ງໄດ້ຕົກລົງກັນວ່າຣາຄາຖ່ານໄມ້ບົກທີ່ນຶ່ງ ຂາຍຢູ່ນອກກຳແພງນະຄອນກິໂລນຶ່ງ 20 ກີບຂາຍໃນກຳແພງກິໂລນຶ່ງ 25 ກີບ ໄມ້ລາດຂາຍຢູ່ນອກກຳແພງກິໂລນຶ່ງ 15 ກີບຂາຽຢູ່ໃນກຳແພງກິໂລນຶ່ງ 20 ກີບ

ແຕ່ແນວໃດກໍຕາມທ່ານຣອງເຈົ້າແຂວງວຽງຈັນບອກວ່າ ເລື່ອງນີ້ທາງແຂວງຍັງຈະໄດ້ສເນີຈຸດນະກັມການຄວບ ຄຸມ ການ ຂາຍຖ່ານພາຍໃນກຳແພງເມືອງແລະນອກກຳແພງນີ້ ໄປຍັງກະຊວງເສຖກິຈອີກເທື່ອນຶ່ງ ເພື່ອໃຫ້ທາງກະຊວງເສຖກິຈອອກດຳຣັສແຕ່ງຕັ້ງຄນະກັມການ ແລະເລື່ອງຣາຄາທີ່ໄດ້ຕົກລົງກັນໄປແລ້ວນັ້ນ ທາງແຂວງກໍຈະໄດ້ສເນີໄປຂໍຄວາມເຫັນຈາກ ທາງກະຊວງເສຖກິຈອີກເໝືອນກັນ ເພື່ອນຳອອກປະຕິບັດໃນໂອກາສອັນໄວໆນີ້.

BIBLIOGRAPHY

There are three types of materials included in this bibliography: materials specifically related to Laos, materials about Southeast Asia, and general background materials. The annotations provided were taken from a bibliography of Laos prepared by Mr. David Pabst, a Foreign Service Officer in the Department of State. Credit is also due Mrs. Rebecca Morton, former Lao Linguist at FSI, for some of the items included.

Abhay, Thao Nhouy	Aspects du pays Lao. Ed. Comité Littéraire Lao, Vientiane, 1956
	The Politics of the Developing Areas, ed. Gabriel Almond and James S. Coleman, Princeton University Press, Princeton, N.J., 1960.
Anuman Radjahon, Phya	The Water Throwing. Journal of the Siam Society 42 (July, 1954), pp. 23-30.
------,	in S.E. Asian Roundtable: a symposium on traditional cultures and technological progress in SEA. Bangkok, published by SEATO, SEATO Headquarters, 1950.
	Department of the Army Area Handbook for Laos. DA pamphlet # 550 58, Washington, D.C.: GPO, June 1967.
Ayabe, Tsuneo	The Village of Ban Pha Khao, Vientiane Province: A Preliminary Report. (Laos Project, Paper #14) Los Angeles: Department of Anthropology and Sociology, University of California, 1961. (Mimeographed) Nos.1-21
	Matrilineal kinship factors in village and family organization, and prestige of various occupations
Bates, Marston	Where Winter Never Comes, Chas. Scribner's Sons, NY, 1952.
Benoit, Pierre	Le Roi Lepreux Albin Michel, Paris, 1927.

Berval, René de — Kingdom of Laos: The Land of the Million Elephants and of the White Parasol. Saigon: France-Asie, 1959.

Politics, folklore, economy, and ethnography

------, — Présence du Royaume Lao. France-Asie, No. 118 - 119, Saigon, 1956.

Burling, Robins — Hill Farms and Padi Fields: Life in Mainland Southeast Asia. Englewood Cliffs, N.J. Prentice Hall, Inc., 1965.

Swidden agriculture and Lamet tribe of Northern Laos

Cady, John F. — Thailand, Burma, Laos and Cambodia. Englewood Cliffs, N.J. - Prentice Hall, Inc. 1966.

History from earliest time through colonial period

Coedès, Georges — The Making of Southeast Asia. University of California Press, 1966.

Dommen, Arthur J. — Conflict in Laos: The Politics of Neutralization New York, Frederick A. Praeger, 1964.

Contemporary history

Fall, Bernard B. — Anatomy of a Crisis: The Laotian Crisis of 1960-61 (Ed. with an epilogue by Roger M. Smith) Garden City, N.Y. Doubleday and Co., Inc., 1969.

Political and military analysis in the period from 1956 to 1962

Cross-Cultural Approaches. Readings in Comparative Research. Ed. Clellans S. Ford, HRAF Press, New Haven, 1967.

Halpern, Joel M. — Bibliography of Laos and Related Areas to 1961. ed. John McKinistry. Berkeley, California. Center for S.E. Asian Studies, University of California, 1962. (Mimeographed)

Halpern, Joel M. & H. B. Fredman Communist Strategy in Laos. Santa Monica, California. Rand Corp. (RM-2561) June 14, 1960.

Halpern, Joel M. Economy and Society of Laos: A Brief Survey. S.E. Asia Studies Monograph Series No. 5, Yale University, 1964.

Lao economy and swidden farming

Hobbs, Carlton Cecil Current Publications in S.E. Asia. Far Eastern Quarterly 8 (May 49) pp. 296-300.

Humphreys, Christmas Buddhism. Penguin Books, London 1955.

Hymes, Dell Language in Culture and Society Harper & Row. New York, Evanston and London. 1964.

Kene, Thao Bibliographie du Laos, Vientiane: Ministère de L'Education Nationale, Editions Comité Littéraire Lao, 1958.

Lebar, Frank M., Hickey, Gerald C. and Musgrave, John K. Ethnic Groups of Mainland Southeast Asia. New Haven: HRAF Files Press, 1964.

Major tribes in Laos

Lebar, Frank M. & Suddard, Adrienne, Laos: Its People, Its Society, Its Culture New Haven: HRAF Press, 1960.

Cultural and social information

Le Boulanger, Paul Historie du Laos Francais: Essai d'une Chronologique des Principaute Laotiennes. Paris: Plon, 1931.

History from Lan Xang to accession of King Sisavat Vong

Lefêvre-Pontalis, P. Les Laotiens du Royaume de Lan Chang l'après les Annales de Luang - Prabang T'oung Pao, Ser. 21 (1900) pp. 149-167.

